ກອງປະຊຸມໃຫຍ່
ຜູ້ແທນສົງທົ່ວປະເທດ
ຄັ້ງທີ III

22 ກຸມພາ 1989

ພຸດທະສາສະໜາສຳພັນລາວ

ກອງປະຊຸມໃຫຍ່
ຜູ້ແທນສົງທົ່ວປະເທດ
ຄັ້ງທີ III

22 ກຸມພາ 1989

ສາລະບານ

ໜ້າ

- ບົດສູນທອນພົດໄຂກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ອ.ພ.ສ. ໂດຍ: ພະອາຈານ ບົວຄຳ ວໍລະເພັດ ປະທານກິດຕິມະສັກ ອ.ພ.ສ. ໃນວັນທີ 22/2/1989, ທີ່ນະຄອນຫລວງວຽງຈັນ. 11
- ບົດສະຫລຸບລາຍງານຂອງຄະນະສູນກາງ ອ.ພ.ສ. ແຫ່ງປະເທດລາວ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ III ຂອງ ອ.ພ.ສ. ແຫ່ງປະເທດລາວ ແຕ່ວັນທີ 22 – 23/2/1989 ສະເໜີ ໂດຍ : ພະອາຈານ ທອງດູນ ອະມັນຕະສູນທອນ ປະທານສູນກາງ ອ.ພ.ສ. ແຫ່ງປະເທດລາວ. 17
- ບົດໂອ້ລົມທ່ານ ພູມີ ວົງວິຈິດ ກຳມະການເມືອງສູນກາງພັກ ປ.ປ.ລ, ຜູ້ວ່າການປະທານປະເທດ, ປະທານສູນກາງແນວລາວສ້າງຊາດ ຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງ ອ.ພ.ສ. ແຫ່ງປະເທດລາວ ຄັ້ງວັນທີ 22/2/1989. 59
- ໂຄງການດຳເນີນງານຂອງ ພ.ສ.ລ. (ສະບັບດັດແປງແກ້ໄຂໃໝ່). 89
- ກົດລະບຽບຂອງ ພ.ສ.ລ. (ສະບັບດັດແປງແກ້ໄຂໃໝ່). 101
- ມະຕິແຕ່ງຕັ້ງຄະນະກຳມະການສູນກາງ ພ.ສ.ລ. ຊຸດທີ III ຄັ້ງວັນທີ 22–23/2/1989. 113

– ຄຳຮຽກຮ້ອງຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ພ.ສ.ລ. 119

– ມະຕິຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ພ.ສ.ລ. 125

– ຖະແຫລງການຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ພ.ສ.ລ. 129

– ສູນທອນພົດ ອັດກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ພ.ສ.ລ. ໂດຍ: ພະອາຈານ ບົວຄຳ ອໍລະເພັດ ປະທານກິດຕິມະສັກ ພ.ສ.ລ. ໃນວັນທີ 23/2/1989. 131

★ ບົດປະກອບຄວາມເຫັນຂອງບັນດາທ່ານຜູ້ແທນໃນກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງ ພ.ສ.ລ. 135

– ສານຊົມເຊີຍກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການຊາວພຸດລາວ, ຈາກອົງການຊາວພຸດຂອງສະຫະພາບໂຊວຽດ. 137

– ຜູ້ແທນສົງ ຫວຽດນາມ. 141

– ຜູ້ແທນສົງ ກຳປູເຈຍ. 147

– ຜູ້ແທນສົງ ມົງໂກນ, 153

– ສານຄຳນັບຊົມເຊີຍຈາກອົງການຊາວພຸດອາຊີເພື່ອສັນຕິພາບ. 157

– ຜູ້ແທນສົງ ລາຊະອານາຈັກໄທ. 161

– ຜູ້ຕາງໜ້າຄະນະກຳມະການລາວ ເພື່ອສັນຕິພາບໂລກ. 167

– ຜູ້ຕາງໜ້າສູນກາງສະຫະພັນກຳມະບານລາວ. 173

ຄະນະປະທານກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III.



ບັນດາຜູ້ແທນ ແລະແຂກຜູ້ມີກຽດຕັ້ງໜ້າຕິດຕາມການດຳເນີນກອງປະຊຸມໃຫຍ່
ຜູ້ແທນສົງທົ່ວປະເທດຄັ້ງທີ III.



ພະອາຈານ ບົວຄຳ ອໍລະເພັດ ປະທານກິດຕິມະສັກ ອພສ. ກ່າວສູນທອນພົດ
ໄຂກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III.

ບົດສູນທອນພົດ

ໃຂກອງປະຊຸມໃຫຍ່ ຜູ້ແທນສົງທົ່ວປະເທດຄັ້ງທີ III

ຂອງ ອ. ພ. ສ.

ໂດຍ: ພະອາຈານ ບົວຄຳ ວໍລະເພັດ

ປະທານກິດຕິມະສັກ ອ.ພ.ສ.

ຈະເລີນພອນ: ທ່ານ ພູມີ ວົງວິຈິດ ກົມການເມືອງສູນກາງພັກ, ຮອງປະທານສະພາລັດຖະມົນຕີ, ຜູ້ວ່າການແທນປະທານປະເທດ, ປະທານສູນກາງແນວລາວສ້າງຊາດ!

ເຄົາລົບນັບຖື: ພະເຖລານຸເຖລະ ຜູ້ແທນສົງທົ່ວປະເທດ!

ເຄົາລົບນັບຖື: ຄະນະຜູ້ແທນພະສົງແລະຊາວພຸດ ບັນດາປະເທດອ້າຍນ້ອງ!

ນັບຖືແລະຮັກແພງ: ບັນດາແຂກຜູ້ມີກຽດທີ່ຖືກເຊີນມາຮ່ວມໃນກອງປະຊຸມຄັ້ງນີ້!

ໃນທ່າມກາງບັນຍາກາດອັນແຈ່ມໃສ ທີ່ປວງຊົນລາວທຸກເພດ, ທຸກເຜົ່າແລະສາສະໜາ ພອມນ້ອມຊື່ນ ອອກແຮງແຂ່ງຂັນກັນປະຕິບັດເນື້ອໃນຈິດໃຈມະຕິ 4–5–6—7 ສະໄໝທີ 4 ຂອງສູນກາງພັກ ແລະແຜນການ 5 ປີ ແຫ່ງລັດຄັ້ງທີ II ຢ່າງເບີ້ມຂະບອນຟົດຟື້ນ ໃນຂອບເຂດທົ່ວປະເທດນີ້, ກອງປະຊຸມ

ໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ກໍໄດ້ໄຂຂຶ້ນເປັນທາງການ, ທັງນີ້ກໍເພື່ອຕອບສະໜອງຄວາມຄອງຄອຍຂອງພະສົງສາມະເນນ ແລະພຸດທະສາສະນິກະຊົນໃນທົ່ວປະເທດ ແລະ ມັນກໍສອດຄ່ອງທີ່ສຸດກັບແຜນນະໂຍບາຍຂອງລັດຖະບານ ທີ່ພວມດຳເນີນການຫັນປ່ຽນຈາກຈິນຕະນາການເກົ່າໄປສູ່ຈິນຕະນາການໃໝ່ໃນທຸກຂົງເຂດວຽກງານ.

ຂ້າພະເຈົ້າ ຮູ້ສຶກມີຄວາມສຸກໃຈເປັນຢ່າງຍິ່ງ ທີ່ນານໆໄດ້ມາພົບໜ້າພ້ຕາກັບບັນດາພະເຖລານຸເຖລະ ທີ່ເດີນທາງມາຈາກຕ່າງແຂວງ. ພວກທ່ານໄດ້ສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ດ້ອຍການເດີນທາງອັນທຸລະກັນດານ ນຳເອົາຜົນງານຂອງຕົນມາຄຳນັບຮັບຕ້ອນກອງປະຊຸມໃຫຍ່ ແລະນຳເອົາຄວາມມຸ່ງມາດປັດຖະໜາຂອງພະສົງສາມະເນນ ແລະພຸດທະສາສະນິກະຊົນໃນແຂວງຂອງຕົນມາລາຍງານຕໍ່ກອງປະຊຸມ. ຂ້າພະເຈົ້າຕາງໜ້າໃຫ້ ສູນກາງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແລະ ໃນນາມສ່ວນຕົວ ຂໍສະແດງຄວາມເຫັນອົກເຫັນໃຈແລະຍ້ອງຍໍຊົມເຊີຍຄວາມຕັດສິນໃຈສູງຂອງພວກທ່ານຢ່າງສຸດອົກສຸດໃຈ.

ໃນກອງປະຊຸມໃຫຍ່ຄັ້ງນີ້, ໄດ້ຂາດພະເຖລານຸເຖລະຜູ້ໃຫຍ່ທີ່ເຄີຍຮ່ວມວຽກຮ່ວມງານນຳກັນຫລາຍອົງ, ມີບາງອົງກໍໄດ້ເຖິງແກ່ມໍລະນະພາບໄປແລ້ວ, ນະໂອກາດນີ້, ຂ້າພະເຈົ້າຕາງໜ້າສູນກາງ ອ.ພ.ສ. ແຫ່ງປະເທດລາວ ຂໍຕັ້ງຈິດອະທິດຖານແຜ່ເມດຕາເຖິງດວງວິນຍານຂອງທ່ານເຫລົ່ານັ້ນ ຈົ່ງໄປສູ່ສຸຄະຕິພົບ. ພ້ອມກັນນີ້, ຂ້າພະເຈົ້າຝາກຄວາມເຄົາລົບນັບຖື ໂດຍ ຜ່ານທ່ານຜູ້ແທນສົງໄປຍັງພະເຖລານຸເຖລະ ຜູ້ມີສຸຂະພາບອ່ອນເພຍ, ຜູ້ເຈັບປ່ວຍຍ້ອນໂລກຊະລາ ບໍ່ສາມາດ

ມາຮ່ວມກອງປະຊຸມນຳພວກເຮົາໃນຄັ້ງນີ້ດ້ວຍ. ຂ້າພະເຈົ້າ ຂໍຝາກຄວາມນັບຖືຮັກແພງໄປຍັງພະສົງສາມະເນນ ແລະພຸດທະສາສະນິກະຊົນທີ່ພວມປະຕິບັດໜ້າທີ່ຂອງໃຜລາວຢູ່ແຂວງຕ່າງໆໃນທົ່ວປະເທດດ້ວຍ.

ໃນກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງນີ້, ຍັງມີຜູ້ແທນສົງທີ່ມີກຽດຈາກປະເທດອ້າຍນ້ອງຫລາຍປະເທດ: ຈາກສະຫະພາບສັງຄົມນິຍົມໂຊວຽດ, ຈາກສາທາລະນະລັດປະຊາຊົນມົງໂກລີ, ຈາກສາທາລະນະລັດສັງຄົມນິຍົມຫວຽດນາມ, ຈາກສາທາລະນະລັດປະຊາຊົນກຳປູເຈຍ ແລະ ຈາກລາຊະອານາຈັກໄທ, ກໍໄດ້ມາຮ່ວມຕາມການເຊື້ອເຊີນຂອງພວກເຮົາ, ເຊິ່ງທ່ານເຫລົ່ານີ້ ລ້ວນແຕ່ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມຂອງພະສົງຈາກປະເທດຂອງໃຜລາວ ມາສູ່ກອງປະຊຸມໃຫຍ່ຂອງພວກເຮົາ ກໍຄືມາສູ່ພະສົງແລະຊາວພຸດລາວຂອງພວກເຮົາ. ຂ້າພະເຈົ້າຕີລາຄາສູງໃຫ້ແກ່ການມີໜ້າເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ຂອງຜູ້ແທນສົງປະເທດອ້າຍນ້ອງ, ຂໍຄຳນັບຮັບຕ້ອນພວກທ່ານດ້ວຍຄວາມອົບອຸ່ນ ແລະຂໍຊົມເຊີຍໄມຕີຈິດມິດຕະພາບຂອງພວກທ່ານຢ່າງສຸດອົກສຸດໃຈ.

ພະເຖລານຸເຖລະ ທີ່ນັບຖື!

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ນີ້, ມີຄວາມໝາຍສຳຄັນທີ່ສຸດ ເພາະວ່າມັນໄດ້ໄຂຂຶ້ນພາຍໃຕ້ເງື່ອນໄຂໃໝ່ ແລະບໍ່ດໃຈໃໝ່. ຄືດັ່ງຂ້າພະເຈົ້າເວົ້າມາແລ້ວວ່າ: ກອງປະຊຸມຂອງພວກເຮົາໄດ້ໄຂຂຶ້ນໃນເວລາທົ່ວປະເທດຊາດ ພວມດຳເນີນການຫັນປ່ຽນຈິນຕະນາການໃໝ່ ໃນທຸກຂົງເຂດວຽກງານຢ່າງຮອບດ້ານ, ອັນນີ້ມັນແມ່ນເຫດການການເມືອງໃໝ່ ເຊິ່ງບົ່ງບອກເຖິງໄລຍະໃໝ່

ແຫ່ງການປະຕິວັດກ້າວຂຶ້ນສັງຄົມນິຍົມຂອງປະເທດຊາດພວກເຮົາ. ແລະບົ່ງບອກວ່າ ພະສົງລາວພວກເຮົາ ກໍຕ້ອງມີຄວາມກ້າວໜ້າໄປໃຫ້ທັນກັບຄວາມກ້າວໜ້າຂອງປະເທດຊາດພວກເຮົາ. ຈາກນີ້ ມັນຊີ້ບອກໃຫ້ພວກເຮົາຕ້ອງເຊີດຊູມານະຈິດປະຕິວັດ, ເຊີດຊູຈິດໃຈຮັກຫອມສົມທຳ ແລະຮັກຫອມຄວາມກ້າວໜ້າທາງສັງຄົມໃຫ້ສູງຂຶ້ນກວ່າເກົ່າ, ເຊີດຊູສະຕິເປັນເຈົ້າຕົນເອງເປັນເຈົ້າສັງຄົມ ແລະເປັນເຈົ້າຂອງປະເທດຊາດຢ່າງບໍ່ຢຸດຢັ້ງ. ພ້ອມກັນນັ້ນມັນກໍຮຽກຮ້ອງໃຫ້ຜູ້ແທນສົງທຸກທ່ານຕ້ອງໄດ້ສຸມຈິດໃຈ ແລະເຫື່ອແຮງຂອງຕົນ ປະກອບສ່ວນເຮັດໃຫ້ກອງປະຊຸມໃຫຍ່ຄັ້ງນີ້ໄດ້ຮັບຜົນຕາມຄາດໝາຍ; ສິ່ງສຳຄັນທີ່ສຸດແມ່ນກອງປະຊຸມໃຫຍ່ຄັ້ງນີ້ ຈະໄດ້ພັ່ງບົດສະຫລຸບວຽກງານໃນໄລຍະທີ່ຜ່ານມາ, ຈະໄດ້ວາງໂຄງການດຳເນີນງານໃນໄລຍະໃໝ່ ແລະກົດລະບຽບບ່ຽນແປງໃຫ້ເໝາະສົມກັບສະພາບການໃໝ່ ແລະຈະໄດ້ທຳການຄັດເລືອກເອົາພະເຖລານຸເຖລະ ຜູ້ມີຄຸນສົມບັດແລະຄວາມສາມາດເຂົ້າມາເປັນຄະນະບໍລິຫານງານສູນກາງ ອພສ. ຊຸດໃໝ່ເພື່ອເຮັດໃຫ້ການບໍລິຫານສົງທົ່ວປະເທດນັບມື້ນັບເຂັ້ມແຂງ ແລະມີປະສິດທິຜົນຍິ່ງໆຂຶ້ນໄປ, ດັ່ງນັ້ນຈຶ່ງຂໍໃຫ້ທ່ານຜູ້ແທນສົງທຸກທ່ານຈົ່ງໃຊ້ສິດຂອງຕົນຢ່າງເຕັມສ່ວນປະກອບຄວາມຄິດຄວາມເຫັນ ເຂົ້າໃສ່ຮ່າງເອກະສານເຮັດໃຫ້ມີເນື້ອໃນອຸດົມສົມບູນຂຶ້ນຕື່ມ. ພ້ອມທັງຄັດເລືອກເອົາຄະນະບໍລິຫານສູນກາງ ອພສ. ຊຸດໃໝ່ດ້ວຍນ້ຳໃຈຮັບຜິດຊອບສູງ ເພື່ອເຮັດໃຫ້ໂຄງປະກອບການຈັດຕັ້ງໜັກແໜ້ນເຂັ້ມແຂງຂຶ້ນເລື້ອຍໆ.

ບັດນີ້, ໄດ້ເວລາຈົບງານແລ້ວ, ຂ້າພະເຈົ້າຂໍປະກາດໄຂກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຢ່າງເປັນທາງການນັບແຕ່ວິນາທີນີ້ເປັນຕົ້ນໄປ.

ຂໍຂອບໃຈ.

ພະອາຈານ ທອງດູມ ອະນັນຕະສູນທອນ ປະທານສູນກາງ ອພສ. ແຫ່ງປະເທດ ລາວ ສະຫລູບລາຍງານຂອງຄະນະສູນກາງ ອພສ. ແຫ່ງປະເທດລາວ ຕໍ່ກອງ ປະຊູມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III.

ບົດສະຫລຸບລາຍງານ
ຂອງຄະນະສູນກາງ ອພສ. ແຫ່ງປະເທດລາວ
ຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການ
ພຸດທະສາສະໜາສຳພັນ ແຫ່ງປະເທດລາວ
ແຕ່ວັນທີ 22 ກຸມພາ ເຖິງວັນທີ 23 ກຸມພາ 1989.

ສະເໜີໂດຍ: ພະອາຈານ ທອງດູມ ອະມັນຕະສູນທອນ
ປະທານສູນກາງ ອພສ. ແຫ່ງປະເທດລາວ.

ຂໍນ້ອມນະມັດສະການ ພະເຖລານຸເຖລະ,

ຈະເລີນພອນ ທ່ານປະທານສູນກາງແນວລາວສ້າງຊາດ ຕາງໜ້າຄະນະພັກ ແລະ ລັດຖະບານ ສປປລ ທີ່ນັບຖື,

ຈະເລີນພອນ ບັນດາທ່ານໃນຄະນະປະທານ ທີ່ນັບຖື,

ຈະເລີນພອນ ບັນດາທ່ານຜູ້ແທນ ແລະ ແຂກຜູ້ມີກຽດທີ່ນັບຖື ແລະ ຮັກແພງ.

ໃນບັນຍາກາດທີ່ປະຊາຊົນທົ່ວໂລກ ພວມມ່ວນຊື່ນເບີກບານຕໍ່ໄຊຊະນະຂອງຕົນອັນນັບມື້ນັບກວ້າງຂວາງ ແລະໜັກແໜ້ນໃນການຕໍ່ສູ້ເພື່ອສັນຕິພາບ ແລະໃນບັນຍາກາດທີ່ພະສົງສາມະເນນ ແລະປະຊາຊົນລາວເຮົາພວມເບີກບານມ່ວນຊື່ນ ແລະຫ້າວຫັນປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງແນວລາວສ້າງຊາດອັນ

ເປັນການປະຕິບັດມະຕິ IV ຂອງພັກ ແລະແຜນການ 5 ປີ ແຫ່ງລັດ ຄັ້ງທີ II ຢ່າງເປັນຂະບວນຟົດຟື້ນຢູ່ນັ້ນ, ມື້ນີ້ພວກເຮົາໄດ້ໄຂກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຂອງ ອພສ. ແຫ່ງປະເທດລາວຂຶ້ນຢູ່ທີ່ວຽງຈັນ ອັນເປັນນະຄອນຫລວງພິລະອາດຫານຂອງຊາດລາວເຮົາ.

ໃນເວລາອັນສະຫງ່າລາສີນີ້ ຂ້າພະເຈົ້າມີຄວາມຮູ້ສຶກມີກຽດ ແລະປິຕິຈົມຊື່ນເປັນຢ່າງຍິ່ງທີ່ໄດ້ຕາງໜ້າໃຫ້ຄະນະສູນກາງ ອພສ. ແຫ່ງປະເທດລາວ ສະເໜີລາຍງານຕໍ່ກອງປະຊຸມໃຫຍ່ຄັ້ງນີ້. ລາຍງານນີ້ປະກອບດ້ວຍ III ພາກ ຈຶ່ງຂ້າພະເຈົ້າຂໍສະເໜີເປັນລຳດັບໄປດັ່ງນີ້:

★ ພາກທີ I : ຜົນງານທີ່ເປັນໜ້າພາກພູມໃຈ ແລະ ການຂະຫຍາຍຕົວເຕີບໃຫຍ່ ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວໃນໄລຍະ 8 ປີກວ່າມານີ້.

ກ/- ຜົນງານແລະການອຸທິດຂອງ ອພສ. ແຫ່ງປະເທດລາວ ເຂົ້າໃນພາລະກິດລວມຂອງຊາດ ແລະພຸດທະສາສະໜາ.

ບັນດາທ່ານຜູ້ແທນທີ່ຮັກແພງ !

ໃນໄລຍະເກືອບສະຕະວັດທີ່ຜ່ານມານີ້, ພະສົງສາມະເນນ ແລະຊາວພຸດທະສາສະນິກະຊົນເຮົາ ພາຍໃຕ້ການນຳພາຂອງອົງການພຸດທະສາສະໜາສຳພັນ ອັນເປັນສະມາຊິກລວມໝູ່ຂອງແນວລາວສ້າງຊາດ ແລະເປັນກ້ອນກຳລັງສຳຄັນອັນໜຶ່ງຂອງພັກປະຊາຊົນປະຕິວັດລາວ ໄດ້ດຳເນີນການຕໍ່ສູ້ປະຕິວັດ ທີ່ເຕັມໄປດ້ວຍ

ຄວາມລຳບາກ, ສັບສົນ ແລະລະອຽດລະອ້ອນ, ແຕ່ມີຄວາມອົງອາດກ້າຫານທີ່ສຸດ ໃນການຍາດເອົາໄຊຊະນະອັນສະຫງ່າງາມຢ່າງຕໍ່ເນື່ອງກັນມາ. ນອກເຮົາມີຄວາມປິຕິຈົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າໃນແຕ່ລະສະໄໝຂອງການຕໍ່ສູ້ດັ່ງກ່າວນັ້ນ ເຖິງວ່າ ອນສ. ຈະໃສ່ຊື່ການຈັດຕັ້ງຂອງຕົນ ແລະມີໂຄງການດຳເນີນງານຕ່າງກັນກໍຕາມ ອນສ. ກໍໄດ້ປະກອບສ່ວນເຂົ້າໃນການສຳເລັດໜ້າທີ່ຍຸດທະສາດແລະຍຸດໂທບາຍຂອງການປະຕິວັດປະເທດເຮົາຢ່າງດີງາມ, ເຕົ້າໂຮມ ແລະເພີ່ມທະວີກ້ອນກຳລັງສາມັກຄີ ນຸດທະສາສະນິກະຊົນທັງຫລາຍຢ່າງບໍ່ຢຸດຢັ້ງ ຊຶ່ງເປັນພື້ງໃນບັນດາປັດໄຈອັນສຳຄັນຍິ່ງໃນການຮັບປະກັນໄຊຊະນະຂອງການປະຕິວັດປະເທດເຮົາ.

ນັບແຕ່ປະເທຊາດຂອງພວກເຮົາ ໄດ້ລ່ວງເຂົ້າສູ່ໄລຍະຂອງການປະຕິວັດ, ອົງການພຸດທະສາສະໜາສຳພັນ ໄດ້ສຸມກຳລັງແຮງຂອງຕົນປະກອບສ່ວນເຂົ້າໃນການປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມຕາມທີ່ພັກປະຊາຊົນປະຕິວັດລາວໄດ້ວາງໄວ້ ແລະແນວລາວສ້າງຊາດ ໄດ້ນຳເອົາການເຜີຍແຜ່ໃຫ້ສະມາຊິກຂອງຕົນ.

ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງສະພາບການ ແລະໜ້າທີ່ການເມືອງ ຂອງການປະຕິວັດໃນໄລຍະໃໝ່ນີ້ ກອງປະຊຸມໃຫຍ່ ອນສ. ແຫ່ງປະເທດລາວ ອັນເປັນປະຫວັດສາດໄດ້ໄຂຂຶ້ນໃນປີ 1981 ແລະໄດ້ວາງແຜນການ 5 ປີ ຂອງ ອນສ. ແຕ່ປີ 1981 – 85 ແນໃສ່ເຮັດໃຫ້ພະສົງສາມະເນນລາວເຊື່ອມຊຶມພາລະບົດບາດ ແລະ ຄວາມໝາຍສຳຄັນຂອງພະສົງລາວໃນ 2 ໄລຍະຄື:

1) ໄລຍະກ່ອນປີ 1975 ຄືນຫລັງ.

2) ໄລຍະດັດສ້າງ ແລະກໍ່ສ້າງສັງຄົມນິຍົມ ແຕ່ປີ 1975 ມາເຖິງປະຈຸບັນນີ້:

I – ພາລະບົດບາດ ແລະ ຄວາມໝາຍສຳຄັນຂອງພະສົງລາວໄລຍະກ່ອນປີ 1975

1) ພະສົງລາວ ໄດ້ພ້ອມກັນປະຕິບັດພາລະໜ້າທີ່ຂອງຕົນຕາມຫລັກສິນທຳທາງພຸດທະສາສະໜາ ປົກປັກຮັກສາສີສັນຂອງພຸດທະສາສະໜາໃຫ້ບໍລິສຸດປອດໃສ ໄປຕາມຍຸກສະໄໝຂອງສັງຄົມລາວຕະຫລອດມາ ໂດຍໃຊ້ການສຶກສາອົບຮົມສິນທຳໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວປະເທດ, ເຮັດໃຫ້ປະຊາຊົນມີສິນທຳອັນດີງາມປະຈຳຈິດໃຈ, ພາໃຫ້ປະເທດລາວມີອະລິຍະທຳອັນສູງເດັ່ນ, ມີບົດບາດຕໍ່ສັງຄົມລາວ ແລະຕໍ່ຊາວໂລກ.

2) ໃນໄລຍະພວກຈັກກະພັດຝະລັ່ງຜູ້ຮຸກຮານ ແລະຈັກກະພັດອາເມລິກາ ໄດ້ເຂົ້າຮຸກຮານ ແລະຍຶດຄອງປະເທດລາວ, ພະສົງລາວຈຳນວນຫລາຍໃນທົ່ວປະເທດກໍໄດ້ເອົາໃຈໃສ່ເຂົ້າຮ່ວມຂະບວນການຕໍ່ສູ້ຈາກແຕ່ລະບຸກຄົນ ເຖິງມີການຈັດຕັ້ງ ເປັນອົງການພຸດທະສາສະໜາສຳພັນຂົ້ນ ພາຍໃຕ້ການອຸປະຖຳບຳລຸງຂອງຂະບວນການແນວລາວຮັກຊາດໃນເມື່ອກ່ອນ ຈົນເຖິງມື້ປົດປ່ອຍທົ່ວປະເທດ ແລະສະຖາປະນາປະເທດຊາດ ເປັນສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ອັນ ໃນວັນທີ 2 ທັນວາ 1975. ພະສົງລາວທັງສອງເຂດໄດ້ໃຊ້ທຸກຮູບການທີ່ເໝາະສົມ ເພື່ອເຂົ້າຮ່ວມເຮັດການປະຕິວັດປົດປ່ອຍຊາດ ແລະປົດປ່ອຍພຸດທະສາສະໜາລາວຢ່າງສົມກຽດ.

II – ພາລະບົດບາດ ແລະຄວາມໝາຍສຳຄັນຂອງພະສົງລາວໃນໄລຍະດັດສ້າງ ແລະກໍ່ສ້າງສັງຄົມນິຍົມ.

1) ພາຍຫລັງການປົດປ່ອຍຊາດໃນທົ່ວປະເທດແລ້ວ ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ເຕົ້າໂຮມເອົາພະສົງລາວ ໃນທົ່ວປະເທດເຂົ້າກັນຢ່າງໄວວາ ແລະໄດ້ເຕົ້າໂຮມເອົາພະສົງຝ່າຍມະຫານິກາຍ ແລະທຳມະຍຸດໃນເມື່ອກ່ອນ ເຂົ້າກັນເປັນພະສົງລາວອັນໜຶ່ງອັນດຽວ ໄດ້ຢ່າງສຳເລັດຜົນ.

2) ອົງການນີ້ ໄດ້ຈັດຕັ້ງນຳພາພະສົງລາວ ແລະພຸດທະສາສະນິກະຊົນລາວ ໃຫ້ດຳເນີນກິດຈະການຂອງຕົນຢ່າງມີອິດສະຫລະພາບ, ໄດ້ຮັບຄວາມໄວ້ວາງໃຈ ແລະໄດ້ຮັບຄວາມເບິ່ງແຍງຢ່າງໃກ້ຊິດຈາກແນວໂຮມແຫ່ງຊາດ, ຈາກພັກ ແລະລັດ, ໄດ້ຮັບຄວາມນິຍົມຊົມຊອບຈາກມະຫາຊົນ ແລະໄດ້ຮັບກຽດສູງໃນເວທີສາກົນ.

3) ພະສົງສາມະເນນ ແລະຊາວພຸດລາວ ໄດ້ສ້າງຜົນງານຕາມພາລະບົດບາດຂອງຕົນປະກອບສ່ວນເຂົ້າໃນພາລະກິດຂອງຊາດຫລາຍພໍສົມຄວນ ເຊິ່ງພັກ, ລັດຖະບານ ແລະປະຊາຊົນໄດ້ຍ້ອງຍໍຊົມເຊີຍເລື້ອຍໆມາ.

III – ແຜນການ 5 ປີ ແຕ່ປີ 1981 – 1985 ຂອງ ອພສ. ແຫ່ງປະເທດລາວ.

– ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ວາງແຜນການ 5 ປີ ຂອງຕົນອອກ ບົນພື້ນຖານແຜນການ 5 ປີ ຂອງ ລັດ ເທື່ອທຳອິດ, ໂຄງການດຳເນີນງານ 10 ຂໍ້ ແລະກົດລະບຽບຂອງແນວລາວສ້າງຊາດ, ພ້ອມທັງ ໄດ້ຈັດຕັ້ງບໍ່ບປຸງຄະນະສູນກາງ ອພສ. ເພື່ອຊີ້ນຳການປະຕິບັດໜ້າທີ່ຂອງຕົນ.

ໃນ 10 ກວ່າປີທີ່ຜ່ານມາ, ໂດຍປະຕິບັດຕາມແຜນການ 5 ປີ ຄັ້ງທີ 1 ຂອງ ອພສ. ບອກໃສ່ກັບແຜນການ 5 ປີ ແຫ່ງລັດ ແລະໂຄງການດຳເນີນງານຂອງ ກອງປະຊຸມໃຫຍ່ຄັ້ງທີ I ຂອງແນວລາວສ້າງຊາດ, ພາຍໃຕ້ແສງສະຫວ່າງຂອງມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ III ຂອງພັກ, ອພສ. ແຫ່ງປະເທດລາວ ໄດ້ເສີມ ຂະຫຍາຍມູນເຊື້ອອັນດີງາມຂອງຕົນ ແລະຜົນງານອັນປະເສີດຂອງພະສົງສາມະເນນ ແລະປະຊາຊົນລາວ, ເສີມຂະຫຍາຍ ແລະບໍ່ບປຸງ ອພສ. ແຫ່ງປະເທດລາວ ໃຫ້ ກວ້າງຂວາງ, ໜັກແໜ້ນ ປະກອບສ່ວນເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດ ຂອງພັກ ເຊິ່ງສະແດງອອກໃຫ້ເຫັນໃນຜົນງານອັນເດັ່ນຊັດດັ່ງລຸ່ມນີ້ :

1) ໄດ້ຈັດຕັ້ງ ປັບປຸງອົງການສົມທົບກັບແນວໂຮມ ເພື່ອເປີດກວ້າງເຕົ້າໂຮມກ້ອນກຳລັງມະຫາສາມັກຄີປວງຊົນເຜົ່າ ຕ່າງໆ, ຊັ້ນຄົນຕ່າງໆ. ເສີມຂະຫຍາຍກຳລັງແຮງສັງລວມອັນ ບຶງໃຫຍ່ຂອງຊາດເຮົາໃນຊຸມປີທຳອິດ ແຫ່ງໄລຍະໃໝ່ຂອງການ ປະຕິວັດໃນປະເທດເຮົາ.

ອພສ. ໄດ້ປັບປຸງການຈັດຕັ້ງອົງການຂອງຕົນ ໂດຍສົມທົບກັບແນວໂຮມແຫ່ງຊາດ, ຕັດສິນໃຈນຳພາພຸດທະສາສະໜາ ກໍຄືພະສົງສາມະເນນລາວໃນທົ່ວປະເທດ ສ້າງສັງຄົມນິຍົມ ພາຍໃຕ້ການນຳພາຂອງພັກ ແລະລັດຖະບານຢ່າງສຸດກົກສຸດປາຍ, ສືບຕໍ່ເພີ່ມທະວີວຽກງານການຮ່ຳຮຽນຄຳສັ່ງສອນຂອງພະພຸດທະເຈົ້າ ສົມທົບກັບການປັບປຸງແນວຄິດການເມືອງ ເລັ່ງໃສ່ເອົາການສຶກສາວັດທະນະທຳເປັນຕົ້ນຕໍ່ໃຫ້ແກ່ພະສົງສາມະເນນ, ພຸດທະສາສະນິກະຊົນເຜົ່າຕ່າງໆ, ອອກແຮງປັບປຸງ ແລະຮັດແໜ້ນກ້ອນກຳລັງຄວາມສາມັກຄີຂອງປວງຊົນລາວທັງມວນ, ຂອງພັກສາສະໜາຕ່າງໆ, ອົງການຈັດຕັ້ງຂອງລັດ ແລະມະຫາຊົນບັນດາເຜົ່າໃນທົ່ວປະເທດ.

ອພສ. ຈັດຕັ້ງການເທດສະໜາ ເຜີຍແຜ່ສິນທຳຂອງພະພຸດທະເຈົ້າ, ແນວທາງນະໂຍບາຍຂອງພັກ ແລະລັດ ແລະເທດສະໜາອົບຮົມປະຊາຊົນໃຫ້ມີຄວາມດຸໝັ່ນຂະຫຍັນພຽນ ມີຄວາມເຊື່ອ ຄວາມເຫລື້ອມໃສໃນສິນທຳຂອງພຸດທະ-ສາສະໜາ ແລະສິນທຳຂອງຍຸກສະໄໝໃຫ້ມີຄວາມອົດທົນຕໍ່ການປະກອບວຽກງານ, ໃຫ້ມີສະຕິຕໍ່ການຈັດຕັ້ງ ສາມາດຕ້ານກົນອຸບາຍມ້າງເພແບ່ງແຍກ ແລະທຳລາຍຂອງສັດຕູໄດ້ຈຳນວນໜຶ່ງ ແລະສາມາດຂົນຂວາຍປະຊາຊົນໃຫ້ລົບລ້າງຮີດຄອງປະເພນີຫລ້າຫລັງງົມງວາຍໄດ້ຈຳນວນໜຶ່ງ.

2) ອພສ. ໄດ້ຈັດຕັ້ງໂຮງຮຽນພະສົງຕາມລະບົບການສຶກສາໃໝ່, ລົບລ້າງການກືກໜັງສື ແລະບຳລຸງວັດທະນະທຳໃຫ້ພະສົງສາມະເນນ ແລະປະຊາຊົນ ໃຫ້ມີຄວາມຮູ້ຄວາມສະຫລາດກ້າວໜ້າຂະຫຍາຍຕົວຕາມໄລຍະໃໝ່ຂອງການປະຕິວັດ.

– ໂດຍອີງໃສ່ການສຶກສາໃນໄລຍະໃໝ່ ຂອງການປະຕິວັດ, ອພສ. ແຫ່ງປະເທດລາວ ໄດ້ຈັດຕັ້ງໂຮງຮຽນພະສົງຂຶ້ນໂດຍໃຫ້ຮຽນຕາມຫລັກສູດຂອງການສຶກສາ ຂອງກະຊວງສຶກສາ ແລະຮຽນຫລັກສິນທຳທາງພຸດທະສາສະໜາ ແລະຫລັກວິຊາການອື່ນຂອງໂລກ ຄຽງຄູ່ກັນໄປຕັ້ງແຕ່ຊັ້ນປະຖົມເຖິງຊັ້ນອຸດົມ ເກືອບທຸກແຂວງໃນທົ່ວປະເທດ, ພ້ອມກັນນັ້ນ ກໍໄດ້ມີໂຮງຮຽນສ້າງຄູຊັ້ນຕົ້ນ ຊັ້ນກາງຢູ່ວຽງຈັນ ແລະຫລວງພະບາງ. ແຕ່ລະປີມີນັກຮຽນສອບເສັງໄດ້ເປັນຈຳນວນຫລາຍພໍສົມຄວນ ແລະໄດ້ສົ່ງລົງໄປຮັບໃຊ້ເປັນຄູສອນຢູ່ຕາມໂຮງຮຽນສົງ ແລະໂຮງຮຽນລັດ ໃນທົ່ວປະເທດ ຕາມຄວາມຕ້ອງການຂອງວຽກງານ.

– ອພສ. ໄດ້ຈັດຕັ້ງໃຫ້ພະສົງສາມະເນນລົງໄປສົມທົບກັບອຳນາດການປົກຄອງແຫ່ງລັດ ດຳເນີນຂັ້ນລົບລ້າງການກືກໜັງສືໃຫ້ພະສົງສາມະເນນ ແລະປະຊາຊົນເຜົ່າຕ່າງໆ ແລະຊ່ວຍບຳລຸງວັດທະນະທຳໃຫ້ ພະນັກງານ, ຕຳຫລວດ, ທະຫານ, ປະກອບສ່ວນກັບບັນດາຄູ ແລະອາຈານຂອງໂຮງຮຽນລັດ ຕາມຄວາມຮຽກຮ້ອງຕ້ອງການ, ປຸກໂຮງຮຽນປະຖົມ ແລະມັດທະຍົມ, ເຮັດໂຕະ, ກະດານ, ຕັ່ງ, ເພື່ອໃຫ້ລູກຫລານມີບ່ອນສຶກສາຮ່ຳຮຽນ ຕາມເງື່ອນໄຂໃນແຕ່ລະທ້ອງຖິ່ນ.

3) ອພສ. ໄດ້ຈັດຕັ້ງຄະນະປົກປັກຮັກສາບົວແປງວັດວາອາຣາມ, ປູຊະນີຍະສະຖານ ແລະວັດທະນະທຳ.

– ອີງໃສ່ມະຕິ ແລະແຜນການແຫ່ງລັດ ເພື່ອປົກປັກຮັກສາວັດຖຸບູ-ຮານ, ວັດວາອາຮາມ, ອພສ. ໄດ້ຈັດຕັ້ງຄະນະປົກປັກຮັກສາບູຮານວັດຖຸເປັນ

ສອງຂັ້ນຄື: ຂັ້ນຄະນະກຳມະການ ແລະຂັ້ນອະນຸກຳມະການ ເພື່ອປົກປັກຮັກສາ ແລະສ້ອມແປງວັດວາອາຣາມ ແລະພະທາດເຈດີຫລາຍແຫ່ງ. ໃນໄລຍະ 5 ປີທີ່ຜ່ານມາ ອພສ. ໄດ້ພ້ອມກັບອອກຕົນຍາດໂຍມ ແປງພະທາດສີທຳມະທາຍໂສກ, ກົມມະລຽນໄດ້ຈຳນວນໜຶ່ງ ແລະດຳເນີນການສ້ອມແປງມະຫາກະດິວັດທາດຫລວງເໜືອ ແລະວັດຕ່າງໆ ໃນກຳແພງນະຄອນ. ສ່ວນຢູ່ໃນວັດຕ່າງແຂວງ ການສ້ອມແປງວັດວາອາຣາມ ແລະບູຮານວັດຖຸ ກໍໄດ້ດຳເນີນໄປຕາມເງື່ອນໄຂບາງແຂວງເຮັດໃຫ້ວັດວາອາຣາມມີໃບໜ້າໃໝ່ຢູ່ໃນລະບອບໃໝ່ສັງຄົມນິຍົມ, ຍັງແຕ່ວັດວາ-ອາຣາມ 10 ກວ່າແຂວງ ທີ່ຖືກລູກລະເບີດອາເມລິກາຍິງທຳລາຍເກືອບໝົດທຸກແຫ່ງນັ້ນ ຍັງບໍ່ທັນໄດ້ປະຕິສັງຂອນຄືນໝົດເທື່ອ ຍ້ອນຄວາມສາມາດອັນຈຳກັດຂອງປະຊາຊົນ.

4) ອພສ. ໄດ້ຈັດຕັ້ງຄະນະໝໍປາພື້ນເມືອງສົງ ປົກປັກຮັກສາມູນເຊື້ອອັນດີງາມຂອງພະສົງລາວ ໃນເມື່ອກ່ອນ ເພື່ອປິ່ນປົວພະຍາດໂລກາໃຫ້ປະຊາຊົນບັນດາເຜົ່າ ເຮັດໃຫ້ວັດເປັນໂຮງໝໍປາພື້ນເມືອງ ທີ່ປິ່ນປົວປະຊາຊົນໂດຍບໍ່ເອົາຄ່າແຕ່ປ່າງໃດ.

– ອີງຕາມແຜນການແຫ່ງລັດໃຫ້ມີອະນາໄມສາມສະອາດໃນໝູ່ປະຊາຊົນບັນດາເຜົ່າ ໂດຍການສົມທົບກັບສະຖາບັນການຢາພື້ນເມືອງຂອງກະຊວງສາທາລະ-ມະສຸກ, ໃນໄລຍະທີ່ຜ່ານມາ ອພສ. ໄດ້ຜະລິດຢາເປັນຜົງ, ເປັນນ້ຳ, ເປັນ

ເມັດ ແລະປະກອບຢາຕົ້ມ, ຢາຜົງ, ຢາອົບ ເພື່ອປົ່ນປົວພະຍາດໄລຄາໃຫ້ປະຊາຊົນບັນດາເຜົ່າຜູ້ອອກແຮງງານການຜະລິດຢູ່ຕາມທ້ອງຖິ່ນ,ຕ້ານໄຂ້ຍຸງລາຍໄດ້ຜົນດີເກືອບເຖິງ 90% ໂດຍບໍ່ໄດ້ໃຊ້ຢາຫລວງເລີຍ. ນອກຈາກນັ້ນ ອພສ. ກໍ່ໄດ້ພິມຕຳລາຢາແຈກໃຫ້ປະຊາຊົນທັງພາຍໃນ ແລະຕ່າງປະເທດ, ໄດ້ປູກຕົ້ນໄມ້ເປັນຢາ, ຕົ້ນໄມ້ເປັນດອກ, ເປັນໝາກ ແລະຕົ້ນໄມ້ອຸດສາຫະກຳ ໂດຍໄດ້ເອົາດິນອັດ ແລະດິນປະຮ້າງເປັນສວນປູກຢາ ແລະປູກຕົ້ນໄມ້ປະເພດຕ່າງໆ. ໃນແຕ່ລະປີ ອພສ. ໄດ້ລະດົມພະເນນ ບໍລິຈາກເລືອດໃຫ້ທະນາຄານເລືອດໄດ້ຫລາຍພັນຊີໆ ແຕ່ໃນບາງກໍລະນີທີ່ພະສົງສາມະເນນ ແລະປະຊາຊົນ ຍາດໂຍມ ເຈັບເປັນຢ່າງກະທັນຫັນ ກໍໄດ້ລະດົມພະເນນ ບໍລິຈາກເລືອດໃຫ້ຕາມຄຳຮຽກຮ້ອງຕ້ອງການ.

5) ອພສ. ໄດ້ຈັດຕັ້ງຄະບະເຄື່ອນໄຫວວຽກງານສັນ-ຕິພາບສາກົນ.

ອພສ. ແຫ່ງປະເທດລາວ ເປັນອົງການທີ່ໄດ້ເຄື່ອນໄຫວວຽກງານສັນຕິພາບສາກົນ ຄືໄດ້ເຂົ້າເປັນສະມາຊິກຂອງອົງການຊາວພຸດອາຊີເພື່ອສັນຕິພາບ ອັນມີສຳນັກງານໃຫຍ່ຕັ້ງຢູ່ ສ. ປ. ມົງໂກລີ, ແຕ່ລະປີ ໄດ້ສົ່ງຄະນະຜູ້ແທນໄປຮ່ວມກອງປະຊຸມເພື່ອສັນຕິພາບສາກົນ ຮ່ວມກັບບັນດາເພື່ອນມິດທີ່ເປັນສະມາຊິກຂອງອົງການນີ້ຕາມຄຳເຊີນ. ການເຄື່ອນໄຫວວຽກງານສັນຕິພາບດັ່ງນີ້:

1. ສຸດມົນພາວະນາເພື່ອສັນຕິພາບ, 2. ລອບລອມເອົາລາຍເຊັນ

ເພື່ອສັນຕິພາບ, 3. ຍ່າງເພື່ອສັນຕິພາບ, 4. ຊຸມນຸມເພື່ອສັນຕິພາບ, 5. ອອກຖະແຫລງການເພື່ອສັນຕິພາບ, 6. ປະຊຸມສຳມະນາລະດັບພາຍໃນປະເທດ ແລະລະດັບອົງເຂດເພື່ອສັນຕິພາບ.

ເພື່ອປະຕິບັດພາລະບົດບາດຂອງຕົນໃຫ້ນັບມື້ນັບດີຂຶ້ນ ອພສ. ແຫ່ງປະເທດລາວ ກໍໄດ້ພົວພັນນັບມື້ນັບແໜ້ນແຟ້ນກັບບັນດາອົງການຈັດຕັ້ງມະຫາຊົນຢູ່ພາຍໃນປະເທດ ແລະພ້ອມກັນປຸກລະດົມມະຫາຊົນປະຕິບັດທຸກແຜນນະໂຍບາຍຂອງພັກແລະລັດ ທີ່ແນໃສ່ປົກປັກຮັກສາສັນຕິພາບ. ຜ່ານຈາກນັ້ນ ເຮັດໃຫ້ການຈັດຕັ້ງຂອງ ອພສ. ໄດ້ຮັບການຂຶ້ນປຸງນັບມື້ນັບຕິດພັນກັບບັນດາອົງການຈັດຕັ້ງມະຫາຊົນທັງພາຍໃນ ແລະສາກົນ.

ລວມຄວາມວ່າ: ໃນໄລຍະ 7 ປີກວ່າມານີ້ ອພສ. ແຫ່ງປະເທດລາວໄດ້ຮັບການຂຶ້ນປຸງເປັນໄລຍະ ບົນພື້ນຖານຈິດໃຈຮັກຫອມສິນທຳ, ຮັກຫອມປະເທດຊາດ, ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ, ເຮັດໃຫ້ສະຕິປະເທດຊາດ ແລະຄວາມເປັນເອກະພາບອັນໜຶ່ງອັນດຽວກັນໄດ້ຮັບການເຊີດຊູຂຶ້ນຕື່ມ ໃນຂະບວນພະສົງສາມະເນນ ແລະພຸດທະສາສະນິກະຊົນ ແລະຊຸກຍູ້ພອກເພີ່ມຕ້ານກົນອຸບາຍຂອງສັດຕູທີ່ພະຍາຍາມແບ່ງແຍກ ແລະການທຳລາຍມ້າງເພລະບອບໃໝ່ຂອງບ້ານເມືອງລາວ ເພື່ອປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດປົກປັກຮັກສາ ແລະກໍ່ສ້າງປະເທດຊາດ, ເຊີດຊູພຸດທະສາສະໜາ ແລະເພີ່ມທະວີຄວາມສາມັກຄີສາກົນ.

ບັນດາຜົນງານຂອງ ອພສ. ແຫ່ງປະເທດລາວ ເປັນໄຊຊະນະອັນໃຫຍ່

ຫລວງຫລາຍດ້ານ ແລະມີລັກສະນະໜັກແໜ້ນ ໄດ້ມາຍ້ອນການເອົາໃຈໃສ່ນຳພາຂອງແນວລາວສ້າງຊາດ ແລະພັກປະຊາຊົນປະຕິວັດລາວ ທີ່ມີແນວທາງອັນຖືກຕ້ອງເປັນທຳ ເຊິ່ງເວລາໃດກໍໄດ້ຖືເອົາວຽກງານປຸກລະດົມຂົນຂວາຍມະຫາຊົນ ແລະການປະຕິບັດສິນທຳທາງພຸດທະສາສະໜາ ແລະສິນທຳຂອງຍຸກສະໄໝເປັນສິ່ງສຳຄັນ. ນອກຈາກນັ້ນ ບັນດາອົງການຈັດຕັ້ງແຫ່ງລັດ ທັງຂັ້ນສູນກາງ ແລະຂັ້ນທ້ອງຖິ່ນກໍໄດ້ໃຫ້ການຊ່ວຍເຫລືອການຮ່ວມໄມ້ຮ່ວມມື ແລະການປະສານສົມທົບແກ່ ອພສ. ແຫ່ງປະເທດລາວເຮົາ ໃນການເຄື່ອນໄຫວຕ່າງໆ ອັນເປັນການສ້າງເງື່ອນໄຂໃຫ້ ອພສ. ແຫ່ງປະເທດລາວ ຍາດເອົາໝາກຜົນຕົວຈິງ ແລະຄວາມກ້າວໜ້າໃນການດຳເນີນຊີວິດຕາມທຳນອງຄອງທຳຂອງຕົນມາໄດ້ຕາມຄວາມປະສົງຂອງທຸກຄົນ.

ໃນໂອກາດອັນສະຫງ່າລາສີນີ້, ກອງປະຊຸມໃຫຍ່ຄັ້ງທີ III ຂອງ ອພສ. ແຫ່ງປະເທດລາວ ຂໍສະແດງຄວາມຮູ້ບຸນຄຸນ ແລະຄວາມເຊື່ອໝັ້ນຢ່າງຕາຍໃຈ ຕໍ່ພັກປະຊາຊົນປະຕິວັດລາວ ອັນມີພະນະທ່ານເລຂາທິການໃຫຍ່ ໄກສອນ ພົມວິຫານ ທີ່ເຄົາລົບຮັກແພງ ຂອງປະຊາຊົນລາວທັງຊາດເປັນຜູ້ນຳໜ້າ ທີ່ໄດ້ວາງແນວທາງອອກຢ່າງຖືກຕ້ອງ, ຊີ້ຊ່ອງເບື້ອງທາງໃຫ້ທົ່ວປວງປະຊາຊົນລາວເຮົາ ກ້າວຂຶ້ນຢ່າງໜັກແໜ້ນຈາກໄຊຊະນະນີ້ ໄປສູ່ໄຊຊະນະໃໝ່ ໃຫຍ່ຫລວງຂຶ້ນເລື້ອຍໆ.

ກອງປະຊຸມໃຫຍ່ຄັ້ງທີ III ຂອງ ອພສ. ແຫ່ງປະເທດລາວ ຂໍສະແດງຄວາມຂອບໃຈອັນຈິງໃຈຕໍ່ແນວລາວສ້າງຊາດ ທີ່ໄດ້ນຳເອົາແນວທາງນະໂຍບາຍຂອງພັກດັ່ງກ່າວນັ້ນມາເຜີຍແຜ່ໃຫ້ ອພສ. ປະຕິບັດຢ່າງຖືກຕ້ອງ, ຂໍສະແດງຄວາມຊົມເຊີຍ ແລະ ຍ້ອງຍໍສັນລະເສີນປະຊາຊົນເຜົ່າຕ່າງໆ, ກຳມະກອນ,

ພະນັກງານ, ທະຫານ, ຕຳຫລວດ, ຜູ້ຊົງຄຸນວຸດທິ. ປັນຍາຊົນ ແລະພໍ່ຄ້າຊາວຂາຍ ທີ່ໄດ້ປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ ອັນເປັນການອຸທິດຢ່າງໃຫຍ່ຫລວງໃຫ້ແກ່ພຸດທະສາສະໜາອັນແສນຮັກ ແລະຫວງແຫນຂອງພວກເຮົານັ້ນ ຢ່າງສຸດອົກສຸດໃຈ, ພວກເຮົາຂໍສະແດງຄວາມຊົມເຊີຍຕໍ່ພຸດທະສາສະນິກະຊົນລາວ ຢູ່ຕ່າງປະເທດ ຜູ້ມີຈິດໃຈຮັກຊາດເຫລື້ອມໃສໃນພຸດທະສາສະໜາ ທີ່ໄດ້ປະກອບສ່ວນຕາມຄວາມສາມາດຂອງຕົນເຂົ້າໃນການພັດທະນາສ້າງສາບ້ານເມືອງ ບູລະນະສ້ອມແປງວັດວາອາຣາມຂອງພວກເຮົາໃຫ້ມີສີສັນອັນເຫລື້ອມໃສຮຸ່ງເຮືອງຄືນມາໃໝ່, ຂໍສະແດງຄວາມຊົມເຊີຍຕໍ່ຊາວຕ່າງດ້າວ ທີ່ດຳລົງຊີວິດຢູ່ໃນປະເທດເຮົາ ເຊິ່ງມີຄວາມສະໜິດຕິດພັນຢ່າງແໜ້ນແຟ້ນກັບປະຊາຊົນລາວ ມີຄວາມເຫລື້ອມໃສໃນພຸດທະສາສະໜາ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະກໍ່ສ້າງປະເທດຊາດ ແລະພຸດທະສາສະໜາຂອງພວກເຮົາ.

ພວກເຮົາຂໍສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງ ແລະຄວາມຂອບອົກຂອບໃຈຢ່າງຈິງໃຈຕໍ່ຊາວພຸດ ແລະປະຊາຊົນຫວຽດນາມ, ຊາວພຸດ ແລະປະຊາຊົນກຳປູເຈຍ, ຊາວພຸດ ແລະປະຊາຊົນໂຊວຽດ, ຊາວພຸດ ແລະປະຊາຊົນມົງໂກນ, ຊາວພຸດ ແລະປະຊາຊົນບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ທີ່ໄດ້ໃຫ້ການຊ່ວຍເຫລືອອັນໃຫຍ່ຫລວງ ແລະລ້ຳຄ່າທີ່ສຸດແກ່ພາລະກິດປະຕິວັດ ປົກປັກຮັກສາສັນຕິພາບໃນອາຊີອາຄະເນ ໂດຍສະເພາະໃນ ສປປລ. ຂອງພວກຂ້າພະເຈົ້າຕະຫລອດມາ.

ພວກເຮົາຂໍແດງຄວາມຂອບອົກຂອບໃຈຕໍ່ຊາວພຸດ ແລະປະຊາຊົນບັນດາ

ປະເທດເພື່ອນມິດໂດຍຈຳເພາະແມ່ນຊາວພຸດແລະປະຊາຊົນໄທ ທີ່ເປັນບ້ານພີ່ເມືອງນ້ອງ ແລະຕໍ່ບັນດາອົງການຈັດຕັ້ງສາກົນທີ່ໄດ້ໃຫ້ການຊ່ວຍເຫຼືອສະໜັບສະໜູນຊາວພຸດ ແລະປະຊາຊົນລາວບັນດາເຜົ່າ ໃນພາລະກິດພັດທະນາສ້າງສາ ປົກປັກຮັກສາປະເທດຊາດ ແລະສັນຕິພາບໃຫ້ໝັ້ນຄົງຖາວອນ.

ຂ) ຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງ.

ບັນດາທ່ານທີ່ຮັກແພງ !

ຄຽງຄູ່ກັບຜົນງານ ແລະຈຸດດີອັນເປັນພື້ນຖານຂອງ ອພສ. ແຫ່ງປະເທດລາວ ທີ່ກ່າວມາເຖິງນັ້ນພວກເຮົາກໍມີຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງຕົ້ນຕໍດັ່ງນີ້ :

1) ຄະນະ ອພສ. ຍັງບໍ່ທັນກຳແໜ້ນຄວາມນຶກຄິດຈິດໃຈ ແລະຄວາມມຸ່ງມາດປາຖະໜາຂອງພະສົງສາມະເນນ ພຸດທະສາສະນິກະຊົນບັນດາເຜົ່າຍ້ອນແນວນັ້ນ ຈຶ່ງບໍ່ທັນມີເນື້ອໃນປຸກລະດົມຂົນຂວາຍອັນລະອຽດ ແລະແທດເໝາະກັບແຕ່ລະເປົ້າໝາຍ ເພື່ອນຳເອົາຜົນປະໂຫຍດມາສູ່ພະສົງ ສາມະເນນ ແລະພຸດທະສາສະນິກະຊົນ ໃນການເສີມຂະຫຍາຍກຳລັງແຮງສັງລວມຂອງພະສົງສາມະ-ເນນ ແລະພຸດທະສາສະນິກະຊົນ ເຂົ້າໃນການປົກປັກຮັກສາ, ກໍ່ສ້າງປະເທດຊາດແລະບຳລຸງພຸດທະສາສະໜາ.

2) ວຽກງານ ອ.ພ.ສ. ຍັງໜັກໄປແຕ່ການໂຄສະນາສຶກສາອົບຮົມແນວທາງແຜນນະໂຍບາຍແບບລວມໆ ບໍ່ທັນເອົາໃຈໃສ່ຊີ້ນຳ ແລະນຳພາການກະ

ທຳຕົວຈິງໃນແຕ່ລະໄລຍະ, ບໍ່ທັນສົມທົບກັບບັນດາອົງການຈັດຕັ້ງຂອງລັດ ແລະ ມະຫາຊົນຢ່າງແໜ້ນແຟ້ນ ເພື່ອປຸກລະດົມພະສົງສາມະເນນ, ປະຊາຊົນຊາວພຸດ ແລະປະຊາຊົນເຜົ່າຕ່າງໆ ເຂົ້າຮ່ວມໃນຂະບວນການກໍ່ສ້າງ ຂະຫຍາຍເສດຖະກິດ ວັດທະນະທຳສັງຄົມ ແລະການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ໄດ້ດີຂຶ້ນ ກວ່າເກົ່າເລື້ອຍໆ. ຈຸດອ່ອນອັນນັ້ນ ມັນສົ່ງຜົນສະທ້ອນອັນບໍ່ດີ ເຮັດໃຫ້ນ້ຳໃຈເບີກບານຂອງພວກເຂົາເຈົ້າບໍ່ກວ້າງຂວາງ ແລະໜັກແໜ້ນ ອັນເຮັດໃຫ້ຂະບວນການດຳເນີນໄປບໍ່ສະໝ່ຳສະເໝີ ແລະບໍ່ເນື່ອງນິດລຽນຕິດ.

3) ຄະນະ ອພສ. ແລະ ພຸດທະສາສະນິກະຊົນ ຍັງບໍ່ທັນປະສານສົມທົບກັນຢ່າງແໜ້ນແຟ້ນໃນການເຮັດວຽກງານຍາດແຍ່ງ ແລະຂື່ບປຸງແບບແຜນປະຕິບັດຮີດຄອງປະເພນີອັນດີງາມຂອງພຸດທະສາສະໜາ ໃຫ້ເປັນເອກະພາບຢ່າງໜັກແໜ້ນ, ເພື່ອເພີ່ມທະວີແນວຄິດຕາມຫລັກສິນທຳທາງພຸດທະສາສະໜາແລະສິນທຳຂອງຍຸກສະໄໝ, ຍ້ອນແນວນັ້ນຈຶ່ງມີພະສົງສາມະເນນ ແລະພຸດທະສາສະນິກະຊົນຈຳນວນໜ້ອຍໜຶ່ງຫລົງເຊື່ອຄວາມໂຄສະນາຂອງສັດຕູ ແລະໂຕນໜີຈາກປະເທດຂອງຕົນໄປ. ອີກດ້ານໜຶ່ງໂຄງການປະກອບການຈັດຕັ້ງຂອງ ອພສ. ຂັ້ນຕ່າງໆ ເປັນຕົ້ນແມ່ນຂັ້ນຮາກຖານຍັງບໍ່ທັນໄດ້ຮັບການອົບຮົມຮ່ຳຮຽນ ບູລະນະຢ່າງພຽງພໍ ເພື່ອໃຫ້ສອດຄ່ອງກັບທີ່ຕັ້ງ ແລະພາລະບົດບາດຂອງວຽກງານ ອພສ. ໃນໄລຍະໃໝ່. ການດຳເນີນຊີວິດຂອງ ອພສ. ບາງບ່ອນບໍ່ທັນເປັນປົກກະຕິພ້ອມທັງຂາດເນື້ອໃນຕົວຈິງ.

4) ສຳລັບວຽກງານພົວພັນຕ່າງປະເທດ ໂດຍສະເພາະແມ່ນວຽກ

ງານຂອງອົງການຊາວພຸດອາຊີເພື່ອສັນຕິພາບ ອພສ. ຍັງບໍ່ທັນປະຕິບັດໄດ້ດີຕາມຫລັກທຳມະນູນຂອງອົງການ ພອສ, ເຮັດໃຫ້ ອພສ. ບໍ່ທັນມີບົດຄວາມໄປລົງໃນວາລະສານສັນຕິພາບ ເຊິ່ງເປັນປາກສຽງຂອງຊາວພຸດໃນທົ່ວໂລກຈັດພິມຂຶ້ນທີ່ສຳນັກງານໃຫຍ່ ພອສ, ສປ. ມົງໂກລີ. ການແປວາລະສານສັນຕິພາບເປັນພາສາລາວ ກໍບໍ່ໄດ້ພິມອອກເຜີຍແຜ່ ເພາະສະພາບນອກຕົວບໍ່ອຳນວຍໃຫ້ໂດຍສະເພາະຂາດທຶນຮອນ.

ສາຍເຫດຕົ້ນຕໍທີ່ພາໃຫ້ມີຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງດັ່ງກ່າວນັ້ນແມ່ນຍ້ອນຄະນະກຳມະການ ອພສ. ແຫ່ງປະເທດລາວແຕ່ລະຂັ້ນ ຍັງບໍ່ທັນຮູ້ແຈ້ງພາລະບົດບາດ, ສິດທາງແລະໜ້າທີ່ຂອງ ອພສ. ກໍດີຂອງພັກແລະລັດ ກ່ຽວກັບວຽກງານພຸດທະສາສະໜາໃນໄລຍະໃໝ່ຂອງການປະຕິວັດຢ່າງເລິກເຊິ່ງ, ຍັງບໍ່ທັນມີແບບແຜນເຮັດວຽກງານທີ່ສອດຄ່ອງກັນ, ບໍ່ທັນຮູ້ຍາດແຍ່ງເອົາຄຳແນະນຳມາຈາກຄະນະແນວລາວສ້າງຊາດ, ຄະນະພັກ ແລະການຮ່ອມມືຈາກຄະນະປົກຄອງຝ່າຍບ້ານເມືອງ ໃນຂັ້ນເທົ່າທຽມກັນກັບຕົນ. ຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງເຫລົ່ານີ້ ໄດ້ສົ່ງຜົນສະທ້ອນບໍ່ໜ້ອຍເຖິງການເສີມຂະຫຍາຍບົດບາດ ແລະຄຸນປະໂຫຍດຂອງ ອພສ. ຕໍ່ພາລະກິດລວມຂອງຊາດ ຂອງພຸດທະສາສະໜາ ເຊິ່ງພວກເຮົາຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃນຂັ້ນຕໍ່ໄປ.

ຄ/– ບາງບົດຮຽນທີ່ຖອດຖອນມາໄດ້.

ບັນດາທ່ານຜູ້ແທນທີ່ຮັກແພງ!

ຜ່ານພຶດຕິກຳການເຄື່ອນໄຫວວຽກງານຂອງ ອພສ. ໃນ 7 ປີກ່ວາ

ທີ່ຜ່ານມາ ກໍຄືໄລຍະ ໒ ປີ, ພວກເຮົາອາດຖອດຖອນບາງບົດຮຽນຕົ້ນຕໍໄດ້ດັ່ງນີ້:

ອັນທີໜຶ່ງ: ການປັບປຸງເສີມຂະຫຍາຍ ອພສ. ແຫ່ງປະເທດລາວ ໃນໄລຍະໃໝ່ເປັນຄວາມຮຽກຮ້ອງຕ້ອງການອັນຈຳເປັນຂອງອົງການພັກ ລັດ ແລະແນວໂຮມທຸກປະເພດໃນການປະຕິບັດພາລະກິດຂະຫຍາຍກຳລັງແຮງສັງລວມຂອງຊາດແລະພຸດທະສາສະໜາເພື່ອສຳເລັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ.

ປະເທດເຮົາເປັນປະເທດນ້ອຍ, ມີຫລາຍເຜົ່າຊົນດ້ວຍກັນ ແລະມີການນັບຖືພຸດທະສາສະໜາບໍ່ເປັນເອກະພາບກັນມາດົນນານແລ້ວ ແຕ່ຊ້ຳພັດໄດ້ປະເຊີນໜ້າກັບສັດຕູຜູ້ຮຸກຮານຕະຫລອດມາ, ເຖິງຢ່າງນັ້ນກໍຕາມ, ປະຊາຊົນເຮົາກໍສາມາດຍາດເອົາໄຊຊະນະອັນໃຫຍ່ຫລວງມາໄດ້. ປັດໃຈພື້ນຖານອັນໜຶ່ງໃນການປະຕິວັດຊາດປະຊາທິປະໄຕໃນປະເທດເຮົາ ແມ່ນກ້ອນກຳລັງມະຫາສາມັກຄີປອງຊົນທັງຊາດທີ່ໄດ້ເຕົ້າໂຮມກັນເຂົ້າໃນແນວໂຮມເອກະພາບແຫ່ງຊາດ ແລະອົງການມະຫາຊົນອື່ນໆນັ້ນເອງ. ທາງພຸດທະສາສະໜາກໍໄດ້ມີສູນກາງ ອພສ. ແຫ່ງປະເທດລາວເປັນຜູ້ນຳພາ. ໃນທຸກມື້ນີ້, ປະເທດເຮົາໄດ້ກາຍເປັນປ້ອມດ່ານໜ້າຂອງສັງຄົມນິຍົມຢູ່ພາກພື້ນອາຊີອາຄະເນ, ສ່ວນພຸດທະສາສະໜາໃນລາວ ກໍໄດ້ເປັນແວ່ນແຍງອັນໃສແຈ້ງຂອງບັນດາພຸດທະສາສະນິກະຊົນ ແລະປະຊາຊົນໃນອາຊີອາຄະເນ ແລະໃນໂລກ. ພວກສັດຕູຂອງປະຊາຊົນເຮົາບໍ່ໄດ້ລົດລະໃນການທຳລາຍມ້າງເພການປະ

ຕິວັດຂອງພວກເຮົາ: ຍິ່ງໄປກວ່ານັ້ນອີກ, ພວກເຮົາຊ້ຳພັດມີໜ້າທີ່ກໍ່ສ້າງສັງຄົມນິຍົມ ໃນເງື່ອນໄຂທີ່ເສດຖະກິດ, ວັດທະນະທຳຍັງຕ່ຳຫລາຍ, ຫລາຍພາກສ່ວນເສດຖະກິດຍັງດົງຕົວຢູ່. ດັ່ງນັ້ນ, ມີແຕ່ການເຕົ້າໂຮມຄວາມສາມັກຄີຂອງພຸດທະສາສະນິກະຊົນ ແລະປະຊາຊົນບັນດາເຜົ່າເຂົ້າກັນເປັນເອກະພາບ ທາງດ້ານແນວຄິດແລະການກະທຳ ຈຶ່ງຈະເຮັດໃຫ້ພຸດທະສາສະໜາມີລັກສະນະສຳພັນຢ່າງກວ້າງຂວາງມີລັກສະນະມະຫາຊົນຢ່າງເລິກເຊິ່ງ, ພ້ອມກັນນັ້ນ ອພສ. ກໍຕ້ອງເປັນເຈົ້າການແລະເສີມຂະຫຍາຍສິດເປັນເຈົ້າລວມໝູ່ໃຫ້ແກ່ພຸດທະສາສະນິກະຊົນ ແລະປະຊາຊົນເຜົ່າຕ່າງໆ. ເວລານັ້ນມັນຈຶ່ງຈະເສີມຂະຫຍາຍກຳລັງແຮງສັງລວມໝົດທັງຊາດ ແລະພຸດທະສາສະໜາໃນລາວ ເພື່ອສຳເລັດສອງໜ້າທີ່ຍຸດທະສາດ ແລະປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ສັນຕິພາບ ໃນອາຊີອາຄະເນ ແລະໃນໂລກໄດ້ເປັນຢ່າງດີ.

ອັນທີສອງ: ປາກກໍ່ສ້າງ ອພສ. ແຫ່ງປະເທດລາວ ໃຫ້ໜັກແໜ້ນເຂັ້ມແຂງຢ່າງແທ້ຈິງນັ້ນ ຕ້ອງເອົາໃຈໃສ່ປັບປຸງ ແລະເພີ່ມທະວີການຈັດຕັ້ງ ອພສ. ທຸກຂັ້ນຢ່າງບໍ່ຢຸດຢັ້ງ.

ເພື່ອໃຫ້ ອພສ. ແຫ່ງປະເທດລາວ ມີຄວາມເຂັ້ມແຂງໜັກແໜ້ນຢ່າງແທ້ຈິງນັ້ນ ຕ້ອງເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ອພສ. ທຸກຂັ້ນ, ເຕົ້າໂຮມຄວາມສາມັກຄີເຂົ້າໃນພິທີກຳຕ່າງໆ ບົນພື້ນຖານນ້ຳໃຈຮັກຫອມສິນທຳ, ຮັກຫອມປະເທດຊາດ, ຊີ້ນຳໆພາພຸດທະສາສະນິກະຊົນ ປະຕິບັດພິທີກຳຮີດຄອງປະເພນີທາງ

ພຸດທະສາສະໜາອັນແທ້ຈິງ. ພະຍາຍາມລົບລ້າງຮີດຄອງປະເພນີອັນເກົ່າແກ່ຊອດກະຈາ ແລະຜິດພາດ, ໄຈ້ແຍກໃຫ້ບຸກຄົນເຫັນແຈ້ງວ່າ ອັນໃດແມ່ນສາສະໜາພຸດ ແລະອັນໃດແມ່ນອັນຜິດພາດ ຈາກຄຳສັ່ງສອນຂອງພະພຸດທະເຈົ້າ, ແມ່ນລັດທິພັກພວກ, ລັດທິເອກະຊົນແລ້ວປະຕິບັດແຕ່ພິທີກຳອັນບໍລິສຸດຂອງສາສະໜາ ນຳໃຊ້ແຕ່ເນື້ອໃນສິນທຳທາງພຸດທະສາສະໜາເທົ່ານັ້ນ ຈຶ່ງຈະເຮັດໃຫ້ພຸດທະສາສະໜາໃນລາວບໍລິສຸດປອດໃສ ເປັນບ່ອນອີງອັນໜັກແໜ້ນໃຫ້ແກ່ສັງຄົມລາວ.

ອັນທີສາມ : ອພສ. ແຫ່ງປະເທດລາວຕ້ອງເຄື່ອນໄຫວໂດຍສົມທົບແນວທາງຂອງພັກ ແລະລັດ ແລະບາດແບ່ງເອົາການຊີ້ນຳຍາວຂອງພັກ ແລະແນວລາວສ້າງຊາດ ປະສານສົມທົບຢ່າງແໜ້ນແຟ້ນ ກັບບັນດາອົງການຈັດຕັ້ງແຫ່ງລັດ ແລະອົງການມະຫາຊົນຕ່າງໆ ອັນນັ້ນເປັນເງື່ອນໄຂອັນຈຳເປັນເພື່ອໃຫ້ ອພສ. ປະຕິບັດພາລະບົດບາດຂອງຕົນໄດ້ເປັນຢ່າງດີ.

ຄືດັ່ງພວກເຮົາໄດ້ຮູ້ດີແລ້ວວ່າ ພັກປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງນຳພາທຸກໄຊຊະນະຂອງການປະຕິວັດລາວເຮົາໃນຫລາຍສິບປີທີ່ຜ່ານມາ, ອພສ. ໃນເມື່ອກ່ອນໄດ້ຮັບການອຸປະຖຳບຳລຸງຈາກພັກ ແລະແນວລາວຮັກຊາດ ຈົນເຖິງກ້າວຂຶ້ນເປັນແນວລາວສ້າງຊາດຢ່າງບໍ່ຢຸດຢັ້ງ ຍ້ອນແນວນັ້ນ ອພສ. ແຫ່ງປະເທດລາວຈຶ່ງໄດ້ສຳເລັດພາລະກຳປະຫວັດສາດຂອງຕົນຢ່າງສະຫງ່າງາມ.

ໃນໄລຍະໃໝ່ຂອງການປະຕິວັດ, ອໜສ. ເປັນພາກສ່ວນປະກອບອັນໜຶ່ງຂອງອົງການຈັດຕັ້ງມະຫາຊົນ ໂດຍມີພັກເປັນໃຈກາງນຳພາ. ດັ່ງນັ້ນ, ອໜສ. ຈຶ່ງຕ້ອງເຊື່ອມຊຶມ ກຳແໜ້ນນະໂຍບາຍຕ່າງໆທີ່ພັກວາງອອກ ເພື່ອເອົາອັນນັ້ນເປັນເຂັມທິດຊີ້ຊ່ອງເບື້ອງທາງໃຫ້ແກ່ການເຄື່ອນໄຫວຂອງຕົນ, ເຮັດໃຫ້ແນວທາງນະໂຍບາຍຂອງພັກ, ຂອງແນວລາວສ້າງຊາດ ແລະຂອງ ອໜສ. ກາຍເປັນການກະທຳປະຕິວັດຂອງມະຫາຊົນ; ພ້ອມກັນນັ້ນ ອໜສ. ແຫ່ງປະເທດລາວຍັງຕ້ອງປະສານສົມທົບ ແລະຮ່ວມມືຢ່າງແໜ້ນແຟ້ນກັບບັນດາອົງການຈັດຕັ້ງມະຫາຊົນ ແລະກັບບັນດາອົງການຈັດຕັ້ງແຫ່ງລັດ ເພື່ອປຸກລະດົມປະຊາຊົນເຜົ່າຕ່າງໆເຂົ້າໃນການປະຕິບັດບັນດາໜ້າທີ່ວຽກງານອັນລະອຽດໃນແຕ່ລະໄລຍະ ພຶດຕິກຳໄດ້ຊີ້ໃຫ້ເຫັນວ່າ ຢູ່ບ່ອນໃດ ອໜສ. ຮູ້ຍາດແຍ່ງເອົາການນຳພາຂອງຄະນະພັກ, ຮູ້ປະສານສົມທົບ ແລະຮູ້ຮ່ວມມືຢ່າງແໜ້ນແຟ້ນກັບອົງການຈັດຕັ້ງແຫ່ງລັດ ແລະອົງການຈັດຕັ້ງມະຫາຊົນ ຢູ່ບ່ອນນັ້ນຂະບວນການປະຕິວັດຂອງມະຫາຊົນກໍຈະຟົດຟື້ນຢູ່ເນື່ອງນິດລຽນຕິດ ຄືກັບປາງບຸນໃຫຍ່; ວຽກງານຕ່າງໆເຖິງຈະມີຄວາມຫຍຸ້ງຍາກສັບສົນພຽງໃດກໍສາມາດເຮັດສຳເລັດໄດ້ໝາກຜົນເປັນຢ່າງດີ.

ອັນທີສີ່: ອໜສ. ຕ້ອງມີໂຄງປະກອບການຈັດຕັ້ງທີ່ມີເນື້ອໃນ ແລະແບບວິທີເຄື່ອນໄຫວທີ່ສອດຄ່ອງກັບພາລະບົດບາດ, ໜ້າທີ່ຂອງຕົນໃນໄລຍະໃໝ່ຂອງການປະຕິວັດ.

ເມື່ອການປະຕິວັດຂອງປະເທດຊາດໄດ້ຫັນບ່ຽນໄປສູ່ໄລຍະໃໝ່ແລ້ວ, ໜ້າທີ່ ແລະພາລະບົດບາດຂອງ ອໜສ. ກໍໄດ້ມີການບ່ຽນແປງໃໝ່ຢ່າງສົມບູນເຊັ່ນດຽວ

ກັນ. ໃນເມື່ອກ່ອນ ອພສ. ມີແຕ່ເຮັດໜ້າທີ່ປຸກລະດົມມະຫາຊົນໃຫ້ລຸກຂຶ້ນຕໍ່ສູ້ ເພື່ອໂຄ່ນລົ້ມພວກຈັກກະພັດ–ສັກດີນາ, ເພື່ອປົດປ່ອຍປະເທດຊາດ, ແລະປະຕິບັດຮີດຄອງປະເພນີທີ່ດີດັດແປງອັນເກົ່າໃຫ້ເຂົ້າກັບຍຸກສະໄໝ, ແຕ່ການຫັນປ່ຽນອັນເກົ່າໄປສູ່ອັນໃໝ່ກໍຍັງບໍ່ທັນໄດ້ດີ. ດັ່ງນັ້ນ, ທຸກມື້ນີ້ ອພສ. ເປັນອົງການທີ່ເຕົ້າໂຮມຄວາມສາມັກຄີທັງປຸກລະດົມພະລັງສາມະເນນ, ພຸດທະສາສະນິກະຊົນ ເຂົ້າຮ່ວມໃນການປົກປັກຮັກສາປະເທດຊາດ, ທັງເຂົ້າຮ່ວມໃນການກໍ່ສ້າງເສດຖະກິດຂອງຊາດໃຫ້ກ້າວຂຶ້ນສູ່ລະດັບສູງ, ດ້ວຍເຫດນັ້ນໂຄງປະກອບຂອງການຈັດຕັ້ງຂອງ ອພສ. ຈິ່ງຕ້ອງມີການປ່ຽນແປງແບບກະທັດຮັດເບົາບາງ ແຕ່ມີຄວາມສາມາດ ແລະຄຸນນະພາບສູງ ໃນການສຶກສາອົບຮົມພະລັງສາມະເນນ ແລະພຸດທະສາສະນິກະຊົນເຜົ່າຕ່າງໆໃຫ້ຫັນປ່ຽນຈິນຕະນາການເກົ່າເທື່ອລະກ້າວ ໄປສ້າງຈິນຕະນາການໃໝ່ໃສ່ຕົນເອງຈົນຕື່ນຕົວ ສ້າງຕົນເອງ ແລະຜູ້ອື່ນ ໃຫ້ມີຄວາມສາມາດ ແລະຄຸນສົມບັດໃໝ່ທີ່ຖືກກັບທິດທາງລວມຂອງລະບອບໃໝ່ສັງຄົມນິຍົມ, ເຕົ້າໂຮມກ້ອນກຳລັງມະຫາສາມັກຄີປອງຊົນ, ປຸກລະດົມ ແລະເສີມຂະຫຍາຍສິດປະຊາທິປະໄຕ ຂອງປະຊາຊົນເຜົ່າຕ່າງໆ ໃຫ້ເປັນເຈົ້າຕົນເອງໃນພາລະກິດດັດສ້າງ, ກໍ່ສ້າງ ແລະຂະຫຍາຍເສດຖະກິດ, ຂະຫຍາຍວັດທະນະທຳ, ກໍ່ສ້າງຊີວິດອັນອຸດົມສົມບູນພູນສຸກ. ອພສ. ຕ້ອງມີແບບວິທີການເຄື່ອນໄຫວທີ່ແທດເໝາະ ແລະມີເນື້ອໃນຄົບຖ້ວນເພື່ອຫັນປ່ຽນຈິນຕະນາການເກົ່າ ໄປສູ່ຈິນຕະນາການໃໝ່ ແລະຕອບສະໜອງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນເຜົ່າຕ່າງໆ ແລະພຸດທະສາສະນິກະຊົນທັງຫລາຍ ແນໃສ່ຊຸກຍູ້ເຂົາເຈົ້າປະຕິບັດທຸກແຜນນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດໃຫ້ໄດ້ດີ.

ອັນທີຫ້າ: ການເພີ່ມທະວີການພົວພັນມິດຕະພາບ ແລະ ການຮ່ວມມືກັບສາກົນເປັນໜ້າທີ່ອັນໜຶ່ງທີ່ຂາດບໍ່ໄດ້ ຂອງ ອພສ.

ກຳລັງແຮງສັງລວມຂອງພວກເຮົາແມ່ນການສົມທົບລະຫວ່າງ ກຳລັງຂອງໝົດທັງຊາດ ກັບກຳລັງແຮງຂອງຍຸກສະໄໝ. ໃນຫລາຍສິບປີແຫ່ງການຕໍ່ສູ້ປະຕິບັດ ທີ່ຜ່ານມາກໍດີໃນປະຈຸບັນນີ້, ການທີ່ປະຊາຊົນເຮົາຍາດເອົາໄຊຊະນະອັນໃຫຍ່ຫລວງ ມາໄດ້ຢ່າງຕໍ່ເນື່ອງກັນນັ້ນ ກໍແມ່ນຍ້ອນມີປັດໄຈສຳຄັນ ນັ້ນແມ່ນການພົວພັນ ມິດຕະພາບ ແລະສາມັກຄີຢ່າງແໜ້ນແຟ້ນກັບພຸດທະສາສະນິກະຊົນ ແລະປະຊາຊົນ ຫວຽດນາມ, ພຸດທະສາສະນິກະຊົນ ແລະ ປະຊາຊົນກຳປູເຈຍ, ພຸດທະສາສະນິກະຊົນ ແລະປະຊາຊົນໂຊວຽດ, ພຸດທະສາສະນິກະຊົນ ແລະປະຊາຊົນມົງໂກນ, ພຸດທະສາສະນິກະຊົນ ແລະປະຊາຊົນບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ, ພ້ອມທັງສາສະນິກະຊົນ ແລະປະຊາຊົນ ທີ່ຮັກຫອມສິນທຳ, ຮັກຫອມສັນຕິພາບ ໃນທົ່ວໂລກ. ໄຊຊະນະຂອງການປະຕິວັດດັ່ງກ່າວນັ້ນ ແລະການເຄື່ອນໄຫວຢ່າງ ຕັ້ງໜ້າໃນເວທີສາກົນຂອງພວກເຮົາ ກໍເປັນປັດໄຈອັນສຳຄັນທີ່ປະກອບສ່ວນເຂົ້າໃນ ການເພີ່ມທະວີກຳລັງແຮງຂອງສັນຕິພາບ ແລະສັງຄົມນິຍົມ.

ເພື່ອປະຕິບັດໜ້າທີ່ດັ່ງກ່າວນັ້ນໄດ້ດີ ຄະນະ ອພສ. ຕ້ອງເອົາໃຈໃສ່ ສຶກສາອົບຮົມຕົນເອງ ແລະອົບຮົມໃຫ້ພຸດທະສາສະນິກະຊົນທັງຫລາຍ ມີນ້ຳໃຈຮັກ ຊາດອັນດູດດື່ມ ແລະມີນ້ຳໃຈສາກົນອັນຜ່ອງໃສ, ເດັດດ່ຽວຕ້ານແນວຄິດຄັບແຄບ ຊອກຫາແຕ່ລາຍໄດ້ສ່ວນຕົວ ເຊິ່ງພຸດທະສາສະໜາບໍ່ໄດ້ບັນຍັດໄວ້, ພ້ອມກັນນັ້ນ

ກໍເດັດດ່ຽວຕ້ານກົນອຸບາຍແບ່ງແຍກຂອງສັດຕູ. ສິ່ງທັງໝົດເຫລົ່ານີ້ເປັນບົດຮຽນອັນປະເສີດ ເຊິ່ງໃນຕໍ່ໜ້ານີ້ຄະນະກຳມະການ ອພສ. ທຸກຂັ້ນ ແລະພະນັກງານ ອພສ. ທຸກຄົນຕ້ອງກຳແໜ້ນ ແລະເສີມຂະຫຍາຍມັນເລື້ອຍໆໄປ ຈິ່ງຈະໄດ້ຮັບຜົນສຳເລັດອັນດີງາມ ສົມກັບຄຳສັ່ງສອນຂອງພະພຸດທະເຈົ້າທີ່ວ່າໃຫ້ລະຖິ້ມຄວາມຊົ່ວ, ຕັ້ງໜ້າສ້າງຄວາມດີ ແລະເຮັດໃຫ້ຈິດໃຈຂອງຕົນເອງຜ່ອງໃສຢູ່ສະເໝີ.

☆ ພາກທີ II : ທິດທາງໜ້າທີ່ວຽກງານຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແຕ່ ປີ 1988–1990.

ບັນດາທ່ານຜູ້ແທນທີ່ຮັກແພງ !

ໃນ 12 ປີທີ່ຜ່ານມາ ປະຊາຊົນລາວເຮົາ ຍາດເອົາໄຊຊະນະອັນໃຫຍ່ຫລວງຫລາຍດ້ານ ແລະມີລັກສະນະໜັກແໜ້ນ ອັນເປັນເງື່ອນໄຂອັນສະດວກໃຫ້ປະຊາຊົນເຮົາສືບຕໍ່ກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ, ທາງຝ່າຍພຸດທະສາສະໜາໃນລາວເຮົາກໍຕົກຢູ່ໃນສະພາບການເຊັ່ນດຽວກັນກັບປະຊາຊົນ ແລະການຈັດຕັ້ງອື່ນໆໃນທົ່ວປະເທດ, ອັນເນື່ອງມາຈາກລະດັບການຂະຫຍາຍຕົວທາງດ້ານເສດຖະກິດ, ສັງຄົມ, ວັດທະນະທຳຂອງປະເທດເຮົາຍັງຕ່ຳ, ຍິ່ງໄປກວ່ານັ້ນພວກສັດຕູກໍບໍ່ໄດ້ລົດລະ ໃນການມ້າງເພທຳລາຍການພັດທະນາສ້າງສາບ້ານເມືອງຂອງປະເທດເຮົາ ເຖິງຢ່າງນັ້ນກໍຕາມ ພະສົງສາມະເນນກັບປະຊາຊົນລາວເຮົາໃນເຜົ່າຕ່າງໆກໍເຊື່ອໝັ້ນວ່າ: ພາຍໃຕ້ການນຳພາອັນຖືກຕ້ອງຂອງພັກ ແລະລັດ ບົນພື້ນຖານຂອງ

ສິນທຳອັນສູງສົ່ງ, ນ້ຳໃຈຮັກເຊື້ອແພງຊາດ, ຄວາມສາມັກຄີທຳ, ຄວາມອົງອາດກ້າຫານຂອງສິນທຳທາງພຸດທະສາສະໜາ ແລະສິນທຳປະຕິວັດ, ຄວາມດຸໝັ່ນພາກພຽນຂອງປະຊາຊົນເຜົ່າຕ່າງໆ ຊັບພະຍາກອນອັນອຸດົມຮັ່ງມີຂອງປະເທດຊາດ ແລະການຊ່ວຍເຫລືອຈາກບັນດາປະເທດອ້າຍນ້ອງ ແລະເພື່ອນມິດໃນໂລກ, ຜູ້ຮັກຫອມສິນທຳ, ຮັກສັນຕິພາບ ແລະຮັກສັງຄົມນິຍົມ. ພາລະກິດອັນປະກອບດ້ວຍສິນທຳໃນການປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມຂອງປະຊາຊົນເຮົາຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ.

ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ສະແດງຄວາມເຫັນດີເຫັນພ້ອມຢ່າງສົມບູນກັບມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IV, ມະຕິ 5 ແລະ 6 ຂອງສູນກາງພັກ ທີ່ໄດ້ກຳນົດທິດທາງໜ້າທີ່ຕົ້ນຕໍທາງດ້ານເສດຖະກິດ, ສັງຄົມ ແລະວັດທະນະທຳຂອງປະເທດເຮົາ ທີ່ແນໃສ່ການປະກອບສ່ວນເຂົ້າໃນສອງໜ້າທີ່ຍຸດທະສາດ ຕະຫລອດສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ສຳລັບໄລຍະແຕ່ນີ້ຮອດປີ 2.000 ແລະສຳລັບແຜນການ 5 ປີ ຄັ້ງທີ 2 (1986–1990).

ອພສ. ແຫ່ງປະເທດລາວ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ໄດ້ເຫັນວ່າກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກໄດ້ວາງມະຕິອອກຄື: ຕ້ອງໄດ້ໃຫ້ຄວາມສຳຄັນເປັນພິເສດ ແລະເສີມຂະຫຍາຍບົດບາດຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆເຮັດໃຫ້ເຂົາເຈົ້າເສີມຂະຫຍາຍມູນເຊື້ອຮັກຊາດ ພ້ອມກັບປະຕິບັດແນວທາງນະໂຍບາຍຂອງພັກ ແລະລັດເປັນຢ່າງດີ, ປະກອບສ່ວນເຂົ້າໃນການປົກປັກຮັກສາປະເທດຊາດກໍ່ສ້າງສັງຄົມນິຍົມ ແລະກໍ່ສ້າງສັນຕິພາບໂລກ ໃຫ້ໝັ້ນຄົງຖາວອນ.

ອພສ. ແຫ່ງປະເທດລາວ ເຫັນດີເປັນເອກະພາບນຳໂຄງການດຳເນີນງານທີ່ກອງປະຊຸມໃຫຍ່ຄັ້ງທີ II ຂອງແນວລາວສ້າງຊາດທີ່ແນໃສ່ສ້າງຄວາມປອດໄພ ແລະຄວາມສຸກຂອງປະຊາຊົນລາວທຸກເຜົ່າ ແລະຈະຕັ້ງໃຈປະຕິບັດມັນຍ່າງຖືກຕ້ອງເພື່ອໃຫ້ໄດ້ຮັບຜົນສຳເລັດເປັນຍ່າງດີ.

ໂດຍອີງໃສ່ທັດສະນະຊີ້ນຳຂອງມະຕິດັ່ງກ່າວນັ້ນ ອີງໃສ່ຈຸດພິເສດສະພາວະເປັນຈິງທຸກດ້ານ, ເສດຖະກິດ, ສັງຄົມ ແລະວັດທະນະທຳຂອງປະເທດເຮົາ, ທິດທາງໜ້າທີ່ລວມຂອງ ອພສ. ແຫ່ງປະເທດລາວ ແຕ່ນີ້ເຖິງປີ 1990 ແມ່ນສືບຕໍ່ປັບປຸງ ແລະເປີດກວ້າງການພົວພັນກັບຊາວພຸດພາຍໃນ ແລະນອກປະເທດ ບົນພື້ນຖານສິນທຳອັນແທ້ຈິງ ຂອງພຸດທະສາສະໜາ ເພື່ອເພີ່ມທະວີກ້ອນກຳລັງຄວາມສາມັກຄີຂອງພະສົງສາມະເນນທັງມວນ ຂອງທຸກຊັ້ນຄົນ ແລະສາສະໜາຕ່າງໆ; ສຶກສາອົບຮົມເຊີດຊູຈິດໃຈຮັກຫອມສິນທຳ, ຮັກປະເທດຊາດ, ຮັກສັງຄົມນິຍົມ, ຮັກສັນຕິພາບ, ສະຖຽນລະພາບ, ມິດຕະພາບແລະການຮ່ວມມືໃນທຸກຂົງເຂດ; ເສີມຂະຫຍາຍປະຊາທິປະໄຕສັງຄົມນິຍົມ, ປຸກລະດົມທົ່ວປວງຊົນໃຫ້ຫ້າວຫັນເຂົ້າຮ່ວມໃນພາລະກິດປົກປັກຮັກສາປະເທດຊາດອ້ອມຂ້າງສູນກາງແນວລາວສ້າງຊາດຕາມມະຕິຂອງກອງປະຊຸມຄັ້ງທີ II (1986–1990) ຍ່າງມີໄຊ; ອອກແຮງກໍ່ສ້າງລະບົບການຈັດຕັ້ງຂອງ ອພສ. ແຫ່ງປະເທດລາວ, ຮັບປະກັນການສຳເລັດພາລະໜ້າທີ່ຂອງຕົນອັນໜັກໜ່ວງຕໍ່ການປະຕິວັດ ແລະປະກອບສ່ວນຍ່າງຕັ້ງໜ້າເຂົ້າໃນການປະຕິບັດນະໂຍບາຍການຕ່າງປະເທດຂອງພັກ ແລະລັດເຮົາ.

ເພື່ອປະຕິບັດທິດທາງໜ້າທີ່ລວມດັ່ງກ່າວນັ້ນ, ອົງການພຸດທະສາສະໜາສຳ

ໜັນແຫ່ງປະເທດລາວທຸກຂັ້ນ ຕ້ອງສຸມທຸກຄວາມພະຍາຍາມ ເຮັດວຽກຂອງຕົນດັ່ງຕໍ່ລົງໄປນີ້:

1) ປັບປຸງລະບົບການຈັດຕັ້ງ: ເຕົ້າໂຮມກັນອອກແຮງເທດສະໜາເຜີຍແຜ່ ແລະເສີມຂະຫຍາຍກຳລັງແຮງຄວາມສາມັກຄີຂອງພະສົງສາມະເນນທັງມວນ ບົນພື້ນຖານຮັກທອມສິນທຳ, ຮັກປະເທດຊາດ, ຮັກສັງຄົມນິຍົມ ແລະຮັກສັນຕິພາບ ເຮັດໃຫ້ພະສົງສາມະເນນທຸກຕົນ ແລະຊາວພຸດທະສາສະນິກະຊົນທຸກຄົນປະຕິບັດຖືກຕາມຄຳສັ່ງສອນຂອງພະພຸດທະເຈົ້າ ແລະຖືກຕາມນະໂຍບາຍແນວທາງຂອງພັກເພື່ອເປັນແບບຢ່າງອັນດີໃຫ້ທຸກຄົນເຫັນ ແລະປະຕິບັດຕາມ ເພື່ອຄວາມປອດໃສຂາວສະອາດ ແລະຄວາມສຸກຂອງທຸກຄົນ ແລະຂອງມວນມະນຸດໃນໂລກ.

ກ)– ການຈັດຕັ້ງ ອພສ. ທຸກຂັ້ນ ແລະເຕົ້າໂຮມຄວາມສາມັກຄີ.

– ອີງຕາມ ຈຸດພິເສດຂອງປະເທດເຮົາຄະນະ ອພສ. ທຸກຂັ້ນ ຕ້ອງຖືວຽກງານການຈັດຕັ້ງເປັນວຽກງານສຳຄັນ ຕັ້ງແຕ່ຂັ້ນສູນກາງລົງເຖິງຂັ້ນຮາກຖານ, ໃຫ້ແຕ່ລະວັດຂຶ້ນກັບເມືອງ, ຂັ້ນເມືອງຂຶ້ນກັບຂັ້ນແຂວງ, ຂັ້ນແຂວງຂຶ້ນກັບຂັ້ນສູນກາງ, ສູນກາງມີການສົມທົບພົວພັນກັບຄະນະປະຈຳສູນກາງແນວລາວສ້າງຊາດເປັນປົກກະຕິ.

– ອພສ. ແຫ່ງປະເທດລາວ ເປັນອົງການຈັດຕັ້ງທີ່ມີເອກະລາດ ບໍ່ຂຶ້ນກັບອົງການພຸດທະສາສະໜາປະເທດອື່ນ, ບໍ່ຂຶ້ນກັບສາສະໜາອື່ນ ແຕ່ມີການພົວ

ພັນຮ່ວມມືກັບອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງພຸດທະສາສະໜາ ຫລື ສາສະໜາອື່ນ ທີ່ມີອຸດົມຄະຕິຮັກຫອມສິນທຳ ແລະຮັກຫອມສັນຕິພາບຄືດຽວກັນ.

— ອໜສ. ທຸກຂັ້ນຕ້ອງດຳເນີນຫລາຍວິທີການ ແລະຮູບການ ເພື່ອເຕົ້າໂຮມ ແລະເພີ່ມທະວີຄວາມສາມັກຄີຂອງບັນດາພະສົງ ຜູ້ຊົງຄຸນວຸດທິ, ມີຄວາມເຄົາລົບ ແລະມີບົດບາດກວ້າງຂວາງຕໍ່ສັງຄົມ ແລະຕໍ່ການປະຕິບັດຕາມວັດຕ່າງໆ ພ້ອມທັງຍາດໂຍມຜູ້ຊົງຄຸນວຸດທິ, ປັນຍາຊົນບັນດາເຜົ່າ ແລະສາສະໜາ, ສົ່ງເສີມໃຫ້ມີຮູບການຢ້ຽມຢາມຖາມຂ່າວເຊິ່ງກັນແລະກັນ ໃນບາງໂອກາດເຊັ່ນ: ງານບຸນຕ່າງໆ ອັນເປັນຮູບການອັນດີສຳລັບການແລກປ່ຽນບົດຮຽນເຊິ່ງກັນແລະກັນ, ປັບປຸງ ແລະເພີ່ມທະວີຄວາມເຂົ້າອົກເຂົ້າໃຈ, ເຮັດໃຫ້ພະສົງ ຜູ້ຊົງຄຸນວຸດທິ ພະສົງສາມະເນນເຜົ່າຕ່າງໆ ສືບຕໍ່ມີສິນທຳຢ່າງເຄັ່ງຄັດ, ມີຄວາມເຄົາລົບ ແລະມີຄວາມຮູ້ທາງສາສະໜາຢ່າງເລິກເຊິ່ງ ຕັດສິນໃຈລະຖິ້ມຄວາມໂລບ,ຄວາມໂກດຄວາມຫລົງ ແລະອະບາຍຍະມຸກທຸກປະການ ແລະ ຮັກປະເທດຊາດ ເອກະພາບອັນໜຶ່ງອັນດຽວກັນ ເພາະສິ່ງເຫລົ່ານັ້ນຈະພາໃຫ້ມີຄວາມສາມັກຄີຮັກແພງກັນຢ່າງແທ້ຈິງ. ອັນນັ້ນ ເປັນເງື່ອນໄຂທີ່ດີໃນການປັບປຸງອົງການພຸດທະສາສະໜາສຳພັນໃຫ້ເປັນເອກະລາດ ເອກະພາບ ເຂົ້າຮ່ວມໃນແນວລາວສ້າງຊາດຢ່າງເປັນການເພີ່ມກຳລັງແຮງ ບົນພື້ນຖານຄວາມຮັກຫອມສິນທຳ, ຮັກປະເທດຊາດ, ຮັກສັງຄົມນິຍົມ ແລະຮັກສັນຕິພາບຢ່າງໜັກແໜ້ນ.

— ອໜສ. ແຫ່ງປະເທດລາວ ຕ້ອງເຮັດວຽກໂດຍການພົວພັນປະສານກັບອົງການຈັດຕັ້ງມະຫາຊົນອື່ນໆ ພາຍໃຕ້ການຊີ້ນຳໆພາຂອງສູນກາງ ອໜສ. ແຫ່ງ

ປະເທດລາວ, ໂດຍການສົມທົບກັບແນວໂຮມເອກະພາບແຫ່ງຊາດ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດຂອງຊາດ, ຖືວ່າສັດຕູຂອງຊາດກໍແມ່ນສັດຕູຂອງພຸດທະສາສະໜາ, ຮ່ວມມືຢ່າງສະໜິດແໜ້ນກັບຄະນະພັກ, ລັດ, ອົງການປົກຄອງ ແລະອົງການມະຫາຊົນຂັ້ນທຽບເທົ່າກັບຕົນ ເພື່ອພ້ອມກັນຕ້ານເລ່ກົນຂອງສັດຕູພາຍໃນ ແລະຕ່າງປະເທດຢ່າງທັນການ, ຊ່ອຍປະກອບສ່ວນທາງດ້ານການສຶກສາ ແລະວັດທະນະທຳໃຫ້ແກ່ປະຊາຊົນລາວບັນດາເຜົ່າ ເຮັດໃຫ້ເຂົາເຈົ້າຮັບຮູ້ແຈ້ງນະໂຍບາຍຂອງພັກ ແລະ ລັດ ແລະຂອງແນວລາວສ້າງຊາດ ທີ່ມີຕໍ່ສາສະໜາ ແລະ ປຸກລະດົມເຂົາເຈົ້າ ປະກອບສ່ວນເຂົ້າໃນການເຮັດພັນທະ ພົນລະເມືອງດີຜູ້ໜຶ່ງຕໍ່ປະເທດຊາດ.

ຂ/- ເທດສະໜາໂຄສະນາອົບຮົມອອກຕົບບາດໂຍມ ເຂົ້າໃນການປົກປັກຮັກສາປະເທດຊາດ ເຂົ້າຮ່ວມໃນການຄຸ້ມຄອງລັດ ຄຸ້ມຄອງປະເທດຊາດ ແລະຄຸ້ມຄອງສັງຄົມນິຍົມໃຫ້ຂາວສະອາດ ປອດໄພຢູ່ສະເໝີ.

– ອພສ. ທຸກຂັ້ນຕ້ອງເອົາໃຈໃສ່ອອກແຮງເທດສະໜາ ໂຄສະນາອະທິບາຍໃຫ້ພຸດທະສາສະນິກະຊົນທັງຫລາຍເຂົ້າໃຈວ່າ ໃນປະຈຸບັນນີ້ການປົກປັກຮັກສາປະເທດຊາດ ຕ້ອງມີເນື້ອໃນຮອບດ້ານ ເຊັ່ນ: ການປົກປັກຮັກສາເອກະລາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ; ການປົກປັກຮັກສາແນວທາງ ນະໂຍບາຍຂອງພັກ ແລະ ລັດ, ຄວາມສາມັກຄີແລະຄວາມເປັນເອກະພາບຂອງຊາດ,

ຊີວິດຊັບສິນ ແລະການອອກແຮງງານສ້າງສາບ້ານເມືອງ ໃຫ້ມີຄວາມຈະເລີນກ້າວໜ້າ ເຊິ່ງເປັນໜ້າທີ່ ແລະ ຜົນປະໂຫຍດລວມຂອງປະຊາຊົນທຸກເຜົ່າ. ທຸກເພດໄວ ແລະ ທຸກຖານະບົດບາດໃນສັງຄົມ, ອພສ. ທຸກຂັ້ນຕ້ອງອອກແຮງປຸກລະດົມຊາວໜຸ່ມລູກຫລານ ໃຫ້ສະໜັກໃຈປະຕິບັດພັນທະປ້ອງກັນຊາດ ປ້ອງກັນຄວາມສະຫງົບ ພ້ອມກັນນັ້ນກໍອອກແຮງເທດສະໜາອົບຮົມພຸດທະສາສະນິກະຊົນ ໃຫ້ຮູ້ບຸນຄຸນຂອງຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ຕໍ່ຜູ້ບາດເຈັບເສຍອົງຄະ, ຕໍ່ຄອບຄົວຜູ້ເສຍສະຫລະເພື່ອຊາດ ແລະເທດສະໜາໃຫ້ທຸກຄົນມີສະຕິລະວັງຕົວສູງ, ຮູ້ຈຳແນກໄດ້ມິດ–ສັດຕູຢູ່ສະເໝີ.

– ອພສ. ທຸກຂັ້ນຕ້ອງອອກແຮງ ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ພາລະໜ້າທີ່ແລະບົດບາດຂອງແນວລາວສ້າງຊາດ ກ່ອນອື່ນໝົດແມ່ນມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IV, ມະຕິ 5 ແລະ 6 ຂອງສູນກາງພັກ ແລະມະຕິຂອງກອງປະຊຸມໃຫຍ່ຄັ້ງທີ II ຂອງແນວລາວສ້າງຊາດ ເພື່ອເຊີດຊູນ້ຳໃຈຮັກຫອມສີນທຳ, ຮັກປະເທດຊາດ, ຮັກສັງຄົມນິຍົມ ແລະ ຮັກສັນຕິພາບຂອງພະສົງສາມະເນນລາວບັນດາເຜົ່າ: ປຸກລະດົມໃຫ້ເຂົາເຈົ້າສະໜັກໃຈແລະຕັ້ງໜ້າເຂົ້າຮ່ວມທຸກຂະບວນການວຽກງານທີ່ຈະນຳປະໂຫຍດມາໃຫ້ແກ່ປະເທດຊາດ.

– ອພສ. ທຸກຂັ້ນຕ້ອງເຂົ້າໃຈແຈ້ງວ່າ ໃນຖານະທີ່ເປັນອົງການຈັດຕັ້ງຢູ່ໃນຄວາມເຄົາລົບນັບຖືຂອງມະຫາຊົນ ແລະ ສັງຄົມອັນກວ້າງໃຫຍ່ສົມຄວນ ຕ້ອງເຂົ້າຮ່ວມໃນການກໍ່ສ້າງອຳນາດການປົກຄອງຂັ້ນຕ່າງໆ, ມີວິທີການແກ້ໄຂສຶກສາອົບຮົມປະຊາຊົນ ທີ່ຢູ່ອ້ອມຂ້າງວັດຂອງຕົນ ໃຫ້ມີຄວາມສາມັກຄີຮັກແພງກັນ,

ແກ້ໄຂຄວາມຜິດພາດທີ່ອາດຈະເກີດຂຶ້ນລະຫວ່າງບຸກຄົນ, ບາງຄອບຄົວ ຫລື ບາງການຈັດຕັ້ງ ໃຫ້ແລ້ວໄປໂດຍສັນຕິວິທີ ເພື່ອໃຫ້ທຸກຄົນສາມັກຄີກັນເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະແກ້ໄຂແນວຄິດທີ່ຜິດພາດນັ້ນໃຫ້ເປັນແນວຄິດທີ່ຖືກຕ້ອງຄ່ອງກັນ ແລະຊຸກຍູ້ເຂົາເຈົ້າເຮັດນາປີ-ນາແຊງຊົນລະປະທານ ແລະ ຖະໜົນຫົນທາງ ຕາມແຜນການທີ່ພັກ-ລັດວາງອອກ.

– ອພສ. ທຸກຂັ້ນຕ້ອງເພີ່ມທະວີ ການພົວພັນກັບພີ່ນ້ອງຮ່ວມຊາດເຮົາທີ່ອາໄສຢູ່ຕ່າງປະເທດ ພະຍາຍາມເຮັດໃຫ້ເຂົາເຈົ້າເຂົ້າໃຈແຈ້ງສະພາບການບ້ານເມືອງຂອງພວກເຮົາ, ລະດົມຊຸກຍູ້ໃຫ້ເຂົາເຈົ້າປະກອບສ່ວນເຂົ້າໃນພາລະກິດຂອງຊາດທັງປະກອບສ່ວນເຂົ້າໃນການເພີ່ມທະວີມິດຕະພາບ ກັບປະເທດທີ່ເຂົາເຈົ້າອາໄສຢູ່, ພ້ອມກັນນັ້ນກໍຄວນຊີ້ແຈງອະທິບາຍໃຫ້ເຂົາເຈົ້າຮູ້ວ່າ ປະເທດຊາດເຮົາຍາມໃດກໍຍິນດີຮັບເອົາພີ່ນ້ອງຮ່ວມຊາດ ຜູ້ທີ່ມີຄວາມສະໝັກໃຈກັບຄືນບ້ານເກີດເມືອງນອນຂອງຕົນ ເພື່ອພ້ອມກັນພັດທະນາສ້າງສາປະເທດຊາດດ້ວຍຄວາມຈິງໃຈ.

– ປະຈຸບັນນີ້ ຊາວຕ່າງດ້າວຜູ້ເຊື່ອຖືພຸດທະສາສະໜາ ອາໄສຢູ່ໃນປະເທດເຮົາມີຈຳນວນຫລາຍພໍສົມຄວນ ແລະ ມີຄວາມສາມາດໃນຫລາຍດ້ານ, ອພສ. ເຮົາຄວນເອົາໃຈໃສ່ສ້າງຄວາມຮັກແພງ, ສາມັກຄີເຕົ້າໂຮມ ແລະ ສຶກສາອົບຮົມເຂົາເຈົ້າ ໃຫ້ເຂົ້າໃຈແຈ້ງແຜນນະໂຍບາຍ, ລະບຽບກົດໝາຍຂອງລັດເຮົາ, ຊຸກຍູ້ເຂົາເຈົ້າໃຫ້ປະກອບສ່ວນເຂົ້າໃນການພັດທະນາ ສ້າງສາປະເທດຊາດເຮົາ.

2) ພະສົງສາມະເນນ ຕ້ອງໄດ້ຮັບການສຶກສາເປັນເອກະພາບ ຕາມຮີດຄອງປະເພນີ ແລະ ຫລັກສູດທີ່ໂຮງຮຽນສົງວາງອອກ.

ພະສົງສາມະເນນທຸກອົງ ທີ່ບວດເຂົ້າມາໃນພຸດທະສາສະໜາແລ້ວ ຕ້ອງໄດ້ຮັບການສຶກສາສິນທຳ ຄຳສັ່ງສອນຂອງພະພຸດທະເຈົ້າຕາມຫລັກພະໄຕປິດົກ ເຊິ່ງແບ່ງເປັນສາມພາກດັ່ງນີ້ :

ພາກທີ່ ໜຶ່ງ : ໃຫ້ຮຽນຮີດຄອງປະເພນີ ທີ່ພະພຸດທະເຈົ້າໄດ້ບັນຍັດໄວ້ໃນພະໄຕປິດົກຢ່າງຄົບຖ້ວນ ແລະ ເຂົ້າໃຈດີ ເພື່ອໃຫ້ເກີດຄວາມຈະເລີນກ້າວໜ້າທາງພຸດທະສາສະໜາ.

ພາກທີ່ ສອງ : ຄະນະ ອພສ. ທຸກຂັ້ນຕ້ອງຂົນຂວາຍພະສົງສາມະເນນເຂົ້າຮຽນໃນໂຮງຮຽນສົງ ຮຽນຕາມຫລັກສູດທີ່ກະຊວງສຶກສາວາງອອກ ເລີ່ມແຕ່ຂັ້ນປະຖົມເຖິງຂັ້ນອຸດົມ ແລະ ຂັ້ນມະຫາວິທະຍາໄລ ເພື່ອເປັນການຍົກລະດັບວັດທະນະທຳຂອງພະສົງສາມະເນນໃຫ້ສູງຂຶ້ນໄປເລື້ອຍໆ ຕາມວິວັດທະນາການຂອງບ້ານເມືອງ. ພະສົງອົງຮຽນຈົບຕາມຫລັກສູດແລ້ວ ຕ້ອງລົງໄປຮັບໃຊ້ໃນເຂດພະສົງສາມະເນນກ່ອນ ຕາມການສັບຊ້ອນຂອງໂຮງຮຽນແຕ່ລະຂັ້ນ ຕາມໂຮງຮຽນພະສົງ ແລະໂຮງຮຽນຂອງລັດຢູ່ໃນທ້ອງປະເທດຢ່າງໜ້ອຍສອງປີ.

ພາກທີ່ ສາມ : ໃຫ້ຮຽນເຕັກນິກ, ເຕັກໂນໂລຍີ, ວິທະຍາສາດ, ວັດຖຸ, ທຳມະຊາດ, ສັງຄົມ ແລະ ທຸກສິ່ງທີ່ໝູນວຽນປ່ຽນແປງຂະຫຍາຍຕົວ ແລະ

ພົວພັນກັນຢູ່ໃນໂລກນີ້, ເພື່ອຮູ້ຈັກວິທີການຂັດແຍ້ງກັນເຊິ່ງອາດຈະເກີດຂຶ້ນໃນຊີວິດຂອງຕົນເອງ ແລະຂອງຄົນອື່ນໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການເຮັດໃຫ້ປະເທດຊາດກ້າວໜ້າທັງທາງດ້ານວັດຖຸແລະຈິດໃຈ.

— ການສຶກສາໃນໂຮງຮຽນພະສົງຖືເອົາການສຶກສາ ແລະ ການປະຕິບັດໄປພ້ອມໆກັນ ເຊິ່ງຖືວ່າ: ມີຄວາມໝາຍສຳຄັນເປັນພິເສດຕໍ່ການສ້າງສາປະເທດຊາດ ແລະການສ້າງສັງຄົມໃໝ່ສັງຄົມນິຍົມ ພະສົງສາມະເນນຈຳຕ້ອງຍຶດຖືເອົາຫລັກສິນທຳທາງພຸດທະສາສະໜາ ສົມທົບກັບສິນທຳປະຕິວັດ ເຮັດໃຫ້ຕົນເອງກາຍເປັນຜູ້ບໍລິສຸດປອດໃສ ໃຫ້ສົມກັບວ່າພະສົງສາມະເນນເປັນທຸງໄຊ ທີ່ເຄົາລົບຂອງມວນຊົນໃນໂລກ. ອພສ. ແຕ່ລະຂັ້ນຕ້ອງເປັນແບບຢ່າງຕັ້ງໜ້າປຸກລະດົມຂົນຂວາຍພະສົງສາມະເນນບັນດາເຜົ່າ ໃຫ້ເອົາໃຈໃສ່ໃນການປະຕິບັດໂຄງການສຶກສາທີ່ ອພສ. ກໍຄືພັກ ແລະ ລັດວາງອອກ: ນອກຈາກໄດ້ສຶກສາໃນໂຮງຮຽນສົງແລ້ວຕ້ອງໄດ້ເຂົ້າຮ່ວມໃນຂະບວນການສຶກສາບຳລຸງວັດທະນະທຳ ເພື່ອຍົກລະດັບຄວາມຮູ້ຄວາມສາມາດຂອງປະຊາຊົນເຮົາໃຫ້ສູງຂຶ້ນເລື້ອຍໆ ຕ້ອງປຸກລະດົມຂົນຂວາຍປະຊາຊົນອອກຕົນຍາດໂຍມ ໃຫ້ເຂົ້າຮ່ວມໃນການປຸກສ້າງໂຮງຮຽນ, ເຮັດໂຕະ, ຕັ່ງ, ກະດານ, ເກົ້າອີ້ ປະກອບສ່ວນເຂົ້າໃນໂຮງຮຽນ, ເບິ່ງແຍງຊີວິດການເປັນຢູ່ຂອງຄູ ຮັບປະກັນໃຫ້ເດັກນ້ອຍໃນເກນອາຍຸຮຽນ ໄດ້ມີບ່ອນຮຽນແລະເຮັດໃຫ້ຄູເຮັດໜ້າທີ່ສິດສອນລູກຫລານ ຂອງປະຊາຊົນໃຫ້ໄດ້ດີດັ່ງທຳມະພາສິດວ່າ "ສຸວິຊາໂນ ພະວັງ ໂຫຕິ" ຜູ້ຮູ້ດີເປັນຜູ້ຈະເລີນກ້າວໜ້າ.

3) ການສ້າງສາ ແລະ ການສ້ອມແປງວັດວາອາຣາມ ບູຣານວັດຖຸ.

ອພສ. ແຕ່ລະຂັ້ນຕ້ອງເອົາໃຈໃສ່ການກໍ່ສ້າງວັດວາອາຣາມ ໃຫ້ຖືກຕ້ອງ ເໝາະສົມຕາມຄວາມວິວັດທະນາການຂອງໂລກ ແລະໃຫ້ຖືກຕ້ອງຕາມຮີດຄອງປະເພນີ ທີ່ພະສົງລາວໃນເມື່ອກ່ອນເຄີຍປະຕິບັດມາດີ :

ກ)- ສືບຕໍ່ການກໍ່ສ້າງສິ່ງໃດໜຶ່ງ ຢູ່ໃນວັດ ທີ່ໄດ້ສ້າງມາເຖິງ 60% ຂຶ້ນໄປ ຕາມສັດທາຂອງຍາດໂຍມໃນຄຸ້ມວັດນັ້ນ ຊອກຫາທຶນຊັບຕາມສັດທາຈາກທຸກແຫ່ງທີ່ພໍຈະຫາໄດ້.

– ຢູ່ແຕ່ລະວັດຕ້ອງມີໂຮງຮຽນເດັກນ້ອຍ ຊັ້ນປະຖົມ ຫລື ມັດທະຍົມຕາມມູນເຊື້ອຂອງພະສົງລາວໃນເມື່ອກ່ອນ ຕາມເງື່ອນໄຂພ້າດິນຂອງວັດນັ້ນ, ເວັ້ນໄວ້ແຕ່ວັດນັ້ນມີໂຮງຮຽນປະຖົມຫລືມັດທະຍົມຢູ່ກ່ອນແລ້ວ.

– ຢູ່ໃນແຕ່ລະວັດໃຫ້ມີການປູກຕົ້ນໄມ້ກິນໝາກ, ຕົ້ນໄມ້ເປັນຢາ, ຕົ້ນໄມ້ອຸດສາຫະກຳ, ເຮັດສວນປູກດອກໄມ້ປະດັບວັດ, ເຮັດນ້ຳສ້າງ, ສະນ້ຳ ແລະ ເຮັດຫ້ອງນ້ຳ, ຫ້ອງຖ່າຍໃຫ້ຖືກຕ້ອງຕາມຫລັກອະນາໄມສາມສະອາດ ຫ້າມບໍ່ໃຫ້ປູຊີມັງໃສ່ເດີ່ນວັດ ເພາະມັນຈະເຮັດໃຫ້ເນື້ອທີ່ດິນບໍ່ເສະຈາກຮົ່ມໄມ້ອັນຈົບງາມ ເວັ້ນໄວ້ແຕ່ເຮັດພໍດີເສັ້ນທາງຍ່າງລົງໄປມາຫາສິມ ຫລື ສາລາໂຮງທຳ

– ວັດໃດຈະຜູກພັດທະສີມາ ຕ້ອງຂໍອະນຸຍາດຈາກ ອພສ. ຕາມລະດັບຂັ້ນຈົນເຖິງ ອພສ. ສູນກາງ. ອພສ. ສູນກາງອະນຸຍາດໃຫ້ກໍ່ຕໍ່ເມື່ອໄດ້ເຫັນ

ຫລັກຖານຈາກພະແນກການກໍ່ສ້າງຂອງລັດ ວ່າດິນຕອນນັ້ນ ບໍ່ຂັດກັບການສ້າງສາບ້ານເມືອງ.

– ຖ້າວັດໃດຮ້າງບໍ່ມີພະສົງສາມະເນນຢູ່ປະຈຳແຕ່ໜຶ່ງປີຂຶ້ນໄປ ໃຫ້ເອົາສົມບັດຂອງວັດນັ້ນເປັນຕົ້ນວ່າ: ໜັງສື, ຄຳພີດີກາ, ພະພຸດທະຮູບຕ່າງໆ ຕະຫລອດເຖິງເຄື່ອງໃຊ້ໄປໂຮມໄວ້ຢູ່ວັດ ອພສ. ຕາແສງ ຫລື ອພສ. ເມືອງ ສ່ວນສະຖານທີ່ຂອງວັດນັ້ນໃຫ້ເອົາໂຮງຮຽນປະຖົມປະຈຳບ້ານຕັ້ງໃສ່ ຖ້າມີແລ້ວກໍດຳເນີນການສອນຕໍ່ໄປ ໃຫ້ຄະນະປົກຄອງບ້ານ ແລະ ໃຫ້ຄະນະຄູສອນຊ່ວຍເບິ່ງແຍງຮັກສາວັດນັ້ນນຳ.

– ການກໍ່ສ້າງເຕົາເຜົາສົບ ໃຫ້ສ້າງແບບເຕົາທັນສະໄໝເຜົາດ້ວຍໄຟຟ້າ ແລະໃຫ້ສ້າງຢູ່ນອກເມືອງ ບໍ່ໃຫ້ສ້າງໃນໃຈກາງເມືອງ ເຊິ່ງຈະພາໃຫ້ເຊື້ອໂລກຂະຫຍາຍໄດ້ງ່າຍ ເປັນອັນຕະລາຍຕໍ່ສຸຂະພາບອະນາໄມ ແລະທັງຜິດຕໍ່ການອະນາໄມສາກົນ ເວັ້ນແຕ່ເມືອງທີ່ບໍ່ມີໄຟຟ້າ.

ຂ)- ການສ້ອມແປງວັດວາອາຮາມ ປູຊະນີຍະສະຖານ.

ອພສ. ທຸກຂັ້ນຕ້ອງຈັດຕັ້ງກັນເອົາໃຈໃສ່ປົກປັກຮັກສາ ແລະສ້ອມແປງວັດວາອາຮາມທີ່ຈຳລຸດຊຸດໂຊມດັ່ງນີ້ :

– ຂັ້ນ ອພສ. ສູນກາງ ແລະ ກຳແພງນະຄອນ ເປັນຄະນະກຳມະການປົກປັກຮັກສາສ້ອມແປງ ພະທາດຫລວງຮ່ວມກັບຄະນະກົມຫໍພິພິດທະພັນ ບູຮານວັດຖຸ.

– ການສ້ອມແປງປົກປັກຮັກສາວັດວາອາຣາມ ຢູ່ໃນນະຄອນຫລວງວຽງຈັນ ໃຫ້ ອພສ. ສູນກາງ ແລະ ອພສ. ກຳແພງນະຄອນ ຊີ້ນຳໆພາໃນການສ້ອມແປງສິ່ງທີ່ຈຳເປັນຄື: ພັດທະສີມາ, ກຸຕິວິຫານ, ສາລາໂຮງທຳ ແລະໃຫ້ເບິ່ງສະພາບຕົວຈິງ ວ່າວັດໃດຄວນເຮັດກ່ອນ, ວັດໃດຄວນເຮັດຫລັງ ຖ້າວັດໃດຈຳເປັນ ເຊັ່ນ: ວັດຖືກອຸປະຕິເຫດໃຫ້ສຸມໃສ່ສ້ອມແປງວັດນັ້ນກ່ອນ.

– ໃຫ້ຄະນະ ອພສ. ທຸກຂັ້ນເອົາໃຈໃສ່ປົກປັກຮັກສາ ປູຊະນີຍະສະຖານວັດຖຸບູຮານ, ມີພະທາດເຈດີພະພຸດທະຮູບ, ອາລັກຫລັກເມືອງທີ່ມີຄົນນັບຖືຢູ່ໃນວັດໃດວັດໜຶ່ງ ພາໃຫ້ເກີດມີຜົນປະໂຫຍດດ້ວຍສັງຫາລິມະຊັບ ແລະອະສັງຫາລິມະຊັບ.

– ຄະນະ ອພສ. ທຸກຂັ້ນຈັດຕັ້ງກັນປົກປັກຮັກສາ ພະທາດເຈດີ, ພະພຸດທະຮູບ, ຫີນສີລາຈາລຶກ ທີ່ມີຜົນປະໂຫຍດໄດ້ຈາກສາທຸຊົນ ຜູ້ມາສັກກາລະບູຊາດ້ວຍປັດໃຈທັງສີ່ ມີລາຍໄດ້ເປັນປະຈຳໃນແຕ່ລະອັນ ໃຫ້ເຮັດບັນຊີລາຍໄດ້ລາຍງານຂຶ້ນຂັ້ນເທິງທຸກໆເດືອນ ຫລືຕາມເງື່ອນໄຂພາຍໃຕ້ການຊີ້ນຳຂອງ ອພສ. ແຂວງ, ອພສ. ເມືອງ. ຖ້າວັດທີ່ມີສິ່ງສັກກາລະບູຊາດັ່ງກ່າວນັ້ນ ຢູ່ໃນຂັ້ນສູນກາງ ໃຫ້ຈັດຕັ້ງຄະນະກຳມະການລົງຮັບຜິດຊອບ.

– ການກໍ່ສ້າງ ແລະການສ້ອມແປງວັດວາອາຣາມນັ້ນ ໃຫ້ຖືເອົາການສ້ອມແປງເປັນຕົ້ນຕໍການກໍ່ສ້າງເປັນສຳຄັນ.

– ການແຜ່ເງິນເພື່ອກໍ່ສ້າງ ແລະ ສ້ອມແປງວັດວາອາຣາມນັ້ນ ໃຫ້ແຜ່ໄດ້ຕາມຂອບເຂດດັ່ງນີ້: ຂັ້ນສູນກາງແຜ່ໄດ້ທົ່ວປະເທດຕາມອະນຸຍາດທາງລັດຖະການອອກໃຫ້, ຂັ້ນວັດເອກຂອງແຕ່ລະແຂວງແຜ່ໄດ້ແຕ່ພາຍໃນແຂວງຂອງຕົນ, ວັດ

ເອກ ຂອງແຕ່ລະເມືອງແຜ່ໄດ້ໃນຂອບເຂດເມືອງຂອງຕົນ, ຢູ່ແຕ່ລະວັດກໍໃຫ້ແຜ່ໄດ້ຕາມຂອບເຂດບ້ານຂອງຕົນ ແລະບັນດາຍາດໂຍມທີ່ເຄີຍຢູ່ໃນບ້ານນັ້ນ.

– ການແຜ່ບໍ່ໃຫ້ເຂົ້າໄປແຜ່ເງິນບອກບຸນກຸສົນໃນຕະຫລາດ ຮ້ານຄ້າຂອງຂອງຄົນພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນທີ່ນຳເຄື່ອງກະຈາຍສຽງ ນຳເອົາຕົ້ນກາລະພຶກເຂົ້າໄປໂຄສະນາແຜ່ນຳຕະຫລາດຕ່າງໆ ເຊິ່ງບໍ່ເພາະສົມກັບຍຸກສະໄໝ, ແລະຫ້າມການແຫ່ຕົ້ນ ຫລື ກອງບຸນໄປຕາມເສັ້ນທາງໄລຍະໄກໆ ໂດຍບໍ່ມີການຈັດຕັ້ງຮັກສາຄວາມປອດໄພ ອັນຈະພາໃຫ້ເກີດມີພວກສວຍໂອກາດເຮັດໂຈລະກຳ.

4) ການເຄື່ອນໄຫວວຽກງານສັນຕິພາບ ຂອງພະສົງລາວໃນຖານະເປັນສະມາຊິກ ຂອງອົງການຊາວພຸດ ອາຊີ ເພື່ອສັນຕິພາບ.

– ການເຄື່ອນໄຫວວຽກງານສັນຕິພາບທາງສາກົນ ພະສົງລາວກໍໄດ້ເຂົ້າເປັນສະມາຊິກຂອງອົງການຊາວພຸດອາຊີເພື່ອສັນຕິພາບ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ສ.ປ. ມົງໂກລີ ເຊິ່ງມີໜ້າທີ່ປະຕິບັດດັ່ງນີ້:

– ເປັນສະມາຊິກຂອງຄະນະກຳມະການສະພາບໍລິຫານ ຂອງອົງການຊາວພຸດອາຊີ ເພື່ອສັນຕິພາບ.

– ເປັນຮອງປະທານສູນກາງ ອົງການຊາວພຸດອາຊີ ມີໜ້າທີ່ຊີ້ນຳວຽກງານລວມຂອງອົງການນີ້.

– ເປັນຫົວໜ້າກຳມາທິການ ດົນຄວ້າການສຶກສາສັນຕິພາບ ໃຫ້ແມ່ຍິງແລະຊາວໜຸ່ມໃນລະດັບພາຍໃນປະເທດ ແລະລະດັບຂົງເຂດຂອງອົງການນີ້.

– ແຕ່ລະປີຈັດສົ່ງຄະນະຜູ້ແທນ ຂອງຕົນໄປຮ່ວມກອງປະຊຸມສັນຕິພາບ ຕາມຄຳເຊີນຢູ່ໃນອາຊີແລະເອີລົບ, ຈັດແປວາລະສານສັນຕິພາບອອກເປັນພາສາລາວ ເພື່ອເຜີຍແຜ່ໄປທົ່ວປະເທດ, ແລະຂຽນບົດຄວາມສົມທົບ ສົ່ງໄປລົງວາລະສານສັນຕິພາບ ຢູ່ທີ່ສຳນັກງານໃຫຍ່ເປັນປະຈຳ.

★ ພາກທີ III : ປັບປຸງບູລະນະການຈັດຕັ້ງ, ດັດແປງແບບແຜນວິທີການເຄື່ອນໄຫວ ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແລະ ເອົາໃຈໃສ່ສ້າງພະນັກງານຜູ້ເຮັດວຽກ ອພສ.

ບັນດາທ່ານຜູ້ແທນທີ່ນັບຖື ແລະຮັກແພງທັງຫລາຍ!

ເພື່ອເຮັດຫລ້ອນບັນດາທິດທາງ, ໜ້າທີ່ ທີ່ກ່າວມາເທິງນັ້ນ, ພວກເຮົາຕ້ອງຕັ້ງໜ້າປັບປຸງບູລະນະກົງຈັກການຈັດຕັ້ງ ອພສ. ແຕ່ຂັ້ນສູນກາງລົງເຖິງຂັ້ນຮາກຖານໃຫ້ເຂັ້ມແຂງ. ມີການເຄື່ອນໄຫວຢ່າງເນື່ອງນິດລຽນຕິດ ແລະມີຜົນສັກສິດຢ່າງແທ້ຈິງ.

ໃນສະເພາະໜ້ານີ້ພວກເຮົາຕ້ອງສຸມໃສ່ບາງວຽກງານຕົ້ນຕໍດັ່ງນີ້:

1) ປັບປຸງບູລະນະກຳມະການ ອພສ. ແຫ່ງປະເທດລາວຂັ້ນຕ່າງໆ ທັງໃຫ້ມີລັກສະນະເປັນຕົວແທນແຫ່ງຄວາມສາມັກຄີເອກະພາບ ລະຫວ່າງບັນດາເຜົ່າ, ບັນດາຊັ້ນຄົນ, ບັນດາແຂວງຕ່າງໆໃນທົ່ວປະເທດ ທັງໃຫ້ມີຄວາມສາມາດເຄື່ອນໄຫວວຽກງານຢູ່ໃນຂະບວນການຕົວຈິງ. ບັນຫາສຳຄັນທີ່ສຸດຕ້ອງປັບປຸງບູລະນະກຳມະການປະຈຳການຂອງ ອພສ. ໃຫ້ເຂັ້ມແຂງມີກົງຈັກກະທັດຮັດເບົາບາງ

ແລະປະກອບດ້ວຍພະລົງ ຜູ້ຮັບຜິດຊອບທີ່ມີຄວາມສາມາດຮັບຜິດຊອບວຽກງານຕົວຈິງ, ທັງຮູ້ເສີມຂະຫຍາຍບົດບາດຂອງຄະນະປະຈຳສູນກາງ ອພສ. ພ້ອມກັນນັ້ນກໍຕ້ອງເອົາໃຈໃສ່ບໍ່ບປຸງການຈັດຕັ້ງ ອພສ. ຂັ້ນຮາກຖານແລະຂັ້ນເມືອງໃຫ້ເຂັ້ມແຂງແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການປຸກລະດົມຊຸກຍູ້ຂະບວນການປະຕິວັດຂອງພະລົງສາມະເນນ ແລະພຸດທະສາສະນິກະຊົນຂັ້ນຮາກຖານກາຍເປັນພາກພົນຕົວຈິງ.

໒) ດັດແປງແບບແຜນວິທີການເຄື່ອນໄຫວຂອງ ອພສ. ທຸກຂັ້ນໃຫ້ດີຂຶ້ນກວ່າເກົ່າ, ນຳໃຊ້ຫລັກການເຮັດວຽກແບບເປິກສາຫາລືຢ່າງປະຊາທິປະໄຕ, ເປັນເອກະພາບພາຍໃນການກະທຳ, ຮ່ວມມືກັນດ້ວຍຄວາມສາມັກຄີຮັກແພງຊ່ວຍເຫລືອເຊິ່ງກັນແລະກັນ ພ້ອມກັນກ້າວໄປ. ເອົາໃຈໃສ່ເຮັດໃຫ້ວຽກງານດັ່ງກ່າວນັ້ນທັງພາຍໃນແລະສາກົນລະຫວ່າງຂັ້ນເທິງກັບຂັ້ນລຸ່ມ, ວຽກງານກວດກາຊຸກຍູ້ປຸກລະດົມແລະຖອດຖອນບົດຮຽນເປັນປະຈຳ.

— ຄະນະ ອພສ. ທຸກຂັ້ນຕ້ອງເຂົ້າຮ່ວມໃນການດຳເນີນຊີວິດໃຫ້ເປັນປະຈຳຂອງອົງການເພື່ອຍົກລະດັບຄວາມຮູ້ສຶກຕື່ນຕົວທາງດ້ານແນວຄິດການເມືອງ, ຊ່ວຍກັນສ້າງຈິນຕະນາການໃໝ່, ທັງເພື່ອຊ່ວຍເຫລືອກໍ່ສ້າງເຊິ່ງກັນແລະກັນ ບົ່ມຈິດໃຈຮັກແພງກັນ, ຊື່ສັດສຸດຈະຫລິດແລະມີເຫດຜົນຕໍ່ກັນ, ເຮັດໃຫ້ ອພສ. ທຸກຂັ້ນ, ທຸກຄົນຕ່າງກໍມີຄວາມກ້າວໜ້າຂຶ້ນ. ຄະນະ ອພສ. ທຸກຂັ້ນຕ້ອງເອົາໃຈໃສ່ການຕຳນິຕິຊົມຕົນເອງແລະຕິຊົມຜູ້ອື່ນ, ແນ່ນອນ, ວິທີການຕຳນິຕິຊົມກັນນັ້ນຕ້ອງໃຫ້ຖືກຕ້ອງ, ເຮັດດ້ວຍຈິດໃຈຢາກຊ່ວຍກໍ່ສ້າງກັນບໍ່ແມ່ນປະຈານໜ້າກັນແກ້ແຄ້ນຫລືເພື່ອຢຽບຢ່າຍ່າຍີອິດທິພົນຊື່ສຽງຂອງກັນ.

— ອພສ. ທຸກຂັ້ນຕ້ອງຕັ້ງໜ້າປະຕິບັດມາດຕະການຍຸດທະສາດທັນລົງ

ຮາກຖານ, ຕິດແໜ້ນກັບຮາກຖານເອົາການຊີ້ແຈ້ງອະທິບາຍ, ຊັກຊວນແລະນຳຂະບວນການຕົວຈິງເປັ່ນວິທີເຄື່ອນໄຫວອັນຕົ້ນຕໍ ຫລີກເວັ້ນການເຮັດວຽກງານແບບໂຄສະນາລວມໆຫລືອອກຄຳສັ່ງແບບບໍລິຫານ, ສູນກາງ ອພສ. ຕ້ອງກຳໃຫ້ໄດ້ຄວາມມຸ່ງມາດປັ່ດຖະໜາ, ຄວາມນຶກຄິດຈິດໃຈແລະສະພາບຕົວຈິງຂອງພະສົງສາມະ-ເນນ ແລະພຸດທະສາສະນິກະຊົນ, ຈາກນັ້ນເປີກສາຫາລືແລະພ້ອມກັນກັບ ອພສ. ແຕ່ລະຂັ້ນແລະແນວລາວສ້າງຊາດວາງເນື້ອໃນ ແລະຮູບການສຶກສາອົບຮົມ, ປຸກລະດົມດັດແປງການຈັດຕັ້ງໃຫ້ແທດເໝາະກັບແຕ່ລະເຜົ່າ, ແຕ່ລະຊັ້ນຄົນ, ແຕ່ລະຂົງເຂດ, ຊົນນະບົດ, ພູດອຍ, ຕົວເມືອງ. ເພື່ອແກ້ໄຂຄວາມຫຍຸ້ງຍາກຕ່າງໆໃນການປະຕິບັດຮີດຄອງປະເພນີ ແລະການພະລິດຊີວິດການເປັ່ນຢູ່ຂອງພະສົງສາມະເນນແລະພຸດທະສາສະນິກະຊົນຢ່າງທັນການ, ຕ້ອງປຸກລະດົມຈັດຕັ້ງພະສົງສາມະເນນເຂົ້າຮ່ວມໃນຂະບວນການເຄື່ອນໄຫວວຽກງານ ເພື່ອພົນປະໂຫຍດຂອງສັງຄົມໃນແຕ່ລະໄລຍະໃຫ້ບັນລຸຜົນຕາມລະດັບຄາດໝາຍ.

3) ຕັ້ງໜ້າສ້າງຖັນແຖວຄະນະ ອພສ. ຊ່ວຍເຮັດວຽກງານທ້ອງການໃຫ້ພຽງພໍກັບຄວາມຕ້ອງການ ແລະມີຄຸນນະພາບທາງດ້ານຄຸນສົມບັດ ແລະຄວາມສາມາດ, ຢາກເຮັດໄດ້ແນວນັ້ນພວກເຮົາຕ້ອງເອົາໃຈໃສ່ຈັດຕັ້ງບຳລຸງຄວາມຮູ້ພື້ນຖານກ່ຽວກັບວຽກງານທ້ອງການຂອງ ອພສ, ທັດສະນະ, ແນວທາງນະໂຍບາຍຂອງພັກ, ກົດໝາຍ, ກົດລະບຽບໂຄງການດຳເນີນງານຂອງ ອພສ. ແລະແຜນການຂອງລັດໃຫ້ແກ່ພະນັກງານສົງຂອງທ້ອງການ, ສົ່ງເສີມໃຫ້ຄະນະ ອພສ. ເຂົ້າຮ່ວມໃນຂະບວນການຂອງມະຫາຊົນ ເພື່ອເຝິກຝົນຫລໍ່ຫລອມທັດສະນະຫລັກໝັ້ນແລະຍົກລະດັບຄວາມສາມາດຈັດຕັ້ງປະຕິບັດຕົວຈິງ, ໃຫ້ຄະນະ ອພສ. ແຕ່ລະຕົນມີວິທີແບບແຜນເຮັດວຽກແບບໃໝ່, ຄວາມເວົ້າແລະການກະທຳຕ້ອງຄຽງຄູ່ກັນ.

ສັບຊ້ອນຄະນະ ອພສ. ຜູ້ເຖົ້າແກ່ສຸຂະພາບອ່ອນເພຽໄປເປັນຄະນະກຳມະການກິດຕິມະສັກຂອງ ອພສ. ເພື່ອໃຫ້ພວກເພິ່ນປະກອບສ່ວນເຂົ້າໃນວຽກງານພໍ່ຢາພົ້ນເມືອງສົງຕາມຄວາມຮູ້ຄວາມສາມາດຂອງພວກເພິ່ນ.

ບັນດາທ່ານຜູ້ແທນທີ່ນັບຖື ແລະຮັກແພງ!

ກອງປະຊຸມໃຫຍ່ຂອງພວກເຮົາຄັ້ງນີ້ ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວທາງວຽກງານຂອງອົງການພຸດທະສາສະໜາ ສຳພັນແຫ່ງປະເທດລາວເຮົາ. ບົດລາຍງານຂອງຄະນະກຳມະການປະຈຳສູນກາງ ອພສ. ແຫ່ງປະເທດລາວທີ່ຂ້າພະເຈົ້າສະເໜີມານັ້ນໄດ້ສະຫລຸບສັງລວມສະພາບການເຄື່ອນໄຫວຂອງ ອພສ. ຢ່າງຮອບດ້ານ, ພ້ອມກັນນັ້ນກໍໄດ້ວາງທິດທາງ, ໜ້າທີ່ວຽກງານຂອງ ອພສ. ສຳລັບແຕ່ນີ້ເຖິງປີ 1990 ໂດຍອີງໃສ່ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IV ມະຕິ 5 ແລະ 6 ຂອງພັກແລະກອງປະຊຸມໃຫຍ່ຄັ້ງທີ II ຂອງແນວລາວສ້າງຊາດ.

ຂ້າພະເຈົ້າເຊື່ອແນ່ວ່າ: ບັນດາທ່ານຜູ້ແທນສົງຈະເຊີດຊູຄວາມຮັບຜິດຊອບຂອງຕົນທີ່ພຸດທະສາສະນິກະຊົນມອບໝາຍໃຫ້, ພ້ອມກັນເປີກສາຫາລືຢ່າງມີປະຊາທິປະໄຕເພື່ອເຮັດໃຫ້ເອກະສານສຳຄັນນີ້ຄົບຖ້ວນບໍລິບູນ ມີເນື້ອໃນອັນອຸດົມຮັ່ງມີ, ທັງສິ່ງແສງເຖິງຄວາມມຸ່ງມາດປາຖະໜາຂອງພະສົງສາມະເນນແລະພຸດທະສາສະນິກະຊົນເຜົ່າຕ່າງໆ, ເຮັດໄດ້ແນວນັ້ນພວກເຮົາຈຶ່ງສາມາດສະແດງໃຫ້ເຫັນວ່າພວກເຮົາອາໄສກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ຄຳໝັ້ນສັນຍາຕໍ່ຂັ້ນເທິງແລະຕໍ່ກັນວ່າພວກເຮົາຈະເຮັດທຸກສິ່ງທຸກຢ່າງຈົນສຸດຄວາມສາມາດ ເພື່ອອຸທິດຜົນງານຂອງພວກເຮົາເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດທີ່ພັກ ແລະລັດໄດ້ວາງອອກຢ່າງໄດ້ຮັບຜົນດີ.

ທ່ານ ພູມີ ວົງວິຈິດ ກົມການເມືອງສູນກາງພັກ, ຜູ້ວ່າການປະທານປະເທດ,
ປະທານສູນກາງແນວລາວສ້າງຊາດ ໂອ້ລົມຕໍ່ກອງປະຊຸມໃຫຍ່ຜູ້ແທນສົງທົ່ວ
ປະເທດຄັ້ງທີ III.

24 / VII

ຫ້າມຈຳໜ່າຍ

ບົດໂອ້ລົມຂອງ ທ່ານປະທານ ພູມີ ວົງວິຈິດ
ກົມການເມືອງສູກາງພັກ ປປລ, ຜູ້ວ່າການແທນ
ປະທານປະເທດ, ປະທານແນວລາວສ້າງຊາດ
ຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງ ອ.ພ.ສ.
ແຫ່ງປະເທດລາວ ຄັ້ງວັນທີ 22/2/89

ນ້ອມນະມັດສະການ ພະເຖລານຸເຖລະ,

ຮຽນບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ຂ້າພະເຈົ້າ ຮູ້ສຶກດີໃຈຫລາຍ ທີ່ໄດ້ມີໂອກາດມາພົບປະໂອ້ລົມນຳ ພະເຖລານຸເຖລະ ເຊິ່ງເປັນຜູ້ແທນສົງມາຈາກແຂວງຕ່າງໆ ໃນທົ່ວປະເທດ. ຂ້າພະເຈົ້າ ຮູ້ສຶກເບີກບານໃຈທີ່ໄດ້ເຫັນຜູ້ແທນສົງທຸກອົງ ມີສຸຂະພາບດີ ສາມາດເດີນທາງ ມາເຂົ້າຮ່ວມກອງປະຊຸມໃຫຍ່ຂອງສົງ ພ້ອມທັງນຳເອົາຜົນງານມາຄຳນັບຮັບຕ້ອນ ກອງປະຊຸມໃຫຍ່ຄັ້ງນີ້ດ້ວຍ. ຍາມໃດຂ້າພະເຈົ້າ ກໍ່ເປັນຫ່ວງເປັນໃຍນຳການປະຕິບັດພຸດທະສາສະໜາ, ນຳພະສົງສາມະເນນ ກໍຄືພໍ່ແມ່ປະຊາຊົນໃນທົ່ວປະເທດຫລາຍທີ່ສຸດ. ໃນໂອກາດກອງປະຊຸມໃຫຍ່ຂອງ ອ.ພ.ສ. ຄັ້ງນີ້, ຂ້າພະເຈົ້າ ຂໍຝາກຄວາມເຄົາລົບນັບຖື, ຄວາມສາມັກຄີຮັກແພງ ແລະຄວາມຢື້ຢາມຖາມຂ່າວໄປຍັງພະສົງສາມະເນນ ແລະພຸດທະສາສະນິກະຊົນ ໃນທົ່ວປະເທດດ້ວຍ.

ໃນກອງປະຊຸມໃຫຍ່ຄັ້ງທີ III ຂອງ ອ.ພ.ສ. ຄັ້ງນີ້ ກໍໄດ້ມີຜູ້ແທນ

ສັງປະເທດອ້າຍນ້ອງຫລາຍປະເທດ ນຳເອົາໄມຕີຈິດມິດຕະພາບ ມາຮ່ວມໃຫ້ກຽດແກ່ປະເທດຊາດຂອງພວກເຮົາ, ຂ້າພະເຈົ້າຂໍສະແດງຄວາມຄຳນັບອັນສູງ, ຄວາມສາມັກຄີຮັກແພງ ແລະ ຄວາມຈົ່ມເຊີຍອັນສຸດໃຈຕໍ່ບັນດາຜູ້ແທນສົງປະເທດອ້າຍນ້ອງທຸກທ່ານ ທີ່ມາຮ່ວມເປັນກຽດໃຫ້ແກ່ກອງປະຊຸມເທື່ອນີ້. ພ້ອມກັນນີ້, ຂ້າພະເຈົ້າ ກໍຂໍສົ່ງຄວາມຄຳນັບ ແລະຄິດເຖິງ ແລະຄວາມສາມັກຄີຮັກແພງຂອງຂ້າພະເຈົ້າ ໄປຍັງພະສົງສາມະເນນ ແລະ ຊາວພຸດທັງຫລາຍ ໃນບັນດາປະເທດອ້າຍນ້ອງ ທີ່ບໍ່ໄດ້ມາຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກ ທີ່ຮັກແພງ,

ຈາກການຕິດຕາມສະພາບການທົ່ວປະເທດ ໃນຮອບປີທີ່ຜ່ານມາແລະຈາກການຟັງລາຍງານຂອງທ່ານປະທານ ອ.ພ.ສ. ໃນກອງປະຊຸມນີ້ຂ້າພະເຈົ້າເຫັນແຈ້ງໄດ້ວ່າ ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ II ຂອງ ອ.ພ.ສ. ມາຮອດປະຈຸບັນນີ້ ພະສົງສາມະເນນ ພາຍໃຕ້ການນຳພາໃກ້ຊິດຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ຕັ້ງໜ້າເຮັດພາລະໜ້າທີ່ຂອງຕົນ, ສ້າງໃຫ້ເປັນຜົນງານປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດສັງຄົມນິຍົມຢ່າງມີໝາກຜົນຕົວຈິງໃນຫລາຍດ້ານ. ຜົນງານຂອງພະສົງສາມະເນນລາວ ພົ້ນເດັ່ນໃນຮອບປີທີ່ຜ່ານມາເປັນຕົ້ນແມ່ນ: ການເທດສະໜາອົບຮົມສິນທຳໃຫ້ແກ່ປະຊາຊົນ, ເຮັດໃຫ້ປະຊາຊົນປະລະຄວາມຊົ່ວ, ເຮັດແຕ່ຄວາມດີ, ເຊິ່ງມັນສອດຄ່ອງທີ່ສຸດກັບແນວ

ທາງນະໂຍບາຍຂອງພັກແລະລັດຖະບານ. ການປະກອບສ່ວນເຂົ້າໃນວຽກງານການສຶກສາ, ປະກອບສ່ວນເຂົ້າໃນວຽກງານ ສາທາລະນະສຸກ ແລະການປົກປັກຮັກສາວັດວາອາຣາມ, ວັດຖຸບູຮານ ຄຳພີດີກາ ແລະອື່ນໆລ້ວນແຕ່ແມ່ນຜົນງານອັນປະເສີດເລີດລ້ຳຂອງພະສົງສາມະເນນພາຍໃຕ້ການນຳພາໃກ້ຊິດຂອງ ອົງການພຸດທະ-ສາສະໜາສຳພັນ. ຂ້າພະເຈົ້າຕາງໜ້າຄະນະບໍລິຫານງານສູນກາງພັກ, ຄະນະລັດຖະບານ ແລະຄະນະປະຈຳສູນກາງແນວລາວສ້າງຊາດ, ສະແດງຄວາມຍ້ອງຍໍສັນລະເສີນ ແລະຊົມເຊີຍຜົນງານຂອງພະສົງສາມະເນນ ພາຍໃຕ້ການນຳພາໃກ້ຊິດຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ທີ່ຍາດເອົາມາໄດ້ໃນຊຸມປີທີ່ຜ່ານມານັ້ນຢ່າງສຸດອົກສຸດໃຈ.

ພ້ອມກັນນັ້ນ, ຂ້າພະເຈົ້າ ກໍເຊື່ອໝັ້ນວ່າ; ໃນຊຸມປີຂ້າງໜ້ານີ້ພະສົງສາມະເນນລາວ ພາຍໃຕ້ການນຳພາຂອງ ອ.ພ.ສ. ໂດຍຜ່ານກອງປະຊຸມໃຫຍ່ຄັ້ງນີ້ ຈະເພີ່ມທະວີການສ້າງຜົນງານໃໝ່ ທີ່ໃຫຍ່ຫລວງກວ່າເກົ່າ, ປະກອບສ່ວນເຂົ້າໃນພາລະກິດປະຕິວັດ ກ້າວຂຶ້ນສັງຄົມນິຍົມຢູ່ປະເທດຂອງພວກເຮົາຢ່າງມີໄຊ.

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ປະເທດຊາດຂອງພວກເຮົາ ມີທີ່ຕັ້ງຢູ່ແຫລມອິນດູຈີນ, ມີດິນແດນກວ້າງ, ມີຊັບພະຍາກອນອຸດົມຮັ່ງມີ, ເຖິງວ່າເປັນປະເທດມີພົນລະເມືອງນ້ອຍກໍຕາມ, ພວກເຮົາກໍມີກຽດ ແລະຊື່ສຽງໃນເວທີສາກົນ, ທັງນີ້ກໍຍ້ອນວ່າປະເທດຊາດຂອງພວກເຮົາໄດ້ຮັບການປົດປ່ອຍ ມີເອກະລາດສົມບູນແລ້ວ, ພະສົງສາມະເນນ ພ້ອມທັງ

ຊາວພຸດ ແລະ ປະຊາຊົນເຮົາໄດ້ເປັນເອກະພາບກັນ ແລະ ມີເສລີພາບປະຊາທິປະໄຕຢ່າງຄົບຖ້ວນໃນທຸກດ້ານ. ປະເທດລາວເຮົາ ໄດ້ກາຍມາເປັນຂ້ອມດ່ານໜ້າຂອງຄ້າຍສັງຄົມນິຍົມໃນພາກພື້ນ ອາຊີ ອາຄະເນ, ອັນນັ້ນແມ່ນເປັນກຽດອັນສູງໃຫ້ແກ່ປະເທດເຮົາ ແຕ່ວ່າຍ້ອນຖານະຂອງປະເທດເຮົາເປັນແນວນີ້ ສັດຕູຂອງຊາດ ແລະຂອງພຸດທະສາສະໜາຂອງພວກເຮົາ ຈຶ່ງບໍ່ລົດລະໃນການໃຊ້ທຸກເລ່ລ່ຽມກົນອຸບາຍມ້າງເພຄວາມສະຫງົບສຸກຂອງພະສົງ ແລະປະຊາຊົນເຮົາ: ເລ່ລ່ຽມນີ້ຖືກປະລາໄຊ, ມັນພັດໃຊ້ເລ່ລ່ຽມໃໝ່, ກໍ່ກອນແລ້ວກໍ່ກອນອີກ, ເພື່ອເຮັດໃຫ້ສາທາລະນະລັດປະຊາທິປະໄຕປະຊາຊົນລາວພວກເຮົາບໍ່ມີຄວາມສະຫງົບ, ຂັດຂວາງໜ່ວງໜ່ຽວການກ້າວຂຶ້ນສັງຄົມນິຍົມຂອງປະເທດເຮົາ. ປະກົດການຕົວຈິງໄລຍະທີ່ຜ່ານມາ ໄດ້ຊີ້ໃຫ້ພວກເຮົາເຫັນຢ່າງຈະແຈ້ງແລ້ວ. ໃນອະນາຄົດພວກມັນກໍ່ຍັງຈະສືບຕໍ່ໃຊ້ເລ່ລ່ຽມກົນອຸບາຍທຸກຢ່າງຕໍ່ພວກເຮົາ, ດັ່ງນັ້ນ ພວກເຮົາຈຶ່ງຕ້ອງໄດ້ເພີ່ມທະວີຄວາມມີສະຕິລະວັງຕົວໃຫ້ສູງກວ່າເກົ່າ ກຽມພ້ອມເພື່ອທັບມ້າງກົນອຸບາຍຂອງສັດຕູດັ່ງກ່າວນັ້ນໃຫ້ພັງທະລາຍລົງ ເພື່ອຄວາມຢູ່ລອດ ແລະຄວາມສຸກຂອງພວກເຮົາ.

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ຖ້າພວກເຮົາຄົ້ນຄືນເບິ່ງໂລກແຕ່ດຶກດໍາບັນມາ, ພວກເຮົາເຫັນວ່າ ນັບເປັນລ້ານໆປີມາແລ້ວ ຄົນພວກກໍາອໍານາດທີ່ບໍ່ມີສິນທໍາປະຈໍາໃຈ ມີແຕ່ໃຊ້ອໍານາດນັ້ນກົດຂີ່ຂົ່ມເຫັງຄົນຜູ້ຢູ່ກ້ອງບັງຄັບ ເພື່ອສ້າງຄວາມຮັ່ງມີ ແລະຄວາມສຸກສະບາຍ

ຂອງຕົນ, ພະພຸດທະເຈົ້າ ວາງພຸດທະປັດຊະຍາ ເປັນພະທຳຄຳສັ່ງສອນຂອງເພິ່ນອອກໄດ້ 2531 ປີມານີ້ ກໍແມ່ນເພື່ອແກ້ໄຂຄວາມບໍ່ຍຸຕິທຳອັນນີ້. ສິນ 227, ສິນ 10, ສິນ 8 ແລະສິນ 5 ອັນຕ່ຳສຸດຂອງເພິ່ນ ກໍລ້ວນແຕ່ແນໃສ່ສ້າງຄົນໃຫ້ເປັນຄົນຜູ້ດີ ເພື່ອເຮັດແຕ່ອັນດີ, ປະລະຖິ້ມຄວາມຊົ່ວ ດ້ວຍຄວາມຕື່ນຕົວສະໝັກໃຈທີ່ເພິ່ນເອີ້ນວ່າ ທຳຈິດໃຈໃຫ້ຜ່ອງໃສ.

ການສັ່ງສອນດ້ວຍສິນທຳ ຄຳສັ່ງສອນຂອງພະພຸດທະເຈົ້າ ຍັງບໍ່ທັນສາມາດສະກັດກັ້ນມືຂອງພວກຊົນຊັ້ນທີ່ກົດຂີ່ຂູດຮີດ ອັນເຮັດໃຫ້ຜູ້ຖືກກົດຂີ່ຂູດຮີດທີ່ນັບມື້ນັບທຸກຍາກລຳບາກນັ້ນ ໃຫ້ຢຸດຕິລົງໄດ້. ສາສະໜາອື່ນ ກໍສັ່ງສອນຄົນໃຫ້ເຊົາການກົດຂີ່ຂົ່ມເຫັງຄົນດ້ວຍກັນເອງ ເພື່ອໃຫ້ຄົນອອກຈາກສັນດານເດຍລະສານທີ່ຍັງກິນກັນເອງຢູ່ນັ້ນ ມາເປັນມະນຸດທີ່ຮັກແພງສະໜິດສະໜົມກັນນັ້ນໄດ້. ຊົນຊັ້ນເຈົ້າທາດທີ່ບໍ່ມີສາສະໜາ ຍູທ່າງກົດຂີ່ຂູດຮີດຈົນເຖິງຂ້າຄົນຕາຍນັບເປັນເວລາຫລາຍໝື່ນປີ. ຊົນຊັ້ນສັກດີນາກົດຂີ່ຂູດຮີດຊົນຊັ້ນຊາວນານັບເປັນຫລາຍພັນປີ ຊົນຊັ້ນນາຍທຶນກົດຂີ່ຂູດຮີດຊົນຊັ້ນກຳມະກອນ ນັບເປັນຫລາຍຮ້ອຍປີ ແລະດຽວນີ້ກໍຍັງມີການຂູດຮີດແບບນັ້ນຢູ່ໃນຫລາຍທ້ອງຖິ່ນຂອງໂລກ. ຕັ້ງແຕ່ມີຊົນຊັ້ນສັກດີນາມາຈົນຊັ້ນນີ້ ແລະຊົນຊັ້ນນາຍທຶນ ທີ່ສືບຕໍ່ກົດຂີ່ຂູດຮີດປະຊາຊົນ ລ້ວນແຕ່ໃຊ້ອຳນາດ, ໃຊ້ອາວຸດ ແລະ ໃຊ້ເລ່ກົນຫລອກລວງ ໂດຍເອົາສາສະໜາຕ່າງໆເປັນສາກບັງໜ້າ ເພື່ອດຳເນີນນະໂຍບາຍກົດຂີ່ຂູດຮີດຂອງເຂົາ ດ້ວຍການໃຊ້ເລ່ກົນຫລອກລວງວ່າ ຜູ້ໃດປ່ອຍໃຫ້ພວກເຂົາກົດຂີ່ຂູດຮີດຕາມໃຈຊອບ ຈຶ່ງຈະໄດ້ຂຶ້ນສະຫວັນໃນຊາດໜ້າ, ບໍ່ດັ່ງນັ້ນກໍຈະຕົກນາຮົກໃນເມື່ອຕາຍໄປ.

ຊົນຊັ້ນສັກດິນາ ແລະນາຍທຶນ ມັນຄືກັນຢູ່ບ່ອນວ່າ ພວກເຂົາສົ່ງເສີມ ລັດທິເອກະຊົນ, ບໍ່ສົນໃຈນຳສິນທຳ ແລະ ຄວາມຍຸຕິທຳ, ໃຊ້ທຸກວິທີເຮັດໃຫ້ ຄົນຈົມຢູ່ໃນການກົກພັງສື ແລະ ເຊື່ອຖືງົມງວາຍ, ກົດຂີ່ຂູດຣີດເອົາແຮງງານ ແລະເອົາຊັບສິນຂອງຊົນຊັ້ນຜູ້ອອກແຮງງານ ໄປສ້າງຄວາມຮັ່ງມີໃຫ້ແກ່ພວກເຂົາ. ສາສະໜາພຸດ ຕໍ່ສູ້ເພື່ອສົມທຳ, ມະນຸດສະທຳ, ຄວາມສາມັກຄີ ແລະສັນຕິພາບ ໄດ້ 2500 ກວ່າປີ ກໍບໍ່ສາມາດລົບລ້າງຄົນຂູດຣີດຄົນໄດ້ເທື່ອ. ຈົນມາຮອດປີ 1848 ແລະປີ 1917 ທິດສະດີ ມາກ – ເລນິນ ຈຶ່ງຊ່ວຍໃຫ້ຄົນສາມາດໂຄ່ນ ລົ້ມພວກສັກດິນາ ແລະນາຍທຶນລົງ, ລົບລ້າງລະບອບຄົນຂູດຣີດຄົນ ແລ້ວພາປະ ເທດທີ່ເປັນເມືອງຂຶ້ນ ຫລື ເມືອງສ່ວຍ ຂອງພວກນາຍທຶນຈັກກະພັດຢູ່ໃນ ຫລາຍທ້ອງຖິ່ນ ກ້າວຂຶ້ນສັງຄົມນິຍົມ. ແຕ່ວ່າມາຮອດປະຈຸບັນນີ້ ກໍຍັງມີພວກ ນາຍທຶນໃຊ້ຮູບສັກດິນາມາບັງໜ້າ ແລ້ວໃຊ້ສາສະໜາເປັນເຄື່ອງມື ເພື່ອສືບຕໍ່ຂູດ ຣີດຊົນຊັ້ນຜູ້ອອກແຮງງານ ໂດຍແບ່ງແຍກສາສະໜາອອກເປັນຫລາຍກຸ່ມຂັດແຍ້ງ ກັນ ຕາມການຂັດແຍ້ງຂອງຊົນຊັ້ນນາຍທຶນຈັກກະພັດ. ພຸດທະສາສະໜາໃນຫລາຍ ປະເທດ ກໍຖືກແບ່ງແຍກໃຫ້ຂັດແຍ້ງກັນຄືກັນ, ບາງປະເທດກໍໃຊ້ພຸດທະສາສະໜາ ໄປເອີ້ນວ່າ ເປັນຂອງສັກສິດຄືກັນກັບເວດມົນກົນຄາຖາ ໃຫ້ຄົນເຊື່ອຖືເຄື່ອງຄ້າ ຂອງຄູນຢ່າງງົມງວາຍ ຫລືປະຕິບັດ ອະບາຍຍະມຸກ ໂດຍໃຊ້ການພະນັນ, ການ ບະບານແບບໄສຍະສາດ ເພື່ອຫາຄວາມລ້າລວຍຢ່າງບໍ່ຖືກສົມທຳ.

ຕັ້ງແຕ່ປີ 1917 ຊຶ່ງການປະຕິວັດຂອງປະເທດລັດເຊຍ ໃຫ້ກ້າວໄປ ເປັນປະເທດສັງຄົມນິຍົມ ຕໍ່ມາໂລກກໍໄດ້ແບ່ງເປັນ 2 ຝ່າຍ ຄືຝ່າຍສັງຄົມນິຍົມ

ກັບຝ່າຍນາຍທຶນຈັກກະພັດ, ໝາຍຄວາມວ່າ ຝ່າຍປະຕິວັດ ແລະຝ່າຍບໍ່ປະຕິວັດ, ພາໃຫ້ມີຂໍ້ຂັດແຍ້ງພື້ນຖານດັ່ງນີ້ ຄື:

1) ຂັດແຍ້ງ ລະຫວ່າງ ສັງຄົມນິຍົມ ກັບ ນາຍທຶນຈັກກະພັດ.

2) ຂັດແຍ້ງ ລະຫວ່າງ ຊົນຊັ້ນກຳມະກອນ ກັບ ພວກນາຍທຶນທີ່ຂູດຮີດ ກຳມະກອນ.

3) ຂັດແຍ້ງ ລະຫວ່າງ ປະຊາຊົນເມືອງຂຶ້ນ ກັບ ພວກນາຍທຶນລ່າເມືອງຂຶ້ນ.

4) ຂັດແຍ້ງ ລະຫວ່າງ ນາຍທຶນ ກັບ ນາຍທຶນເອງ.

ການຕໍ່ສູ້ລະຫວ່າງ 4 ຂໍ້ຂັດແຍ້ງນີ້ ພາໃຫ້ເກີດສົງຄາມໂລກ 2 ເທື່ອ. ສົງຄາມໂລກສະຫງົບລົງເທື່ອໃດ ກໍເຮັດໃຫ້ພວກນາຍທຶນຈັກກະພັດອ່ອນລົງ ແລະ ຊ່ວຍໃຫ້ພວກປະຊາຊົນທີ່ຖືກຂູດຮີດຕໍ່ສູ້ໄດ້ແຮງຂຶ້ນ. ຫລັງຈາກສົງຄາມໂລກຄັ້ງ ທີ 2 ມານີ້ ຍ້ອນວ່າພວກຈັກກະພັດອ່ອນແຮງລົງຕື່ມ ຈຶ່ງພາໃຫ້ມີສົງຄາມປົດ ປ່ອຍຊາດ, ມີຫລາຍປະເທດໄດ້ເປັນເອກະລາດແລ້ວ ຍັງຢຸດຢູ່ເປັນປະເທດບໍ່ຮ່ວມ ກຸ່ມ ແລະໃນປະເທດບໍ່ຮ່ວມກຸ່ມນີ້ກໍມີຫລາຍປະເທດຄ່ອຍໆກ້າວໄປຕາມເສັ້ນທາງ ສັງຄົມນິຍົມ.

ພວກນາຍທຶນຈັກກະພັດເສຍເມືອງຂຶ້ນແລ້ວອ່ອນແຮງລົງ, ດ້ວຍເຫດນັ້ນ, ເພື່ອຢູ່ໄດ້ມັນຈຶ່ງອີງໃສ່ກຳລັງອາວຸດ ແລະທຸ້ມເທເງິນຜະລິດອາວຸດແບບຮ້າຍແຮງ ຂຶ້ນຊຸກໄຊ້ ແລະໃຊ້ເຕັກນິກວິທະຍາສາດ ທີ່ມັນມີນັບກ້າວໜ້າໄປ ຂະຫຍາຍເສດ ຖະກິດຂອງພວກເຂົາໄປພ້ອມກັນ.

ດຽວນີ້ ຄ້າຍສັງຄົມນິຍົມແຮງກວ່າຄ້າຍນາຍທຶນຈັກກະພັດ ທາງດ້ານການ

ເມືອງ ໝາຍຄວາມວ່າ ຈະໃຊ້ແນວທາງການເມືອງເພື່ອຈຸດປະສົງທີ່ຈະເຮັດໃຫ້ປະຊາຊົນເປັນເອກະລາດ, ເປັນເຈົ້າຕົນເອງ ແລະ ມີຄວາມຜາສຸກນັ້ນ ປະຊາຊົນທົ່ວປະເທດຈຶ່ງສະໜັບສະໜູນນັບມື້ນັບຫລາຍຂຶ້ນ. ແຕ່ຍ້ອນວ່າປະເທດນາຍທຶນຈັກກະພັດ ກໍຍັງສືບຕໍ່ຜະລິດອາວຸດເພື່ອປາບປາມປະຊາຊົນໃນປະເທດຂອງຕົນ ແລະບັນດາປະເທດນ້ອຍອື່ນໆໃນໂລກ, ບັນດາປະເທດສັງຄົມນິຍົມ ກໍຈຳເປັນຕ້ອງຜະລິດອາວຸດ ເພື່ອປ້ອງກັນຊາດ, ປ້ອງກັນຄວາມຍຸຕິທຳ, ປ້ອງກັນບັນດາປະເທດທີ່ຖືກກົດຂີ່ຂົ່ມເຫັງ ຕ້ານສົງຄາມຮຸກຮານ ເພື່ອປົກປັກຮັກສາສັນຕິພາບຂອງໂລກ. ມາຮອດເວລານີ້ ປະເທດສັງຄົມນິຍົມອັນມີ ສະຫະພາບໂຊວຽດ ເປັນເສົາຄ້ຳ ໄດ້ມີກຳລັງແຮງກວ່າທາງດ້ານການເມືອງ, ດ້ານປ້ອງກັນຊາດ ແລະທາງດ້ານຄົ້ນຄວ້າອາວະກາດ. ສ່ວນປະເທດນາຍທຶນຈັກກະພັດ ມັນກໍຍັງມີທ່າແຮງທາງດ້ານຂະຫຍາຍເສດຖະກິດ ແລະມີຄວາມສ້ຽມແຫລມໃນການໃຊ້ເລ່ກົນຫລອກລວງປະຊາຊົນ.

ການຊັ່ງຊາກຳລັງດັ່ງກ່າວຂ້າງບົນນີ້ ໄດ້ສາມາດເຮັດໃຫ້ສະພາບການຂອງໂລກມີຄວາມໂຍະຍານລົງ ແລະເປັນການຮັບປະກັນວ່າພວກນາຍທຶນຈັກກະພັດ ຈະບໍ່ສາມາດໃຊ້ກຳລັງອາວຸດເຮັດສົງຄາມໂລກໄດ້ຄືແຕ່ກ່ອນອີກ, ແຕ່ວ່າພວກເຂົາກໍຍັງຈະດື້ດ້ານເຮັດສົງຄາມພາກສ່ວນຕ້ານຂະບວນປົດປ່ອຍຊາດ ແລະຍັງຈະດື້ດ້ານຜະລິດອາວຸດອັນຮ້າຍແຮງເພື່ອນາບຂູ່ປະເທດອື່ນ, ເມື່ອນາບຂູ່ດ້ານອື່ນບໍ່ໄດ້ພວກເຂົາກໍຍັງເວົ້າວ່າ ຈະສືບຕໍ່ເຮັດສົງຄາມໝູ່ດາວ.

ສະພາບການໃໝ່ນີ້ ພາໃຫ້ເກີດມີຂໍ້ຂັດແຍ້ງໃໝ່ຢູ່ໃນໂລກດັ່ງນີ້:

1) ການຂັດແຍ້ງລະຫວ່າງຜູ້ຢາກເຮັດສົງຄາມໝູ່ດາວ ແລະສົງຄາມນິວເຄລຽ

ກັບການຂະຫຍາຍຕົວ ແລະດົງຕົວຂອງມວນມະນຸດ.

2) ການຂັດແຍ້ງລະຫວ່າງຊັບສິນທຳມະຊາດ ທີ່ນັບມື້ນັບບົກແຫ້ງກັບປະຊາຊົນຂອງໂລກນັບມື້ນັບຂະຫຍາຍຈຳນວນ.

3) ການຂັດແຍ້ງລະຫວ່າງສິ່ງແວດລ້ອມອັນ ນັບມື້ນັບສັບສົນ ແລະການຢູ່ລອດຂອງມະນຸດ.

4) ການຂັດແຍ້ງລະຫວ່າງພວກກະຫາຍສົງຄາມ ກັບພວກຕໍ່ສູ້ເພື່ອສັນຕິພາບ.

5) ການຂັດແຍ້ງລະຫວ່າງນາຍທຶນທີ່ຖືກແບ່ງເປັນ 3 ກຸ່ມຢູ່ໃນໂລກ ຄືກຸ່ມປະເທດອາເມລິກາ, ກຸ່ມປະເທດຍີ່ປຸ່ນ ແລະກຸ່ມຕະຫລາດຮ່ວມ ເອີລົບ ທີ່ພວມທັງຮ່ວມມືກັນ ແລະທັງຕ້ານຍັ່ນກັນ.

6) ການຂັດແຍ້ງລະຫວ່າງອາເມລິກາ ທີ່ຢາກເຮັດສົງຄາມ ແລະພັກພວກຂອງມັນທີ່ບໍ່ເຫັນພ້ອມນຳ.

ການຂັດແຍ້ງດັ່ງກ່າວຂ້າງບົນນີ້ ມັນຊ່ວຍໃຫ້ມວນມະນຸດເຕົ້າໂຮມກັນເພື່ອຢູ່ລອດ, ພ້ອມກັນຕ້ານສົງຄາມ ນິວເຄລັຽ ນັບມື້ຮ້າຍແຮງ ແລະກວ້າງຂວາງຂຶ້ນຈັກໄຈ້, ສະຫະພາບໂຊວຽດ ໄດ້ເປັນແບບຢ່າງ ແລະໄດ້ຮຽກຮ້ອງໃຫ້ພວກຈັກກະພັດກະຫາຍສົງຄາມ ຢຸດເຊົາຈຸດປະສົງອັນຜິດພາດຂອງພວກເຂົາ ແລະຮຽກຮ້ອງໃຫ້ປະຊາຊົນໃນທົ່ວໂລກ ພ້ອມກັນເປັນຂະບວນຕ້ານສົງຄາມ ນິວເຄລັຽ. ແບບຢ່າງແລະຄວາມຮຽກຮ້ອງອັນນັ້ນ ໄດ້ຊ່ວຍໃຫ້ປະເທດໂຊວຽດ ກາຍເປັນມະຫາອຳນາດທີ່ເຂັ້ມແຂງທາງດ້ານປ້ອງກັນຊາດ, ຮັ່ງມີທາງດ້ານເສດຖະກິດ, ກ້າວໜ້າທາງດ້ານວັດທະນະທຳ ແລະມີປະຊາຊົນສະໜັບສະໜູນເປັນກຳລັງ ນັບມື້ນັບ

ກວ້າງຂວາງ ແລະເຂັ້ມແຂງໃນທົ່ວໂລກ. ມາຮອດປະຈຸບັນນີ້ຂະບວນການຕ້ານສົງຄາມຮຸກຮານ, ຕ້ານສົງຄາມນິວເຄລັຽ ຕໍ່ສູ້ຮ່ວມກັນຄົງຕົວຢູ່ໂດຍສັນຕິ ແລະເພື່ອປົກປັກຮັກສາສັນຕິພາບນັບມື້ນັບຂະຫຍາຍຕົວ, ປີ 1986–87 ມີການເຈລະຈາເພື່ອຮ່ວມກັນຢູ່ໂດຍສັນຕິ ກວ້າງຂວາງ ແລະແຂງແຮງຂຶ້ນຫລາຍທີ່ສຸດ. ກຳລັງອັນນີ້ໄດ້ຊ່ວຍໃຫ້ຜູ້ນຳສະຫະພາບໂຊວຽດ ແລະ ອາເມລິກາ ສາມາດເຊັນສັນຍາລົບລ້າງລູກສອນໄຟ ທີ່ອາເມລິກາໄດ້ເອົາໄປຕັ້ງໄວ້ໃນເອີລົບຕາເວັນຕົກ; ຫລັງຈາກນັ້ນກໍໄດ້ສືບຕໍ່ເຈລະຈາ ເພື່ອລົບລ້າງອາວຸດນິວເຄລັຽ ລົງເຄິ່ງໜຶ່ງ ແລະຈະກ້າວໄປລົບລ້າງໄປທັງໝົດ.

ສະພາບດັ່ງກ່າວຂ້າງເທິງນີ້ ຢັ້ງຢືນໃຫ້ພວກເຮົາເຫັນວ່າ ໂລກຂອງພວກເຮົາໄດ້ໄຂຍຸກສະໄໝໃໝ່ ຄືຍຸກສະໄໝແຫ່ງການລົບລ້າງອາວຸດນິວເຄລັຽ ແລະລົບລ້າງສົງຄາມຮຸກຮານຂອງພວກນາຍທຶນຈັກກະພັດ; ມັນຈະຊ່ວຍໃຫ້ສະພາບການເຄັ່ງຮ້ອນທີ່ຍັງພວມມີຢູ່ຫລາຍບ່ອນໃນໂລກ ຄ່ອຍໆມີການຜ່ອນຄາຍລົງ. ຫລັກຖານກໍຄື 5 ປະເທດຢູ່ອ້ອມປະເທດ ນີກາຣາກວາ ໄດ້ພ້ອມກັນເຊັນສັນຍາວ່າຈະກີດຂວາງບໍ່ໃຫ້ອາເມລິກາ ມາຂະຫຍາຍສົງຄາມຮຸກຮານ ບັນດາປະເທດອາເມລິກາກາງ, ການໂຈມຕີກັນລະຫວ່າງປະເທດ ອີລັກ – ອີລານ ໄດ້ຢຸດຕິລົງ ເພື່ອໃຊ້ການເຈລະຈາສຳລັບຖືກຕ້ອງຄ່ອງກັນດີ. ສົງຄາມກາງເມືອງ ຢູ່ປະເທດ ສີລັງກາ ກໍໄດ້ຄ່ອຍໆຢຸດຕິລົງ, ບັນຫາປະເທດ ອັບການິດສະຖານ ໄດ້ກ້າວໄປຕາມເສັ້ນທາງທີ່ຈະແກ້ໄຂກັນດ້ວຍສັນຕິວິທີ, ບັນຫາກຳປູເຈຍ ກໍສະເດງໃຫ້ເຫັນວ່າການແກ້ໄຂດ້ວຍສັນຕິວິທີນັບມື້ນັບເຫັນແຈ້ງຂຶ້ນ, ການຈຳແນກຜິວພັນ ແລະສົງຄາມຂອງ

24/VII
ຫ້າມຈຳໜ່າຍ

ລັດທິ ຊີໂອນິດ ກໍຈະຕ້ອງໄດ້ຮັບການແກ້ໄຂໄປໃນທຳນອງດຽວກັນ.

ສິ່ງທີ່ຂ້າພະເຈົ້າເວົ້າມານີ້ ສະແດງໃຫ້ເຫັນວ່າ ລະບົບເມືອງຂຶ້ນຂອງຕ່າງຊາດນັບມື້ນັບຖືກພັງທະລາຍລົງແລ້ວ ແລະ ນັບມື້ນັບຈະພັງທະລາຍລົງໄປຊັກໄຊ້ທັງລະບອບລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່. ຈຳນວນປະເທດທີ່ອອກຈາກເປັນເມືອງຂຶ້ນຂອງຕ່າງຊາດມາເປັນເອກະລາດ ນັບມື້ນັບຫລາຍຂຶ້ນ, ແຕ່ວ່າປະເທດເອກະລາດເຫລົ່ານັ້ນ ຍັງເປັນເອກະລາດພຽງແຕ່ດ້ານການເມືອງ, ຍັງຈະຕ້ອງສືບຕໍ່ຕໍ່ສູ້ສ້າງສາປະເທດຂອງຕົນໃຫ້ຮັ່ງມີເຂັ້ມແຂງຂຶ້ນ ເພື່ອກ້າວໄປເປັນເອກະລາດທາງດ້ານເສດຖະກິດ ເພື່ອເຮັດໃຫ້ເອກະລາດຂອງຕົນເປັນເອກະລາດສົມບູນແທ້, ອັນນັ້ນມັນກໍຢັ້ງຢືນໃຫ້ເຫັນວ່າ ລະບົບປະເທດເອກະລາດດັ່ງກ່າວນັ້ນ ເປັນການຮັບປະກັນຄວາມປອດໄພຂອງຕົນ ແລະສະແດງໃຫ້ເຫັນວ່າ ການໃຊ້ອາວຸດເພື່ອນາບຂູ່ປະເທດອື່ນນັ້ນ ມັນໝົດສະໄໝໄປແລ້ວ. ຄວາມປອດໄພຂອງປະເທດໜຶ່ງ ມັນພັດພົວພັນກັບຂອງປະເທດອື່ນ ເພາະວ່າ ໃນໂລກນີ້ບໍ່ມີປະເທດໃດຈະຢູ່ໂດດດ່ຽວໄດ້; ການພົວພັນອັນນັ້ນ ມັນແມ່ນການພົວພັນທາງດ້ານເສດຖະກິດ, ການເມືອງ, ວັດທະນະທຳ ແລະສັງຄົມ; ຢາກເຮັດການພົວພັນອັນນັ້ນໄດ້ດີ ທຸກປະເທດຈຶ່ງຕ້ອງຮ່ວມກັນຢູ່ດ້ວຍສັນຕິ. ການສ້າງສາປະເທດດັ່ງກ່າວນັ້ນ ຈະຫລີກອອກຈາກເສັ້ນທາງກ້າວຂຶ້ນສັງຄົມນິຍົມແມ່ນບໍ່ໄດ້, ແຕ່ວ່າຈະກ້າວຂຶ້ນສັງຄົມນິຍົມ ກໍຕ້ອງມີສະໄໝຂ້າມຜ່ານ ເພື່ອລົບລ້າງຈິນຕະນາການເກົ່າ, ລົບລ້າງແນວຄິດ ແລະແບບວິທີເຮັດວຽກເກົ່າ, ລົບລ້າງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ຄຸ້ມຄອງສັງຄົມເກົ່າ ທີ່ບໍ່ມີຄວາມຍຸດຕິທຳໃຫ້ບ່ຽນໄປເປັນອັນທີ່ຖືກຕ້ອງຕາມສິນທຳ ແລະ

ຕາມຈິດໃຈຂອງປະຊາຊົນຜູ້ທີ່ຈະກ້າວໜ້າຂຶ້ນໄປຢ່າງບໍ່ຢຸດຢັ້ງ.

ສະເພາະປະເທດລາວເຮົາຕັ້ງແຕ່ປີ 1979 ເປັນຕົ້ນມາ ການພົວພັນລະຫວ່າງປະເທດລາວເຮົາກັບປະເທດ ຈີນ, ມີການຊຸດໂຊມລົງຍ້ອນມີຄວາມເຂົ້າໃຈບໍ່ຄືກັນ ແຕ່ມາຮອດດຽວນີ້ໄດ້ມີຄວາມເຂົ້າໃຈກັນດີຄືນແລ້ວ ຈຶ່ງເຮັດໃຫ້ການພົວພັນກັນກັບຄືນດີ ເຮັດໃຫ້ເອກອັກຄະລັດຖະທູດ, ທູດຈີນໄດ້ມາປະຈຳຢູ່ທີ່ວຽງຈັນ ແລະທູດລາວກໍໄດ້ໄປປະຈຳຢູ່ປັກກິ່ງ ແລ້ວ; ອັນນັ້ນເປັນການແກ້ໄຂນຳກັນໃນເບື້ອງຕົ້ນ ແລະຍັງຈະສືບຕໍ່ແກ້ໄຂການພົວພັນນຳກັນໄປຕາມເສັ້ນທາງ ທີ່ຈະເຮັດໃຫ້ສອງປະເທດເຮົາທີ່ເປັນບ້ານໃກ້ເຮືອນຄຽງກັນນີ້ ເພີ່ມທະວີຄວາມສະໜິດສະໜົມດີຍິ່ງໆຂຶ້ນເລື້ອຍໄປ.

ກ່ຽວກັບ ລາຊະອານາຈັກໄທ ທີ່ເຄີຍມີທ່າທີອັນບໍ່ເປັນມິດກັບພວກເຮົາໃນເວລາທີ່ພວກເຮົາສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃໝ່ໆນັ້ນ ເຮັດໃຫ້ການພົວພັນລະຫວ່າງ 2 ປະເທດມີຄວາມເສື່ອມໂຊມລົງ. ການທີ່ລັດຖະບານໄທ ຊ່ອຍເຫລືອພວກຝຶນປະຕິວັດ ໂປນປົດ ຕ້ານກັບສາທາລະນະລັດປະຊາຊົນກຳປູເຈຍ ກໍເຮັດໃຫ້ພວກເຮົາບໍ່ເຫັນພ້ອມ, ນອກຈາກນັ້ນ ການທີ່ໄທປະຕິບັດຕາມຄວາມຍຸຍົງຂອງປະເທດອື່ນມາຢຶດເອົາ 3 ບ້ານຂອງເມືອງປາກລາຍ ແລະໃຊ້ກຳລັງຕີຢຶດເອົາດິນລາວ ຢູ່ຕາແສງນາບໍ່ນ້ອຍ ຂອງເມືອງບໍ່ແຕນ ແຂວງໄຊຍະບຸລີ ກໍເປັນການຂັດກັນກັບອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງລາວ, ມັນພາໃຫ້ເກີດມີການສູ້ຮົບກັນເຖິງ 2 ເດືອນ ເຮັດໃຫ້ຄົນລາວ ແລະຄົນໄທເສຍຊີວິດໄປເປັນຈຳນວນຫລາຍ ຍິ່ງເຮັດໃຫ້ການຂັດກັນລະຫວ່າງ ລາວ ກັບ ໄທ

ຮ້າຍແຮງຂຶ້ນຕື່ມອີກ. ຕັ້ງແຕ່ນີ້ ນາຍພົນເອກ ຈະອະລິດ ຍົງໃຈຢຸດ ຂອງໄທ ກັບນາຍພົນເອກ ສີສະຫວາດ ແກ້ວບຸນພັນ ຂອງລາວ ເຊັນຂໍ້ຕົກລົງກັນໃນທ້າຍ ປີ 1987 ແລະຕົ້ນປີ 1988 ເພັນດີໃຫ້ຢຸດເຊົາການຍິງກັນແລະຮັບຮອງວ່າ ຈະ ບໍ່ໃຊ້ທະຫານຕີກັນຕື່ມອີກນັ້ນ ໄດ້ເຮັດໃຫ້ສະພາບການລະຫວ່າງ ລາວ—ໄທ ມີ ການໂຍະຍານລົງ, ໃນເດືອນ 11 ປີ 1988 ນີ້ ນາຍພົນເອກ ຊາດຊາຍ ຊູນ-ຫະວັນ ນາຍົກລັດຖະມົນຕີ ໄທ ໄດ້ມາຢາມປະເທດລາວ ໄດ້ພ້ອມກັນກັບທ່ານ ໄກສອນ ພົມວິຫານ ປະທານສະພາລັດຖະມົນຕີ ລາວ ອອກຖະແຫລງການຮ່ວມ ໃນວັນທີ 25/11/1988 ເຊິ່ງມີເນື້ອໃນວ່າ ຈະເຮັດໃຫ້ 2 ປະເທດ ລາວ—ໄທ ສົມຊື່ວ່າ ເປັນບ້ານພີ່ເມືອງນ້ອງກັນ ແລະຈະເຮັດໃຫ້ການພົວພັນຮ່ວມມືກັນນັບ ມື້ນັບດີຂຶ້ນ, ນັ້ນກໍຍິ່ງເຮັດໃຫ້ການພົວພັນລະຫວ່າງ ລາວ—ໄທ ກ້າວຂຶ້ນໄປຕາມ ເສັ້ນທາງໂຍະຍານ ແລະຮັກແພງກັນດີຂຶ້ນກວ່າເກົ່າ.

ການທີ່ທ່ານປະທານສະພາລັດຖະມົນຕີລາວ ແລະທ່ານນາຍົກລັດຖະມົນຕີ ໄທ ໄດ້ພ້ອມກັນໄປຮ່ວມບຸນສະຫລອງພະທາດພະນົມ ພ້ອມກັນຕົກລົງສ້າງຕັ້ງ ສະມາຄົມມິດຕະພາບ ລາວ—ໄທ ແລະພ້ອມກັນເປີດຊາຍແດນ ທີ່ນະຄອນພະນົມ ໃນວັນທີ 17/2/89 ແລ້ວນີ້ ແມ່ນເປັນການຜູກແພັນຄວາມສາມັກຄີ ລາວ—ໄທ ໃຫ້ແໜ້ນແຟ້ນຂຶ້ນຕື່ມອີກ.

ແຕ່ວ່າ ພວກເຮົາກໍບໍ່ຄວນລືມວ່າ ປະເທດລາວພວກເຮົາເປັນປະເທດ ນ້ອຍ ພົນລະເມືອງບໍ່ຫລາຍ ແລ້ວຊ້ຳພັດຮັ່ງມີທາງດ້ານຊັບໃນດິນສິນໃນນ້ຳ: ພວກເຮົາມີຄວາມຫຍຸ້ງຍາກທັງພາຍໃນຂອງພວກເຮົາ ຍ້ອນວ່າແນວທາງນະໂຍບາຍ

ຂອງພັກ ແລະສິນທຳຂອງພຸດທະສາສະໜາບໍ່ທັນເຊື່ອມຊຶມເຂົ້າໃນໃຈຂອງປະຊາຊົນດີຂຶ້ນເທົ່າທີ່ຄວນ, ລະດັບການສຶກສາວັດທະນະທຳ, ການເມືອງ ແລະເສດຖະກິດຂອງພວກເຮົາຍັງຕ່ຳ; ພ້ອມກັນນັ້ນ ສັດຕູຂອງຊາດ ແລະ ຂອງພຸດທະສາສະໜາຂອງພວກເຮົາ ຍັງບໍ່ທັນຢຸດເຊົາເລ່ກົນຢາກແຊກແຊງເຂົ້າປະເທດລາວເຮົາ, ເມື່ອພວກເຂົາເຮັດສົງຄາມດ້ວຍອາວຸດບໍ່ໄດ້ຜົນ ພວກເຂົາຍັງຈະພະຍາຍາມໃຊ້ສົງຄາມຈິດຕະສາດໂດຍໃຊ້ເງິນຄຳ, ການໂຄສະນາໃນຫລາຍດ້ານ ເພື່ອແບ່ງແຍກຫັນປ່ຽນໂດຍສັນຕິ ເຮັດໃຫ້ພວກເຮົາຂາດຄວາມຮັກຊາດ, ຂາດສິນທຳປະຈຳໃຈ ແລ້ວປ່ອຍໃຫ້ພວກເຂົາກັບຄືນມາຄອບຄອງບ້ານເມືອງຂອງພວກເຮົາຕໍ່ໄປອີກ; ດັ່ງນັ້ນ ໃນເວລານີ້ຍິ່ງກວ່າເວລາໃດໝົດ ພວກເຮົາຈຶ່ງຕ້ອງເພີ່ມທະວີສະຕິລະວັງຕົວໃຫ້ສູງຢູ່ສະເໝີ, ຈື່ຈຳເອົາແນວທາງນະໂຍບາຍຂອງພັກ ແລະສິນທຳຂອງພຸດທະສາສະໜາໃຫ້ເລິກເຊິ່ງ ເພື່ອໃຫ້ແຕ່ລະຄົນພວກເຮົາເປັນເຈົ້າຕົນເອງ ຮ່ວມກັບຜູ້ອື່ນເປັນເຈົ້າປະເທດຊາດ, ເປັນເຈົ້າເສດຖະກິດ ແລະເປັນເຈົ້າສັງຄົມຂອງລາວ, ພ້ອມກັນພາປະເທດລາວອັນແສນຮັກຂອງພວກເຮົາກ້າວຂຶ້ນສັງຄົມນິຍົມຢ່າງບໍ່ຢຸດຢັ້ງ.

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ໃນເມື່ອສະພາບການທໍ່ໄປເປັນແນວນັ້ນ, ໃນຕົວຈິງຂອງມັນແມ່ນມັນບົ່ງບອກໃຫ້ພວກເຮົາຕ້ອງຫັນປ່ຽນຈິນຕະນາການເກົ່າ ທີ່ບໍ່ສອດຄ່ອງກັບສະພາບມາເປັນຈິນຕະນາການໃໝ່, ຕ້ອງຮັບຮູ້ສະພາບຄວາມເປັນຈິງຢ່າງພາວະວິໄສ. ພວກເຮົາຕ້ອງສະຖຸງໄວຕໍ່ເຫດການທີ່ມັນປ່ຽນແປງໃນທຸກກາລະເທສະ, ບໍ່ດັ່ງນັ້ນ ພວກ

ເຮົາຈະກາຍເປັນຜູ້ຖ່ວງດຶງຄວາມກ້າວໜ້າຂອງໂລກ ກໍຄືຂອງຍຸກສະໄໝ. ຢາກຫັນປ່ຽນຈິນຕະນາການເກົ່າໄປສູ່ຈິນຕະນາການໃໝ່ໄດ້ ກ່ອນອື່ນໝົດ, ພວກເຮົາຕ້ອງເຊື່ອມຊຶມຢ່າງເລິກເຊິ່ງ ມະຕິ 4–5–6 ສະໄໝທີ 4 ຂອງຄະນະບໍລິຫານງານສູນກາງພັກ ເພາະວ່າມະຕິດັ່ງກ່າວນັ້ນ ມັນເປັນທອນໄຟເຍືອງທາງໃຫ້ປວງຊົນລາວທັງຊາດ ມອງເຫັນເສັ້ນທາງເດີນຂອງປະເທດຊາດຕົນຢ່າງໃສແຈ້ງທີ່ສຸດໃນທຸກຂົງເຂດວຽກງານ ໃນນັ້ນລວມທັງວຽກງານນຳພາທາງສາສະໜາດ້ວຍ.

ບັດນີ້, ຂ້າພະເຈົ້າ ຂໍເນັ້ນຕື່ມກ່ຽວກັບຈິນຕະນາການ. ຈິນຕະນາການແມ່ນຫຍັງ? ແມ່ນຄວາມຄຶດ, ວິທີເຂົ້າໃຈ, ວິທີຄົ້ນຄິດຂອງຄົນເຮົາ. ຄົນເຮົາເກີດມາໄດ້ເຫັນສິ່ງທີ່ຢູ່ອ້ອມຂ້າງຕົນເອງໂລດ, ເມື່ອເຫັນວັດຖຸຢູ່ອ້ອມໂຕ ເຮັດໃຫ້ຄົນເຮົາຕ້ອງໄດ້ຄົ້ນຄິດ ໄດ້ຍິນ ໄດ້ຟັ່ງຂ່າວຄາວເລື່ອງລາວຕ່າງໆ ກໍກາຍເປັນຄວາມຄຶດ, ບາງຄົນຄິດເອົາເອງກໍໄດ້, ບາງຄົນມີຜູ້ອື່ນແນະນຳຈຶ່ງຄິດໄດ້, ດັ່ງນັ້ນ ຈຶ່ງມີຄວາມຄິດຖຶກກັບຄວາມຄິດຜິດໄດ້ຕໍ່ສູ້ກັນ. ການຍຶດເອົາຄວາມຄິດທີ່ຄົ້ນຄວ້າແລ້ວມາເປັນແນວທາງປະຕິບັດນັ້ນ ແມ່ນຈິນຕະນາການຂອງຄົນເຮົາ. ຜູ້ມີຈິນຕະນາການເກົ່າກໍຄຶດຄືສັງຄົມເກົ່າ, ຜູ້ມີຈິນຕະນາການໃໝ່ ກໍປ່ຽນແບບຄິດຂອງສັງຄົມເກົ່າມາຄິດແບບໃໝ່.

ຈິນຕະນາການເກົ່າແມ່ນແນວໃດ? ແມ່ນວິທີຮັບຮູ້ ແລະ ວິທີຄົ້ນຄິດຂອງຄົນເຮົາ ທີ່ບໍ່ໄປຕາມແບບສັດຈະວິພາກ, ຮັບຮູ້ສິ່ງວັດຖຸຕ່າງໆແບບຕາຍຕົວ, ບໍ່ສອດຄ່ອງກັບພາວະຄວາມເປັນຈິງທາງພາວະວິໄສ ທີ່ປ່ຽນແປງເລື້ອຍໆຢ່າງບໍ່ຢຸດຢັ້ງ. ຕົວຢ່າງ: ເມື່ອກ່ອນນີ້, ສ່ວນຫລາຍມັກເຂົ້າໃຈວ່າ ສິ່ງວັດຖຸ ແລະສະພາບ

ການບ້ານເມືອງເປັນແນວໃດກໍຈະເປັນໄປຄືເກົ່າຢູ່ເລື້ອຍ, ບາງຄົນຈ້ຳພັດຄິດວ່າ ອັນໃດກໍເປັນຂອງສ່ວນລວມໝົດ, ບຸກຄົນທຸກຄົນຂຶ້ນກັບສ່ວນລວມ ໂດຍບໍ່ມີຜົນປະໂຫຍດສ່ວນຕົວຈັກເມັດ, ດັ່ງນັ້ນ ມັນສະແດງອອກທຸກສິ່ງທຸກຢ່າງລວມໝູ່ໝົດ, ຫາກິນເອກະເທດເອກະຊົນກໍບໍ່ໄດ້, ລົບລ້າງກຳມະສິດສ່ວນຕົວໃຫ້ໝົດສິ້ນ. ເຮັດອັນໃດກໍຢາກເຮັດໃຫຍ່ເຮັດຫລາຍບາດດຽວໂລດ, ເຮັດຢ່າງໄວວາຟ້າວຟັ່ງ, ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ຂອງພັກ ເຄີຍເວົ້າເລື້ອຍໆວ່າ: "ປາກໃຫຍ່ກວ່າທ້ອງ" ຫລືວ່າ "ຈູດເຜົາໄລຍະ" ເຊັ່ນ ການລົບລ້າງ 5 ພາກສ່ວນເສດຖະກິດໃຫ້ຍັງເຫລືອແຕ່ 2 ພາກສ່ວນ ເພາະມີຄົນເຂົ້າໃຈວ່າ ເຮັດໄດ້ແນວນັ້ນຈະເປັນສັງຄົມນິຍົມໂລດ. ບາງຄົນຈ້ຳພັດຄຳນຶງແຕ່ຜົນປະໂຫຍດສ່ວນຕົວພັກ, ຈົນວ່າຮອດເວລາເອົາເຂົ້າລວມໝູ່ກໍບໍ່ຢາກເຮັດ. ສອງແນວຄິດນັ້ນລ້ວນແຕ່ຜິດພາດ. ຄວາມຈິງແທ້ແມ່ນ ເມື່ອເອົາເຂົ້າລວມໝູ່ບໍ່ທັນໄດ້ກໍໃຫ້ຜະລິດຫລາຍຈົນເປັນສິນຄ້າ ເພື່ອໃຫ້ປະເທດຮັ່ງມີຂຶ້ນເລື້ອຍໆ. ເມື່ອໃດມີເງື່ອນໄຂວັດຖຸແລະຈິດໃຈພຽງພໍ ແລະ ລຸລົ່ງໃນໃຈວ່າ ເອົາເຂົ້າຜະລິດລວມໝູ່ຈະໄດ້ຜົນຫລາຍກວ່າ ກໍເອົາເຂົ້າເຮັດລວມໝູ່ ເພື່ອພ້ອມກັນຕໍ່ສູ້ກັບທຳມະຊາດໄດ້ດີກວ່າ, ແຕ່ກໍຕ້ອງຮັບປະກັນ 3 ຜົນປະໂຫຍດໄດ້ເປັນຢ່າງດີ ຄືຜົນປະໂຫຍດຂອງຊາດ; ຜົນປະໂຫຍດຂອງອົງການຈັດຕັ້ງ ແລະ ຜົນປະໂຫຍດສ່ວນຕົວບຸກຄົນຜູ້ອອກແຮງ ໂດຍຖືວ່າອັນນີ້ເປັນສິ່ງສຳຄັນກວ່າສອງອັນທຳອິດ.

ຢູ່ທາງດ້ານສາສະໜາ ກໍມີປະກົດການຢາກລົບລ້າງຮີດຄອງປະເພນີໂດຍບໍ່ມີການຈຳແນກລະອຽດວ່າ: ອັນໃດຄວນປະລະ, ອັນໃດຄວນດັດແປງມັນ, ອັນ

ໃດຄວນສົ່ງເສີມມັນ, ບາງທ້ອງຖິ່ນ, ບາງແຂວງ, ບາງເມືອງ ປະຊາຊົນຢາກຕັ້ງວັດຂຶ້ນໃສ່ວັດເກົ່າທີ່ຖືກສັດຕູທຳລາຍໃນປາງສົງຄາມ, ພະນັກງານຊ້ຳຂັດຂວາງບໍ່ອະນຸຍາດໃຫ້ຕັ້ງ. ພະສົງບາງຕົນ ກໍມີປະກົດການຄ້າຂາຍຫຼາຍມື, ຮ່ວມມືກັບພໍ່ຄ້າ ຫລື ຮ່ວມມືກັບຕ່າງປະເທດ ມາທຳລາຍຊັບພະຍາກອນຂອງຊາດ ຍ້ອນຄິດວ່າເຮັດແນວນັ້ນກໍເປັນສັງຄົມນິຍົມ. ທີ່ກ່າວມາທັງໝົດນີ້ ລ້ວນແຕ່ສະແດງອອກເຖິງຈິນຕະນາການທີ່ບໍ່ຖືກຕ້ອງເປັນຈິນຕະນາການເກົ່າ, ມັນເປັນສິ່ງກີດໜ່ວງຄວາມກ້າວໜ້າຈະເລີນຂອງປະເທດຊາດ ແລະພຸດທະສາສະໜາ, ທັງກີດໜ່ວງຄວາມກ້າວໜ້າຂອງແນວຄິດຈິດໃຈຂອງປະຊາຊົນໄປຫາທາງທີ່ດີໄດ້.

ຈິນຕະນາການໃໝ່ ແມ່ນແນວໃດ? ແມ່ນຄວາມຄິດ ແລະແມ່ນວິທີຄົ້ນຄິດ ຕິດພັນກັບພາວະຄວາມເປັນຈິງຕາມແບບສັດຈະວິພາກຂອງລັດທິ ມາກ – ເລນິນ. ວັດຖຸ ຕັດສິນການຄົງຕົວຂອງສັງຄົມ. ໝາຍຄວາມວ່າ ວັດຖຸແລະສັງຄົມບ້ານເມືອງກ້າວໜ້າຂຶ້ນທໍ່ໃດ ຄວາມຄິດແລະແບບວິທີຄົ້ນຄິດ, ແບບວິທີຮັບຮູ້ ກໍຕ້ອງປ່ຽນແປງໃຫ້ກ້າວໜ້າຂຶ້ນເຖິງລະດັບດຽວກັນ. ວັດຖຸມີການເຄື່ອນເໜັງແລະຂະຫຍາຍຕົວຈາກປະລິມານສູ່ຄຸນນະພາບ ແລະກໍຈາກຄຸນນະພາບນີ້ໄປສູ່ຄຸນນະພາບອື່ນໆ ທີ່ກ້າວໜ້າກວ່າເກົ່າ. ຈິນຕະນາການໃໝ່ມັນສ່ອງແສງເຖິງວິທີຄົ້ນຄວ້າສິ່ງທີ່ເກີດຂຶ້ນໃໝ່ໃນທຸກເມື່ອທຸກຍາມ. ຄົນເຮົາບໍ່ພຽງແຕ່ຮັບຮູ້ໂລກເທົ່ານັ້ນ, ຍັງຕ້ອງຮູ້ດັດສ້າງໂລກອີກດ້ວຍ. ຢາກດັດສ້າງມັນໄດ້ກໍຕ້ອງມີຈິນຕະນາການທີ່ຖືກຕ້ອງສອດຄ່ອງກັບພາວະຄວາມເປັນຈິງ. ຕົວຢ່າງຢູ່ປະເທດເຮົາ, ປະຈຸບັນນີ້ 5 ພາກສ່ວນເສດຖະກິດຍັງຄົງມີບົດບາດໃນສັງຄົມ ແລະ ມັນອາດສາມາດຄົງຕົວຢູ່ໃນສັງຄົມນີ້ໄປນານສົມ

ດອນ, ບໍ່ມີໃຜຈະລົບລ້າງມັນໄດ້ດ້ວຍວິທີການໃດໆ ໃນທັນໃດຕາມໃຈຊອບໄດ້. ລະຫວ່າງສ່ວນລວມກັບສ່ວນບຸກຄົນກໍເຊັ່ນດຽວກັນ: ໄດ້ຜົນປະໂຫຍດແຕ່ສ່ວນລວມພັດບໍ່ໄດ້ຜົນປະໂຫຍດຂອງສ່ວນບຸກຄົນກໍເປັນໄປບໍ່ໄດ້. ຫລືວ່າ ໄດ້ແຕ່ຜົນປະໂຫຍດສ່ວນບຸກຄົນ ແຕ່ສ່ວນລວມຊ້ຳພັດບໍ່ໄດ້ຫຍັງກໍຍິ່ງເປັນໄປບໍ່ໄດ້ ຕົວຢ່າງ: ຜູ້ໃດເຮັດວຽກງານການຜະລິດຢູ່ບ່ອນໃດ ຊ້ຳພັດເອົາໄປເປັນຂອງສ່ວນຕົວໝົດ, ບໍ່ແບ່ງໄປເປັນຂອງອົງການຈັດຕັ້ງຂອງຕົນ ແລະ ບໍ່ແບ່ງໄປເປັນຂອງລັດກໍບໍ່ຖືກ ເພາະວ່າ ລັດ ແລະ ອົງການຈັດຕັ້ງຂອງຕົນ ແລະ ລັດ ຫາກສະສົມທຶນຮອນເພີ່ມຂຶ້ນໄດ້ຫລາຍທໍ່ໃດ ວຽກງານຂອງຕົນຈຶ່ງຈະຂະຫຍາຍຕົວສະດວກຂຶ້ນທໍ່ນັ້ນ,

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ກ່ຽວກັບວຽກງານສາສະໜາ ໃນຊຸມປີທີ່ຜ່ານມາ, ລັດຖະບານ ສປປລ. ໄດ້ມີຈິນຕະນາການທີ່ຖືກຕ້ອງທີ່ສຸດ. ລັດຖະບານໄດ້ເຂົ້າໃຈເລິກເຊິ່ງວ່າ: ທົ່ວປະເທດ ພົນລະເມືອງລາວປະມານແຕ່ 70 — 80% ນັບຖືພຸດທະສາສະໜາ. ລັດຖະບານໄດ້ປະກາດແຈ້ງວ່າ: ພົນລະເມືອງລາວທຸກຄົນມີສິດເສລີພາບໃນການເຊື່ອຖືສາສະໜາຕ່າງໆ ຫລືບໍ່ຢາກເຊື່ອຖືສາສະໜາໃດກໍບໍ່ເປັນຫຍັງ, ດັ່ງນັ້ນຈຶ່ງບໍ່ໄດ້ຕັດແຍກສາສະໜາອອກຈາກສັງຄົມ ແລະກໍບໍ່ໄດ້ຕັດແຍກພະສົງສາມະເນນອອກຈາກປະຊາຊົນພົນລະເມືອງ. ໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ, ສາສະໜາຍັງມີບົດບາດສຳຄັນໃນການເຕົ້າໂຮມຄວາມສາມັກຄີພຸດທະສາສະ-

ນິກະຊົນເຜົ່າຕ່າງໆໃນທົ່ວປະເທດ ຜູ້ມີຄວາມເຫລື້ອມໃສສັດທາ ແລະກໍມີຄວາມສາມາດຢ່າງພຽງພໍ ທີ່ຈະນຳເອົາສິນທຳຄຳສັ່ງສອນຂອງພະພຸດທະເຈົ້າປະສານສົມທົບເຂົ້າໃສ່ແນວທາງນະໂຍບາຍຂອງພັກ ແລະ ລັດ ມາສຶກສາອົບຮົມປະຊາຊົນບັນດາເຜົ່າຂອງພວກເຮົາ. ສປປລ. ຍາມໃດກໍໄດ້ເອົາໃຈໃສ່ວຽກງານພຸດທະສາສະໜາໄປຄຽງຄູ່ກັບວຽກງານດ້ານອື່ນໆ ເພາະເຫັນວ່າການດຳລົງຄົງຕົວຢູ່ໃນສັງຄົມລາວຂອງສາສະໜາ ມັນແມ່ນຄວາມເປັນຈິງທາງພາວະວິໄສ. ໃນໄລຍະການຕໍ່ສູ້ປະຕິວັດຊາດປະຊາທິປະໄຕ, ພຸດທະສາສະໜາ ກໍແມ່ນກຳລັງໜຶ່ງໃນບັນດາກຳລັງແຮງແຫ່ງຄວາມສາມັກຄີປວງຊົນທັງຊາດ. ຕະຫລອດໄລຍະດັ່ງກ່າວນັ້ນ ພຸດທະສາສະ-ໜາ ກໍຄືພະສົງລາວໄດ້ອອກແຮງປະກອບສ່ວນຢ່າງຕັ້ງໜ້າໃນການເຕົ້າໂຮມຄວາມສາມັກຄີໃນການຕໍ່ສູ້ປົກປັກຮັກສາແນວທາງທີ່ເປັນທຳ ດ້ວຍຫລາຍຮູບຫລາຍສີທີ່ເໝາະສົມກັບສີສັນຂອງພຸດທະສາສະໜາ, ໃນໄລຍະຕໍ່ສູ້ດຳເນີນການປະຕິວັດຊາດປະຊາທິປະໄຕນັ້ນ, ສັດຕູຂອງຊາດໄດ້ຖອກເທລູກລະເບີດລົງໃສ່ວັດວາອາຮາມຖືກພະສົງສາມະເນນ ເສຍຊີວິດໄປຕັ້ງຫລາຍອົງ, ນອກຈາກນັ້ນ ການທຳລາຍມ້າງເພບ້ານເຮືອນ ແລະການເຂັ່ນຂ້າປະຊາຊົນເປັນໜ້າເສົ້າສະຫລົດໃຈເປັນຢ່າງຍິ່ງ ເພາະວ່າມັນແມ່ນການທຳລາຍຊີວິດ ແລະຊັບສິນຂອງພໍ່ແມ່ພີ່ນ້ອງຂອງພະສົງສາມະເນນ. ອັນນັ້ນ ມັນໄດ້ເຮັດໃຫ້ພະສົງສາມະເນນມີຄວາມຕື່ນຕົວ ແລະຍົກສະຕິລະວັງຕົວໃຫ້ສູງກວ່າເກົ່າ ຕັ້ງໜ້ານຳໃຊ້ສິນທຳທາງພຸດທະສາສະໜາ ເປັນອາວຸດອັນແຫລມຄົມ, ສາມັກຄີກັບປະຊາຊົນບັນດາເຜົ່າຢູ່ພາຍໃນປະເທດ ແລະເພີ່ມທະວີຄວາມສາມັກຄີສາກົນກັບບັນດາຊາວພຸດ ແລະປະຊາຊົນຜູ້ຮັກຫອມສິນທຳ, ຮັກ

ຫອມສັນຕິພາບ ແລະຮັກຄວາມກ້າວໜ້າທາງສັງຄົມໃນທົ່ວໂລກ. ມັນເປັນການປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະກິດປົດປ່ອຍຊາດໃນຂອບເຂດທົ່ວປະເທດ. ອັນນັ້ນ ມັນໄດ້ກາຍເປັນມູນເຊື້ອທີ່ຈົບງາມທີ່ສຸດ ຂອງພຸດທະສາສະໜາໃນລາວ.

ພາຍຫລັງ ສຳເລັດການປະຕິວັດຊາດປະຊາທິປະໄຕ ມາເຖິງປະຈຸບັນນີ້ ພຸດທະສາສະໜາໃນລາວ ກໍໄດ້ຮັບການບົ່ບປຸງ ແລະເສີມຂະຫຍາຍມູນເຊື້ອດັ່ງກ່າວນັ້ນ ເຮັດໃຫ້ບົດບາດຂອງພຸດທະສາສະໜາສູງເດັ່ນຂື້ນຢູ່ພາຍໃນແລະຕ່າງປະເທດ ລັດຖະບານ ສປປລ. ບໍ່ພຽງແຕ່ບໍ່ໄດ້ຈຳກັດຮັດແຄບວຽກງານຂອງພຸດທະສາສະໜາທີ່ນັ້ນ ຍັງໄດ້ເສີມຂະຫຍາຍພາລະບົດບາດທາດແທ້ຂອງພຸດທະສາສະໜາໃຫ້ນັບມື້ນັບດີຂື້ນ. ໃນດ້ານພຶດຕິກຳນັ້ນ ລັດຖະບານໄດ້ອຸປະຖຳຄ້ຳຊູພຸດທະສາສະໜາໃນລາວທາງດ້ານວັດຖຸ ແລະ ຈິດໃຈໃນທົ່ວປະເທດ ໂດຍຜ່ານອົງການຈັດຕັ້ງແນວໂຮມ ແລະອຳນາດການປົກຄອງແຕ່ລະຂັ້ນ; ອຳນວຍຄວາມສະດວກໃຫ້ແກ່ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໃນດ້ານການຄຸ້ມຄອງສົງ, ໃນດ້ານການສຶກສາສົງ, ໃນດ້ານການເຜີຍແຜ່ລິນທຳ, ການປະຕິບັດຮີດຄອງປະເພນີທາງພຸດທະສາສະໜາ, ໃນດ້ານບູລະນະສ້າງສາວັດວາອາຣາມ, ໃນດ້ານເຄື່ອນໄຫວວຽກງານຕ່າງປະເທດ ແລະອື່ນໆ....

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ພະພຸດທະສາສະໜາ ດຳລົງຄົງຕົວຢູ່ໃນໂລກ ໄລ່ມາຮອດປະຈຸບັນນີ້ 2.530 ກວ່າປີແລ້ວ, ນັບວ່າເປັນສາສະໜາທີ່ເກົ່າແກ່ພໍຄວນ ແຕ່ຂ້າພະເຈົ້າເຫັນ

ວ່າ ຄຳສັ່ງສອນຂອງພະພຸດທະເຈົ້າອັນແທ້ຈິງນັ້ນ ຍັງສາມາດນຳໃຊ້ໃສ່ສັງຄົມມະ-ນຸດໃນປະຈຸບັນນີ້ໄດ້ຢູ່. ເວັ້ນເສັຍແຕ່ບົດເທດສະໜາຈຳນວນນຶ່ງ ເຊິ່ງແມ່ນເກຈິອາຈານ ຣຸ່ນຫລັງ ໄດ້ຂຽນຂຶ້ນເພື່ອຊັກຊວນເອົາປະຊາຊົນມາໃຫ້ເຊື່ອ ໃຫ້ເຫລື້ອມໃສໃນພຸດທະສາສະໜາ. ບົດເຫລົ່ານັ້ນ ສາມາດໃຊ້ເຂົ້າໃນກາລະເທສະຫລັງໆພຸ້ນໄດ້ຢູ່ ແຕ່ຈະນຳມາໃຊ້ໃນກາລະເທສະນີ້ແມ່ນບໍ່ສອດຄ່ອງອີກແລ້ວ. ຂ້າພະເຈົ້າຍັງມີຄວາມເຫັນອີກວ່າ ຄຳສອນຂອງພະພຸດທະເຈົ້າ ວ່າດ້ວຍເລື່ອງສັນຕິພາບ, ເລື່ອງຄວາມສາມັກຄີ, ເລື່ອງຄວາມຍຸດຕິທຳ, ເລື່ອງຄວາມສະເໝີພາບຂອງມວນມະນຸດໂລກ ແລະອື່ນໆນັ້ນ ແມ່ນຄຳສອນທີ່ດີທີ່ສຸດ. ແຕ່ວ່າຄຳສອນເຫລົ່ານັ້ນເປັນພຽງທິດສະດີໃນໜ້າເຈັ້ຍເທົ່ານັ້ນ, ຍັງບໍ່ທັນກາຍເປັນພາກປະຕິບັດຕົວຈິງເທື່ອ, ຕະຫລອດໄລຍະ 2500 ກວ່າປີມານີ້ ຄຳສອນເຫລົ່ານັ້ນຍັງບໍ່ທັນປະກົດເປັນຈິງ ຫລືປະກົດກໍ່ມີພຽງບາງກຸ່ມບາງຫຍ່ອມ ຫລືບາງກາລະເທສະເທົ່ານັ້ນ.

ປະຈຸບັນນີ້, ມວນມະນຸດໃນທົ່ວໂລກ ພວມຫັນໜ້າເຂົ້າຫາກັນ, ພວມຊອກຊ່ອງທາງຢູ່ຮ່ວມກັນໂດຍສັນຕິ, ພວມຊອກຫາຕົ້ນເຫດແຫ່ງຄວາມສາມັກຄີ, ຄວາມຍຸດຕິທຳ ແລະ ຄວາມສະເໝີພາບຢູ່ນຳກັນເພື່ອເຮັດໃຫ້ໂລກທັງໂລກນີ້ມີຄວາມສຸກ. ເມື່ອເປັນດັ່ງນີ້ ຂ້າພະເຈົ້າ ເຂົ້າໃຈວ່າອີກບໍ່ນານຄຳສອນຂອງພະພຸດ-ທະເຈົ້າ ທີ່ສອນໃຫ້ມວນມະນຸດມີຄວາມສາມັກຄີຮັກແພງກັນດັ່ງກ່າວນັ້ນ ຈະຕ້ອງປະກົດເປັນຈິງ. ແຕ່ວ່າຈະນັ່ງຄອຍນອນຄອຍ ຫລື ນົບໄຫວ້ບະບານເອົາ ໃຫ້ຄຳສອນດັ່ງກ່າວນັ້ນປະກົດເປັນຈິງແມ່ນເປັນໄປບໍ່ໄດ້. ສິ່ງທີ່ດີແລະຖືກຕ້ອງທີ່ສຸດແມ່ນ: ປະຊາຊົນຜູ້ຖືສາສະໜາພຸດທັງໝົດໃນທົ່ວປະເທດ ຕ້ອງສາມັກຄີກັນ ພ້ອມກັນເຄື່ອນ

ໄຫວອຍ່າງແຂງແຮງ, ຕໍ່ສູ້ຕ້ານກັບສະພາບເຫດການທີ່ກົງກັນຂ້າມກັບຈິດໃຈຂອງສົມທຳດັ່ງກ່າວນັ້ນ, ເຮັດໃຫ້ມວນມະນຸດຮູ້ແຈ້ງເຫັນຈິງ ແລະນຳເອົາສົມທຳຂອງພະພຸດທະເຈົ້າໄປປະຕິບັດໃຫ້ທົ່ວເຖິງກັນ. ຕາມຂ້າພະເຈົ້າໄດ້ຍິນພະເທດສະໜາວ່າ: ຕໍ່ຈາກສາສະໜາພະພຸດທະເຈົ້າໂຄຕະມະ ນີ້ແມ່ນ ສາສະໜາພະເມດໄຕ, ໃນຍຸກສະໄໝຂອງພະເມດໄຕນັ້ນ ແຜ່ນດິນຈະຮາບກ້ຽງດີພ້າກອງໄຊ, ໝາຍຄວາມວ່າມວນມະນຸດໃນໂລກຈະມີຄວາມສຸກສະເໝີພ້າກັນ, ບໍ່ມີຄວາມເຫລື້ອມລ້ຳຕ່ຳສູງໃນສັງຄົມ; ພາສາການເມືອງເພິ່ນວ່າ ບໍ່ມີຄົນຂູດຮີດຄົນ. ເປັນຍຸກສະໄໝທີ່ມີຄວາມສີວິໄລທີ່ສຸດ. ແນ່ນອນແລ້ວ ສາສະໜາພະເມດໄຕ ບໍ່ແມ່ນຕົກມາຈາກຟ້າຈາກແຖນ, ຕັ້ງແມ່ນມວນມະນຸດເຮົາເປັນຜູ້ສ້າງຂຶ້ນ, ເມື່ອເປັນດັ່ງນັ້ນ ຈະລໍຄອຍໃຫ້ສາສະໜາພະເມດໄຕເກີດຂຶ້ນມາເອງແມ່ນເປັນໄປບໍ່ໄດ້. ໂລກນີ້ແມ່ນໂລກແຫ່ງວັດຖຸ. ຄົນເຮົາສາມາດຮັບຮູ້ໂລກໄດ້ ແລະກໍສາມາດດັດແກ້ໂລກໄດ້; ສາມາດດັດແກ້ທຳມະຊາດໃຫ້ມາຮັບໃຊ້ຄົນ, ສາມາດດັດແກ້ສັງຄົມທີ່ຫລ້າຫລັງໃຫ້ເປັນສັງຄົມທີ່ກ້າວໜ້າ. ໝາຍຄວາມວ່າ ທຸກສິ່ງທຸກຍ່າງໃນໂລກນີ້ລ້ວນແຕ່ຂຶ້ນກັບຄົນ. ແຕ່ວ່າຄົນຕ້ອງມີຈິນຕະນາການທີ່ຖືກຕ້ອງສອດຄ່ອງກັບຄວາມເປັນຈິງຕາມພາວະວິໄສເທົ່ານັ້ນ ຈຶ່ງຈະສາມາດດັດແກ້ທຳມະຊາດ ແລະສັງຄົມນັ້ນໄດ້. ດັ່ງນັ້ນ ສາສະໜາພະເມດໄຕກໍແມ່ນຄົນຜູ້ມີຄວາມສາມາດ ແລະຄຸນສົມບັດສູງຂອງບັ້ນສາສະໜາໂຄຕະມະ ເປັນຜູ້ສ້າງຂຶ້ນ. ຕົ້ນກາລະພຶກທີ່ຜະລິດຈະຕຸປັດໃຈ ອັນຄົນປິດເອົາບໍ່ຮູ້ໝົດຮູ້ສ້ຽງນັ້ນກໍແມ່ນໂຮງຈັກໂຮງງານອັນທັນສະໄໝນັ້ນເອງ.

ພະເຖລານຸເຖລະ ທີ່ນັບຖື,

ບັນດາທ່ານແຂກຜູ້ມີກຽດ ທີ່ຮັກແພງ,

ເຖິງວ່າສະພາບການຂອງໂລກ ຍັງສືບຕໍ່ຫຍຸ້ງຍາກສັບສົນແນວໃດກໍຕາມ, ທ່າອ່ຽງຂອງໂລກປະຈຸບັນນີ້ ແມ່ນມີເງື່ອນໄຂອຳນວຍຄວາມສະດວກຢ່າງພຽງພໍ ໃຫ້ແກ່ການຕໍ່ສູ້ປົກປັກຮັກສາສັນຕິພາບໃນຂົງເຂດ ແລະໃນໂລກ; ອີງໃສ່ເງື່ອນໄຂດັ່ງກ່າວນີ້, ຄະນະສົງລາວເຮົາຄວນມີມານະຈິດບຸກບືນຂຶ້ນຕື່ມ, ຈັບໂອກາດ ຍາດເວລາອັນມີຄ່ານີ້ແບກຫາບວຽກງານດ້ານພຸດທະສາສະໜາ, ນຳໃຊ້ສິນທຳຄຳສັ່ງສອນຂອງພະພຸດທະເຈົ້າໃຫ້ເປັນປະໂຫຍດເກື້ອກູນແກ່ສັງຄົມ. ນຳເອົາພຸດທະ-ສາສະໜາລາວ ກ້າວໄປຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ ຕາມນະໂຍບາຍແນວທາງຂອງພັກ ແລະລັດເຮົາ ແນ່ນອນແລ້ວວຽກນີ້ຈະຫລີກບໍ່ພົ້ນຈາກຄວາມຫຍຸ້ງຍາກ ແລະໜັກໜ່ວງຫລາຍພໍຄວນ ແຕ່ກໍເປັນວຽກງານທີ່ມີກຽດສະຫງ່າງາມທາງປະຫວັດສາດຂອງພຸດທະສາສະໜາໃນອະນາຄົດ ທີ່ຈະສາມາດເດີນຄຽງຄູ່ໄປກັບທິດສະດີ ມາກ–ເລນິນ.

ຜ່ານກອງປະຊຸມໃຫຍ່ຄັ້ງນີ້, ຂ້າພະເຈົ້າເຫັນໄດ້ຜົນງານຂອງ ອພສ, ພ້ອມກັນນັ້ນກໍເຫັນໄດ້ຂໍ້ຂາດຕົກບົກພ່ອງທີ່ຍັງຄ້າງຄາ, ອັນນັ້ນແມ່ນການສັງເກດຕີລາຄາຕົນດ້ວຍຕົນເອງທີ່ຖືກຕ້ອງທີ່ສຸດ, ແຕ່ເພື່ອເພີ່ມເນື້ອໃນໃຫ້ແກ່ກອງປະຊຸມນີ້ອຸດົມຮັ່ງມີຂຶ້ນຕື່ມ, ຂ້າພະເຈົ້າຂໍສະເໜີບາງຄວາມເຫັນດັ່ງຕໍ່ໄປນີ້.

1) ເຖິງວ່າອົງການນີ້ ຈະມີການປ່ຽນຊື່ເປັນແນວໃດກໍຕາມ, ວຽກງານສຳຄັນອັນດັບໜຶ່ງ ຍັງແມ່ນຂອດການຈັດຕັ້ງປະຕິບັດ, ແລະ ຂອດສາມັກຄີພາຍ

ໃນເປັນເອກະພາບຢູ່ສະເໝີໃນຂອດນີ້ ຕ້ອງສືບຕໍ່ປັບປຸງແຕ່ເທິງລົງລຸ່ມໃຫ້ດີ. ການຈັດຕັ້ງຕ້ອງເຮັດກະທັດຣັດເບົາບາງ ແຕ່ຕ້ອງມີປະສິດທິຜົນ. ຮູບການຈັດຕັ້ງຄອມປະກອບດ້ວຍສອງລັກສະນະ ຄື: ລັກສະນະເຕົ້າໂຮມໄດ້ຄວາມສາມັກຄີຕາມທຳມະວິໄນສົງ ແລະລັກສະນະເຮັດແທ້ທຳຈິງ, ທັງສອງລັກສະນະນີ້ຂາດອັນໃດອັນໜຶ່ງກໍບໍ່ໄດ້, ຕ້ອງປະກອບທັງສອງລັກສະນະດັ່ງກ່າວນັ້ນ ຈຶ່ງຮັບປະກັນໃຫ້ການເຄື່ອນໄຫວໄດ້ຮັບຜົນດີ. ກ່ຽວກັບບັນຫາການຈັດຕັ້ງປະຕິບັດໃນແຕ່ລະຂັ້ນນັ້ນແມ່ນສິ່ງຮັບປະກັນໝາກຜົນຂອງແນວທາງນະໂຍບາຍ ແລະ ແຜນນະໂຍບາຍຕະຫລອດຮອດມະຕິຄຳສັ່ງຕ່າງໆຂອງພັກ, ລັດ, ແນວລາວສ້າງຊາດແລະອົງການພຸດທະສາສະໜາສຳພັນແຕ່ຂັ້ນສູນກາງລົງເຖິງຮາກຖານ. ຖ້າວ່າການຈັດຕັ້ງປະຕິບັດຫລົ້ມແຫລວ, ແນວທາງນະໂຍບາຍ ແລະມະຕິຄຳສັ່ງຈະຖືກຕ້ອງດີປານໃດກໍຈະບໍ່ໄດ້ຮັບໝາກຮັບຜົນເທົ່າທີ່ຄວນ, ດັ່ງນັ້ນຈຶ່ງວ່າຂອດການຈັດຕັ້ງປະຕິບັດເປັນຂອດອັນດັບໜຶ່ງທີ່ສຳຄັນກວ່າເພື່ອນ. ໃນຂອດຈັດຕັ້ງປະຕິບັດນັ້ນ ຂອດສຳຄັນແມ່ນການເລືອກເຟັ້ນພະນັກງານສົງ. ຢາກໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນນັ້ນມັນຈຳເປັນຕ້ອງເອົາເຖິງຄົນຜູ້ເຮັດວຽກຕົວຈິງ. ການປັບປຸງສັບຊ້ອນການຈັດຕັ້ງ, ໝາຍຄວາມວ່າເລືອກເຟັ້ນເອົາຜູ້ທີ່ມີທັງຄຸນສົມບັດ ແລະມີທັງຄວາມສາມາດ, ແນ່ນອນ, ສຳລັບພະສົງຈະຊອກຜູ້ມີຄຸນສົມບັດຊິບໍ່ຍາກປານໃດ, ແຕ່ຈະຊອກຫາຜູ້ມີຄວາມສາມາດນັ້ນຕິ, ວ່າຍາກແດ່. ລາງຕົນມີຄຸນສົມບັດດີແຕ່ພັດຂາດຄວາມສາມາດ, ລາງຕົນມີຄວາມສາມາດແຕ່ພັດຂາດຄຸນສົມບັດ. ອັນນີ້ມັນມີຢູ່ທົ່ວໄປ. ຄຸນສົມບັດມັນສະແດງອອກໃນແບບແຜນດຳລົງຊີວິດເຊັ່ນ: ມີຄວາມຊື່ສັດບໍລິສຸດ, ມີຄວາມດຸໝັ່ນ

ມີຄວາມສາມັກຄີ; ມີຄວາມອົດທົນ, ມີຫົວຄິດປະດິດສ້າງ, ຊອກສະແຫວງຫາຄວາມຮູ້ໃສ່ຕົວ, ເຝິກຝົນຕົນເອງດ້ວຍຕົນເອງແລະອື່ນໆ ຈົນກາຍເປັນຄວາມເຄີຍຊິນ ແລະກາຍເປັນແບບແຜນໃນການດຳລົງຊີວິດຂອງຜູ້ນັ້ນ, ເຮັດໃຫ້ຄົນທັງຫລາຍຍ້ອງຍໍສັນລະເສີນ, ເປັນແບບຢ່າງທີ່ດີໃຫ້ແກ່ຄົນທັງຫລາຍ, ອັນນັ້ນແມ່ນຄຸນສົມບັດ, ສ່ວນວ່າຄວາມສາມາດມັນສະແດງອອກໃນແບບແຜນວິທີເຮັດວຽກເຊັ່ນ: ສາມາດກຳແໜ້ນເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ຂອງລັດ, ຂອງແນວລາວສ້າງຊາດແລະຂອງ ອພສ. ສາມາດໝູນໃຊ້ແນວທາງນະໂຍບາຍເຂົ້າກັບສະພາບຕົວຈິງໃນແຕ່ລະຂົງເຂດວຽກງານ, ສາມາດຄຸ້ມຄອງເສດຖະກິດ, ສັງຄົມ, ວັດທະນະທຳ. ເວົ້າລວມແມ່ນມີສະຕິປັນຍາມີຫົວຄິດປະດິດສ້າງໃນການຊີ້ນຳນຳພາ, ເຮັດໃຫ້ທຸກການເຄື່ອນໄຫວວຽກງານເດີນແມ່ນແລ່ນສະດວກ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງວ່າ: ວຽກງານຈັດຕັ້ງປະຕິບັດເປັນຂອດສຳຄັນອັນດັບໜຶ່ງ, ເຊິ່ງຕ້ອງໄດ້ປັບປຸງເລື້ອຍໆ, ເຮັດໃຫ້ແໜ້ນໜາຂຶ້ນເລື້ອຍໆ, ເຮັດໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.

໒) ປັບປຸງແບບແຜນວິທີເຮັດວຽກ: ວຽກງານແຕ່ລະຢ່າງແມ່ນມີລະບົບຄົບຊຸດຂອງມັນ, ດັ່ງນັ້ນມັນຮຽກຮ້ອງໃຫ້ຄົນເຮົາຕ້ອງມີແຜນການລະອຽດພໍຄວນ ຄົນຈຶ່ງຈະບັນຊາວຽກໄດ້, ຖ້າບໍ່ດັ່ງນັ້ນວຽກງານຈະບັນຊາຄົນຄືເຮັດໃຫ້ຄົນແລ່ນນຳວຽກ, ບິດໜຶ່ງວຽກນັ້ນເກີດຂຶ້ນ, ອີກບິດໜຶ່ງວຽກອື່ນຊ້ຳເກີດຂຶ້ນອີກ, ວຽກເກົ່າບໍ່ທັນແລ້ວວຽກໃໝ່ຊ້ຳລົ້ນມາພາໃຫ້ເຮົາສັບສົນຫລາຍ, ຖ້າວ່າເຮົາວາງແຜນໄວ້ກ່ອນແລ້ວເຮົາກໍຢູ່ທ່າງປະຕິບັດຕາມແຜນຂອງເຮົາ. ການວາງແຜນກໍຕ້ອງແທດເໝາະກັບຕົວຈິງ, ແທດເໝາະກັບພາລະບົດບາດຂອງຕົນ ແລະແທດເໝາະຄວາມ

ສາມາດຂອງຕົນ. ສຳລັບອົງການພະສົງອາດຈະເປັນຄວາມເຄີຍຊິນແລ້ວກ່ຽວກັບການລວມສູນປະຊາທິປະໄຕ ເພາະວ່າທາງພຸດທະສາສະໜາຖືຄະນະສົງເປັນໃຫຍ່. ໝາຍຄວາມວ່າ ຈະເຮັດອັນໃດຕ້ອງເປິກສາຫາລື ຂໍຄວາມເຫັນດີເຫັນຊອບຈາກໝູ່ຄະນະເສຍກ່ອນ ຜູ້ເປັນປະມຸກປະທານຈຶ່ງຕັດສິນຊີ້ຂາດ. ຕ້ອງຫລີກເວັ້ນເດັດຂາດການຕັດສິນໂດຍບຸກຄົນຜູ້ດຽວ ແລະໂດຍຄາດຄະເນເອົາເອງ ແບບອັດຕະວິໄສ. ວຽກຈະໃຫຍ່ຈະຫລາຍຫລືຈະຫຍຸ້ງຍາກປານໃດກໍຕາມ, ຖ້າວ່າໄດ້ແລກປ່ຽນຄວາມຄິດຄວາມເຫັນນຳກັນຫລາຍຄົນແລ້ວ ກໍສາມາດຊອກຊ່ອງທາງແກ້ໄຂມັນໄດ້ແລະຈະມີຄວາມຜິດພາດໜ້ອຍທີ່ສຸດ. ໃນແບບແຜນວິທີເຮັດວຽກມີເນື້ອໃນຂອງມັນຄື:

ກ/- ໝັ່ນປະຊຸມກັນເລື້ອຍໆ, ໃນການປະຊຸມໃຫ້ທຸກຄົນໄດ້ປະກອບຄວາມຄິດຄວາມເຫັນຂອງຕົນຢ່າງປະຊາທິປະໄຕແທ້ຈິງ, ການປະຊຸມຕ້ອງມີການບັນທຶກຄັກແນ່, ການປະຊຸມຢ່າແກ່ຍາວເວລາຫລາຍ, ກ່ອນປິດກອງປະຊຸມຕ້ອງມີການສະຫລຸບຂໍ້ຕົກລົງແຕ່ລະບັນຫາທີ່ນຳມາເປິກສາໃນກອງປະຊຸມ.

ຂ/- ຫັນເອົາວຽກງານລົງສູ່ຮາກຖານ, ທຸກວຽກງານຕ້ອງຕິດພັນກັບຮາກຖານ: ເປັນທີ່ເຂົ້າໃຈນຳກັນແລ້ວວ່າ: ຜູ້ປະຕິບັດແມ່ນຮາກຖານ, ຜົນສຳເລັດເປັນຮູບປະທຳແມ່ນມາຈາກຮາກຖານ.ດັ່ງນັ້ນບັນດາແນວທາງນະໂຍບາຍ, ມະຕິຄຳສັ່ງຈຶ່ງຕ້ອງເຮັດໃຫ້ການຈັດຕັ້ງຂັ້ນຮາກຖານກຳແໜ້ນ ແລະເຊື່ອມຊຶມເອົາຈຶ່ງຈະປະຕິບັດຖືກ.

ຄ/- ລາຍງານເປັນລະບົບຕາມສາຍການຈັດຕັ້ງ ຂັ້ນ

ລຸ່ມຂຶ້ນກັບຂັ້ນເທິງ, ທຸກວຽກງານຕ້ອງລາຍງານໃຫ້ຂັ້ນເທິງຂອງຕົນຊາບ; ໃນລາຍງານຕ້ອງເຮັດເປັນລະບົບສຸດແລ້ວແຕ່ຈະຕົກລົງກັນ: ຈັກອັນ, ຈັກເດືອນຂັ້ນຮາກຖານລາຍງານຂັ້ນເມືອງ, ເມືອງລາຍງານແຂວງ, ແຂວງລາຍງານສູນກາງ. ໃນການລາຍງານຕ້ອງລາຍງານຄວາມຈິງຕາມຈິນຕະນາການໃໝ່ ແລະກໍຕ້ອງຂໍຄວາມເຫັນຂັ້ນເທິງເລື້ອຍໆ.

໗/- ໃນການເຄື່ອນໄຫວວຽກງານແຕ່ລະວຽກ, ແຕ່ລະຄັ້ງ, ແຕ່ລະບັ້ນຕ້ອງມີການສະຫລຸບ, ສັງເກດຕີລາຄາໃຫ້ເຫັນຜົນງານກໍຄືຈຸດດີທີ່ຕົນໄດ້ຮັບ, ໃຫ້ເຫັນຈຸດອ່ອນ, ຂໍ້ຄົງຄ້າງພ້ອມທັງສາຍເຫດຂອງມັນ, ທັງນີ້ກໍເພື່ອຈະໄດ້ເສີມຂະຫຍາຍຈຸດດີຂຶ້ນເລື້ອຍໆ ແລະຈຳກັດຈຸດອ່ອນໃຫ້ມັນຫລຸດຜ່ອນລົງ, ສືບຕໍ່ແກ້ໄຂຂໍ້ຄົງຄ້າງບໍ່ໃຫ້ມັນເຫລືອຢູ່ ຖອດຖອນບົດຮຽນໃຫ້ໄດ້ເພື່ອນຳໃຊ້ໃນຂ້າງໜ້າ.

ຂ້າພະເຈົ້າໄດ້ປະກອບຄວາມຄິດຄວາມເຫັນມາຍືດຍາວພໍສົມຄວນ ຫວັງວ່າຈະໄດ້ປະກອບສ່ວນເຮັດໃຫ້ເນື້ອໃນຂອງກອງປະຊຸມນີ້ ອຸດົມສົມບູນຂຶ້ນຕື່ມ, ກ່ອນຈະສິ້ນສຸດຄວາມເຫັນຂອງຂ້າພະເຈົ້ານີ້, ຂ້າພະເຈົ້າຂໍຮຽກຮ້ອງໃຫ້ທຸກອົງ, ທຸກຄົນຕັ້ງໜ້າຄົ້ນຄວ້າຮ່ຳຮຽນລາຍງານສະຫລຸບອັນຖືກຕ້ອງຂອງປະທານ ອພສ. ສູນກາງທີ່ສະເໜີຕໍ່ກອງປະຊຸມນີ້ແລ້ວ ບຸກໜ້າບືນຕົວປະຕິບັດໜ້າທີ່ ແລະທິດທາງຂອງ ອພສ. ແຕ່ນີ້ເຖິງປີ 1990 ໃຫ້ໄດ້ຮັບຜົນດີ.

ທ້າຍສຸດ, ຂ້າພະເຈົ້າຂໍອວຍພອນໃຫ້ກອງປະຊຸມໃຫຍ່ຄັ້ງທີ III ຂອງ ອພສ. ຈົ່ງສຳເລັດຜົນສະຫງ່າງາມ, ຂໍອວຍພອນໃຫ້ຜູ້ແທນສົງພາຍໃນປະເທດທຸກ

ອົງຈົ່ງມີສຸຂະພາບເຂັ້ມແຂງອາຍຸໝັ້ນຍືນ, ຂໍອວຍພອນໃຫ້ຜູ້ແທນພະສົງບັນດາປະເທດອ້າຍນ້ອງທຸກອົງຈົ່ງມີສຸຂະພາບເຂັ້ມແຂງອາຍຸໝັ້ນຍືນ, ຂໍອວຍໄຊໃຫ້ແຂກຜູ້ມີກຽດທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະອາຍຸໝັ້ນຍືນ.

ຂໍຂອບໃຈ.



ພະອາຈານ ຜ່ອງ ສະມາເລີກ ຄະນະປະຈຳສູນກາງ ອພສ. ລາຍງານກ່ຽວກັບ
ໂຄງການດຳເນີນງານ (ສະບັບດັດແປງແກ້ໄຂໃໝ່) ຕໍ່ກອງປະຊຸມໃຫຍ່ຜູ້ແທນ
ສົງທົ່ວປະເທດຄັ້ງທີ III.

24 / VII

ຫ້າມຈຳໜ່າຍ

ໂຄງການດຳເນີນງານ
ຂອງພຸດທະສາສະໜາສຳພັນລາວ
(ສະບັບດັດແປງແກ້ໄຂໃໝ່)

ໃນຊຸມປີຜ່ານມາ, ໃຕ້ການນຳພາຂອງພັກ ແລະການຊີ້ນຳອັນໃກ້ຊິດຂອງແນວລາວສ້າງຊາດ, ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ອອກແຮງປະຕິບັດພາລະໜ້າທີ່ຂອງຕົນ, ເສີມຂະຫຍາຍມູນເຊື້ອຮັກຊາດຮັກພຸດທະສາສະໜາຂອງພະສົງສາມະເນນ ແລະຊາວພຸດລາວ, ບົ່ມປຸງຄວາມສາມັກຄີເອກະພາບບົນພື້ນຖານແນວທາງນະໂຍບາຍຂອງພັກຢ່າງກວ້າງຂວາງແລະໜັກແໜ້ນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມຢູ່ພາຍໃນປະເທດ, ພ້ອມນັ້ນກໍໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການປົກປັກຮັກສາສັນຕິພາບໂລກຢ່າງສົມກຽດ.

ມາບັດນີ້, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃໝ່ທີ່ບົ່ງໄວ້ໃນມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ, ພວກເຮົາໄດ້ຄົ້ນຄວ້າເຫັນວ່າໂຄງການດຳເນີນງານຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ທີ່ໄດ້ວາງອອກໃນກອງປະຊຸມໃຫຍ່ຄັ້ງທີ່ II ນັ້ນແມ່ນບໍ່ສອດຄ່ອງກັບສະພາບຕົວຈິງອີກແລ້ວ, ດັ່ງນັ້ນພວກເຮົາໄດ້ດັດແປງຊື່ຂອງອົງການຈັດຕັ້ງ ໂດຍໃຫ້ຊື່ວ່າ "ພຸດທະສາສະໜາສຳພັນລາວຂຽນຫຍໍ້ວ່າ" ພສລ. ພ້ອມທັງໂຄງການດຳເນີນງານຂອງຕົນເພື່ອ

ໃຫ້ສອດຄ່ອງກັບໄລຍະໃໝ່ຂອງການປະຕິວັດ.

ເນື້ອໃນລະອຽດຂອງໂຄງການດຳເນີນງານ ຂອງພຸດທະສາສະໜາສຳພັນລາວມີດັ່ງນີ້:

1) ພຸດທະສາສະໜາສຳພັນລາວ ແມ່ນອົງການຈັດຕັ້ງຂອງຊາວພຸດລາວທີ່ເປັນສະມາຊິກລວມໝູ່ຂອງແນວລາວສ້າງຊາດ, ມີໜ້າທີ່ລະດົມຂົບບາດເຕົ້າໂຮມຄວາມສາມັກຄີພະສົງສາມະເນນ, ພໍ່ຂາວ, ແມ່ຂາວແລະພຸດທະສາສະນິກະຊົນທົ່ວໄປໃຫ້ເປັນເອກະພາບກັນທາງດ້ານການເຊື່ອຖືພຸດທະສາສະໜາ ແລະ ນຳເອົາພຸດທະ-ສາສະໜາກ້າວໄປຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ ພາຍໃຕ້ການນຳພາຂອງພັກ.

— ສາມັກຄີຮ່ວມສຳພັນກັບຊາວພຸດ ແລະປະຊາຊົນບັນດາເຜົ່າໃນທົ່ວປະເທດ, ກັບບັນດາອົງການຈັດຕັ້ງມະຫາຊົນອື່ນໆໃນລາວ ກັບການຈັດຕັ້ງສາສະໜາອື່ນໆທີ່ມີຢູ່ໃນລາວ, ກັບຊາວພຸດລາວທີ່ອາໄສຢູ່ຕ່າງປະເທດ ແລະຊາວພຸດຕ່າງປະເທດທີ່ອາໄສທຳມາຫາກິນຢູ່ໃນລາວ ເພື່ອເຮັດຫລ້ອນໜ້າທີ່ຂອງໃຜລາວພ້ອມກັນປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ.

— ຮ່ວມສຳພັນກັບອົງການຈັດຕັ້ງພຸດທະສາສະໜາ, ອົງການຈັດຕັ້ງສາສະໜາອື່ນໆ ອົງການຈັດຕັ້ງມະຫາຊົນອື່ນໆ ແລະປະຊາຊົນຜູ້ຮັກທອມສິນທຳ, ຮັກສັນຕິພາບ ແລະ ຮັກຄວາມກ້າວໜ້າທາງສັງຄົມ ໃນບັນດາປະເທດສັງຄົມນິຍົມ ແລະປະເທດອື່ນໆໃນໂລກ ເພື່ອພ້ອມກັນຕໍ່ສູ້ຕ້ານນະໂຍບາຍກະຫາຍສົງຄາມຂອງພວກຈັກກະພັດ, ເພື່ອປົກປັກຮັກສາສັນຕິພາບຂອງໂລກ ແລະຄວາມປອດໄພຂອງມວນມະນຸດ.

໒) ການຄຸ້ມຂອງພຸດທະສາສະໜາ ແລະການປົກຄອງສົງໂດຍຍຶດຫລັກທຳມະວິໄນເບັ່ນພື້ນຖານສົມທົບການປະຕິບັດສິດເສລີພາບ ປະຊາທິປະໄຕ ແລະຂອບເຂດກົດໝາຍຝ່າຍບ້ານເມືອງ.

– ພຸດທະສາສະໜາລາວອົນສູງສຸດຢູ່ພາຍໃນປະເທດ ໂດຍມີ (ພຸດທະສາສະໜາສຳພັນລາວ) ເປັນອົງການຈັດຕັ້ງນຳພາອົງການດຽວ ເຊິ່ງຕິດພັນສະພິດແໜ້ນກັບແນວລາວສ້າງຊາດ.

– ພຸດທະສາສະໜາລາວ ບໍ່ຕັດແຍກຈາກປະເທດສັງຄົມນິຍົມ ແລະບໍ່ມີການແບ່ງແຍກລັດທິນິກາຍ, ເປັນພຸດທະສາສະໜາທີ່ບໍລິສຸດພຸດຜ່ອງ ແລະເປັນເອກະພາບກັນດຳລົງຄົງຕົວຢູ່ໃຕລະບອບສັງຄົມນິຍົມ.

– ດຳເນີນການປົກຄອງສົງ ໂດຍຍຶດຫລັກວິໄນສົງເປັນຕົ້ນຕໍ, ສົມທົບການປົກຄອງຕາມແບບປະຊາທິປະໄຕມີຄວາມຍຸດຕິທຳ, ຄວາມສະເໝີພາບ, ຄວາມສາມັກຄີແລະເຄົາລົບນັບຖືຕາມລຳດັບພັນສາ.

– ການບວດແລະການສຶກ ແມ່ນສິດທິຂອງຜູ້ກ່ຽວ ແຕ່ຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມ (ຮັບອະນຸຍາດ) ຄື: ກ່ອນຈະເຂົ້າມາບວດໃນພຸດທະສາສະໜາຕ້ອງໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່; ກ່ອນຈະສຶກຈາກພຸດທະສາສະໜາກໍຕ້ອງມີເຫດຜົນພຽງພໍ ແລະປະຕິບັດຕາມຮີດຄອງຂອງພຸດທະສາສະໜາ: ຢ່າງໃດກໍຕາມພຸດທະສາສະໜາສຳພັນລາວ ກໍບໍ່ໄດ້ຈຳກັດຄວາມເຊື່ອຖືແລະເຫລື້ອມໃສສັດທາຂອງປະຊາຊົນ, ແຕ່ມີສິດຕັດສິນທຸກບັນຫາກ່ຽວກັບວຽກງານພຸດທະສາສະໜາ.

3) ການເທດສະໜາເຜີຍແຜ່ສິນທຳ, ໂຄສະນາອົບຮົມ, ແນໃສ່ເຮັດໃຫ້ພະສົງ ແລະ ປະຊາຊົນເຂົ້າໃຈ ແລະ ເຊື່ອມຊຶມສິນທຳທາງພຸດທະສາສະໜາໂດຍປະສານສົມທົບເຂົ້າກັບແນວທາງນະໂຍບາຍຂອງພັກແລະລັດ ໃນແຕ່ລະໄລຍະ.

— ການເທດສະໜາຫຼືການໂຄສະນາອົບຮົມ ແມ່ນໜ້າທີ່ຂອງພະສົງສາມະເນນແລະກໍຖືວ່າເປັນໜ້າທີ່ ທີ່ສຳຄັນອັນດັບໜຶ່ງໃນການນຳໃຊ້ສິນທຳທາງພຸດທະສາສະໜາໃຫ້ສອດຄ່ອງກັບກາລະເທສະ; ດັ່ງນັ້ນຈຶ່ງຈຳເປັນຕ້ອງໄດ້ມີການເລືອກເຟັ້ນ ແລະ ຄັດຈ້ອນເອົາບົດສິນທຳທາງພຸດທະສາສະໜາ ສຶກສາອົບຮົມປະຊາຊົນເຮັດໃຫ້ປະຊາຊົນຈຳແນກໄດ້ອັນຜິດອັນຖືກ, ລະຖິ້ມອັນຜິດ, ປະຕິບັດອັນຖືກຕ້ອງດ້ວຍຈິດໃຈອັນຜ່ອງໃສ.

— ສະເພາະໜ້ານີ້ການເທດສະໜາ ສຶກສາອົບຮົມປະຊາຊົນແມ່ນເລັ່ງໃສ່ເຮັດໃຫ້ປະຊາຊົນປະລະການເຊື່ອຖືງົມງວາຍເຊັ່ນ: ເຊື່ອຖືຜີສາງລາງຮ້າຍ, ເຊື່ອຖືລຶກງາມຍາມດີ ຕະຫລອດການເຊື່ອຖືເທວະດານ້ຳແຖນຕ່າງໆ, ປະລະການມົວເມົາໃນອະບາຍຍະມຸກເຊັ່ນ: ການຫລິ້ນເບັ້ຍເຈ້ຍໄພ້, ບັດເບີແລະການພະນັນອື່ນໆການສູບຝິ່ນກິນກັນຊາດື່ມເຫລົ້າແລະຕິດສິ່ງມົວເມົາອື່ນໆ.

— ບົດເທດສະໜາ ແລະສຶກສາອົບຮົມແຕ່ລະບົດແນໃສ່ແກ້ໄຂສັງຄົມແລະວັດທະນະທຳທີ່ເຊື່ອມຊາມ, ເຮັດໃຫ້ຄົນທັງຫລາຍກຳໄດ້ເລິກເຊິ່ງບັ້ນຈະສິນແລະບັ້ນຈະທຳໂດຍສະເພາະແມ່ນເຮັດໃຫ້ທົ່ວສັງຄົມ ປະຕິບັດສິນທ້າພາກຕົວຈິງພ້ອມກັນນັ້ນກໍໃຫ້ມີກັນລະຍານະທຳປະຈຳໃຈຢ່າງສູງ.

— ນຳໃຊ້ສິນທຳທາງພຸດທະສາສະໜາ ໃຫ້ສອດຄ່ອງກັບແນວທາງນະໂຍ-

ບາຍຂອງພັກແລະລັດໃນແຕ່ລະໄລຍະ, ເຮັດໃຫ້ປະຊາຊົນເຫັນແຈ້ງວ່າສິນທຳທາງພຸດທະສາສະໜາຍັງເປັນປະໂຫຍດເກື້ອກູນແກ່ສັງຄົມ ແລະ ໃຫ້ເຫັນແຈ້ງວ່າແນວທາງນະໂຍບາຍຂອງ ພັກ ແລະ ລັດ ແມ່ນຖືກຕ້ອງເປັນທຳທີ່ສຸດເພາະວ່າແນວທາງນະໂຍບາຍນັ້ນ ສອດຄ່ອງກັບຄວາມມຸ່ງມາດປັດຖະໜາຂອງປະຊາຊົນ.

– ບົດເທດສະໜາແຕ່ລະບົດໃຫ້ມີຈຸດປະສົງ ແລະ ລະດັບຄາດໝາຍຄັກແນ່, ຮູ້ນຳໃຊ້ສິນທຳເຂົ້າໃສ່ກາລະເທສະຢ່າງແທດເໝາະທີ່ສຸດ, ແນໃສ່ສ້າງເສີມມູນເຊື້ອສາມັກຄີ, ດຸໝັ່ນອອກແຮງງານພລະອາດຫານ, ພ້ອມກັນນັ້ນກໍແນໃສ່ກຳຈັດປັດເປົ່າຮີດຄອງປະເພນີ ການເຊື່ອຖືກົດໝ່ອງຖ່ວງດຶງການອອກແຮງງານເພີ່ມພູນຜະລິດຜົນເພື່ອຄວາມຈະເລີນຂອງບ້ານເມືອງ ແລະເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

4) ການສຶກສາຕາມຫລັກສູດຂອງໂຮງຮຽນ, ການຮ່ຳຮຽນທຳມະວິໄນທາງພຸດທະສາສະໜາ ແລະ ການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານການສຶກສາຂອງປະຊາຊົນ.

– ພຸດທະສາສະໜາສຳພັນລາວ ດຳເນີນການສຶກສາໃຫ້ແກ່ພະສົງສາມະເນນຕາມຫລັກສູດຂອງກະຊວງສຶກສາ, ສົມທົບກັບກະຊວງສຶກສາຈັດຕັ້ງໂຮງຮຽນສົງຂຶ້ນແຕ່ຊັ້ນປະຖົມຮອດຊັ້ນອຸດົມແລະໂຮງຮຽນສ້າງຄູສົງ, ການນຳເອົາວິຊາທາງພຸດທະສາສະໜາ ເຂົ້າໄປໃນໂຮງຮຽນສົງ ຄວນມີການເລືອກເຟັ້ນໃຫ້ແທດເໝາະກັບຍຸກສະໄໝ, ຄະນະພຸດທະສາສະໜາສຳພັນລາວຂັ້ນແຂວງ ຂັ້ນເມືອງ ຄວນເອົາໃຈໃສ່ສ້າງໂຮງຮຽນຂຶ້ນໃນຂົງເຂດວັດແຕ່ລະບ້ານ ເພື່ອໃຫ້ພະສົງສາມະເນນໄດ້

ຮັບການສຶກສາທົ່ວເຖິງກັນ.

– ເພື່ອປົກປັກຮັກສາຮີດຄອງປະເພນີທາງພຸດທະສາສະໜາ ທີ່ມີມາແຕ່ໂບຮານນະການນັ້ນ ການສຶກສາອົບຮົມທຳມະ, ວິໄນ, ປະຫວັດພຸດທະສາສະໜາ, ສູດ, ເທດໃຫ້ແກ່ພະສົງສາມະເນນ, ພໍ່ຂາວ, ແມ່ຂາວພາຍໃນວັດຂອງຕົນຢ່າງເປັນປະຈຳ, ເຮັດໃຫ້ພະສົງສາມະເນນມີຄວາມຮູ້ທາງດ້ານພຸດທະສາສະໜາ ຢ່າງກວ້າງຂວາງແລະເລິກເຊິ່ງແມ່ນພາລະໜ້າທີ່ໂດຍກົງຂອງຄະນະປົກຄອງວັດແຕ່ລະວັດ.

– ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນວຽກງານການສຶກສາຂອງປະຊາຊົນ, ໂດຍສືບຕໍ່ມູນເຊື້ອທີ່ພະສົງລາວໄດ້ປະກອບສ່ວນລົບລ້າງໄພກືກໜັງສືນັ້ນ, ຕໍ່ໜ້າທີ່ນີ້ແມ່ນປະກອບສ່ວນບຳລຸງວັດທະນະທຳໃຫ້ແກ່ປະຊາຊົນ ໃນທ້ອງຖິ່ນຂອງໃຜລາວຂຶ້ນຕາມລຳດັບແລະຕາມຄວາມສາມາດ, ພ້ອມກັນນັ້ນກໍເອົາໃຈໃສ່ປຸກລະດົມປະຊາຊົນສ້າງໂຮງຮຽນຫລືມີເງື່ອນໄຂກໍໃຫ້ເອົາວັດເປັນໂຮງຮຽນ ແລະນຳໃຊ້ພະສົງສາມະເນນຜູ້ມີຄວາມສາມາດໃຫ້ເປັນຄູສອນ ເພື່ອເຮັດໃຫ້ລູກຫລານຂອງປະຊາຊົນໄດ້ຮັບການສຶກສາອົບຮົມເທົ່າທີ່ຄວນ.

5) ປົກປັກຮັກສາ ໂບຮານນະວັດຖຸແລະປູຊະນີຍະສະຖານ, ບູລະນະສ້ອມແປງວັດວາອາຣາມ, ຟື້ນຟູດິນບາງວັດໃນທ້ອງຖິ່ນທີ່ຖືກລະເບີດຂອງສັດຕູທຳລາຍໃນປາງສົງຄາມ ແລະສ້າງສາວັດວາອາຣາມຕາມຄວາມເໝາະສົມແລະຄວາມສາມາດຂອງແຕ່ລະທ້ອງຖິ່ນ.

– ເກັບທ້ອນຂຶ້ນບັນຊີວັດຖຸບູຮານທີ່ເປັນຂອງພຸດທະສາສະໜາເປັນຕົ້ນແມ່ນ: ໜັງສືໃບລານຄຳພີຕ່າງໆ ພະພຸດທະຮູບຄຳ, ເງິນ, ທອງສຳລິດ, ທອງແດງ,

ທອງເຫລືອງ, ແກ້ວ, ໄມ້, ແລະຫີນທີ່ມີຄ່າເຄື່ອງປະດັບປະດາບູຊາຢູ່ໃນວັດເຊັ່ນ: ດອກໄມ້ເງິນ, ຄຳ, ໂອຂັນແລະອື່ນໆທີ່ມີລາຄາສູງຕ້ອງໄດ້ເກັບມ້ຽນໄວ້ໃນບ່ອນປອດໄພ, ສຳລັບປູຊະນີຍະສະຖານທີ່ເປັນວັດຖຸໂບຮານ ເປັນຕົ້ນແມ່ນທາດເຈດີກຸຕິວິຫານພັດທະສີມາ ເຊິ່ງມີລວດລາຍເກົ່າແກ່ ຕ້ອງໄດ້ບົວລະບັດຂັດສີໄວ້ເປັນຢ່າງດີ.

— ກຸຕິວິຫານທີ່ຖືກຈຳລຸດຊຸດໂຊມຕາມທຳມະຊາດນີ້ຕ້ອງໄດ້ປົກປັກຮັກສາບູລະນະສ້ອມແປງດ້ວຍເຫື່ອແຮງແລະທຶນຮອນຂອງພະສົງສາມະເນນ ແລະອອກຕົນຍາດໂຍມໃນທ້ອງຖິ່ນນັ້ນໆ.

— ສຳລັບວັດທີ່ຖືກສັດຕູທຳລາຍໃນປາງສົງຄາມນັ້ນ ຕ້ອງໄດ້ເອົາໃຈໃສ່ຟື້ນຟູຄືນເທື່ອລະກ້າວ ໂດຍເລີ່ມຕົ້ນຈາກວັດທີ່ມີຄວາມສຳຄັນທາງປະຫວັດສາດ ແຕ່ກໍອີງໃສ່ກຳລັງຂອງພະສົງສາມະເນນແລະປະຊາຊົນໃນທ້ອງຖິ່ນນັ້ນໆ ເປັນເຈົ້າການດຳເນີນການຟື້ນຟູແຕ່ນ້ອຍໄປຫາໃຫຍ່.

6) ການຟື້ນຟູຕຳລາຢາພື້ນເມືອງ, ປຸງແຕ່ງຢາພື້ນເມືອງປະກອບສ່ວນປິ່ນປົວປະຊາຊົນລົດຜ່ອນຄວາມເຈັບໄຂ້ໄດ້ພະຍາດໃຫ້ແກ່ປະຊາຊົນ, ຕັ້ງໜ້າປູກຕົ້ນໄມ້ທີ່ເປັນຢາ, ເທດສະໜາລັ້ງສອນປະຊາຊົນ ກ່ຽວກັບສຸຂະອະນາໄມກັນພະຍາດຕ້ານພະຍຸ.

— ເຕົ້າໂຮມເອົາຕຳລາຢາມາກວດສອບໃຫ້ເປັນເອກະພາບກັນ ແລ້ວຈັດພິມອອກເຜີຍແຜ່ຢ່າງກວ້າງຂວາງ ເພື່ອໃຫ້ຫລາຍຄົນໄດ້ຄົ້ນຄວ້ານຳກັນ. ຈັດຕັ້ງໝໍຢາພື້ນເມືອງສົງຂຶ້ນ, ແຕ່ລະປີມີການຈັດສຳມະນາຂຶ້ນສະເພາະໝໍຢາພື້ນເມືອງ

ສົງເພື່ອຖອດຖອນບົດຮຽນນຳກັນ. ປຸງແຕ່ງຢານ້ຳ, ຢາກ້ອນ, ຢານ້ຳມັນ, ຢາຜົງ ຢາແຊ້ວ, ຢາຜົນແລະອື່ນໆໃຫ້ຫລາຍ, ຢູ່ແຕ່ລະວັດໃຫ້ມີຖົງຢາເພື່ອປິ່ນປົວປະຊາຊົນໂດຍບໍ່ຕ້ອງຮຽກຮ້ອງຄຸນຄ່າ.

– ຈັດຕັ້ງກັນຄົ້ນຄວ້າຊອກຫາຕົ້ນໄມ້ທີ່ເປັນຢາ, ເອົາມາປູກໄວ້ໃນວັດຫລືປູກຢູ່ນອກວັດໃຫ້ຫລາຍສະເພາະສິ່ງທີ່ຫາຍາກ ແລະມີລາຄາແພງຫລືວ່າຢູ່ແຂວງໜຶ່ງໆຈະຈັດຕັ້ງໃຫ້ມີສວນປູກຕົ້ນໄມ້ທີ່ເປັນຢາຕ່າງຫາກຍິ່ງເປັນການດີ.

ໂຄສະນາປຸກລະດົມຊຸກຍູ້ປະຊາຊົນ ໃຫ້ຮັກສາອະນາໄມຮ່າງກາຍຂອງຕົນເອງ ການນຸ່ງຖືໃຫ້ສະອາດ, ການກິນດື່ມກໍໃຫ້ສະອາດ, ບ່ອນຢູ່ບ່ອນເຊົາກໍໃຫ້ສະອາດ, ເອົາສັດອອກຈາກໃຕ້ລ່າງເຮືອນ, ປ້ອງກັນການເນົ່າເໝັນຕ່າງໆເຮັດແນວໃດໃຫ້ປະຊາຊົນເຂົ້າໃຈວ່າ ຄວາມສະອາດແມ່ນການມີຊີວິດອັນຜາສຸກຂອງຕົນເອງ ຢູ່ແຕ່ລະວັດຕ້ອງມີຄວາມສະອາດເປັນຕົວຢ່າງອັນດີໃຫ້ແກ່ປະຊາຊົນ.

– ປຸກລະດົມປະຊາຊົນ, ຮ່ວມມືກັບອົງການຈັດຕັ້ງມະຫາຊົນອື່ນໆ ສ້າງໂຮງໝໍຫລືສຸກສາລາຂຶ້ນໃນທ້ອງຖິ່ນທີ່ຍັງບໍ່ທັນມີໂຮງໝໍ ແລະສຸກສາລາ, ພ້ອມກັນນັ້ນ ກໍປຸກລະດົມຂົນຂວາຍປະຊາຊົນໃຫ້ນຳເອົາເຄື່ອງອຸປະກອນ ຮັບໃຊ້ແກ່ໂຮງໝໍທີ່ຂາດເຂີນເປັນຕົ້ນແມ່ນສາດ, ເສື່ອ, ມຸ້ງ, ໝອນແລະອື່ນໆຕາມເງື່ອນໄຂຄວາມສາມາດແຕ່ລະທ້ອງຖິ່ນ.

7) ເປັນແບບຢ່າງໃນການປູກຝັ່ງ.

– ທົດລອງກ້າແກ່ນຫລືປູກເບ້ຽກົກໄມ້ ທີ່ເປັນໝາກອັນມີລົດແຊບນົວຫລືມີໃບອັນເປັນຜັກ ສຳລັບໃຊ້ເປັນສະບຽງອາຫານໃນອ້ອມຂ້າງວັດ ເພື່ອແກ້ໄຂ

ຊີວິດການເປັນຢູ່ຂອງຕົນເອງ.

– ຖ້າຫາກມີກົກໄມ້ຈະນິດໃດຫາກຂຶ້ນດີ ແລະເປັນຜົນແກ່ການດຳລົງຊີວິດຂອງຕົນໄດ້ ກໍໃຫ້ໄປຈັກຊວນອອກຕົນຍາດໂຍມຊາວບ້ານນັ້ນປູກ ແລະຕົນເອງກໍລົງໄປຊ່ວຍປະຊາຊົນປູກໃນບ້ານນັ້ນ ໃຫ້ຫລາຍເພື່ອແກ້ໄຂຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ.

– ເປັນແບບຢ່າງປູກ ແລະຈັກຊວນປະຊາຊົນປູກດອກໄມ້ທີ່ມີສີສັນສວຍງາມເພື່ອປະດັບເອ້ບ້ານຊ່ອງ ແລະເພື່ອໃຊ້ເຂົ້າໃນອັນບຸນສິນກິນທານຕາມປະເພນີທາງພຸດທະສາສະໜາຖ້າມີເງື່ອນໄຂກໍໃຫ້ພະສົງກ້າໄວ້ໃນວັດ ແລ້ວຈັກຊວນປະຊາຊົນເອົາໄປປູກເອງ.

8) ການພົວພັນກັບຕ່າງປະເທດ ຕາມແນວທາງການເມືອງການຕ່າງປະເທດຂອງພັກແລະລັດເຮົາ.

– ຕັ້ງໜ້າສຶກສາອົບຮົມພະສົງສາມະເນນ ແລະປະຊາຊົນບັນດາເຜົ່າໃຫ້ມີຈິດໃຈຮັກຊາດຮັກສັງຄົມນິຍົມຢ່າງແທ້ຈິງ ແລະໃຫ້ມີນ້ຳໃຈສາກົນອັນຜ່ອງໃສ, ສະໜັບສະໜູນແນວທາງການຕ່າງປະເທດຂອງພັກແລະລັດເຮົາ, ຍາດເອົາການຮ່ວມມືຈາກສາກົນ, ຮ່ວມກັບປະຊາຊົນໃນໂລກຕ້ານນະໂຍບາຍກະຫາຍສົງຄາມຂອງພວກຈັກກະພັດແລະປະຕິການສາກົນ, ພ້ອມກັນຕໍ່ສູ້ປົກປັກຮັກສາສັນຕິພາບສະຖຽນລະພາບໃນພາກພື້ນອາຊີອາຄະເນ, ອາຊີ ປາຊີຟິກ ແລະໃນໂລກ.

– ເພີ່ມທະວີ ການຮ່ວມສຳພັນສະໜິດແໜ້ນກັບຊາວພຸດ. ແລະປະຊາຊົນຫວຽດນາມ, ຊາວພຸດແລະປະຊາຊົນກຳປູເຈຍອ້າຍນ້ອງ, ຮ່ວມມືກັນຮອບ

ຕ້ານກັບຊາວໜຸ່ມແລະປະຊາຊົນໂຊວຽດ, ຊາວໜຸ່ມແລະປະຊາຊົນ ມົງໂກນ, ກັບຊາວໜຸ່ມແລະປະຊາຊົນປະເທດຕ່າງໆ ທີ່ຮັກຫອມສັນຕິພາບ, ຮັກຫອມສັນຕິພາບແລະຮັກຄວາມກ້າວໜ້າທາງສັງຄົມ

– ໃນຖານະເປັນສະມາຊິກຊາວໜຸ່ມອາຊີເພື່ອສັນຕິພາບ ຈະຕ້ອງໄດ້ປະຕິບັດທຸກແຜນການຂອງອົງການດັ່ງກ່າວນັ້ນ ແລະພ້ອມກັນນັ້ນກໍເພີ່ມທະວີການຮ່ວມມືກັບບັນດາປະເທດທີ່ເປັນສະມາຊິກ ເພື່ອພ້ອມກັນເຄື່ອນໄຫວວຽກງານຂອງອົງການຊາວໜຸ່ມອາຊີເພື່ອສັນຕິພາບ ໃຫ້ມີປະສິດທິຜົນນັບມື້ນັບສູງຂຶ້ນ.

ຜ່ານກອງປະຊຸມໃຫຍ່ຄັ້ງທີ III

ວຽງຈັນ, ວັນທີ 22/2/89

24/VII
ຫ້າມຈຳໜ່າຍ

ພະອາຈານ ວິຈິດ ສິງຫາລາດ ຄະນະປະຈຳສູນກາງ ອພສ. ລາຍງານກ່ຽວກັບ ກົດລະບຽບ (ສະບັບດັດແປງແກ້ໄຂໃໝ່) ຕໍ່ກອງປະຊຸມໃຫຍ່ຜູ້ແທນສົງທົ່ວ ປະເທດຄັ້ງທີ III.

ກົດລະບຽບ
ຂອງພຸດທະສາສະໜາສຳພັນລາວ
(ສະບັບດັດແປງແກ້ໄຂໃໝ່)

ອີງຕາມກົດລະບຽບຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ເຊິ່ງແມ່ນກອງປະຊຸມໃຫຍ່ຄັ້ງທີ II ໄດ້ຮັບຮອງເອົາແລ້ວ, ໃນຊຸມປີທີ່ຜ່ານມາ ຄະນະກຳມະການສູນກາງ ອພສ. ໄດ້ດຳເນີນການເຄື່ອນໄຫວ ຕາມພາລະບົດບາດຂອງຕົນ, ວຽກງານພຸດທະສາສະໜາ ກໍໄດ້ຮັບການບົ່ມປຸງໃຫ້ດີຂຶ້ນເລື້ອຍໆ.

ພາຍໃຕ້ແສງສະຫວ່າງແຫ່ງມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງ ພັກປະຊາຊົນປະຕິວັດລາວ ໂດຍເຫັນວ່າວຽກງານຂອງພຸດທະສາສະໜາ ໄດ້ປະກອບສ່ວນຢ່າງມີຜົນດີໃຫ້ແກ່ການປະຕິວັດກ້າວຂຶ້ນສັງຄົມນິຍົມ, ພ້ອມກັນນັ້ນກໍໄດ້ເຫັນວ່າ: ບາງເນື້ອໃນກົດລະບຽບຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ບໍ່ສອດຄ່ອງກັບໄລຍະໃໝ່ຂອງການປະຕິວັດອີກແລ້ວ. ດັ່ງນັ້ນ, ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ນີ້ ຈຶ່ງໄດ້ດັດແປງແກ້ໄຂກົດລະບຽບດັ່ງກ່າວ ໂດຍມີເນື້ອໃນລົບຖ້ວນດັ່ງຕໍ່ໄປນີ້:

ໝວດທີໜຶ່ງ
ວ່າດ້ວຍຊື່, ເຄື່ອງໝາຍທີ່ຕັ້ງແລະພາລະບົດບາດ

ມາດຕາ 1: ການຈັດຕັ້ງນີ້ຊື່ວ່າ "ພຸດທະສາສະໜາສຳພັນລາວ" ເອົາແລະຂຽນອັກສອນຫຍໍ້ວ່າ "ພສລ" ມີ ທຳມະຈັກເປັນເຄື່ອງໝາຍ.

ມາດຕາ 2 : ພຸດທະສາສະໜາສຳພັນລາວ ແມ່ນອົງການຈັດຕັ້ງຊາວພຸດລາວ, ມີທີ່ຕັ້ງສູງສຸດພາຍໃນປະເທດຂອງຕົນເອງ, ການເຄື່ອນໄຫວຢູ່ພາຍໃນແລະຕ່າງປະເທດ ແມ່ນຢູ່ໃຕ້ການອຸປະຖຳບຳລຸງໂດຍກົງ ຂອງແນວລາວສ້າງຊາດທີ່ເປັນຂົວຕໍ່ລະຫວ່າງພຸດທະສາສະໜາສຳພັນກັບພັກ, ລັດ ແລະປະຊາຊົນທົ່ວໄປ.

ມາດຕາ 3 : ມີພາລະບົດບາດເຕົ້າໂຮມຄວາມສາມັກຄີ ພະສົງສາມະເນນ ແລະພຸດທະສາສະນິກະຊົນທົ່ວປະເທດ ຮ່ວມມືກັບບັນດາອົງການຈັດຕັ້ງມະຫາຊົນຢູ່ໃນປະເທດ, ສະໜັບສະໜູນແນວທາງນະໂຍບາຍຂອງພັກ ປະຊາຊົນປະຕິວັດລາວ ແລະລັດຖະບານສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແນໃສ່ຊີ້ນຳໆພາວຽກງານດ້ານພຸດທະສາສະໜາລາວ ໃຫ້ເດີນຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ.

ໝວດທີສອງ

ວ່າດ້ວຍສະມາຊິກ, ສິດແລະໜ້າທີ່ຂອງສະມາຊິກ

ມາດຕາ 4 : ພິກຂຸ, ສາມະເນນ, ພໍ່ຂາວ, ແມ່ຂາວ ທີ່ເຫັນດີນຳກົດລະບຽບແລະໂຄງການດຳເນີນງານຂອງພຸດທະສາສະໜາສຳພັນລາວ ລ້ວນແຕ່ເຂົ້າເປັນສະມາຊິກຂອງອົງການຈັດຕັ້ງນີ້ໄດ້.

4 – 1 : ບຸກຄົນບວດເປັນພິກຂຸ, ສາມະເນນ, ພໍ່ຂາວ, ແມ່ຂາວ ຢູ່ວັດໃດໃຫ້ຄະນະປົກຄອງວັດນັ້ນຈົດເຂົ້າສຳມະໂນແລະຖືວ່າ ເປັນສະມາຊິກຂອງວັດນັ້ນ ແຕ່ຕ້ອງລາຍງານໃຫ້ຂັ້ນເທິງຂອງຕົນຊາບນຳ.

4.– 2 : ພິກຂຸ, ສາມະເນນ, ພໍ່ຂາວ, ແມ່ຂາວ ທຸກຄົນຕ້ອງມີໃບຢັ້ງຢືນການບວດ, ຈະສຶກຕ້ອງມີໃບອະນຸຍາດ, ຈະຍ້າຍສຳນັກຕ້ອງມີໃບຍົກຍ້າຍ ໂດຍແມ່ນຄະນະ ພສລ. ຂັ້ນຮາກຖານ ເປັນຜູ້ອອກໃຫ້.

4 – 3 : ສະມາຊິກທຸກຄົນຕ້ອງສັງກັດຢູ່ໃນຈຸ–ໜ່ວຍຮາກຖານ ໂດຍບໍ່ມີການຍົກເວັ້ນຕຳແໜ່ງໃດໆ ຕ່ຳພີສັ່ງຂ່າວ ແລະສຶກສາອົບຮົມ ເຊິ່ງກັນແລະກັນ ບົນພື້ນຖານຄວາມສາມັກຄີ, ປະຊາທິປະໄຕ ລະບຽບວິໄນ.

ມາດຕາ 5 : ສະມາຊິກທຸກຄົນມີສິດເຂົ້າຮ່ວມກອງປະຊຸມ, ເປິກສາຫາລື, ສະເໜີຄວາມເຫັນເລືອກຕັ້ງ, ສະໝັກຮັບເລືອກຕັ້ງລົງຄະແນນສຽງໃນກອງປະຊຸມຂັ້ນຂອງຕົນ, ທັງມີສິດໄດ້ຮັບຜົນປະໂຫຍດເທົ່າທຽມກັນ.

ມາດຕາ 6 : ສະມາຊິກທຸກຄົນມີໜ້າທີ່ພື້ນຖານດັ່ງນີ້:

6 – 1 : ປົກປັກຮັກສາພຸດທະສາສະໜາ: ຮຽນສູດ, ຮຽນເທດ, ຮຽນທຳມະວິໄນ ຄົ້ນຄວ້າຫລັກຄຳສັ່ງສອນຂອງພະພຸດທະເຈົ້າ, ຊຳລະສະສາງຮີດຄອງທີ່ບໍ່ຖືກຕ້ອງ, ຮັກສາຮີດຄອງ ປະເພນີທີ່ດີງາມ.

6 – 2 : ປະກອບສ່ວນປົກປັກຮັກສາສັງຄົມລາວ; ເທດສະໜາສັ່ງສອນປະຊາຊົນໃຫ້ປະລະສັງຄົມເຊື່ອມຊາມ, ປະລະອະບາຍຍະມຸກ,ເຮັດໃຫ້ທົ່ວສັງຄົມມີສິນທຳບໍລິສຸດ ມີຄວາມສະເໝີພາບກັນ.

6 – 3: ວຽກງານການສຶກສາ: ປະກອບສ່ວນລົບລ້າງໄພກີກໜັງສື, ບຳລຸງວັດທະນະທຳ, ຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ປະຊາຊົນແລະຕົນເອງໃຫ້ສູງຂຶ້ນເລື້ອຍໆ.

6 – 4 : ວຽກງານສາທາລະນະສຸກ; ປະກອບສ່ວນຢ່າງຕັ້ງໜ້າ ຄົ້ນຄວ້າປຸງແຕ່ງຢາພື້ນເມືອງໃຫ້ໄດ້ຫລາຍ ແລະດີ, ປິ່ນປົວປະຊາຊົນດ້ວຍເມດຕາທຳ, ປູກຕົ້ນໄມ້ທີ່ເປັນຢາໃຫ້ໄດ້ຫລາຍ, ສັ່ງສອນປະຊາຊົນ ໃຫ້ຮູ້ຮັກສາອະນາໄມກັນພະຍາດ.

6 – 5 : ວຽກ ເສດຖະກິດ; ປູກຕົ້ນໄມ້ກິນໝາກໃສ່ດິນວັດ; ປູກຕົ້ນໄມ້ໃຫ້ເປັນປ່າໃນບ່ອນທີ່ມີເງື່ອນໄຂ, ເພາະປູກແນວພັນຜົນລະໄມ້ໃນວັດໃຫ້ຫລາຍເພື່ອແຈກຢາຍປະຊາຊົນ.

6 – 6 : ປະຕິບັດທຸກມະຕິຄຳສັ່ງຂອງຂັ້ນເທິງ; ປະຕິບັດກົດລະບຽບແລະໂຄງການດຳເນີນງານຂອງ ພສລ. ຢ່າງເປັນປະຈຳ.

ໝວດທີສາມ

ວ່າດ້ວຍໂຄງປະກອບແລະສາຍໄຍການຈັດຕັ້ງ

ມາດຕາ 7 : ພສລ. ຈັດຕັ້ງຕາມຫລັກການລວມສູນປະຊາທິປະໄຕ; ນຳພາເປັນຄະນະຮັບຜິດຊອບເປັນບຸກຄົນ, ບຸກຄົນຂຶ້ນກັບການຈັດຕັ້ງ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫລາຍ, ຂັ້ນລຸ່ມ ຂຶ້ນກັບຂັ້ນເທິງ, ທັງໝົດຂຶ້ນກັບກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ. ກອງປະຊຸມໃຫຍ່ຜູ້ແທນສົງ ແຕ່ລະຂັ້ນເລືອກເອົາຄະນະບໍລິຫານງານຂັ້ນຂອງຕົນ ດ້ວຍການປ່ອນບັດລັບເລືອກ.

ມາດຕາ 8 : ພສລ. ມີສາຍໄຍການຈັດຕັ້ງເປັນ 5 ຂັ້ນຄື: (1) ຂັ້ນສູນກາງ (2) ຂັ້ນແຂວງ ຫລື ກຳແພງນະຄອນ (3) ຂັ້ນເມືອງ ຫລື ເທດສະບານເມືອງ (4) ຂັ້ນໜ່ວຍຮາກຖານ (5) ຂັ້ນວັດຮາກຖານ.

ມາດຕາ 9 : ຢູ່ວັດມີຄະນະປົກຄອງວັດ 1 ຄະນະ, ວັດທີ່ມີພະເນນໜ້ອຍຫລຸດ 5 ອົງ ຈັດຕັ້ງເປັນຈຸດຽວ, ຫລາຍກວ່າ 5 ອົງຂຶ້ນໄປ ຈັດຕັ້ງເປັນຫລາຍຈຸ, ແຕ່ລະຈຸບໍ່ເກີນ 5 ອົງ, ປະຊຸມທົ່ວໄປເດືອນລະເທື່ອ. ປະຊຸມເລືອກຕັ້ງຄະນະປົກຄອງວັດປີລະເທື່ອ, ຄະນະປົກຄອງວັດບໍ່ຫລຸດ 2 ອົງ ບໍ່ເກີນ 3 ອົງ, ໃນນັ້ນເປັນຜູ້ປະຈຳການ 1 ອົງ, ຄະນະປົກຄອງວັດມີໜ້າທີ່ຮັບຜິດຊອບຕໍ່ຂັ້ນເທິງ ແລະ ຊີ້ນຳນຳພາສະມາຊິກພາຍໃນວັດຂອງຕົນປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ, ປະຕິບັດກົດລະບຽບແລະໂຄງການດຳເນີນງານຂອງ ພສລ. ຢ່າງເນື່ອງນິດລຽນຕິດ, ຮັກສາສິສັນຂອງພຸດທະສາສະໜາ ເບິ່ງແຍງຊີວິດການເປັນຢູ່ຂອງສະມາຊິກ.

ມາດຕາ 10 : ຖືເອົາເຂດປົກຄອງຂອງຕາແສງ (ເກົ່າ) ເປັນໜ່ວຍຮາກຖານໜຶ່ງ ຄະນະໜ່ວຍຮາກຖານປະກອບດ້ວຍຜູ້ປະຈຳການແຕ່ລະວັດເປັນຄະນະກຳມະການ, ໃນນັ້ນເປັນຄະນະປະຈຳບໍ່ຫລຸດ 3 ອົງ, ບໍ່ລື່ນ 5 ອົງ. ຜູ້ປະຈຳການພຽງຜູ້ດຽວ, 3 ເດືອນ ປະຊຸມສາມັນເທື່ອໜຶ່ງ, 3 ປີ ປະຊຸມໃຫຍ່ເລືອກຕັ້ງຄະນະໜ່ວຍຮາກຖານເທື່ອໜຶ່ງ. ຄະນະໜ່ວຍຮາກຖານມີໜ້າທີ່ປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ, ຊີ້ນຳ ນຳພາໃກ້ຊິດຕິດແທດກັບວັດ ກັບພະສົງສາມະເນນ ແລະອອກຕົນຍາດໂຍມໃນທົ່ວເຂດຄຸ້ມຄອງຂອງຕົນ. ປຸກລະດົມຂົນຂວາຍພະສົງສາມະເນນ ແລະຍາດໂຍມ ໃຫ້ປະຕິບັດແນວທາງນະໂຍບາຍ ແລະແຜນນະໂຍບາຍຂອງພັກ – ລັດ ໃນແຕ່ລະໄລຍະ.

ມາດຕາ 11 : ເຂດເມືອງ ຫລື ເທດສະບານເມືອງໜຶ່ງ ມີຄະນະກຳມະການ ພສລ. ຄະນະໜຶ່ງ ເຊິ່ງປະກອບດ້ວຍຜູ້ແທນສົງບໍ່ຫລຸດ 7 ອົງ,

ບໍ່ລື່ນ 15 ອົງ, ໃນນັ້ນເປັນຄະນະປະຈຳແຕ່ 3 ເຖິງ 5 ອົງ, ປະກອບດ້ວຍປະທານ 1 ອົງ, ຮອງປະທານ 1 ອົງ, ນອກນັ້ນເປັນຄະນະ ໃນຄະນະປະຈຳນັ້ນ ມີຜູ້ໜຶ່ງເປັນຜູ້ປະຈຳການ, 1 ປີ ປະຊຸມສາມັນເທື່ອໜຶ່ງ, 5 ປີ ປະຊຸມໃຫຍ່ເລືອກຕັ້ງຄະນະກຳມະການ ພສລ. ຂັ້ນເມືອງເທື່ອໜຶ່ງ. ປະຊຸມສາມັນແຕ່ລະເທື່ອແມ່ນສະຫລຸບ, ສັງເກດຕີລາຄາຈຸດດີຈຸດອ່ອນ ຖອດຖອນບົດຮຽນວາງທິດທາງວຽກງານໃນປີຂ້າງໜ້າ.

ມາດຕາ 12: ຄະນະກຳມະການ ພສລ. ຂັ້ນແຂວງ ຫລື ກຳແພງນະຄອນປະກອບດ້ວຍຜູ້ແທນສົງຍ່າງໜ້ອຍ 11 ທ່ານ, ຍ່າງຫລາຍ 22 ທ່ານ, ໃນນັ້ນເປັນຄະນະປະຈຳແຕ່ 3 ເຖິງ 7 ທ່ານ, ປະກອບດ້ວຍປະທານ 1 ທ່ານ, ຮອງປະທານ 1 ທ່ານ, ນອກນັ້ນເປັນຄະນະ, ໃນຄະນະປະຈຳນັ້ນມີ 1 ທ່ານ, ເປັນຜູ້ປະຈຳການ, 1 ປີໃດ ປະຊຸມສາມັນເທື່ອໜຶ່ງ ເພື່ອສະຫລຸບວຽກງານ 1 ປີຜ່ານມາ ແລະວາງທິດທາງໜ້າທີ່ 1 ປີຂ້າງໜ້າ. 5 ປີ ເປີດປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດເທື່ອໜຶ່ງ ສະຫລຸບວຽກງານ 5 ປີຜ່ານມາ. ວາງທິດທາງໜ້າທີ່ຕໍ່ໄປ, ເລືອກຕັ້ງຄະນະກຳມະການ ພສລ. ແຂວງ ຫລື ກຳແພງນະຄອນຊຸດໃໝ່ ແລະຄັດເລືອກຜູ້ແທນໄປຮ່ວມກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດທີ່ສູນກາງ.

ມາດຕາ 13: ຄະນະບໍລິຫານງານສູນກາງ ພສລ. ປະກອບດ້ວຍຕົວແທນສົງທົ່ວປະເທດຍ່າງໜ້ອຍ 25 ທ່ານ, ຍ່າງຫລາຍ 45 ທ່ານ ໃນນັ້ນເປັນຄະນະປະຈຳ 9 ທ່ານ, ປະກອບດ້ວຍປະທານ 1 ທ່ານ, ຮອງປະທານແຕ່ 1 ເຖິງ 3 ທ່ານ, ນອກນັ້ນເປັນຄະນະປະຈຳ ໃນນັ້ນມີໜຶ່ງທ່ານເປັນຜູ້ປະຈຳການ, ປະຊຸມສາມັນປີລະໜຶ່ງເທື່ອ, 5 ປີ ເປີດກອງປະຊຸມໃຫຍ່ຜູ້ແທນສົງທົ່ວ

ປະເທດເທື່ອໜຶ່ງ ເພື່ອເລືອກຕັ້ງຄະນະບໍລິຫານງານສູນກາງ ພສລ. ຊຸດໃໝ່.

13–1: ຄະນະບໍລິຫານງານສູນກາງ ພສລ. ມີໜ້າທີ່ບໍລິຫານກິດຈະການພຸດທະສາສະໜາທົ່ວປະເທດ. ປະສານສົມທົບກັບສູນກາງແນວລາວສ້າງຊາດ, ວາງວິທີການລະອຽດຊີ້ນຳໆພາວຽກງານດ້ານພຸດທະສາສະໜາ ໃຫ້ກົມກຽວກັນກັບແນວທາງນະໂຍບາຍຂອງພັກ ແລະແຜນນະໂຍບາຍຂອງລັດ.

13–2: ກອງປະຊຸມສາມັນປະຈຳປີ ຂອງຄະນະບໍລິຫານງານສູນກາງ ພ.ສ.ລ. ນອກຈາກສະຫລຸບວຽກງານປະຈຳປີ ແລະວາງແຜນການ 1 ປີ ຂ້າງໜ້າແລ້ວ, ຍັງມີໜ້າທີ່ຄົ້ນຄວ້າຣັບຮອງເອົາບັນດາມະຕິຕົກລົງ, ຄຳສັ່ງແນະນຳ ແລະຂໍ້ກຳນົດກົດລະບຽບຕ່າງໆຂອງສົງອີກດ້ວຍ.

13–3: ຄະນະປະຈຳສູນກາງ ພ.ສ.ລ. ມີສິດແຕ່ງຕັ້ງຄະນະວິໄນທອນຂັ້ນສູນກາງຂຶ້ນ 1 ຄະນະ ບໍ່ເກີນ 5 ອົງ, ເພື່ອຊຳລະອະທິກອນທີ່ເກີດຂຶ້ນໃນວົງການຄະນະສົງ.

ມາດຕາ 14: ຖ້າມີຄວາມຈຳເປັນ, ຄະນະກຳມະການ ພ.ສ.ລ. ແຕ່ລະຂັ້ນຈະເປີດປະຊຸມວິສາມັນ (ພິເສດ) ກໍໄດ້. ໃນກໍລະນີຄະນະປະຈຳ ພ.ສ.ລ. ຂັ້ນໃດໜຶ່ງຂາດລົງໝົດຄະນະ ໃຫ້ຄະນະປະຈຳ ພ.ສ.ລ. ຂັ້ນເທິງຖັດນັ້ນເປັນຜູ້ຣັກສາການແທນ ຫລືບົ່ງຕົວໃຫ້ຜູ້ໃດຜູ້ໜຶ່ງຣັກສາການແທນກໍໄດ້. ຄະນະປະຈຳ ພ.ສ.ລ. ຂັ້ນເມືອງ ຫລື ເທດສະບານເມືອງ ແລະ ຂັ້ນແຂວງ ຫລືກຳແພງນະຄອນ ສາມາດປະກອບພະນັກງານສົງ ເຂົ້າຊ່ວຍວຽກໄດ້ແຕ່ 1 ເຖິງ 3 ຕົນ. ສະເພາະຄະນະປະຈຳສູນກາງ ພ.ສ.ລ. ຈະປະກອບພະນັກງານເຂົ້າຊ່ວຍແຕ່ 3 ເຖິງ 5 ຕົນກໍໄດ້.

ມາດຕາ 15: ພະເຖລະອາວຸໂສ ທີ່ມີອາຍຸພັນສາແກ່, ມີອິດທິພົນສູງ ມີທັດສະນະຫລັກໝັ້ນດີ ເປັນທີ່ເຄົາລົບນັບຖືຂອງຄົນທັງຫລາຍ ແຕ່ບໍ່ສາມາດ

ເຮັດວຽກບໍລິຫານສົງເປັນປົກກະຕິໄດ້ ໃຫ້ແຕ່ງຕັ້ງເປັນປະທານກິດຕິມະສັກ ຫລືເປັນທີ່ປຶກສາຂອງຄະນະກຳມະການ ພ.ສ.ລ. ຂັ້ນຕ່າງໆ ຕາມຄວາມເໝາະສົມ ແລະຖືກນິມົນເຂົ້າຮ່ວມກອງປະຊຸມ ທີ່ມີຄວາມສຳຄັນ.

ໝວດທີ ສີ່
ວ່າດ້ວຍພຸດທະສາສະໜາສົມບັດ

ມາດຕາ 16: ແຫລ່ງທີ່ມາແຫ່ງພຸດທະສາສະໜາສົມບັດມີດັ່ງນີ້:

16–1: ໄດ້ຈາກການອຸດໜູນຂອງລັດຖະບານ.

16–2: ໄດ້ມາຈາກການອຸດໜູນຂອງສາຍການຈັດຕັ້ງຂອງຕົນເອງ.

16–3: ໄດ້ມາຈາກບຸກຄົນ ທີ່ເຫລື້ອມໃສສັດທາ ໃນອົງການຈັດຕັ້ງ ພ.ສ.ລ.

16–4: ໄດ້ມາຈາກການບໍລິຈາກທານທົ່ວໄປຂອງປະຊາຊົນ ໃນເທສະການບຸນສົມກົນທານຕ່າງໆ.

ມາດຕາ 17: ການນຳໃຊ້ພຸດທະສາສະໜາສົບບັດ ຕ້ອງເປັນໄປຕາມເຈຕະນາລົມຂອງເຈົ້າສັດທາ ໂດຍຈັດປະເພດຂອງຊັບສົມບັດເປັນດັ່ງນີ້:

17–1: ຊັບສົມບັດທີ່ຍາດໂຍມເຄນໃຫ້ສ່ວນບຸກຄົນແມ່ນບຸກຄົນນຳໃຊ້ໂດຍຊອບທຳ.

17–2: ຊັບສົມບັດທີ່ຍາດໂຍມເຄນເປັນສ່ວນລວມ ຂອງສົງວັດໃດໃຫ້ສົງວັດນັ້ນທຳການແຈກແບ່ງຕາມຄວາມເໝາະສົມ ແລະ ຖືກຕ້ອງຕາມວິໄນສົງ.

17–3: ຊັບສົມບັດທີ່ຍາດໂຍມເຄນເປັນຂອງສ່ວນລວມເພື່ອສ້າງສາ ຫລືປົວແປງວັດໃດ ໃຫ້ພະສົງໃນວັດນັ້ນພ້ອມດ້ວຍຍາດໂຍມໃນບ້ານນັ້ນປົກປັກຮັກສາ ແລະ ນຳໄປສ້າງສາ ຫລືປົວແປງວັດນັ້ນ.

17–4: ຊັບສົມບັດໃດທີ່ມີຄົນທັງຫລາຍນຳໄປບູຊາພະທາດເຈດີ, ປູຊະນີຍະສະຖານວັດຖຸບູຮານຕ່າງໆ ທີ່ຄົນທັງຫລາຍເຊື່ອຖືວ່າ ເປັນສິ່ງສັກສິດຂຶ້ນຢູ່ກັບວັດໃດກໍຕາມ, ຊັບສົມບັດນັ້ນແມ່ນຊັບສົມບັດລວມຂອງພຸດທະສາສະໜາ, ຢູ່ພາຍໃຕ້ການດູແລໃກ້ຊິດຂອງຄະນະ ພສລ. ຂັ້ນເມືອງ. 3 ເດືອນໃດ, ຄະນະ ພສລ. ເມືອງ ຕ້ອງລົງໄປສົມທົບກັບຄະນະປົກຄອງວັດ ແລະ ຍາດໂຍມໃນບ້ານນັ້ນ ເພື່ອພ້ອມກັນກວດກາຂຶ້ນບັນຊີ, ເກັບມ້ຽນໄວ້ນຳທະນາຄານທີ່ຢູ່ໃກ້, ເຮັດເປັນ 3 ບັນຊີເອກະພາບ, ສະບັບໜຶ່ງ ສົ່ງໃຫ້ຄະນະປະຈຳສູນກາງ ພສລ. ສະບັບໜຶ່ງຄະນະ ພສລ. ເມືອງເກັບມ້ຽນ ແລະອີກສະບັບໜຶ່ງ ຄະນະປົກຄອງວັດເກັບມ້ຽນ. ການໃຊ້ຈ່າຍຊັບສົມບັດດັ່ງກ່າວ ຕ້ອງຂໍຄວາມເຫັນຈາກຄະນະປະຈຳສູນກາງ ພສລ.

ໝວດທີ ຫ້າ
ວ່າດ້ວຍເງິນບຳລຸງແລະສະຫວັດດີການ

ມາດຕາ 18: ເງິນຂອງລັດຖະບານກໍດີ ເງິນບຸກຄົນ ຫລືນິຕິບຸກຄົນກໍດີບຳລຸງໃຫ້ແກ່ ພ.ສ.ລ. ຂັ້ນໃດ ແມ່ນ ພສລ. ຂັ້ນນັ້ນຈົ່ງໃຊ້ຕາມລະບຽບການແລະຕາມຫລັກການຂອງການເງິນ, ສາມາດໃຊ້ຈ່າຍຊື້ເຄື່ອງໃຊ້ໃນຫ້ອງການ, ໃຊ້ຈ່າຍອຽກບໍລິຫານ ແລະບຳລຸງຄະນະປະຈຳ ເປັນແຕ່ລະເດືອນຫລືແຕ່ລະງວດ ຫລື ແຕ່ລະປີ.

ມາດຕາ 19: ເງິນສະມາຊິກ ແລະ ພຸດທະສາສະນິກະຊົນໃນແຕ່ລະວັດ ບຳລຸງ ພ.ສ.ລ. ແຕ່ລະໄຕມາດນັ້ນ, ຄະນະປົກຄອງວັດແບ່ງໄວ້ວັດ 10%, ເຫລືອນັ້ນສົ່ງໃຫ້ຄະນະໜ່ວຍຮາກຖານ ເພື່ອນຳສົ່ງຄະນະ ພ.ສ.ລ. ຂັ້ນເມືອງ. ພ.ສ.ລ. ຂັ້ນເມືອງ ແບ່ງໄວ້ 15%, ເຫລືອນັ້ນສົ່ງໃຫ້ຄະນະ ພ.ສ.ລ. ຂັ້ນແຂວງ ຫລືກຳແພງນະຄອນແບ່ງໄວ້ 25%, ເຫລືອນັ້ນສົ່ງໃຫ້ຄະນະບໍລິຫານສູນກາງ ພສລ. ເງິນລາຍນີ້ ໃຊ້ທາງສະຫວັດດີການ.

ມາດຕາ 20: ຄະນະກຳມະການ ພ.ສ.ລ. ຜູ້ໃດ, ຂັ້ນໃດຖືກໄພພິບັດເຊັ່ນ: ເຖິງແກ່ມໍລະນະພາບ ຖືກເຈັບດ້ວຍອຸປະຕິເຫດ ຫລືເຈັບປ່ວຍດ້ວຍພະຍາດ ຍ່ອມໄດ້ຮັບການປະຕິບັດນະໂຍບາຍຢ່າງດີ, ຄະນະ ພສລ. ຂັ້ນວັດ ແລະຂັ້ນພ່ອຍຮາກຖານຖືກໄພພິບັດ ແມ່ນຄະນະ ພ.ສ.ລ. ຂັ້ນເມືອງເປັນເຈົ້າການປະຕິບັດນະໂຍບາຍ, ຄະນະ ພ.ສ.ລ. ຂັ້ນເມືອງຖືກໄພພິບັດ ແມ່ນຄະນະ ພ ສ.ລ. ຂັ້ນແຂວງ ຫລືກຳແພງນະຄອນ ເປັນເຈົ້າການປະຕິບັດນະໂຍບາຍ, ຄະນະ ພ.ສ.ລ. ຂັ້ນແຂວງ ຫລື ກຳແພງນະຄອນ ຖືກໄພພິບັດ ແມ່ນຄະນະບໍລິຫານງານສູນກາງ ພ.ສ.ລ. ເປັນເຈົ້າການປະຕິບັດນະໂຍບາຍ. ການປະຕິບັດນະໂຍບາຍດ້ານວັດຖຸແມ່ນອີງໃສ່ເງື່ອນໄຂປັດໄຈຄວາມສາມາດຂອງແຕ່ລະຂັ້ນເປັນຕົ້ນຕໍ, ການປະຕິບັດນະໂຍບາຍດ້ານຈິດໃຈກໍຖືເປັນສຳຄັນ.

ໝວດທີ ຫົກ: ບົດພິເສດ

ມາດຕາ 21: ກົດລະບຽບສະບັບນີ້ ມີຜົນສັກສິດນັບແຕ່ມື້ຜ່ານກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ວັນທີ 22 ເດືອນ ກຸມພາ 1989 ເປັນຕົ້ນໄປ. ການດັດແປງແກ້ໄຂເພີ່ມເຕີມກົດລະບຽບນີ້ ມີແຕ່ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດເທົ່ານັ້ນຈຶ່ງກະທຳໄດ້.

ມາດຕາ 22: ອີງໃສ່ກົດລະບຽບນີ້ເປັນພື້ນຖານ, ກອງປະຊຸມຄົບຄະນະບໍລິຫານງານສູນກາງ ພ.ສ.ລ. ສາມາດມີມະຕິຕົກລົງ ວາງຂໍ້ກຳນົດລະບຽບຕ່າງໆ ເພື່ອຊີ້ນຳນຳພາວຽກງານຕ່າງໆ ດ້ານພຸດທະສາສະໜາ ໃຫ້ເດີນແນ່ນແລ່ນສະດວກໃນແຕ່ລະໄລຍະຂອງການປະຕິວັດ ໂດຍຍຶດໝັ້ນທຳມະວິໄນເປັນພື້ນຖານ.

ຜ່ານກອງປະຊຸມໃຫຍ່ ຄັ້ງທີ III

ວຽງຈັນ, ວັນທີ 22/2/1989.



ພະອາຈານ ຈະລູນ ອະຊິລະລັງສີ ຄະນະປະຈຳສູນກາງ ອພສ. ລາຍງານກ່ຽວ ກັບມະຕິແຕ່ງຕັ້ງຄະນະກຳມະການສູນກາງ ພສລ. ຊຸດທີ III. ຄັ້ງວັນທີ

22–23/2/1989.

ມະຕິແຕ່ງຕັ້ງຄະນະກຳມະການສູນກາງ ພຸດທະສາສະໜາ ສຳພັນລາວ ຊຸດທີ III ຄັ້ງວັນທີ 22–23 ກຸມພາ 1989

ພາຍຫລັງການເປີກສາຫາລືຢ່າງກວ້າງຂວາງ ກ່ຽວກັບໂຄງປະກອບການຈັດຕັ້ງຂັ້ນສູນກາງ ແລະ ມາດຖານຂອງບຸກຄົນຜູ້ທີ່ຈະປະກອບເຂົ້າເປັນກຳມະການສູນກາງ ພສລ. ຊຸດໃໝ່, ບັນດາຜູ້ແທນສົງໄດ້ຮັບຮູ້ ເປັນເອກະພາບກັນວ່າ: ເພື່ອເຮັດທິດທາງພ້າທີ່ວຽກງານ ແລະ ບັນດາມະຕິທີ່ກອງປະຊຸມໃຫຍ່ວາງອອກໃນຄັ້ງນີ້ນັ້ນ, ມີຄວາມຈຳເປັນຕ້ອງປັບປຸງການຈັດຕັ້ງຂັ້ນສູນກາງ ພສລ. ໃຫ້ມີຄວາມສາມາດພຽງພໍໃນການປະຕິບັດພາລະບົດບາດຂອງຕົນ, ດັ່ງນັ້ນບັນດາຜູ້ແທນສົງຈຶ່ງເປັນເອກະສັນກັນຄັດເລືອກເອົາພະເຖລານຸເຖລະ ມີຄວາມສາມາດແລະຄຸນສົມບັດດີເດັ່ນ ໃຫ້ເປັນຜູ້ບໍລິຫານວຽກງານພຸດທະສາສະໜາສຳພັນລາວ ນັບແຕ່ກອງປະຊຸມໃຫຍ່ຄັ້ງນີ້ໄປເຖິງກອງປະຊຸມໃຫຍ່ຄັ້ງໜ້າ, ໂດຍຈັດເປັນຄະນະກຳມະການດັ່ງລຸ່ມນີ້ :

ກ)– ຄະນະກຳມະການກິດຕິມະສັກສູນກາງ ພສລ. ປະກອບດ້ວຍ:

1) ພະອາຈານ ບົວດຳ ວໍລະເພັດ ປະທານກິດຕິມະສັກ

2) ພະອາຈານ ປີຊາ ສຸທຳມະໂກສານ ຮອງປະທານກິດຕິມະສັກ

3) ພະອາຈານ ບໍ່ອງ ເກສາໂລ ຄະນະກຳມະການກິດຕິມະສັກ

4) ພະອາຈານ ອ່ອນ ເຕຍບົນ້ອາ ຄະນະກຳມະການກິດຕິມະສັກ.

ຂ)– ຄະນະກຳມະການສູນກາງ ພສລ. ປະກອບດ້ວຍ:

1) ພະອາຈານ ທອງດູນ ອະມັນຕະສູນທອນ	ກຳແພງນະຄອນ
2) ພະອາຈານ ຜ່ອງ ສະມາເລີກ	–"–
3) ພະອາຈານ ວິຈິດ ສິງຫາລາດ	–"–
4) ພະອາຈານ ຊາລີ ກັນຕະສີໂລ	–"–
5) ພະອາຈານ ສີທົນ ວິສິດຖະທຳໂມ	–"–
6) ພະອາຈານ ນອນຕາ ລັດຖະສຳພັນ	–"–
7) ພະອາຈານ ກຽນຕາ ລັດຖະຈັກ	–"–
8) ພະອາຈານ ບົວຄຳ ສາລີບຸດ	–"–
9) ພະອາຈານ ຈະລູນ ອະຊິລະລັງສີ	–"–
10) ພະອາຈານ ກ້າວ ພຸດທະວົງ	–"–
11) ພະອາຈານ ຄຳແດງ ອຸໄທວົງ	–"–
12) ພະອາຈານ ຄຳດີ ເສດຖາທຳໂມ	–"–
13) ພະອາຈານ ຄຳແດງ ດວງມະນີວົງ	–"–
14) ພະອາຈານ ສີຍາ ຂຸນເດດ	–"–
15) ພະອາຈານ ຄຳເພົາ ດວງດາລາ	ແຂວງວຽງຈັນ
16) ພະອາຈານ ສາຍສະໝອນ ເທບສະໂມສອນ	–"–
17) ພະອາຈານ ທອງດູນ ຄຳແດງ	–"–
18) ພະອາຈານ ທອງພອນ ໄຊຍະສິດ	ແຂວງຫົວພັນ

19) ພະອາຈານ ຄຳດີ ຈັນທະດາພອນ	ແຂວງຊຽງຂວາງ
20) ພະອາຈານ ບຸນເພັງ ກຸນສະຫວັດ	ແຂວງຜົ້ງສາລີ
21) ພະອາຈານ ທອງພັນ ຖິລະຈິດໂຕ	ແຂວງອຸດົມໄຊ
22) ພະອາຈານ ກັນທາ ອິນທະບໍ່ນໂຍ	—″—
23) ພະອາຈານ ຄຳເດືອ ວິໄລວອນ	ແຂວງຫລວງນ້າທາ
24) ພະອາຈານ ສີພູມ ແກ້ວພິທູນ	ແຂວງບໍ່ແກ້ວ
25) ພະອາຈານ ຄຳໝັ້ນ ສີລິແພງພັນ	—″—
26) ພະອາຈານ ບຸນເພັງ ແກ້ວມະນີວົງ	ແຂວງໄຊຍະບຸລີ
27) ພະອາຈານ ຄຳຈັນ ວິລະຈິດໂຕ	ແຂວງຫລວງພະບາງ
28) ພະອາຈານ ບຸນຈັນ ແກ້ວໂພທິຈິດໂຕ	—″—
29) ພະອາຈານ ອ່ອນຕາ ແກ້ວບໍ່ມຍາ	—″—
30) ພະອາຈານ ສີ ແກ້ວອາສາ	ແຂວງບໍລິຄຳໄຊ
31) ພະອາຈານ ບົວໄຂ ຈັນທະວົງ	ແຂວງຄຳມ່ວນ
32) ພະອາຈານ ຄຳຈັນ ອິນທະວົງ	—″—
33) ຍາທ່ານອາດ ສຸພັດໂທ	ແຂວງສະຫວັນນະເຂດ
34) ພະອາຈານ ງອນ ດຳລົງບຸນ	—″—
35) ພະອາຈານ ບຸນບໍ່ນ ມີລະພັນ	—″—
36) ພະອາຈານ ສົມສີ ແກ້ວຂຽວ	ແຂວງຈຳປາສັກ
37) ພະອາຈານ ຄຳໝັ້ນ ວໍລະຈິດ	—″—

38) ພະອາຈານ ບຸນທອງ ວິປະໄຊ -"-

39) ພະອາຈານ ສຸລົດ ດ່ານຂົ້ນຍາ ແຂວງສາລະວັນ

40) ພະອາຈານ ດຳເປ ຈັນທະຈອນ -"-

41) ພະອາຈານ ສົມບູນ ໄຊເສນາ ແຂວງອັດຕະປື

42) ພະອາຈານ ດຳເອີນ ຈັນດາວົງ ແຂວງເຊກອງ.

ຄ)- ຄະນະກຳມະການປະຈຳສູນກາງ ພສລ. ປະກອບດ້ວຍ:

1) ພະອາຈານ ທອງດູນ ອະມັນຕະສຸນທອນ ປະທານ

2) ພະອາຈານ ຜ່ອງ ສະມາເລີກ ຮອງປະທານ

3) ພະອາຈານ ວິຈິດ ສິງຫາລາດ -"-

4) ພະອາຈານ ຊາລີ ກັນຕະສີໂລ -"-

5) ພະອາຈານ ສີທົນ ວິສິດຖະທຳໂມ ກຳມະການປະຈຳ

6) ພະອາຈານ ນອນຕາ ລັດຖະສຳພັນ -"-

7) ພະອາຈານ ກຽນຕາ ລັດຖະຈັກ -"-

8) ພະອາຈານ ບົວດຳ ສາລີບຸດ -"-

9) ພະອາຈານ ຈະລູນ ອະຊິລະລັງສີ -"-

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດເທື່ອທີ III

ວຽງຈັນ, ວັນທີ 23/2/1989.



ພະອາຈານ ບົວຄຳ ສາລິບຸດ ຄະນະປະຈຳສູນກາງ ອພສ. ຜ່ານຄຳຮຽກຮ້ອງ
ຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III

ຄຳຮຽກຮ້ອງຂອງກອງປະຊຸມໃຫຍ່ ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງພຸດທະສາສະໜາສຳພັນລາວ

ເຖິງ ພະສົງສາມະເນນ ແລະ ພຸດທະສາສະນິກະຊົນ ບັນດາເຜົ່າໃນທົ່ວປະເທດ.

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ທີ່ດຳເນີນຢູ່ນະຄອນຫລວງວຽງຈັນ ແຕ່ວັນ 22 ເຖິງວັນທີ 23 ກຸມພາ 1989 ໄດ້ສຳເລັດຜົນຢ່າງສະຫງ່າງາມ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຮູ້ຢ່າງເລິກເຊິ່ງວ່າ: ໃນ 10 ກວ່າປີຜ່ານມາ, ພາຍໃຕ້ແສງສະຫວ່າງແຫ່ງບັນດາມະຕິຂອງສູນກາງພັກ ແລະ ບັນດາແຜນນະໂຍບາຍຂອງລັດຖະບານ, ໂດຍປະຕິບັດຕາມໂຄງການດຳເນີນງານ ແລະບັນດາມະຕິຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ, ວຽກງານດ້ານພຸດທະສາສະໜາໃນລາວ ໄດ້ມີບາດກ້າວຂະຫຍາຍຕົວໃໝ່ທັງດ້ານປະລິມານແລະຄຸນນະພາບ ພະສົງສາມະເນນ ແລະພຸດທະສາສະນິກະຊົນ ບັນດາເຜົ່າໃນທົ່ວປະເທດ ໄດ້ຕື່ນຕົວທາງສິນທຳແລະການເມືອງ ໃນລະດັບໃໝ່ແລະກໍໄດ້ສ້າງຜົນງານປະກອບສ່ວນສຳຄັນເຂົ້າໃນພາລະກິດປະຕິວັດກ້າວຂຶ້ນສັງຄົມນິຍົມ ຈຶ່ງເປັນໜ້າພາກພູມໃຈໃນຍຸກສະໄໝຂອງພວກເຮົາ. ສິ່ງທີ່ພວກເຮົາເອກອ້າງທະນົງໃຈທີ່ສຸດ ແມ່ນວຽກງານດ້ານພຸດທະສາສະໜາ ໄດ້ກ້າວໄປຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ ຕາມອຸດົມການທີ່ວ່າ: ພຸດທະສາສະໜາ ບໍ່ຕັດແຍກອອກຈາກປະເທດຊາດ, ພະສົງສາມະເນນບໍ່ຕັດແຍກອອກຈາກປະຊາຊົນພົນລະເມືອງລາວ. ກອງປະຊຸມໃຫຍ່ຄັ້ງນີ້, ຂໍຊົມເຊີຍ ແລະ ຍ້ອງຍໍສັນລະເສີນຜົນງານປີຜ່ານມາ ຂອງພະສົງສາມະເນນ ແລະພຸດທະ-

ສາສະນິກະຊົນບັນດາເຜົ່າໃນທົ່ວປະເທດ ທີ່ໄດ້ປະກອບສ່ວນໃນພາລະກິດປົກປັກຮັກສາແລະກໍ່ສ້າງປະເທດຊາດ ສັງຄົມນິຍົມ ເຮັດໃຫ້ປະຊາຊົນບັນດາເຜົ່າ ມີຄວາມຢູ່ດີກິນດີ ແລະມີສິນທຳປະຈຳໃຈນັບມື້ນັບສູງ.

ກອງປະຊຸມໃຫຍ່ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈຢ່າງສູງຕໍ່ພະສົງ ແລະ ພຸດທະສາສະນິກະຊົນ ຫວຽດນາມ, ກຳປູເຈຍ, ໂຊວຽດ, ມົງໂກລີ, ໄທ, ບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ, ບັນດາປະເທດເພື່ອນມິດ ແລະ ຕໍ່ອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອແກ່ພະສົງສາມະເນນ ແລະພຸດທະສາສະນິກະຊົນລາວ ບັນດາເຜົ່າ ຂອງພວກເຮົາໃນໄລຍະທີ່ຜ່ານມານັ້ນດ້ວຍ.

ເຖິງວ່າໄລຍະຜ່ານມາ ວຽກງານດ້ານພຸດທະສາສະໜາໃນປະເທດເຮົາໄດ້ຮັບໝາກຜົນ, ເດີນແນ່ນແລ່ນສະດວກ, ພະສົງສາມະເນນແລະພຸດທະສາສະນິກະຊົນບັນດາເຜົ່າ ໄດ້ສາມັກຄີເປັນປຶກແຜ່ນແໜ້ນໜາ, ໄດ້ສ້າງຜົນງານປະກອບສ່ວນເປັນໜ້າພາກພູມໃຈຢ່າງຫລວງຫລາຍ, ແຕ່ພ້ອມກັນນັ້ນ ພວກເຮົາຍັງມີຂໍ້ຫຍຸ້ງຍາກທັງໃນໂຕແລະນອກໂຕ, ຍັງມີຂໍ້ຄົງຄ້າງຫລາຍປະການ; ໃນໂຕຂອງພວກເຮົາແມ່ນລະດັບຄວາມຕື່ນຕົວ ແລະ ຄວາມຮັບຮູ້ທາງດ້ານສິນທຳ ແລະ ການເມືອງຍັງຕ່ຳ, ລະດັບຄວາມສາມາດໃນການໝູນໃຊ້ສິນທຳປະສານສົມທົບເຂົ້າໃສ່ແນວທາງການເມືອງຍັງບໍ່ທັນຄ່ອງແຄ້ວ, ການນຳໃຊ້ທິດສະດີສິນທຳແລະການເມືອງເຂົ້າໃນພຶດຕິກຳຕົວຈິງ ກໍຍັງບໍ່ທັນຄ່ອງແຄ້ວປານໃດ. ນອກນີ້ ສັດຕູຂອງຊາດກໍຍັງບໍ່ປະລະເລ່ກົນ ຫວັງຢາກມ້າງເພທຳລາຍຄວາມສາມັກຄີພາຍໃນຊາດຂອງພວກເຮົາ, ພວກເຂົາຍັງສືບຕໍ່ໃຊ້ທຸກເລ່ກົນ ເພື່ອທັບມ້າງເພທຳລາຍຄວາມສາມັກຄີພາຍໃນ,

ສະກັດກັ້ນການເຕີບໃຫຍ່ຂະຫຍາຍຕົວຂອງປະເທດຊາດເຮົາ.

ດ້ວຍເຫດນັ້ນ, ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຈຶ່ງຂໍຮຽກຮ້ອງມາຍັງພະສົງສາມະເນນ ແລະພຸດທະສາສະນິກະຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງເອົາໃຈໃສ່ປະຕິບັດບາງວຽກງານດັ່ງຕໍ່ໄປນີ້:

1) ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນສິນທຳພຸດທະສາສະໜາ ນຳໃຊ້ສິນທຳທາງພຸດທະສາສະໜາໃຫ້ສອດຄ່ອງກັບກາລະເທສະ, ນຳເອົາສິນທຳໄປປະສານສົມທົບເຂົ້າໃສ່ແນວທາງນະໂຍບາຍການເມືອງ ເພື່ອໂຄສະນາສຶກສາອົບຮົມໃຫ້ແກ່ປະຊາຊົນບັນດາເຜົ່າ ປະກອບສ່ວນເຮັດໃຫ້ສັງຄົມລາວຫັນປ່ຽນຈາກສິ່ງຫລ້າຫລັງທີ່ເປັນເສດເຫລືອຂອງລະບອບເກົ່າສັງຄົມເກົ່າ ມາເປັນສັງຄົມໃໝ່ທີ່ບໍລິສຸດສົດໃສ.

2) ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ ບັນດາມະຕິກົດແນວທາງນະໂຍບາຍຂອງພັກ ແລະ ແຜນນະໂຍບາຍຂອງລັດຖະບານໃຫ້ກຳໄດ້ ແລະ ເຊື່ອມຊຶມຢ່າງເລິກເຊິ່ງ ເພື່ອສົມທຽບໃສ່ສິນທຳທາງພຸດທະສາສະໜາ ແລະ ເພື່ອນຳມາໝູນໃຊ້ເຂົ້າໃນພຶດຕິກຳຕົວຈິງໃນທ້ອງຖິ່ນຂອງໃຜລາວ.

3) ເພີ່ມທະວີຄວາມສາມັກຄີພາຍໃນໃຫ້ນັບມື້ນັບແໜ້ນ, ປະສານສົມທົບກັບແນວລາວສ້າງຊາດຢ່າງສະໜິດແໜ້ນ, ຮ່ວມມືແລະຊ່ວຍເຫລືອເຊິ່ງກັນແລະກັນ ກັບອົງການຈັດຕັ້ງມະຫາຊົນ: ແມ່ຍິງ, ຊາວໜຸ່ມ, ກຳມະບານ ແລະ ອົງການຈັດຕັ້ງອື່ນໆ. ພ້ອມນັ້ນກໍຮ່ວມສຳພັນກັບສາສະໜາອື່ນໆທີ່ມີຢູ່ໃນລາວ, ເພື່ອພ້ອມກັນປະກອບສ່ວນປົກປັກຮັກສາ ແລະ ສ້າງສາປະເທດຊາດສັງຄົມນິຍົມ ຕາມພາລະບົດບາດຂອງໃຜລາວ.

4) ເພີ່ມທະວີຄວາມມີສະຕິລະວັງຕົວໃຫ້ສູງກວ່າເກົ່າ, ເພີ່ມທະວີສະຕິປະເທດຊາດສັງຄົມນິຍົມ: ຍົກສູງນ້ຳໃຈຮັກຫອມສິນທຳ, ຮັກຫອມສັນຕິພາບ, ໃຫ້

ນັບມື້ນັບສູງຂຶ້ນຢ່າງບໍ່ຢຸດຢັ້ງ, ຕ້ານທຸກກົນອຸບາຍສົງຄາມຈິດຕະສາດຂອງພວກສັດຕູໃຫ້ທັນການ.

5) ເພີ່ມທະວີການພົວພັນມິດຕະພາບ ແລະຄວາມສາມັກຄີກັບຊາວພຸດ ແລະສາສະນິກະຊົນອື່ນ ໃນບັນດາປະເທດສັງຄົມນິຍົມອ້າຍນ້ອງ, ກັບຊາວພຸດແລະ ແລະປະຊາຊົນໄທ ທີ່ເປັນບ້ານພີ່ເມືອງນ້ອງກັບຊາວພຸດແລະປະຊາຊົນທີ່ຮັກຫອມສັນຕິພາບ ແລະຄວາມເປັນທຳໃນໂລກ ເພື່ອພ້ອມກັນຕໍ່ສູ້ຕ້ານນະໂຍບາຍກະຫາຍສົງຄາມຂອງພວກຈັກກະພັດ ແລະ ປະຕິການ, ພ້ອມກັນປົກປັກຮັກສາສັນຕິພາບ ແລະຄວາມປອດໄພຂອງມວນມະນຸດໃນພາກພື້ນແລະໃນໂລກ.

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ເຊື່ອໝັ້ນວ່າ ພາຍໃຕ້ແສງສະຫວ່າງແຫ່ງແນວທາງນະໂຍບາຍຂອງພັກ, ພາຍໃຕ້ຄວາມອຸປະຖຳບຳລຸງທາງດ້ານວັດຖຸແລະຈິດໃຈຂອງແນວລາວສ້າງຊາດ, ດ້ວຍມູນເຊື້ອແຫ່ງຄວາມສາມັກຄີ ແລະມູນເຊື້ອດຸໝັ່ນຂະຫຍັນພຽນ ພ້ອມທັງມີຫົວຄິດປະດິດສ້າງຂອງພະສົງສາມະເນນ ແລະພຸດທະສາສະນິກະຊົນບັນດາເຜົ່າຂອງພວກເຮົາ, ດ້ວຍການສະໜັບສະໜູນຊ່ວຍເຫລືອຂອງປະຊາຊົນແລະບັນດາອົງການຈັດຕັ້ງພາຍໃນແລະຕ່າງປະເທດ, ພາລະກິດປົກປັກຮັກສາແລະສ້າງສາປະເທດຊາດຂອງປະຊາຊົນເຮົາ ຕ້ອງໄດ້ຮັບຜົນສຳເລັດຢ່າງແນ່ນອນ. ພາລະກິດແຫ່ງການປົກປັກຮັກສາສິນທຳ ນຳເອົາພະພຸດທະສາສະໜາກ້າວໄປຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມໃນປະເທດເຮົາ ຕ້ອງສຳເລັດຜົນຢ່າງແນ່ນອນ.

ວຽງຈັນ, ວັນທີ 23 ກຸມພາ 1989

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III.



ພະອາຈານ ຊາລີ ກັນຕະສີໂລ ຄະນະປະຈຳສູນກາງ ອພສ. ຜ່ານມະຕິກອງ

ປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III.

ມະຕິຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ຂອງພຸດທະສາສະໜາສຳພັນລາວ

ພາຍໃຕ້ຄວາມອຸປະຖຳຂອງລັດຖະບານ ໂດຍຜ່ານແນວລາວສ້າງຊາດ, ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ດຳເນີນກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ແຕ່ວັນທີ 22 ເຖິງ 23 / 2 / 1989 ຢູ່ນະຄອນຫລວງວຽງຈັນ, ບັນດາຜູ້ແທນສົງຂອງກອງປະຊຸມໃຫຍ່ຄັ້ງນີ້ໄດ້ສະແດງຄວາມຮູ້ບຸນຄຸນແລະຄວາມນັບຖືຕໍ່ທ່ານ ພູມີ ວົງວິຈິດ ກຳມະການເມືອງສູນກາງພັກ, ຮອງປະທານສະພາລັດຖະມົນຕີ, ຜູ້ວ່າການແທນປະທານປະເທດ, ປະທານສູນກາງແນວລາວສ້າງຊາດ ເຈົ້າຕາງໜ້າລັດຖະບານ ແລະຕາງໜ້າສູນກາງແນວລາວສ້າງຊາດ ໄດ້ມາໂອ້ລົມຕັກເຕືອນແກ່ກອງປະຊຸມໃຫຍ່, ໂດຍຖືວ່າຄຳໂອ້ລົມຕັກເຕືອນຂອງທ່ານນັ້ນມີລາຄາສູງ ເປັນເຂັມຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວວຽກງານດ້ານພຸດທະສາສະໜາໃນຊຸມປີຕໍ່ໄປ.

ກອງປະຊຸມໃຫຍ່ໄດ້ຮັບຟັງ ແລະຄົ້ນຄວ້າບັນດາເອກະສານຕ່າງໆເປັນຕົ້ນແມ່ນ: ລາຍງານການເຄື່ອນໄຫວວຽກງານທາງພຸດທະສາສະໜາໃນຊຸມປີຜ່ານມາ ແລະທິດທາງໜ້າທີ່ໃນຊຸມປີຂ້າງໜ້າຂອງຄະນະກຳມະການສູນກາງ ອພສ, ລາຍງານກ່ຽວກັບໂຄງການດຳເນີນງານຂອງ ພສລ, ລາຍງານກ່ຽວກັບການດັດແປງເພີ່ມເຕີມກົດລະບຽບ ໂດຍປ່ຽນຊື່ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວມາເປັນ "ພຸດທະສາສະໜາສຳພັນລາວ" ພ້ອມກັນນັ້ນ, ກອງປະຊຸມໃຫຍ່ຍັງໄດ້ຮັບຟັງ

ບົດປະກອບຄວາມຄິດຄວາມເຫັນຂອງບັນດາທ່ານຜູ້ແທນສົງທັງຫລາຍໃນແລະຕ່າງປະເທດ. ຈາກນັ້ນ ບັນດາຜູ້ແທນສົງຂອງກອງປະຊຸມໃຫຍ່ໄດ້ເປັນເອກະສັນກັນ ບົນພື້ນຖານຄວາມສາມັກຄີເອກະພາບຮັບຮອງເອົາມະຕິດັ່ງຕໍ່ໄປນີ້:

1) ເຫັນດີຮັບຮອງເອົາລາຍງານການເຄື່ອນໄຫວວຽກງານດ້ານພຸດທະສາສະໜາແຕ່ກອງປະຊຸມໃຫຍ່ຄັ້ງທີ II ມາຮອດປະຈຸບັນ ແລະ ທິດທາງໜ້າທີ່ຍາວນານ ແລະສະເພາະແຕ່ນີ້ເຖິງປີ 1990 ຂອງຄະນະກຳມະການສູນກາງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ, ເພາະເຫັນວ່າລາຍງານນັ້ນຖືກຕ້ອງຢ່າງສົມບູນ, ມັນສອດຄ່ອງກັບພາວະຄວາມເປັນຈິງຂອງສະພາບການພາຍໃນປະເທດເຮົາ, ທັງສອດຄ່ອງກັບໄລຍະໃໝ່ ຂອງການປະຕິວັດກ້າວຂຶ້ນສັງຄົມນິຍົມຢູ່ພາຍໃນປະເທດຊາດຂອງພວກເຮົາ.

2) ເຫັນດີຮັບຮອງເອົາລາຍງານ ກ່ຽວກັບໂຄງການດຳເນີນງານຂອງ "ພຸດທະສາສະໜາສຳພັນລາວ" ທີ່ໄດ້ເວົ້າແຈ້ງເຖິງໜ້າທີ່ຕົວຈິງຂອງ ພຸດທະສາສະໜາສຳພັນລາວ ແນໃສ່ປຸກລະດົມພະສົງ ສາມະເນນ ແລະພຸດທະສາສະນິກະຊົນໃນທົ່ວປະເທດສາມັກຄີກັນ ຕັ້ງໜ້າສ້າງສາພັດທະນາປະເທດຊາດຕາມພາລະໜ້າທີ່ຂອງໃຜລາວ ເພື່ອປະກອບສ່ວນໃນການປົກປັກຮັກສາປະເທດຊາດ ແລະກໍ່ສ້າງປະເທດຊາດສັງຄົມນິຍົມ.

3) ເຫັນດີຮັບຮອງເອົາລາຍງານກ່ຽວກັບການດັດແປງ ແລະເພີ່ມເຕີມກົດລະບຽບເກົ່າໃຫ້ມີເນື້ອໃນໃໝ່ ພ້ອມທັງປ່ຽນແປງຊື່ການຈັດຕັ້ງຂອງສົງເກົ່າຈາກ: "ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ"

ມາເປັນ "ພຸດທະສາສະໜາສຳພັນລາວ" ແລະໃຊ້ອັກສອນຫຍໍ້ວ່າ: "ພສລ" ເພາະເຫັນວ່າກົດລະບຽບສະບັບດັດແປງເພີ່ມເຕີມໃໝ່ນີ້ເປັນພື້ນຖານອັນດີໃຫ້ແກ່ການປັບປຸງການຈັດຕັ້ງຂອງຄະນະສົງລາວ ໃຫ້ນັບມື້ນັບແໜ້ນແກ່ນມີຄຸນນະພາບສູງ ແລະມີປະສິດທິຜົນໃນການບໍລິຫານວຽກງານດ້ານພຸດທະສາສະໜາ.

4) ເຫັນດີຮັບຮອງເອົາໂຄງປະກອບການຈັດຕັ້ງຄະນະກຳມະການສູນກາງ "ພຸດທະສາສະໜາສຳພັນລາວ" ເຊິ່ງປະກອບຮູບການຈັດຕັ້ງດັ່ງກ່າວ.

ກ/– ຄະນະກິດຕິມະສັກປະກອບມີ: ປະທານ, ຮອງປະທານ ແລະຄະນະກຳມະການກິດຕິມະສັກຂອງສູນກາງ ພຸດທະສາສະໜາສຳພັນລາວ ຈຳນວນ 3 ອົງ.

ຂ/– ຄະນະກຳມະການສູນກາງປະກອບ ຈຳນວນ 42 ອົງ, ໃນນັ້ນເປັນຄະນະປະຈຳສູນກາງ ພສລ. 9 ອົງ ແລະມອບໝາຍໃຫ້ພະເຖລະຜູ້ທີ່ຖືກແຕ່ງຕັ້ງໃນກອງປະຊຸມໃຫຍ່ຄັ້ງນີ້ເປັນຜູ້ດຳເນີນການບໍລິຫານ, ຊີ້ນຳນຳພາປະຕິບັດມະຕິຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ໄປຈົນຮອດມື້ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ IV ໃຫ້ບັນລຸຜົນຢ່າງດີງາມ.

5) ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຂໍຮຽກຮ້ອງມາຍັງພະສົງສາມະເນນ ແລະພຸດທະສາສະນິກະຊົນໃນທົ່ວປະເທດ ຈົ່ງເພີ່ມທະວີຄວາມສາມັກຄີ, ຍຶດໝັ້ນໃນຫລັກທຳຄຳສັ່ງສອນຂອງພະພຸດທະເຈົ້າ, ປະກອບສ່ວນຢ່າງຕັ້ງໜ້າຈົນສຸດຄວາມສາມາດຂອງຕົນເຂົ້າໃນການປະຕິບັດແຜນການ 5 ປີ ແຫ່ງລັດຄັ້ງທີ II ມະຕິຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ II ຂອງແນວລາວສ້າງຊາດ

ແລະໂຄງການດຳເນີນງານຂອງພຸດທະສາສະໜາສຳພັນລາວ ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ, ເຮັດໃຫ້ມະຕິຕົກລົງຂອງກອງປະຊຸມໃຫຍ່ຄັ້ງນີ້ ເກີດດອກອອກຜົນຢ່າງແທ້ຈິງ.

ວຽງຈັນ, ວັນທີ 23 ກຸມພາ. 1989

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III

ຂອງພຸດທະສາສະໜາສຳພັນລາວ.

ຖະແຫລງການ
ຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ
ຄັ້ງທີ III ຂອງພຸດທະສາສະໜາສຳພັນລາວ

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ ຄັ້ງທີ III ໄດ້ໄຂຂຶ້ນທີ່ນະຄອນຫລວງວຽງຈັນ, ໃນວັນທີ 22 ກຸມພາ 1989 ແລະ ໄດ້ອັດລົງ ໃນວັນທີ 23 ເດືອນດຽວກັນ.

ເຂົ້າຮ່ວມໃນກອງປະຊຸມ ໄດ້ມີຜູ້ແທນມາຈາກພາກສ່ວນຕ່າງໆໃນທົ່ວປະເທດ ຈຳນວນທັງໝົດ 127 ທ່ານ, ໃນນັ້ນ, ມີຜູ້ແທນສົງສົມບູນ ຈຳນວນ 42 ທ່ານ, ມີຜູ້ແທນຈາກຕ່າງປະເທດ 5 ຄະນະ ລວມມີ 12 ທ່ານ, ມີແຂກຜູ້ມີກຽດທີ່ຖືກເຊີນ ຈຳນວນ 43 ທ່ານ; ພາຍຫລັງພະອາຈານ ບົວຄຳ ວໍລະເພັດ ປະທານກິດຕິມະສັກຂອງສູນກາງ ອົງການ ພຸດທະສາສະໜາສຳພັນ ແຫ່ງປະເທດລາວ ກ່າວສູນທອນພົດໄຂກອງປະຊຸມເປັນທາງການແລ້ວ ທີ່ປະຊຸມໄດ້ຮັບຟັງບົດລາຍງານສະຫລຸບວຽກງານ ອ.ພ.ສ. ໃນຊຸມປີຜ່ານມາ ແລະທິດທາງໜ້າທີ່ໃນຊຸມປີຂ້າງໜ້າ.

ຕໍ່ຈາກນັ້ນ ທີ່ປະຊຸມຖືເປັນສຳຄັນ ໄດ້ຮັບຟັງບົດໂອ້ລົມຂອງທ່ານ ພູມີ ວົງວິຈິດ ກຳມະການກົມການເມືອງຄະນະບໍລິຫານງານສູນກາງພັກ, ຮອງປະທານສະພາລັດຖະມົນຕີ, ວ່າການແທນປະທານປະເທດ ທັງເປັນປະທານສູນກາງແນວລາວສ້າງຊາດ. ບົດໂອ້ລົມຂອງທ່ານ ພູມີ ວົງວິຈິດ ຄັ້ງນີ້ຖືໄດ້ວ່າ ເປັນເອກະສານຊີ້ທິດເຍືອງທາງໃຫ້ແກ່ວຽກງານຂອງພຸດທະສາສະໜາສຳພັນລາວ. ກອງປະຊຸມໄດ້ຕີລາຄາສູງໃຫ້ແກ່ບົດໂອ້ລົມດັ່ງກ່າວ.

ບັນດາຜູ້ແທນພາຍໃນ ແລະຕ່າງປະເທດ ທີ່ໄດ້ເຂົ້າຮ່ວມໃນກອງປະຊຸມ

ໃຫຍ່ຄັ້ງນີ້ ຕ່າງກໍໄດ້ປະກອບຄວາມຄິດຄວາມເຫັນຂອງຕົນ ຍ້ອງຍໍຈົນເຊີຍຜົນງານຂອງ ອພສ. ໃນຊຸມປີຜ່ານມາ ແລະເຫັນດີເຫັນພ້ອມນໍາທິດທາງໜ້າທີ່ ທີ່ຈະໄດ້ດໍາເນີນໄປໃນຊຸມປີຂ້າງໜ້າ ເຊິ່ງແມ່ນກອງປະຊຸມໃຫຍ່ໄດ້ວາງອອກໃນເທື່ອນີ້.

ກອງປະຊຸມໃຫຍ່ໄດ້ໄຂຂຶ້ນເປັນທາງການ ແລະໄດ້ດໍາເນີນມາເປັນເວລາ 2 ວັນເຕັມນັ້ນ ໄດ້ຮັບຜ່ານບັນດາເອກະສານສໍາຄັນຄື:

– ມະຕິແຕ່ງຕັ້ງຄະນະບໍລິຫານງານສູນກາງ ພສລ. ຊຸດໃໝ່. ເຊິ່ງປະກອບດ້ວຍ: ປະທານແລະກໍາມະການກິດຕິມະສັກ ຈໍານວນ 4 ຕົນ, ກໍາມະການບໍລິຫານງານສູນກາງ ພສລ. 42 ຕົນ, ໃນນັ້ນປະກອບເປັນຄະນະປະຈໍາ 9 ທ່ານ, ມີປະທານໜຶ່ງຕົນ, ຮອງປະທານ 3 ຕົນ ແລະກໍາມະການ 5 ຕົນ.

☆ ມະຕິຮັບຮອງເອົາຜົນສໍາເລັດ ຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຄື:

– ຮັບຮອງເອົາການປ່ຽນຊື່ອົງການພຸດທະສາສະໜາສໍາພັນ ແຫ່ງປະເທດລາວ ມາເປັນ ພຸດທະສາສະໜາສໍາພັນລາວ.

– ຮັບຮອງເອົາໂຄງການດໍາເນີນງານ ແລະກົດລະບຽບຂອງພຸດທະສາສະໜາສໍາພັນລາວ ສະບັບດັດແປງແກ້ໄຂໃໝ່.

– ຄໍາຮຽກຮ້ອງ ຂອງກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ເຖິງພະສົງສາມະເນນ ແລະພຸດທະສາສະນິກະຊົນ ບັນດາເຜົ່າໃນທົ່ວປະເທດ.

ທ້າຍສຸດ ພະອາຈານ ບົວຄໍາ ວໍລະເພັດ ປະທານກິດຕິມະສັກ ຂອງສູນກາງພຸດທະສາສະໜາສໍາພັນລາວ ກໍໄດ້ຂຶ້ນປະກາດອັດກອງປະຊຸມຢ່າງເປັນທາງການໃນເວລາ 10 ໂມງ, ຂອງວັນທີ 23 ກຸມພາ 1989.

ວຽງຈັນ, ວັນທີ 23/2/1989.

ສຸນທອນພົດ
ອັດກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດ
ຄັ້ງທີ III ຂອງພຸດທະສາສະໜາສຳພັນລາວ

ໂດຍ: ພະອາຈານ ບົວຄຳ ອໍລະເພັດ
ປະທານກິດຕິມະສັກສູນກາງ ພ.ສ.ລ.
ໃນວັນທີ 23/2/1989.

ຮຽນ ທີ່ປະຊຸມ,

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຂອງພວກເຮົາ ໄດ້ດຳເນີນມາເປັນເວລາ 2 ວັນເຕັມ. ຕະຫລອດເວລາດຳເນີນກອງປະຊຸມ. ຂ້າພະເຈົ້າໄດ້ສັງເກດເຫັນວ່າ ບັນດາທ່ານຜູ້ແທນໄດ້ຕັ້ງໜ້າປະຕິບັດໜ້າທີ່ຂອງຕົນຕໍ່ກອງປະຊຸມໃຫຍ່ເປັນຢ່າງດີ; ຜູ້ແທນສົງສ່ວນຫລາຍໄດ້ປະກອບຄວາມຄິດຄວາມເຫັນສະເໜີສະພາບວຽກງານຂອງຕົນ ແລະສະເໜີຂໍ້ຄິດເຫັນທີ່ມີປະໂຫຍດໃຫ້ແກ່ກອງ-ປະຊຸມ, ເຮັດໃຫ້ກອງປະຊຸມໃຫຍ່ຂອງພວກເຮົາເທື່ອມມີເນື້ອໃນອຸດົມສົມບູນ. ບັນດາທ່ານຜູ້ແທນສົງປະເທດອ້າຍນ້ອງ ກໍໄດ້ປະກອບສ່ວນຢ່າງສຳຄັນ ເຂົ້າໃນຜົນສຳ-ເລັດກອງປະຊຸມຄັ້ງນີ້. ໃນບົດຄຳເຫັນຂອງແຕ່ລະທ່ານ ລ້ວນແຕ່ສະແດງເຖິງໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີຮ່ວມມືກັນສະໜິດແໜ້ນ ແລະຄວາມຮັກແພງສະຖານອ້າຍນ້ອງໃນວົງຄະນາຍາດແຫ່ງພະພຸດທະສາສະໜາ ເຊິ່ງມີພະພຸດ-ທະເຈົ້າອົງດຽວກັນເປັນບໍລົມມະຄູ.

ກອງປະຊຸມໃຫຍ່ຂອງພວກເຮົາໄດ້ຮັບກຽດສູງ ໂດຍມີ ທ່ານ ພູມີ ວົງວິຈິດ ກົມການເມືອງສູນກາງພັກ. ຮອງປະທານສະພາລັດຖະມົນຕີ, ຜູ້ວ່າການແທນປະທານປະເທດ. ປະທານສູນກາງແນວລາວສ້າງຊາດ ໄດ້ມາໂອ້ລົມຊີ້ທິດເຍືອງທາງໃຫ້ແກ່ກອງປະຊຸມ. ກອງປະຊຸມໄດ້ຖືເອົາບົດໂອ້ລົມນັ້ນເປັນເອກະສານສຳຄັນ ເພາະວ່າທ່ານໄດ້ເວົ້າແຈ້ງເຖິງສະພາບການທົ່ວໄປ, ພ້ອມທັງທິດສະດີ, ຂໍ້ມູນ, ທີ່ເປັນຫລັກການ ແລະ ເປັນແບບແຜນວິທີເຮັດວຽກ. ນອກຈາກນີ້ ກອງປະຊຸມຂອງພວກເຮົາຍັງໄດ້ຮັບຜ່ານບັນດາຮ່າງເອກະສານ ທີ່ດັດແປງແກ້ໄຂໃໝ່ ເປັນຕົ້ນແມ່ນກົດລະບຽບ, ໂຄງການດຳເນີນງານ ແລະອື່ນໆ. ສຳຄັນຍິ່ງ, ກອງປະຊຸມໃຫຍ່ຄັ້ງນີ້ແມ່ນໄດ້ຄັດເລືອກເອົາພະເຖລະຜູ້ມີຄຸນສົມບັດ ແລະຄວາມສາມາດຢ່າງພຽງພໍ ໃຫ້ເປັນຄະນະບໍລິຫານງານສູນກາງຊຸດໃໝ່ ອັນນີ້ມັນສະແດງເຖິງຄວາມຕັດສິນໃຈສູງ ຂອງກອງປະຊຸມໃຫຍ່ທີ່ຈະປັບປຸງແລະດັດແປງ ອົງການຈັດຕັ້ງຂອງສົງຂັ້ນສູນກາງ ໃຫ້ມັນໝັ້ນມັນເຂັ້ມແຂງ ແລະມີປະສິດທິຜົນ,

ເບິ່ງທົ່ວໄປແລ້ວ, ຂ້າພະເຈົ້າເຫັນວ່າ ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ນີ້ ໄດ້ດຳເນີນໄປດ້ວຍບັນຍາກາດຄັ່ງຮ້ອນທີ່ສຸດ ແລະຟົດຟື້ນທີ່ສຸດ. ໝາກຜົນຂອງກອງປະຊຸມແມ່ນໃຫຍ່ຫລວງ ແລະມີຄວາມໝາຍສຳຄັນກວ່າຄັ້ງໃດໆ ແຕ່ວ່າອັນນີ້ມັນເປັນພຽງຜົນສຳເລັດເບື້ອງຕົ້ນເທົ່ານັ້ນ. ບັນດາເນື້ອໃນຂອງກອງປະຊຸມນັ້ນພຽງແຕ່ຊີ້ອອກໃນເອກະສານເທົ່ານັ້ນ. ພາລະໜ້າທີ່ຂອງຜູ້ແທນສົງທຸກທ່ານ ແມ່ນຈະໄດ້ນຳເອົາຜົນສຳເລັດຂອງກອງປະຊຸມລົງໄປຜັນຂະຫຍາຍຢູ່ຮາກຖານ. ເຮັດໃຫ້ພະສົງສາມະເນນ ແລະ ພຸດທະສາສະນິກະຊົນກໍໄດ້ ແລະ

ເຊື່ອມຊຶມເນື້ອໃນຈິດໃຈພາກພົມຂອງກອງປະຊຸມຢ່າງທົ່ວເຖິງກັນ ເວລານັ້ນກອງປະຊຸມໃຫຍ່ຂອງພວກເຮົາຄັ້ງນີ້ ຈຶ່ງຈະຖືໄດ້ວ່າ ເກີດດອກອອກພົນຢ່າງແທ້ຈິງ.

ຮຽນ ກອງປະຊຸມ,

ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ໄດ້ສິ້ນສຸດລົງດ້ວຍຜົນສໍາເລັດຢ່າງຈົບງາມນີ້ ກໍຍ້ອນວ່າລັດຖະບານ ໂດຍຜ່ານສູນກາງແນວລາວສ້າງຊາດໄດ້ໃຫ້ຄວາມອຸປະຖໍາບໍາລຸງທາງດ້ານວັດຖຸແລະຈິດໃຈເປັນຢ່າງດີ. ຍ້ອນຜູ້ແທນສົງທຸກອົງໄດ້ຕັດສິນໃຈສູງ ສຸມທຸກກໍາລັງວັງຊາຂອງຕົນ ເພື່ອປະກອບສ່ວນເຮັດໃຫ້ກອງປະຊຸມບັນລຸຜົນຕາມຄາດໝາຍ. ຍ້ອນການອຸປະຖໍາຄໍ້າຊູຂອງພະສົງສາມະເນນ ແລະອອກຕົນຍາດໂຍມ ໃນທົ່ວປະເທດ ໄດ້ສະຫລະວັດຖຸປັດໄຈມາອຸປະຖໍາໃຫ້ແກ່ກອງປະຊຸມ. ຍ້ອນໄດ້ຮັບການຮ່ວມມືຈາກບັນດາອົງການຈັດຕັ້ງມະຫາຊົນ ທັງຂັ້ນສູນກາງ ແລະທ້ອງຖິ່ນ. ຍ້ອນການປະຕິບັດງານຢ່າງຈິງຈັງຂອງບັນດາກໍາມະການ ແລະອະນຸກໍາມະການ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ແຕ່ລະອຽກນັ້ນໄດ້ເຮັດຫລ້ອນໜ້າທີ່ຂອງຕົນ.

ໂດຍຕາງໜ້າໃຫ້ກອງປະຊຸມ ແລະໃນນາມສ່ວນຕົວ ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ສະແດງຄວາມສາມັກຄີຮັກແພງຢ່າງສະໜິດສະໜົມ ຕໍ່ບັນດາທ່ານຜູ້ແທນຕ່າງປະເທດ ທີ່ໄດ້ໃຫ້ກຽດມາຮ່ວມກອງປະຊຸມນີ້. ຂໍອວຍພອນໃຫ້ບັນດາທ່ານຜູ້ແທນ, ບັນດາແຂກຜູ້ມີກຽດທັງຫລາຍໃນແລະຕ່າງປະເທດ ທີ່ມີໜ້າ

ມາຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ຈົ່ງມີ: ອາຍຸ, ວັນນະ, ສຸຂະ ພະລະ ຕະຫລອດການ ນານເທີ້ນ.

ມາຮອດນີ້, ຂ້າພະເຈົ້າ ຂໍປະກາດ ອັດກອງປະຊຸມໃຫຍ່ຜູ້ແທນສົງທົ່ວ ປະເທດຄັ້ງທີ III ຢ່າງເປັນທາງການແຕ່ບັດນີ້ເປັນຕົ້ນໄປ.

ຂໍຂອບໃຈ.

ບົດປະກອບຄວາມເຫັນ ຂອງບັນດາທ່ານຜູ້ແທນໃນກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດຄັ້ງທີ III ຂອງ ພຸດທະສາສະໜາສໍາພັນລາວ

ສານຊົມເຊີຍກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການ ຊາວພຸດລາວຈາກອົງການຊາວພຸດຂອງສະຫະພາບໂຊວຽດ

ນັບຖືບັນດາທ່ານຜູ້ແທນ,

ຮັກແພງບັນດາເພື່ອນສະຫະທຳມິກ,

ບັນດາຊາວພຸດຢູ່ໃນສະຫະພາບໂຊວຽດ ຂໍສົ່ງຄວາມຄຳນັບຊົມເຊີຍມາຍັງບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ່ III ຂອງອົງການຊາວພຸດລາວແລະຂໍສະແດງຄວາມອວຍພອນອັນຈິງໃຈໃຫ້ພວກທ່ານ ປະສົບຜົນສຳເລັດທຸກປະການໃນວຽກງານຂອງຕົນ

ພວກຂ້າພະເຈົ້າເຊື່ອວ່າກອງຊຸມໃຫຍ່ຂອງພວກທ່ານ ຈະເປັນຫລັກຖານໃໝ່ອັນໜຶ່ງໃຫ້ແກ່ຄວາມເປັນເອກະພາບຖານອ້າຍນ້ອງຂອງຊາວພຸດ ໃນທົ່ວປະເທດເພື່ອຈຸດປະສົງອັນສູງສົ່ງໃນການພັນຂະຫຍາຍ ແລະເຮັດໃຫ້ອຸດົມການມະນຸດສະທຳແລະຄຳສັ່ງສອນຂອງພະພຸດທະເຈົ້າຜູ້ຍິ່ງໃຫຍ່ມີຊີວິດຊີວາຂຶ້ນ.

ໂລກພວກເຮົາແມ່ນມີລັກສະນະສັບສົນ, ຫລາຍສິ່ງຫລາຍແນວ, ຂຶ້ນກັບຊຶ່ງກັນແລະກັນແລະປ່ຽນແປງ. ຍ້ອນຄວາມເປັນບຸກຄົນຂອງຕົນ, ແຕ່ລະຄົນຕ່າງກໍມີທ່າທີແຕກຕ່າງກັນຕໍ່ສະພາບແວດລ້ອມຂອງຕົນ ແຕ່ພວກເຮົາທັງໝົດນີ້ພັດໄດ້ເຕົ້າໂຮມກັນໃນການສະເໜີບັນຫາອັນກວ້າງຂວາງ ເພື່ອປົກປັກຮັກສາໜ່ວຍພິພົບຂອງພວກເຮົາໃຫ້ມີຊີວິດຍືນຍາວຕະຫລອດໄປ ສ້າງເງື່ອນໄຂຊີວິດໃຫ້ດີຂຶ້ນໃຫ້ແກ່ສັບພະສັດທັງຫລາຍ.

ພວກຂ້າພະເຈົ້າຂໍຮ່ວມກັບພວກທ່ານທີ່ເຂົ້າຮ່ວມກອງປະຊຸມໃຫຍ່ ຍົກສຽງຂອງຕົນຂຶ້ນເພື່ອເຜີຍແຜ່ຄວາມຮັກ ແລະຄວາມອ່ອນໂຍນ, ຄວາມດີແລະຄວາມເມດຕາ, ຄວາມເຄົາລົບນັບຖືຕໍ່ມວນມະນຸດທັງຫລາຍ.

ການເຊື່ອມຊຶມ ອຸດົມການສູງສົ່ງທີ່ຮັບໃຊ້ໃຫ້ແກ່ຄວາມຮັກ ແລະຄວາມອ່ອນໂຍນແມ່ນເປັນພື້ນຖານໃຫ້ແກ່ທັດສະນະສ້າງສັນ ສັນຕິພາບອັນຕັ້ງໜ້າຂອງອົງການຊາວໜຸ່ມລາວ ໂດຍມີກຽດສັກສີອັນສູງທີ່ໄດ້ຮັບຮ່ວມກັບໃນບັນດາຊາວໜຸ່ມຫລາຍປະເທດເປັນຫລັກຖານພິຍານໃຫ້. ພວກຂ້າພະເຈົ້າດີໃຈທີ່ເຫັນການເຂົ້າຮ່ວມນຳກັນຂອງພວກເຮົາໃນການເຄື່ອນໄຫວຂອງອົງການຊາວໜຸ່ມອາຊີ ເພື່ອສັນຕິພາບກໍດີໃນກອງປະຊຸມສາກົນ ເພື່ອສ້າງສັນ ສັນຕິພາບອື່ນໆ. ພວກຂ້າພະເຈົ້າຂໍຕີລາຄາຢ່າງເລິກເຊິ່ງບົດບາດຂອງຊາວໜຸ່ມລາວ ໃນການສ້າງບັນຍາກາດແຫ່ງຄວາມເຊື່ອໝັ້ນ, ເຂົ້າອົກເຂົ້າໃຈກັນລະຫວ່າງປະຊາຊົນໃນອາຊີອາຄະເນ.

ມັນແມ່ນຄວາມຫວັງແລະຄວາມພະຍາຍາມລວມ ຂອງພວກເຮົາທີ່ຢາກໃຫ້ລຸ້ນຄົນຕໍ່ໄປໄດ້ຫລຸດພົ້ນອອກຈາກການແບກຫາບຄວາມໂລບມາກ, ກຽດຊັງແລະອິດສາບັງບຽດ. ພວກຂ້າພະເຈົ້າເພິ່ງພໍໃຈເປັນຢ່າງຍິ່ງທີ່ໄດ້ຮູ້ເຫັນຄວາມເຕີບໃຫຍ່ຂອງສາຍສຳພັນອັນສະໜິດສະໜົມລະຫວ່າງອົງຄະນາຍາດຊາວໜຸ່ມພວກເຮົາ. ພວກຂ້າພະເຈົ້າເຊື່ອໝັ້ນໃນຄວາມເຕີບໃຫຍ່ຂະຫຍາຍຕົວຕໍ່ໆໄປຂອງສາຍສຳພັນດັ່ງກ່າວບໍ່ມີຫຍັງສົງໄສ, ກອງປະຊຸມໃຫຍ່ຈະເປັນເຫດການໜຶ່ງ ອັນໃຫຍ່ສຳຫລັບຊາວໜຸ່ມລາວ.ພວກຂ້າພະເຈົ້າຂໍໃຫ້ຊາວໜຸ່ມລາວຈົ່ງເຂົ້າຮ່ວມຢ່າງຫ້າວຫັນໃນຊີວິດສາທາລະນະຂອງປະເທດ, ໃນຂະບວນການຮັກຊາດເພື່ອກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນ.

ພວກຂ້າພະເຈົ້າຂໍຮັບປະກັນໃນທັດສະນະແບບອ້າຍນ້ອງແລະຄວາມສາມັກຄີຂອງຊາວໜຸ່ມຢູ່ສະຫະພາບໂຊວຽດ ຕໍ່ການກະທຳອັນສູງສົ່ງທັງໝົດຂອງພວກທ່ານ.

ຂໍໃຫ້ຄຸນພະລິລັດຕະນະໄຕຈົ່ງມີແກ່ພວກທ່ານ, ນຳພາແລະປົກປັກຮັກສາການກະທຳທັງໝົດຂອງພວກທ່ານ.

ບັນດິໂດ ຄຳໂບ ລາມາ ອາດິແນວ

ປະທານອົງການສາສະໜາພຸດສະຫະພາບ ໂຊວຽດ.



ພະອາຈານ ທິດຫຽງທ່າວ ຮອງປະທານສູນກາງພະສົງຊາວພຸດ ຫວຽດນາມ,

ປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ III.

ບົດຄຳເຫັນຂອງຄະນະຜູ້ແທນສະມາຄົມ ພຸດທະສາສະໜາ ຫວຽດນາມ ຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ

ນ້ອມນະມັດສະການພະສາກະຍະມຸນີ,

ຮຽນ ພະອາຈານ ທອງດູນ ອະນັນຕະສຸນທອນ ປະທານອົງການພຸດທະສາສະໜາສຳພັນ ແຫ່ງປະເທດລາວ,

ຮຽນ ຄະນະປະທານ,

ບັນດາທ່ານຜູ້ແທນກອງປະຊຸມໃຫຍ່ ທີ່ນັບຖື.

ກ່ອນອື່ນໝົດ, ຂ້າພະເຈົ້າຂໍຕາງໜ້າສະມາຄົມພຸດທະສາສະໜາ ຫວຽດນາມ, ບັນດາພະສົງສາມະເນນ ຫວຽດນາມ, ຂໍສະແດງຄວາມຂອບໃຈມາຍັງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ທີ່ໄດ້ເຊື້ອເຊີນຄະນະສະມາຄົມອົງການພຸດທະສາສະໜາ ຫວຽດນາມ ມາຮ່ວມກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ.

ຈາກໃຈຈິງຂອງຕົນພວກຂ້າພະເຈົ້າ ຂໍອວຍພອນໃຫ້ແກ່ກອງປະຊຸມໃຫຍ່ຄັ້ງນີ້ຈົ່ງສຳເລັດຜົນຢ່າງສະຫງ່າງາມ.

ຍ້ອນອາຍຸກະສຽນ ແລະສຸຂະພາບ, ດັ່ງນັ້ນທ່ານປະທານສະພາພຸດທະສາສະໜາສູນກາງ ຫວຽດນາມ ຈຶ່ງບໍ່ສາມາດມາຮ່ວມກອງປະຊຸມຄັ້ງນີ້ໄດ້. ທ່ານໄດ້ແຕ່ງຕັ້ງໃຫ້ພວກຂ້າພະເຈົ້າມາຮ່ວມ ແລະ ໂດຍຜ່ານພວກຂ້າພະເຈົ້າ ທ່ານຂໍຝາກຄຳອວຍພອນມາຍັງກອງປະຊຸມຄັ້ງນີ້ຢ່າງສຸດອົກສຸດໃຈ.

ຮຽນບັນດາທ່ານຜູ້ແທນ ທີ່ຮັກແພງ

ພວກຂ້າພະເຈົ້າຮັບຮູ້ໄດ້ດີວ່າ ໃນການເອົາຕົນເຈືອຈານ ແລະຕິດພັນສະໜິດແໜ້ນກັບຊາດນັ້ນ ພຸດທະສາສະໜາລາວໄດ້ສ້າງມູນເຊື້ອຮັກຊາດອັນດີງາມໃຫ້ແກ່ຕົນໄດ້ຫລາຍສະຕະວັດມາແລ້ວພຸດທະສາສະໜາລາວ ພ້ອມກັບປະຊາຊົນລາວທັງຊາດ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດປົກປັກຮັກສາປະເທດຊາດຂອງຕົນ, ໄດ້ສ້າງໜ້າປະຫວັດສາດອັນສະຫວ່າງສະໄຫວຂອງຊາດລາວ, ໃນຂະບວນວິວັດດັ່ງກ່າວນັ້ນ, ກໍເຊັ່ນດຽວກັນກັບປະຊາຊົນ ແລະພຸດທະສາສະໜາຫວຽດນາມ, ປະຊາຊົນແລະພຸດທະສາສະໜາລາວ ກໍໄດ້ຜ່ານຜ່າຄວາມຫຍຸ້ງຍາກນາໆປະການເຊິ່ງເຕັມໄປດ້ວຍຄວາມເສັຽສະຫລະເພື່ອຕໍ່ສູ້ຍາດເອົາເອກະລາດ ແລະປົກປັກຮັກສາສັນຕິພາບ. ສະນັ້ນຈິ່ງຖືວ່າບັນຫາເອກະລາດ, ສັນຕິພາບແມ່ນສິ່ງປະເສີດເລີດລ້ຳ ແລະຕັດສິນໃຈປົກປັກຮັກສາສິ່ງເລີດລ້ຳດັ່ງກ່າວນັ້ນ.

ໃນກອງປະຊຸມໃຫຍ່ຄັ້ງນີ້, ພວກຂ້າພະເຈົ້າມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນໄດ້ບັນດາມູນເຊື້ອອັນລ້ຳເລີດດັ່ງກ່າວ ເຊິ່ງນັບມື້ໄດ້ຮັບການເສີມຂະຫຍາຍໄປພ້ອມໆກັນກັບບັນດາຜົນງານອັນໃຫຍ່ຫລວງ ໃນຂົງເຂດສາສະໜາແລະສັງຄົມ. ສະມາຄົມອົງການພຸດທະສາສະໜາຫວຽດນາມ ພວກຂ້າພະເຈົ້າຂໍຮ່ວມຄວາມປິຕິຊົມຊື່ນນີ້ແລະຖືວ່າບັນດາຜົນງານທີ່ພຸດທະສາສະໜາລາວຍາດມາໄດ້ໃນຊຸມປີຜ່ານມານັ້ນເປັນກຳລັງໃຈອັນໃຫຍ່ຫລວງໃຫ້ແກ່ຕົນ.

ໃນວາລະໂອກາດນີ້, ພວກຂ້າພະເຈົ້າຂໍອະນຸຍາດເວົ້າບາງບັນຫາກ່ຽວກັບພຸດທະສາສະໜາຫວຽດນາມ ຂອງພວກຂ້າພະເຈົ້າ ພະສົງຫວຽດນາມມີມູນເຊື້ອຮັກຊາດ ແລະຕິດພັນສະໜິດແໜ້ນກັບຊາດຕົນ. ພາຍຫລັງພາກໃຕ້ຫວຽດນາມ ໄດ້ຮັບການປົດປ່ອຍປີ 1975 ພະສົງຊາວພຸດໃນຫວຽດນາມ ທ້ອນໂຮມ

ກັນເຂົ້າໃນອົງການຈັດຕັ້ງອັນໜຶ່ງອັນດຽວ, ນັ້ນຄືສະມາຄົມພຸດທະສາສະໜາຫວຽດນາມ. ມາເຖິງປະຈຸບັນພວກຂ້າພະເຈົ້າໄດ້ເປີດກອງປະຊຸມໃຫຍ່ສອງຄັ້ງແລ້ວ ແລະໄດ້ວາງທິດທາງເຄື່ອນໄຫວອອກ, ໂດຍອີງໃສ່ຄຳສັ່ງຂອງພະພຸດທະເຈົ້າເພື່ອສືບຕໍ່ເຜີຍແຜ່ຫລັກສິນທຳອັນເປັນປະໂຫຍດໃຫ້ແກ່ມວນມະນຸດ ເຮັດໃຫ້ສິນທຳເຂົ້າເຖິງຈິດໃຈຂອງປະຊາຊົນ, ຜູກພັນພຸດທະສາສະໜາກັບຊາດຕົນແລະສ້າງສາປະເທດຊາດ.

ພາຍໃຕ້ແຜນນະໂຍບາຍເຄົາລົບນັບຖືສາສະໜາ ຢ່າງເສລີຂອງລັດຖະບານສາທາລະນະລັດສັງຄົມນິຍົມຫວຽດນາມ ແລະອີງໃສ່ທິດທາງເຄື່ອນໄຫວທີ່ກ່າວມາຂ້າງເທິງນັ້ນ, ພຸດທະສາສະໜາຫວຽດນາມ ໃນປະຈຸບັນໄດ້ມີເງື່ອນໄຂເອື້ອອຳນວຍກວ່າເວລາໃດໝົດເພື່ອເຜີຍແຜ່ຄຳສັ່ງສອນອັນລ້ຳເລີດຂອງ ພະພຸດທະເຈົ້າແລະມູນເຊື້ອອັນດີງາມຂອງຕົນເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດລວມຂອງຊາດ.

ຮຽນບັນດາທ່ານຜູ້ແທນ ທີ່ຮັກແພງ,

ຄວາມສາມັກຄີມິດຕະພາບເຊິ່ງມີມາແຕ່ບູຮານນະການລະຫວ່າງສອງຊາດ ແລະພຸດທະສາສະໜາຂອງສອງປະເທດລາວ–ຫວຽດນາມ ໄດ້ຮັບການກໍ່ສ້າງແລະເຕີບໃຫຍ່ຂື້ນເລື້ອຍໆ. ພວກຂ້າພະເຈົ້າປິຕິຊົມຊື່ນເປັນຢ່າງຍິ່ງທີ່ໄດ້ເຫັນວ່າຄວາມສາມັກຄີມິດຕະພາບນັ້ນ ໄດ້ຮັບການເພີ່ມພູນຄູນສ້າງຂື້ນຢ່າງບໍ່ຢຸດຢັ້ງ ແລະນັບມື້ນັບໜັ້ນຄົງຂະໜົງແກ່ນຕະຫລອດມາ ພຸດທະສາສະໜາຫວຽດນາມ ຈະເຮັດໝົດເຫື່ອແຮງຂອງຕົນພ້ອມກັນກັບພຸດທະສາສະໜາລາວ, ເພື່ອໃຫ້ຄວາມສາມັກຄີມິດຕະພາບລະຫວ່າງສອງຊາດ ແລະພຸດທະສາສະໜາສອງປະເທດໃຫ້ຂຽວງາມ ແລະແຕກດອກອອກຜົນໄປຕະຫລອດກາລະນານ.

ຮຽນບັນດາທ່ານຜູ້ແທນ ທີ່ຮັກແພງ,

ອາດເວົ້າໄດ້ວ່າ, ປະຊາຊົນແລະພຸດທະສາສະໜາສອງຊາດລາວ–ຫວຽດ

ນາມເວົ້າສະເພາະສາມຊາດອິນດູຈີນ ເວົ້າລວມໄດ້ຜ່ານຜ່າບັນດາຄວາມລຳບາກກາກກຳ, ເສຍຫາຍໃນສົງຄາມ, ສະນັ້ນພວກຂ້າພະເຈົ້າຈຶ່ງເຂົ້າໃຈດີກວ່າຜູ້ໃດທັງໝົດຄຸນຄ່າຂອງສັນຕິພາບແລະສະຖຽນລະພາບ.ພຸດທະສາສະໜາແລະປະຊາຊົນສາມຊາດອິນດູຈີນ ບໍ່ມີຄວາມມຸ່ງມາດປໍດຖະໜາອັນໃດຍິ່ງໄປກວ່າຢາກມີຊີວິດຢູ່ໃນສັນຕິພາບ, ເອກະລາດ. ສະນັ້ນພວກເຂົາເຈົ້າຈຶ່ງໄດ້ທຸ້ມເທເຫື່ອແຮງ ແລະສະຕິປິ່ນຍາຂອງຕົນ ເພື່ອສ້າງສາພັດທະນາປະເທດຊາດ ເຊິ່ງຖືກສົງຄາມທຳລາຍໃນເມື່ອກ່ອນນັ້ນຄືນໃໝ່.

ພວກຂ້າພະເຈົ້າມີຄວາມຊົມຊື່ນເບັ່ນຢ່າງຍິ່ງ ຕໍ່ທ່າອ່ຽງພົບປະເຈລະຈາໃນຂົງເຂດແລະການແລກປ່ຽນໃໝ່ອັນຕັ້ງໜ້າທີ່ມີຂຶ້ນຢູ່ໃນໂລກ. ພຸດທະສາສະໜາຫວຽດນາມ ພ້ອມກັນກັບພຸດທະສາສະໜາລາວ, ກຳປູເຈຍແລະພຸດທະສາສະໜາບັນດາປະເທດໃນຂົງເຂດອາຊີອາຄະເນ ແລະໃນໂລກສະໜັບສະໜູນຢ່າງເຕັມປ່ຽມ ແລະພະຍາຍາມຊຸກຍູ້ທ່າອ່ຽງນີ້ເພື່ອນຳມາເຊິ່ງສັນຕິພາບ ແລະຄວາມໝັ້ນຄົງຢູ່ໃນຂົງເຂດ ແລະໃນໂລກ.

ອີກເທື່ອນຶ່ງ, ພວກຂ້າພະເຈົ້າຂໍອວຍພອນໃຫ້ທ່ານປະທານ ແລະບັນດາທ່ານໃນຄະນະປະທານກອງປະຊຸມ, ບັນດາແຂກຜູ້ແທນກອງປະຊຸມຈົ່ງມີສຸຂະພາບເຂັ້ມແຂງ, ປະສົບແຕ່ຜົນສຳເລັດໃນໜ້າທີ່ວຽກງານຂອງຕົນ.

ອວຍພອນຄວາມສາມັກຄີມິດຕະພາບລະຫວ່າງພຸດທະສາສະໜາ ແລະປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນເລື້ອຍໆໄປ.

ອວຍພອນ ກອງປະຊຸມໃຫຍ່ ຈົ່ງສຳເລັດຜົນຢ່າງສະຫງ່າງາມ.

ຂ້າພະເຈົ້າ. ຂໍອວຍພອນໃຫ້ ບັນດາແຂກຜູ້ແທນ ແລະກອງປະຊຸມຈົ່ງປະສົບແຕ່ຄວາມສຳເລັດຜົນ.

ຂໍຂອບໃຈ.



ພະອາຈານ ອຸມຊູ່ມ ປະທານກິດຕິມະສັກ ຂອງແນວໂຮມສາມັກຄິເພື່ອກໍ່ສ້າງ
ແລະປົກປັກຮັກສາປິຕຸພູມ ກຳປູເຈຍ, ປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່
ຄັ້ງທີ III.

ບົດປະກອບຄຳເຫັນຂອງຄະນະຜູ້ແທນສົງ ກຳປູເຈຍ ໃນ ໂອກາດກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດ-ທະສາສະໜາສຳພັນລາວ (22 – 23 / 2 / 1989)

ຂໍນະມັດສະການ ພະເຖລານຸເຖລະ,

ຈະເລີນພອນ ທ່ານປະທານສູນກາງແນວລາວສ້າງຊາດ ຜູ້ຕາງໜ້າສູນກາງພັກ ແລະ ລັດຖະບານ ແຫ່ງ ສປປ ລາວ,

ຂໍນະມັດສະການ ພະເຖລານຸເຖລະ ຄະນະປະທານ ທີ່ເຄົາລົບ,

ນັບຖືບັນດາຜູ້ແທນ ແລະ ແຂກທີ່ມີກຽດທັງຫລາຍ,

ມື້ນີ້, ຄະນະຜູ້ແທນສົງ ສາມັກຄີແລະເອກະພາບແຫ່ງສາທາລະນະລັດປະຊາຊົນກຳປູເຈຍ ຮູ້ສຶກເປັນກຽດທີ່ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນລາວ. ກ່ອນອື່ນໝົດ, ຕາງໜ້າໃຫ້ສະພາແນວໂຮມເພື່ອປົກປັກຮັກສາແລະກໍ່ສ້າງປະເທດຊາດ ພາຍໃຕ້ການນຳພາຂອງ ທ່ານ ເຈັງສິມ ແລະຕາງໜ້າໃຫ້ພະສົງສາມະເນນ ແລະຊາວພຸດພາຍໃນປະເທດ ພາຍໃຕ້ການນຳພາຂອງພະອາຈານ ເທບວົງ, ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຕໍ່ຄະນະກຳມະການແນວລາວສ້າງຊາດ ຈຶ່ງໄດ້ເຊື້ອເຊີນຄະນະຜູ້ແທນສົງກຳປູເຈຍໃຫ້ມາເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນລາວ.

ຄະນະຜູ້ແທນພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະອວຍພອນໃຫ້ກອງປະຊຸມໃຫຍ່ຈົ່ງໄດ້ຮັບຜົນສຳເລັດອັນດີ ແລະ ໂດຍສະເພາະຢ່າງຍິ່ງ ຂໍອວຍພອນໃຫ້ອົງການພຸດທະສາສະໜາສຳພັນລາວ ຈົ່ງເຕີບໃຫຍ່ຂະຫຍາຍຕົວ ແລະໝັ້ນຄົງຕະຫລອດໄປ.

ຂ້າພະເຈົ້າ ຂໍອະນຸຍາດລາຍງານການເຄື່ອນໄຫວຂອງພະພຸດທະສາສະໜາ

ໃນປະຈຸບັນ ຢູ່ ກຳປູເຈຍ ດັ່ງລຸ່ມນີ້:

1) ສະພາແນວໂຮມເພື່ອປົກປັກຮັກສາ ແລະກໍ່ສ້າງປະເທດຊາດ ແມ່ນສະຖາບັນສູງສຸດ ຊຶ່ງມີພະສົງສາມະເນນທຸກໆຂັ້ນເປັນສະມາຊິກ.

2) ກົມການສາສະໜາ ເປັນຜູ້ຮັບຜິດຊອບໃນການເຜີຍແຜ່ຂ່າວຄາວ, ການຄົ້ນຄວ້າ ແລະ ເກັບກຳຂໍ້ສະເພີຕ່າງໆ.

3) ຢູ່ສາທາລະນະລັດປະຊາຊົນກຳປູເຈຍ ມີພະພຸດທະສາສະໜາອັນດຽວເທົ່ານັ້ນ ຊຶ່ງແມ່ນພຸດທະສາສະໜາແຫ່ງຄວາມສາມັກຄີ ແລະຄວາມເປັນເອກະພາບຂອງພະສົງສາມະເນນຜູ້ຮັກຊາດ.

4) ຜູ້ທີ່ເຂົ້າບວດເປັນພະ ຈະຕ້ອງເຄົາລົບກົດໝາຍຂອງລັດ ແລະກົດລະບຽບຂອງພະພຸດທະສາສະໜາຢ່າງເຄັ່ງລັດ.

ປະຈຸບັນນີ້, ສະພາແນວໂຮມເພື່ອປົກປັກຮັກສາ ແລະກໍ່ສ້າງປະເທດຊາດ ໄດ້ເອົາໃຈໃສ່ເຜີຍແຜ່ບົດບາດຂອງພະພຸດທະສາສະໜາຢູ່ພາຍໃນປະເທດຄື:

1) ມີຈຳນວນ 6.651 ຄົນແລ້ວ ໄດ້ຮັບການອະນຸຍາດໃຫ້ເຂົ້າບວດຕາມຄວາມປະສົງຂອງເຂົາເຈົ້າ.

2) ວັດ ຈຳນວນ 2.399 ແຫ່ງ ຢູ່ພາຍໃນປະເທດ ໄດ້ຮັບການສ້ອມແປງ ເພື່ອໃຫ້ພະສົງສາມະເນນໄດ້ຢູ່ອາໄສ.

3) ພວກເຮົາມີວິທີການນຳພາພະສົງສາມະເນນ ເພື່ອປະຕິບັດທຳມະວິໄນຂອງພະພຸດທະເຈົ້າ ແລະຕ້ອງເຄົາລົບ ແລະ ປະຕິບັດຢ່າງເຄັ່ງຄັດ ເພື່ອເຮັດໃຫ້ເຂົາເຈົ້າເອງ ກາຍເປັນພະສົງທີ່ບໍລິສຸດ.

4) ທຳການເຜີຍແຜ່ພະທຳມະວິໄນໂດຍຜ່ານການຂຽນລົງໃນປຶ້ມຕ່າງໆ.

5) ທຸກໆ ວັນສິນ ແລະວັນສຳຄັນທາງສາສະໜາ ໄດ້ມີພິທີໄຫວ້ພະ (ພິທີຮັບສິນ) ໃນຕອນເຊົ້າທາງວິທະຍຸ ແລະຕອນຄ່ຳຄືນ ໄດ້ມີການເທດສະໜາທຳ (ທຳມະເທດສະໜາ) ທາງວິທະຍຸ ແລະ ໂທລະພາບ.

6) ທຸກໆວັນ ໄດ້ມີພິທີມະນັດສະການ ພະລັດຕະນະໄຕ ທາງວິທະຍຸແຫ່ງຊາດ ແລະວິທະຍຸພະນົມເປັ່ນ ເພື່ອອຸທິດໃຫ້ແກ່ສັນຕິພາບໂລກ.

ພະອາຈານຜູ້ແທນທີ່ເຄົາລົບ ແລະບັນດາແຂກທີ່ຮັກແພງ!

ພາຍຫລັງໄດ້ຕິດຕາມຢູ່ກອງປະຊຸມໃຫຍ່, ຄະນະຜູ້ແທນສົງກຳປູເຈຍ ມີຄວາມພາກພູມໃຈທີ່ສຸດຕໍ່ການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຂອງອົງການພຸດທະສາສະໜາສຳພັນລາວ ໃນດ້ານການສຶກສາ ແລະການບໍລິຫານວຽກງານ. ການຂະຫຍາຍຕົວດັ່ງກ່າວ ໄດ້ຊ່ວຍໃຫ້ວຽກງານຂອງປະເທດຊາດກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ເປັນອັນໂສກຮ້າຍທີ່ສຸດ, ຕະຫລອດໄລຍະ 3 ປີ, 8 ເດືອນ ແລະ 20 ວັນ ພາຍໃຕ້ລະບອບກຳປູເຈຍປະຊາທິປະໄຕຂອງພວກດັບສູນເຊື້ອຊາດໂປນປົດ, ສາສະໜາພຸດຂອງກຳປູເຈຍ ໄດ້ຖືກລົບລ້າງໄປ. ໂດຍຮ່າງທັງໝົດລວມທັງພະພຸດທະສາສະໜາ ຊຶ່ງເຄີຍມີຄວາມຮຸ່ງເຮືອງເຫລືອງເຫລື້ອມ ແລະມີການພົວພັນອັນດີ ດ້ວຍການແລກປ່ຽນ (ສະມະນະທູດ) ນຳກັນ ລະຫວ່າງ ລາວ ແລະກຳປູເຈຍ ໄດ້ຖືກລົບລ້າງໄປຢ່າງສິ້ນເຊີງ, ຄະນະຜູ້ແທນພະສົງພວກເຮົາ ຄົງບໍ່ສາມາດມາຮ່ວມກອງປະຊຸມໃຫຍ່ດັ່ງນີ້ໄດ້ ຖ້າວ່າພວກເຮົາບໍ່ມີວັນລຳຄັນທາງປະຫວັດສາດ 2 ວັນຄື ວັນທີ 2/12/1978 ແລະວັນທີ 7/1/1979 ບວກກັບການຊ່ວຍເຫລືອອັນສູງສົ່ງຈາກປະຊາຊົນຫວຽດນາມ, ລາວ, ສະຫະພາບໂຊວຽດ ແລະປະເທດສັງຄົມນິຍົມອ້າຍນ້ອງອື່ນໆ.

ດັ່ງນັ້ນ, ນັບແຕ່ວັນແຫ່ງໄຊຊະນະ ຄືວັນທີ 7/1/1979 ຈົນເຖິງ 1989 ຊຶ່ງເປັນເວລາ 10 ກວ່າປີແລ້ວ, ພະພຸດທະສາສະໜາຢູ່ກຳປູເຈຍ ໄດ້ຮັບການຟື້ນຟູຄືນໃໝ່ ແລະເຮັດສຳເລັດວຽກງານຂອງຕົນຢູ່ໃນທົ່ວປະເທດ ເພື່ອກໍ່ສ້າງປິຕຸພູມຂອງພວກຂ້າພະເຈົ້າ ພ້ອມທັງໄດ້ພົວພັນທາງສາກົນໃນດ້ານສາສະໜາ ເພື່ອຄວາມປອດໄພ ແລະສັນຕິພາບໃນທົ່ວໂລກ.

ຄະນະຜູ້ແທນສົງກຳປູເຈຍ ຫວັງວ່າ ໃນໄລຍະຜ່ານມາ ກໍ່ຄືໃນປະຈຸບັນ ແລະໃນອະນາຄົດ; ຄວາມສາມັກຄີ, ມິດຕະພາບ ແລະ ການຮ່ວມມືລະຫວ່າງຊາວພຸດລາວ, ຊາວພຸດຫວຽດນາມ ແລະຊາວພຸດກຳປູເຈຍ ຈະຢູ່ໃກ້ຊິດຕິດແທດກັນຕະຫລອດໄປ ແລະຮ່ວມສາຍພົວພັນແບບເພື່ອນມິດ ດ້ວຍການຕໍ່ສູ້ຢູ່ໃນແຕ່ລະປະເທດໃຜລາວ ເພື່ອການດຳລົງຄົງຕົວ ແລະການພັດທະນາໃຫ້ໄດ້ຮັບຜົນສຳເລັດພາຍໃຕ້ການນຳພາຂອງພັກຕົນ ແລະກໍ່ຖືເອົາພັກ ມາກຊິດເລນິນນິດເປັນເຂັມທິດ.

ສຸດທ້າຍນີ້, ອີກຄັ້ງໜຶ່ງ ຄະນະຜູ້ແທນສົງກຳປູເຈຍ ຂໍສະແດງຄວາມຊົມເຊີຍການເຕີບໃຫຍ່ຂະຫຍາຍຕົວ ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແລະຂໍອວຍພອນໃຫ້ບັນດາຜູ້ແທນສົງ. ທ່ານປະທານແນວລາວສ້າງຊາດ ແລະບັນດາແຂກຜູ້ມີກຽດ ຈົ່ງມີສຸຂະພາບເຂັ້ມແຂງ ແລະຈົ່ງໄດ້ຮັບຜົນສຳເລັດໃໝ່ໃຫຍ່ຫລວງກວ່າເກົ່າ ໃນໜ້າທີ່ຂອງຕົນ.

ດ້ວຍອຳນາດຄຸນພະສີລັດຕະນະໄຕ, ຂໍໃຫ້ສັນຕິພາບຈົ່ງດຳລົງຄົງຕົວຢູ່ໃນທົ່ວໂລກ, ຂໍໃຫ້ເຫງົ້າພະລັງແຫ່ງຄວາມສາມັກຄີ, ມິດຕະພາບ ແລະການຮ່ວມມືຂອງຫວຽດນາມ, ລາວ, ກຳປູເຈຍ, ສະຫະພາບໂຊວຽດ, ແລະປະເທດສັງຄົມນິຍົມອື່ນໆ ແລະປະຊາຊົນຜູ້ກ້າວໜ້າຢູ່ໃນໂລກ ຈົ່ງໝັ້ນຄົງຖາວອນຕະຫລອດໄປ.

ຂໍຂອບໃຈ.

ພະອາຈານ ຄຳໃບ ລາມະ ດ. ດາດັງ ປະທານອົງການຊາວພຸດອາຊີເພື່ອ
ສັນຕິພາບ, ຫົວໜ້າຊາວພຸດມົງໂກນ, ກຳມະການໃນຄະນະປະທານສະພາສັນຕິພາບໂລກ,
ປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ III.

ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການ
ພຸດທະສາສະໜາສຳພັນແຫ່ງປະເທດລາວ
(ວຽງຈັນ, ແຕ່ວັນທີ 22 ເຖິງວັນທີ 23 ເດືອນ ກຸມພາ 1989)

ຄຳປາໄສ ໂດຍທ່ານ ຄຳໄບລາມາ ເດເຣດ ກາດັມ

ປະທານອົງການຊາວພຸດ ເອເຊັຽ ເພື່ອສັນຕິພາບ

ກ່ອນອື່ນໝົດ, ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍອັນອົບອຸ່ນ ແລະ ຄວາມອວຍພອນອັນປະເສີດມາຍັງພວກທ່ານຜູ້ແທນ ທີ່ເຂົ້າຮ່ວມກອງປະຊຸມໃຫຍ່, ແລະຂໍສະແດງຄວາມຮູ້ບຸນຄຸນອັນຈິງໃຈ ຕໍ່ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ທີ່ໄດ້ເຊື້ອເຊີນຂ້າພະເຈົ້າມາຮ່ວມກອງປະຊຸມໃຫຍ່ຄັ້ງນີ້.

ຂ້າພະເຈົ້າເຫັນວ່າ ມັນມີຄວາມໝາຍສຳຄັນທີ່ພະສົງລາວໄດ້ເຕົ້າໂຮມກັນຢູ່ກອງປະຊຸມໃຫຍ່ຂອງພວກທ່ານ ເພື່ອສະຫລຸບວຽກງານທີ່ໄດ້ປະຕິບັດໃນໄລຍະຜ່ານມາ ແລະເພື່ອວາງໜ້າທີ່ວຽກງານໃໝ່ໃນຊຸມປີຕໍ່ໄປ.

ໃນຂະນະທີ່ໄດ້ມາຮ່ວມກອງປະຊຸມໃຫຍ່ຊາວພຸດທີ່ວຽງຈັນ, ນະຄອນຫລວງອັນສວຍງາມຂອງປະເທດພວກທ່ານນີ້, ພວກຂ້າພະເຈົ້າເຫັນໄດ້ຄວາມກ້າວໜ້າອັນປະຈັກຕາ ທີ່ປະຊາຊົນແລະພະສົງລາວພວກທ່ານ ໄດ້ສ້າງມາໃນໄລຍະເວລາອັນສັ້ນໆພຽງ 13 ປີ ຢູ່ໃນເງື່ອນໄຂແຫ່ງສັນຕິພາບ, ມິດຕະພາບ, ແລະ ການຮ່ວມມືເພື່ອເຜີຍແຜ່ຄຳສັ່ງສອນອັນສັກສິດຂອງພະພຸດທະເຈົ້າຂອງພວກເຮົາ ກ່ຽວ

ກັບສັນຕິພາບ, ຄວາມຮັກຫອມ ຄວາມດີ ແລະ ຄວາມສະຫງົບສຸກໃນລະຫວ່າງບັນດາພະສົງແລະຜູ້ເຊື່ອຖືສາສະໜາທັງຫລາຍ, ເພື່ອປົກປັກຮັກສາ ວັດທະນະທຳແລະມູນເຊື້ອຂອງສາສະໜາພຸດແລະເພື່ອສຶກສາອົບຮົມປະຊາຊົນ ບົນຈິດໃຈແຫ່ງສັນຕິພາບ.

ໂດຍສະເພາະຢ່າງຍິ່ງ, ຂ້າພະເຈົ້າຂໍສັນລະເສີນທັດສະນະ ອັນຕັ້ງໜ້າຂອງອົງການຈັດຕັ້ງພວກທ່ານ ທີ່ເປັນນຶ່ງຂອງບັນດາສູນກາງອົງການຊາວພຸດອາຊີແຫ່ງຊາດເພື່ອສັນຕິພາບ, ໃນການຊຸກຍູ້ແລະເສີມຂະຫຍາຍການເຄື່ອນໄຫວສ້າງສັນຕິພາບຂອງອົງການຊາວພຸດອາຊີເພື່ອສັນຕິພາບ, ໃນການຂົນຂວາຍຄວາມພະຍາຍາມຂອງມວນຊົນຜູ້ເຊື່ອຖືສາສະໜາພຸດສ່ວນຫລວງຫລາຍ ເພື່ອພາລະກິດອັນສູງສົ່ງຂອງສັນຕິພາບແລະຄວາມປອດໄພ. ການນຳຂອງອົງການ ເອບີຊີພີ ຕີລາຄາສູງ ການປະກອບສ່ວນຂອງພະສົງລາວ ຊຶ່ງເປັນກຳລັງທາງສັງຄົມອັນຫ້າວຫັນ ເຂົ້າໃນພາລະກິດລວມແຫ່ງການສ້າງສາປະເທດຊາດ ແລະ ປົກປັກຮັກສາສັນຕິພາບແລະຄວາມເປັນທຳໃນທົ່ວໂລກ.

ເມື່ອບໍ່ດົນມານີ້, ບັນຍາກາດຢູ່ບົນເວທີສາກົນ ໄດ້ໃຫ້ຄວາມອຳນວຍແລະຄວາມຫວັງກວ່າເກົ່າ, ບາດກ້າວທີ່ຕັ້ງໜ້າຈຳນວນນຶ່ງກໍໄດ້ມີຂຶ້ນເພື່ອລົດຜ່ອນຄວາມເຄັ່ງຕຶງສາກົນ, ໂດຍສະເພາະແມ່ນຢູ່ໃນຂົງເຂດອາຊີອາຄະເນ. ພວກຂ້າພະເຈົ້າມີຄວາມດີໃຈທີ່ເຫັນວ່າການພົວພັນ ແລະ ຄວາມເຂົ້າອົກເຂົ້າໃຈຊຶ່ງກັນແລະກັນ

ລະຫວ່າງລາວແລະເພື່ອນບ້ານຂອງຕົນກໍາລັງດີຂຶ້ນ.

ພາຍໃຕ້ບັນດາເງື່ອນໄຂ ໃນປະຈຸບັນດັ່ງກ່າວ, ບົດບາດຂອງນັກສາສະໜາ ໃນການຕໍ່ສູ້ເພື່ອສັນຕິພາບ ພອມເຕີບໃຫຍ່. ຂ້າພະເຈົ້າເຊື່ອໝັ້ນວ່າ ມັນມີສະພາບການອັນເໝາະສົມແລ້ວ ທີ່ຈະຊອກຫາຄໍາຕອບແກ່ບັນດາ ບັນຫາອັນຮີບຮ້ອນໃນປະຈຸບັນ ຕາມຄໍາສັ່ງສອນຂອງພະພຸດທະເຈົ້າ, ຊຶ່ງເປັນອາຈານຜູ້ຍິ່ງໃຫຍ່ຂອງພວກເຮົາ, ແລະນໍາໃຊ້ຄໍາສັ່ງສອນເຫລົ່ານີ້ຢ່າງຫ້າວຫັນເຂົ້າໃນເງື່ອນໄຂອັນໃຫຍ່ຂອງຊີວິດໃນທຸກວັນນີ້ ຕາມຂະບວນການສັນຕິພາບ.

ດັ່ງພວກທ່ານໄດ້ຮູ້ຄະນະກໍາມາທິການ ກ່ຽວກັບສັນຕິພາບທາງດ້ານການສຶກສາທີ່ເປັນນຶ່ງຂອງບັນດາຄະນະກໍາມາທິການ ທີ່ສໍາຄັນຂອງຂະບວນການຂອງພວກເຮົາ, ໄດ້ດໍາເນີນການຢູ່ລາວ ຄະນະກໍາມາທິການນີ້ຊຶ່ງແມ່ນ ພະອາຈານທອງດູນ ອະນັນຕະສຸນທອນ ເປັນຫົວໜ້າໄດ້ເຮັດຫລາຍສິ່ງຫລາຍຢ່າງ ຊຶ່ງສ່ວນຫລາຍແລ້ວແມ່ນຢູ່ໃນຂັ້ນທ້ອງຖິ່ນ, ສະນັ້ນ ດັ່ງທີ່ອົງການ ເອບີຊີພີ ໄດ້ໃຫ້ຄວາມສໍາຄັນຕໍ່ການສຶກສາອົບຮົມປະຊາຊົນ ບົນຈິດໃຈແຫ່ງສັນຕິພາບ, ຂ້າພະເຈົ້າຄິດວ່າ ສູນກາງແຫ່ງຊາດຂອງພວກທ່ານ ຈະເຮັດວຽກງານໃຫ້ມີປະສິດທິພາບກວ່າເກົ່າ ຊຶ່ງບໍ່ພຽງແຕ່ຂັ້ນທ້ອງຖິ່ນເທົ່ານັ້ນ ຫາກຍັງຕ້ອງເຮັດທີ່ອົງການຈັດຕັ້ງ ແລະສົ່ງເສີມການເປີດກອງປະຊຸມ, ເປີດກວ້າງຂອງຄະນະກໍາມາທິການຂຶ້ນໃນປີນີ້.

ສະນັ້ນ, ຂ້າພະເຈົ້າຂໍອວຍພອນພະສົງລາວ ຈົ່ງປະສົບຜົນສໍາເລັດແລະຄວາມກ້າວໜ້າອັນໃຫຍ່ຫລວງກວ່າເກົ່າ ໃນຄວາມພະຍາຍາມອັນເຜີຍແຜ່ ຂອງ

ພວກທ່ານ ເພື່ອຄວາມຜາສຸກສະບາຍດີຂອງສັບພະສັດທັງປວງ ແລະ ຫວັງວ່າການຮ່ວມມືອັນສະໜິດສະໜົມ ລະຫວ່າງພະສົງຂອງສອງປະເທດ ພວກເຮົາຈະເຂັ້ມແຂງແລະຂະຫຍາຍຕົວໄປເລື້ອຍໆ.

ຕໍ່ໄປນີ້ ຂ້າພະເຈົ້າຂໍອ່ານສານຄຳນັບຂົມເຊີຍ ຈາກອົງການຈັດຕັ້ງຂອງພວກຂ້າພະເຈົ້າ ຊຶ່ງແມ່ນອົງການຊາວພຸດອາຊີເພື່ອສັນຕິພາບ.

ສານອວຍພອນຂອງຊາວພຸດອາຊີເພື່ອສັນຕິພາບ ເຖິງກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການ ຊາວພຸດທະສາສະໜາສຳພັນແຫ່ງປະເທດລາວ

ພວກຂ້າພະເຈົ້າຮູ້ສຶກມີຄວາມດີໃຈ ແລະມີກຽດທີ່ໄດ້ສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະຄຳອວຍພອນອັນປະເສີດມາຍັງກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ.

ກອງປະຊຸມໃຫຍ່ຂອງທ່ານໄຂຂຶ້ນ ໃນໄລຍະທີ່ໂລກພວມຫັນປ່ຽນໄປໃນທາງບວກ ກ່ຽວກັບການພົວພັນສາກົນທີ່ກຳລັງສ້າງຄວາມໄວ້ວາງໃຈກັນ ແລະເຂົ້າໃຈກັນໃນບັນດາປະເທດຕ່າງໆ.

ພວກຂ້າພະເຈົ້າຊາວພຸດອາຊີເພື່ອສັນຕິພາບ ຂໍຊົມເຊີຍຢ່າງສຸດໃຈ ຕໍ່ທຸກຄວາມພະຍາຍາມທີ່ໄດ້ປະຕິບັດມາໃນການສ້າງສັນຕິພາບ ແລະຄວາມໝັ້ນຄົງໃນໂລກໂດຍສະເພາະໃນອາຊີອາຄະເນ ແລະອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ໄດ້ປະກອບສ່ວນເຂົ້າໃນວຽກງານນີ້ຢ່າງໃຫຍ່ຫລວງ.

ຊາວພຸດລາວ ໄດ້ເຜີຍແຜ່ຄຳສັ່ງສອນອັນປະເສີດ ຂອງພະພຸດທະເຈົ້າ ແລະໄດ້ສະໜັບສະໜູນ ການສ້າງສັນຕິພາບ ດ້ວຍການດຳເນີນກິດຈະການຕ່າງໆ ຂອງຊາວພຸດອາຊີເພື່ອສັນຕິພາບ, ດັ່ງນັ້ນຈຶ່ງເຮັດໃຫ້ພວກຊົນຮູ້ແຈ້ງຈຸດປະສົງແລະເປົ້າໝາຍຂອງຊາວພຸດອາຊີເພື່ອສັນຕິພາບ.

ອົງການຂອງພວກຂ້າພະເຈົ້າຕີລາຄາສູງ ຕໍ່ການສຶກສາອົບຮົມປະຊາຊົນ

ຕາມຈິດໃຈຂອງສັນຕິພາບ ເຊິ່ງສອດຄ່ອງກັບຄຳສັ່ງສອນອັນປະເສີດຂອງພະພຸດທະເຈົ້າໃນທຳນອງນີ້, ຊາວພຸດລາວກຳລັງມີບົດບາດອັນສຳຄັນ ແລະພວກຂ້າພະເຈົ້າຫວັງວ່າສຳນັກງານ ພອສ. ລາວ ຈະສືບຕໍ່ວຽກງານອັນສູງສົ່ງນີ້ຢ່າງບໍ່ຢຸດຢັ້ງ.

ພວກຂ້າພະເຈົ້າເຊື່ອໝັ້ນ ແລະຫວັງວ່າ ກອງປະຊຸມໃຫຍ່ຂອງທ່ານຈະເປີ່ມກຳລັງແຮງແກ່ວຽກງານສືບຕໍ່ ແລະວຽກງານໃນຂ້າງໜ້າຂອງຊາວພຸດລາວໃນການກໍ່ສ້າງປະເທດຊາດ, ສັນຕິພາບແລະຄວາມສາມັກຄີໃນໂລກ.

ໃນນາມຂອງຊາວພຸດອາຊີ, ພວກຂ້າພະເຈົ້າຂໍອວຍພອນໃຫ້ກອງປະຊຸມໃຫຍ່ ຈົ່ງໄດ້ຮັບຜົນສຳເລັດອັນໃຫຍ່ຫລວງ ຂໍໃຫ້ສັນຕິພາບອັນໝັ້ນຄົງ ແລະຄວາມອຸດົມສົມບູນຈົ່ງເກີດມີແກ່ທຸກໆທ່ານ.

ຂໍໃຫ້ຄຸນພະສີລັດຕະນະໄຕ ຈົ່ງບັນດານໃຫ້ກອງປະຊຸມໃຫຍ່ສ້ຽງສຸດລົງດ້ວຍຜົນສຳເລັດອັນຈົບງາມ.

ອຸລັງບາຕໍ, ວັນທີ 18 ກຸມພາ 1989
ປະທານຊາວພຸດອາຊີເພື່ອສັນຕິພາບ
ຄຳໄບ ລາມະ ດ. ດາດັມ.

ທ່ານ ເຈົ້າຄຸນ ເທບປະລິຍັດສຸທິ ເຈົ້າຄະນະພາກ 8 ລາຊະອານາຈັກໄທ,

ປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ III.

ຄຳກ່າວປະກອບຄວາມເຫັນຂອງ ພະເທບປະລິຍັດສຸທີ ເຈົ້າຄະນະພາກ 8 ເຈົ້າອາວາດວັດມັດຊິມະວາດ ຈັງຫວັດອຸດອນທານີ ປະເທດໄທ (23 ກຸມພາ 2532)

ຂໍນ້ອມນະມັດສະການ ພະເຖລານຸເຖລະ,

ຈະເລີນພອນ ທ່ານປະທານສູນກາງແນວລາວສ້າງຊາດ,

ຄະນະພັກ ແລະ ລັດຖະບານ ສປປລ. ທີ່ນັບຖື,

ທ່ານປະທານ ບັນດາຜູ້ແທນ ແລະແຂກຜູ້ມີກຽດທີ່ນັບຖື ແລະຮັກແພງທັງຫລາຍ.

ຂ້າພະເຈົ້າມີຄວາມປິ້ມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຮັບກຽດມາຮ່ວມກອງປະຊຸມໃຫຍ່ ແລະສະແດງຄວາມຄິດເຫັນໃນເທື່ອນີ້ ຂໍສະແດງຄວາມຊື່ນຊົມຍິນດີຕໍ່ຄວາມສຳເລັດ ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ທີ່ໄດ້ຮ່ວມແຮງຮ່ວມໃຈສ້າງຂຶ້ນ ແລະສ້າງສັນຕິສຸກກັບປະຊາຊົນພາຍໃຕ້ຫລັກທຳຂອງພະພຸດທະສາສະໜາ. ພະພຸດສາສະໜາເປັນສາສະໜາແຫ່ງການປະຕິບັດ ວຽກງານຈະສຳເລັດລົງໄດ້ຕ້ອງອາໄສຄວາມພຽນພະຍາຍາມ, ບໍ່ໄດ້ສຳເລັດດ້ວຍການອ້ອນວອນບະບົນບວງສວງຈາກຜີສາງ ເທວະດາ ຫາກແຕ່ຕ້ອງພຽນພະຍາຍາມມຸມານະ ເອົາໃຈໃສ່ຢ່າງຈິງຈັງ ແລະຈິງໃຈຢ່າງຕໍ່ເນື່ອງ ຄວາມສຳເລັດຈຶ່ງຈະມີຜົນເປັນຈິງ, ໃນບັນຍາກາດຂອງໂລກປະຈຸບັນ ຫລາຍແຫ່ງໃນໂລກ ກຳລັງດີ້ນຮົນຕໍ່ສູ້ເພື່ອຄວາມເປັນອິດສະຫລະ ແລະສະແຫວງຫາສັນຕິພາບໂລກມະນຸດຂອງພວກເຮົາ ທີ່ຂາດສັນຕິ

ພາບຢູ່ທຸກມື້ນີ້ ເພາະມວນມະນຸດມີຈິດໃຈທີ່ແຫ້ງແລ້ງຕໍ່ກັນ ຂ້າພະເຈົ້າມີຄວາມຫວັງຢ່າງເຕັມປ່ຽມວ່າ ພວກເຮົາຈະຫັນໜ້າເຂົ້າຫາກັນດ້ວຍຄວາມຮັກແພງ ຊ່ວຍກັນສ້າງຄວາມເປັນເອກະພາບ ມີຄວາມເອື້ອເຟື້ອຕໍ່ກັນ ມີຄວາມຮັກ ຄວາມປັດຖະໜາດີຕໍ່ກັນຢ່າງຈິງໃຈ ຮັກໄຄ່ສາມັກຄີ ຄວາມຮັກຄວາມສາມັກຄີເທົ່ານັ້ນ ຈຶ່ງຈະເຮັດໃຫ້ໂລກຂອງເຮົາສົດຊື່ນໜ້າຢູ່ທົ່ວທຸກແຫ່ງຂອງໂລກ. ດັ່ງນັ້ນ ຄວາມຮັກຄວາມສາມັກຄີ ຈຶ່ງເປັນແນວທາງດີງາມຂອງພວກເຮົາທຸກຄົນ, ຂໍໃຫ້ທຸກຄົນຊ່ວຍກັນ ຮັກແພງຊື່ນຊົມ ແລະຮັກຫອມໃນສິນທຳອັນນີ້.

ທ່ານຜູ້ມີກຽດທັງຫລາຍ,

ການປະຕິວັດ ຫລື ການປ່ຽນແປງໃດໆກໍຕາມ, ຈຸດໃຫຍ່ຄືຄວາມສະຫງົບສຸກຂອງປະຊາຊົນນີ້ ເປັນຈຸດສູງສຸດຂອງລັດຖະບານ ແລະ ປະຊາຊົນຕ້ອງການແຕ່ສິ່ງນີ້ຈະເປັນຈິງໄດ້ ພວກເຮົາຈະຕ້ອງຮ່ວມມືຮ່ວມໃຈສ້າງສັງຄົມໃຫ້ມີຄວາມສະເໝີພາບໃນ 2 ດ້ານຄື:

1) ຄວາມສະເໝີພາບທາງດ້ານຄວາມຄິດເຫັນ ເພື່ອໃຫ້ທຸກຄົນມີແນວຄວາມຄິດເຫັນໃນແນວທາງດຽວກັນຕາມຫລັກການ ແລະເຫດຜົນ ຍອມຮັບໃນແນວທາງປະຕິບັດຂອງສູນລວມວ່າ ຈະຊ່ວຍສ້າງຄວາມເປັນປຶກແຜ່ນ ໃຫ້ກັບປະຊາຊົນໃນສັງຄົມໂລກຢ່າງແທ້ຈິງ. ການຕໍ່ສູ້ທີ່ມີມາຍາວນານໃນປະເທດລາວ ໃນອະດີດແມ່ນເກີດຈາກຄວາມຂັດແຍ້ງໃນແນວທາງຄວາມຄຶດການສະແຫວງຫາ ໃນທາງທີ່ບໍ່ຖືກຕ້ອງຕາມຫລັກຂອງພະພຸດທະສາສະໜາ ຈຶ່ງສ້າງຄວາມທຸກຍາກອັນໃຫຍ່ຫລວງໃຫ້ແກ່ປະຊາຊົນ ສັດຕູພາຍນອກຈະມາກມາຍຂະໜາດໃດ ພວກເຮົາ

ສາມາດເອົາຊະນະໄດ້. ແຕ່ສັດຕູຕົວໃຫຍ່ຄື ການເອົາຊະນະຄວາມຄິດເຫັນຂອງຕົວເຮົາເອງ, ດັ່ງນັ້ນ ພະພຸດທະເຈົ້າ ຈຶ່ງສອນວ່າ ຄວນທຳຄວາມເຫັນຂອງເຮົາໃຫ້ຖືກຕ້ອງ ສອດຄ່ອງຫາແນວທາງ ແລະສ້າງແປງຄວາມຄິດເຫັນໃຫ້ດີງາມ. ມີຄວາມສະເໝີກັນ.

2) ຄວາມສະເໝີພາບໃນແນວທາງປະຕິບັດສັງຄົມທຸກສັງຄົມ ຕ້ອງການຄວາມເປັນລະບຽບຮຽບຮ້ອຍ ເຄົາລົບຕໍ່ກັນ, ມີຄວາມເຊື່ອໝັ້ນກັນຢ່າງຈິງໃຈ ຫລັກສິນທຳຄືແບບແຜນຊີວິດທີ່ດີງາມຂອງພວກເຮົາ ສັງຄົມໃດຫາກມີການປະຕິບັດຕາມໃນແນວທາງດຽວກັນ ກໍຈະເກີດສັນຕິສຸກຢ່າງແນ່ນອນ, ຈະຄິດສ້າງແປງອັນໃດກໍສະດວກສະບາຍ ເພາະທຸກຄົນປະຕິບັດຕາມກົດສັງຄົມຄວາມເທົ່າທຽມກັນຂອງທຸກຄົນໃນແນວທາງນີ້ ຈຶ່ງເປັນແນວທາງທີ່ດີງາມຂອງພວກເຮົາ. ຄວາມສະເໝີພາບຄວາມຖືກຕ້ອງດີງາມຄືຄວາມຍຸຕິທຳໃນສັງຄົມ. ມະນຸດທີ່ຢູ່ໃນໂລກທຸກຄົນ ຕ້ອງການມີຊີວິດຢູ່ຢ່າງສະຫງົບສຸກ ບໍ່ຕ້ອງການໃຫ້ຜູ້ໃດມາເປັນເຈົ້າເໜືອຫົວ, ຕ້ອງການມີຄວາມອິດສະລະພາບ ທັງທາງດ້ານຄວາມຄິດ ແລະການກະທຳ ການບໍ່ມີການແຊກແຊງ ຜູ້ໃຫຍ່ບໍ່ບຽດບຽນຜູ້ນ້ອຍ, ປະເທດໃຫຍ່ຫັນມາຊ່ວຍປະເທດນ້ອຍ ພົວພັນດ້ວຍຄວາມຮັກແພງ ຈະຊ່ວຍໃຫ້ໂລກເຮົາມີຄວາມໜ້າຢູ່ຫລາຍຂຶ້ນ ເພາະມີຄວາມໄວ້ວາງໃຈກັນ ບໍ່ມີຄວາມອາເລະແວງຕໍ່ກັນ. ຂ້າພະເຈົ້າຫວັງວ່າສັນຕິພາບ, ສັນຕິສຸກ ຈະຕ້ອງເກີດມີຢ່າງແນ່ນອນ ເພາະການຫັນປ່ຽນຂອງການເມືອງລະຫວ່າງປະເທດທີ່ມີຄວາມຂັດແຍ້ງກັນ ຫັນມາໂອ້ລົມປອງດອງກັນ ຂໍໃຫ້ພວກເຮົາຊ່ວຍກັນຊຸກຍູ້ໃຫ້ເກີດສັນຕິພາບຢ່າງຖາວອນ ບົນພື້ນໂລກນີ້ເພື່ອ

ຄວາມຢູ່ດີມີສຸກຂອງມວນມະນຸດຊາດ.

ໃນທ້າຍສຸດນີ້, ຂ້າພະເຈົ້າ ຕາງໜ້າຄະນະພະສົງໄທ ຂໍສະແດງຄວາມຮັກແພງຕໍ່ອ້າຍນ້ອງຊາວລາວ ທີ່ມີຄວາມພັກແພັນໃນການສ້າງຊາດ ແລະປົກປັກຮັກສາພະພຸດທະສາສະໜາ ແລະ ຫວັງວ່າມິດຕະພາບ ສາຍສຳພັນຂອງອ້າຍນ້ອງໄທ – ລາວ ຈະໝັ້ນຍືນເຊື່ອມສອງຝັ່ງແມ່ນ້ຳຂອງໃຫ້ເປັນບ້ານພີ່ເມືອງນ້ອງ ປອງດອງສາມັກຄີຮັກຫອມຮ່ວມສ້າງແປງແນວທາງສັນຕິພາບ ໃນພາກພື້ນນີ້ ຕາມຫລັກຄຳສອນຂອງພະພຸດທະສາສະໜາ ຄືການເຄົາລົບຊຶ່ງກັນແລະກັນ, ຈິງໃຈຕໍ່ກັນ ໂດຍສະເພາະຢ່າງຍິ່ງ ຄະນະສົງລາວ, ຄະນະສົງໄທ ຄົງຈະມີຄວາມສຳພັນໝັ້ນແກ່ນຍິ່ງຂຶ້ນ ເພື່ອນຳສັນຕິສຸກມາສູ່ປະຊາຊົນໃນສອງປະເທດ.

ຂໍຂອບໃຈ.

24 / VII
ຫ້າມຈຳໜ່າຍ

ທ່ານລິນອນ ແສງມາລາ ຜູ້ຕາງໜ້າຄະນະກຳມະການລາວເພື່ອສັນຕິພາບໂລກ,

ປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ III.

ບົດກ່າວເຫັນຂອງທ່ານຜູ້ຕາງໜ້າ ຄະນະກຳມະການລາວເພື່ອສັນຕິພາບໂລກ ກ່າວຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ

ຂໍນ້ອມນະມັດສະການ ພະເຖລານຸເຖລະ,

ນັບຖືຄະນະປະທານກອງປະຊຸມ,

ນັບຖື ບັນດາຜູ້ແທນສົງ ແລະ ທ່ານຜູ້ມີກຽດທຸກທ່ານ,

ຂ້າພະເຈົ້າຮູ້ສຶກເປັນກຽດອັນສູງ ທີ່ໄດ້ຕາງໜ້າໃຫ້ແກ່ຄະນະກຳມະການລາວເພື່ອສັນຕິພາບໂລກ, ສາມັກຄີ ແລະມິດຕະພາບກັບປະຊາຊາດ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແລະກໍໄດ້ຮັບກຽດຂຶ້ນມາປະກອບຄຳເຫັນຕໍ່ທີ່ປະຊຸມອັນສຳຄັນນີ້.

ກ່ອນອື່ນ, ຂ້າພະເຈົ້າຂໍສະແດງຄວາມຄາລະວະຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ເຊິ່ງກອງປະຊຸມຄັ້ງນີ້ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງພະສົງລາວ ໃນຂະບວນວິວັດແຫ່ງການປະຕິບັດກິດສາສະໜາພຸດ, ໃນການເຜີຍແຜ່ພະທຳຄຳສັ່ງສອນຂອງພະພຸດທະເຈົ້າ ຊຶ່ງສອດຄ່ອງກັນຢ່າງກົມກຽວກັບແນວທາງນະໂຍບາຍຂອງພັກ ແລະລັດ, ສຶກສາອົບຮົມປະຊາຊົນລາວໃຫ້ມີຄວາມເຫຼື້ອມໃສ, ຫ້າວຫັນປະຕິບັດໜ້າທີ່ພົນລະເມືອງດີ ປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມ.

ຂ້າພະເຈົ້າຂໍສະແດງຄວາມນັບຖື ແລະຊົມເຊີຍຢ່າງສຸດໃຈຕໍ່ຜົນງານການ

ເຄື່ອນໄຫວຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ແລະ ພະສົງລາວໃນໄລຍະຜ່ານມາ.

ບັນດາທ່ານຜູ້ແທນ ທີ່ນັບຖື,

ເປັນທີ່ຮູ້ກັນດີແລ້ວວ່າ, ປະຈຸບັນນີ້ບັນຫາສົງຄາມ ແລະ ສັນຕິພາບເປັນບັນຫາເປັນຕາຍທີ່ພວມປະເຊີນໜ້າມວນມະນຸດ ຜົນສຳເລັດໃຫຍ່ຫລວງຂອງການຄົ້ນຄວ້າທາງດ້ານວິທະຍາສາດ – ວິທະຍາການ ໄດ້ເອື້ອອຳນວຍໃຫ້ແກ່ມວນມະນຸດເຮົາມີຄວາມຮອບຮູ້ ສາມາດນຳໃຊ້ເຕັກໂນໂລຊີ ອັນຍອດຍິ່ງຂຸດຄົ້ນນຳເອົາຄວາມອຸດົມຮັ່ງມີຂອງທຳມະຊາດມາຮັບໃຊ້ການດຳລົງຊີວິດຂອງຄົນ ເຮັດໃຫ້ໂລກມະນຸດມີຄວາມຈະເລີນສີວິໄລ ແລະກ້າວໜ້າຂຶ້ນສູ່ລະດັບສູງ. ແຕ່ໃນຂະນະດຽວກັນຄວາມສີວິໄລດັ່ງກ່າວຂອງໂລກກໍພວມຖືກຂົ່ມຂູ່ຢ່າງຮ້າຍແຮງ ຈາກໄພດັບສູນຂອງສົງຄາມ ມະຫາປະໄລ ທີ່ມະນຸດເອງເປັນຜູ້ກໍ່ຂຶ້ນຍ້ອນການແຂ່ງຂັນກັນຜະລິດແລະສະສົມອາວຸດຈຳນວນມາກມາຍມະຫາສານ ໂດຍສະເພາະອາວຸດນິວເຄຼຍຊຶ່ງປະຈຸບັນມີຄວາມສາມາດທຳລາຍລ້າງໂລກນີ້ໄດ້ໃນຊົ່ວພິບຕາ.

ຕໍ່ໜ້າໄພອັນຕະລາຍດັ່ງກ່າວ ບັນດາປະຊາຊາດທີ່ຮັກຫອມສັນຕິພາບໃນທົ່ວໂລກ ຈຶ່ງໄດ້ອອກແຮງເຄື່ອນໄຫວຢ່າງເປັນຂະບວນແຂງແຮງດ້ວຍຫລາຍຮູບຫລາຍວິທີ, ດ້ວຍຮູບການຂອງຂະບວນການ ແລະອົງການຈັດຕັ້ງມະຫາຊົນສາກົນຕ່າງໆ ເຊັ່ນ: ສະພາສັນຕິພາບໂລກ ຊຶ່ງມີສະມາຊິກກວ່າ 140 ປະເທດ (ລາວເຮົາກໍເປັນສະມາຊິກ), ອົງການສາມັກຄີກັບປະຊາຊົນອາຟຣິກກາ – ອາຊີ (ລາວເຮົາກໍເປັນສະມາຊິກ), ອົງການຊາວພຸດອາຊີເພື່ອສັນຕິພາບ (ອພສ. ລາວ

ເຮົາກໍ່ເປັນສະມາຊິກ) ແລະ ອື່ນໆ........ ຕໍ່ສູ້ເພື່ອກຳຈັດໄພພິບັດຂອງສົງຄາມ ໂດຍສະເພາະສົງຄາມນິວຄະເລຍ ແລະຕ້ານການຈ່ອງເສັງປະກອບອາວຸດເພື່ອປົກປັກຮັກສາສັນຕິພາບ ແລະ ຄວາມປອດໄພຂອງມະນຸດຊາດ.

ສຳລັບຂະບວນການສັນຕິພາບຂອງລາວເຮົາ, ຄະນະກຳມະການລາວເພື່ອສັນຕິພາບໂລກ, ສາມັກຄີ ແລະມິດຕະພາບກັບປະຊາຊາດ ຫລື ເອີ້ນຫຍໍ້ວ່າ "ຄ ລ ສ ສ ມ" ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການເມື່ອເດືອນ ສິງຫາ 1982 ໃຫ້ເປັນອົງການຈັດຕັ້ງມະຫາຊົນທີ່ມີລັກສະນະສາກົນທີ່ເປັນຕົວແທນໃຫ້ແກ່ທາງສຽງມະຫາຊົນລາວ ເຄື່ອນໄຫວໃນເວທີສາກົນ ປະກອບສ່ວນໃນພາລະກິດລວມຂອງບັນດາປະຊາຊາດທີ່ຕໍ່ສູ້ເພື່ອສັນຕິພາບ, ຕໍ່ຕ້ານສົງຄາມ ແລະສະກັດກັ້ນໄພພິບັດຂອງສົງຄາມນິວຄະເລຍ, ເພື່ອການຫລຸດຜ່ອນຄາຍຄວາມເຄັ່ງຕຶງສາກົນ, ເພື່ອຄວາມສາມັກຄີ, ມິດຕະພາບ ແລະຄວາມເຂົ້າອົກເຂົ້າໃຈກັນ, ຮ່ວມມືກັນໃນການສ້າງສາພັດທະນາ ແລະຢູ່ຮ່ວມກັນຢ່າງສັນຕິ ແລະເພື່ອສະໜັບສະໜູນການຕໍ່ສູ້ອັນຖືກຕ້ອງເປັນທຳຂອງປະຊາຊົນບັນດາປະເທດເພື່ອປົດປ່ອຍຊາດ, ເອກະລາດແຫ່ງຊາດ, ອິດສະລະພາບ, ປະຊາທິປະໄຕ ແລະຄວາມກ້າວໜ້າທາງສັງຄົມ.

ນັບແຕ່ມື້ໄດ້ຮັບການສ້າງຕັ້ງເປັນຕົ້ນມາ, ຄລສສມ. ກໍໄດ້ຕັ້ງໜ້າປະຕິບັດໜ້າທີ່ຂອງຕົນ ຮ່ວມກັບອົງການຈັດຕັ້ງ ແລະຂະບວນການສາກົນທີ່ກ້າວໜ້າຕ່າງໆໃນໂລກ ເຄື່ອນໄຫວປະກອບສ່ວນຕໍ່ສູ້ເຮັດໃຫ້ສະພາບການສາກົນ, ຊຶ່ງໃນເມື່ອກ່ອນມີຄວາມເຄັ່ງຕຶງສຸດຂະພາດຈົນເປັນໄພອັນຕະລາຍຂົ່ມຂູ່ຢ່າງຮ້າຍແຮງ ຕໍ່ຄວາມປອດໄພ ແລະການມີຊີວິດຢູ່ລອດຂອງມວນມະນຸດ, ຄ່ອຍໆຫັນປ່ຽນເປັນ

ຂັ້ນໆມາສູ່ການໂຍະຍານ ແລະຜ່ອນຄາຍຄວາມເຄັ່ງຕຶງລົງ, ຫັນປ່ຽນຈາກການປະເຊີນໜ້າທາງກຳລັງອາວຸດມາສູ່ການພົບປະເຈລະຈາ ເພື່ອແກ້ໄຂກໍລະນີພິພາດ ແລະ ຂໍ້ຂັດແຍ້ງຕ່າງໆ ໂດຍສັນຕິວິທີ ຊຶ່ງພວມກາຍເປັນທ່າອ່ຽງລວມແຫ່ງການປ່ຽນແປງໃໝ່ທາງດ້ານຈິນຕະນາການທາງການເມືອງສາກົນ ທີ່ນັບມື້ນັບໄດ້ຮັບການເສີມຂະຫຍາຍອອກຢ່າງກວ້າງຂວາງ ແລະປົກຄຸມໄປທົ່ວທຸກຂົງເຂດ ແລະພູມີພາກຂອງໂລກ.

ບົນພື້ນຖານແນວທາງນະໂຍບາຍການເມືອງຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຂອງພັກ ແລະລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໂດຍຍຶດໝັ້ນໃນໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ຜ່ານມາ ຄລສສມ. ກໍໄດ້ອອກແຮງເຄື່ອນໄຫວທັງຢູ່ພາຍໃນປະເທດ ແລະໃນເວທີສາກົນຢ່າງໄດ້ຮັບຜົນດີ.

ຢູ່ພາຍໃນປະເທດ, ຄລສສມ. ໄດ້ຈັດຕັ້ງການເຄື່ອນໄຫວສະແດງອອກໃນໂອກາດສຳຄັນຕ່າງໆ, ໂດຍປະສານສົມທົບເຂັ້ມຢ່າງດີກັບບັນດາອົງການຈັດຕັ້ງມະຫາຊົນ ແລະສັງຄົມຕ່າງໆ ເຊັ່ນ: ຊາວໜຸ່ມ, ແມ່ຍິງ, ກຳມະບານ, ແນວລາວສ້າງຊາດ, ອົງການພຸດທະສາສະໜາ ແລະອື່ນໆ, ດ້ວຍຮູບການຈັດງານໂຮມຊຸມນອນຊົນ, ຈັດປາຖະກະຖາ, ຈັດກອງປະຊຸມສາກົນ, ຈັດກອງປະຊຸມໂຕະມົນ, ອອກຖະແຫລງການ ແລະບົດຄວາມຕ່າງໆ ທາງສື່ມວນຊົນຂອງລາວ ແລະຕ່າງປະເທດ. ນອກຈາກນີ້ກໍໄດ້ຕ້ອນຮັບຄະນະຜູ້ແທນສັນຕິພາບ, ສາມັກຄີ ແລະມິດຕະພາບ ປະເທດອ້າຍນ້ອງ, ປະເທດເພື່ອນມິດ ແລະອົງການຈັດ

ຕັ້ງ ແລະຂະບວນການສາກົນຕ່າງໆ ມາຍ້ຽມຢາມລາວດ້ວຍ.

ໃນເວທີສາກົນ, ຄລສສມ. ໄດ້ມີການຕິດຕໍ່ພົວພັນປະສານສົມທົບການເຄື່ອນໄຫວເປັນປະຈຳ ກັບສະພາສັນຕິພາບໂລກ, ອົງການສາມັກຄີກັບປະຊາຊົນອາຟຣິກກາ – ອາຊີ ແລະອົງການຈັດຕັ້ງ ແລະຂະບວນການສາກົນທີ່ກ້າວໜ້າຕ່າງໆໃນໂລກດ້ວຍການສົ່ງຄະນະຜູ້ແທນເຂົ້າຮ່ວມກອງປະຊຸມສາກົນຕ່າງໆ ທີ່ອົງການດັ່ງກ່າວຈັດຂຶ້ນ ນອກຈາກນີ້, ຄລສສມ. ກໍໄດ້ມີການຕິດຕໍ່ພົວພັນແລກປ່ຽນການເຄື່ອນໄຫວ ເພື່ອສັນຕິພາບຮ່ວມກັນກັບຄະນະໂຄງການສັນຕິພາບ ແລະການພັດທະນາຂອງໄທ ເພື່ອສ້າງຄວາມເຂົ້າອົກເຂົ້າໃຈກັນລະຫວ່າງປະຊາຊົນສອງຊາດລາວ–ໄທ ດ້ວຍການແລກປ່ຽນການຍ້ຽມຢາມກັນ ທັງລະດັບນັກວິຊາການ, ນັກເຄື່ອນໄຫວຕໍ່ສູ້ເພື່ອສັນຕິພາບ, ພະສົງ ຈັດສຳມະນາຮ່ວມກັນ, ແລກປ່ຽນທາງດ້ານວັດທະນະທຳ ສິນລະປະວັນນະຄະດີ ຊຶ່ງເປັນຜົນດີປະກອບສ່ວນອັນສຳຄັນໃຫ້ແກ່ການແກ້ໄຂກໍລະນີຂັດແຍ້ງທີ່ເກີດຂຶ້ນລະຫວ່າງ 2 ປະເທດໃນໄລຍະຜ່ານມາ ແລະປັບປຸງຄວາມສຳພັນຕໍ່ກັນໃຫ້ດີຂຶ້ນເປັນລຳດັບ. ຜ່ານຂະບວນວິວັດແຫ່ງການເຄື່ອນໄຫວວຽກງານໃນໄລຍະຜ່ານມາເຮັດໃຫ້ ຄລສສມ. ເຕີບໃຫຍ່ຂະຫຍາຍຕົວຂຶ້ນ ແລະມີບົດບາດໃນຂະບວນການມະຫາຊົນສາກົນອັນເປັນການພັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະລັດໃນພາກປະຕິບັດຕົວຈິງ ປະກອບສ່ວນເຮັດໃຫ້ຊື່ສຽງຂອງ ສປປ ລາວ ສູງເດັ່ນຂຶ້ນອີກທາງໜຶ່ງໃນເວທີສາກົນ.

ບັນດາທ່ານຜູ້ແທນ ທີ່ນັບຖື,

ໃນຂະບວນການສັນຕິພາບຂອງລາວໃນໄລຍະຜ່ານມາ ອົງການພຸດທະສາສະໜາສຳພັນ ແຫ່ງປະເທດລາວ ກໍຄືພະສົງລາວ ໄດ້ຫ້າວຫັນປະກອບສ່ວນຢ່າງຕັ້ງ

ໜ້າ ໃນການເຄື່ອນໄຫວເພື່ອສັນຕິພາບ ທີ່ ຄລສສມ. ໄດ້ຈັດຕັ້ງຂຶ້ນ ໃນໂອກາດຕ່າງໆ ເປັນຕົ້ນ ຮ່ວມງານໂຮມຊຸມນຸມ, ຈັດຍ່າງເພື່ອສັນຕິພາບ, ສູດມົນເພື່ອສັນຕິພາບ. ແລກປ່ຽນການຢ້ຽມຢາມລະຫວ່າງພະສົງລາວ ແລະ ໄທ, ຈັດສຳມະນາເພື່ອສັນຕິພາບ ແລະອື່ນໆ. ນອກຈາກນັ້ນອົງການສົງດັ່ງກ່າວຂອງລາວເຮົາກໍມີບົດບາດສຳຄັນໃນອົງການຊາວພຸດອາຊີເພື່ອສັນຕິພາບ ແລະອົງການຈັດຕັ້ງສາກົນອື່ນໆດ້ວຍ.

ສະນັ້ນ, ຂ້າພະເຈົ້າຂໍຖືໂອກາດນີ້ສະແດງຄວາມເຄົາລົບນັບຖື ແລະຄວາມຂອບໃຈຢ່າງສູງຕໍ່ການປະກອບສ່ວນຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວກໍຄືພະສົງລາວໃນການເຄື່ອນໄຫວ ເພື່ອສັນຕິພາບຂອງຄະນະກຳມະການພອກຂ້າພະເຈົ້າ ແລະຫວັງວ່າໃນການເຄື່ອນໄຫວວຽກງານເພື່ອສັນຕິພາບຂອງຄະນະກຳມະການພອກຂ້າພະເຈົ້າໃນຕໍ່ໜ້າກໍຈະໄດ້ຮັບຄວາມຮ່ວມມືຈາກອົງການພຸດທະສາສະໜາເປັນຢ່າງດີ.

ຂໍອວຍພອນ ໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ຈົ່ງບັນລຸຜົນສຳເລັດຢ່າງຈົບງາມ.

ຂໍອວຍພອນແກ່ ພະອາຈານ ຜູ້ແທນສົງ ທຸກໆອົງ ພ້ອມດ້ວຍແຂກຜູ້ມີກຽດທຸກໆທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ມີອາຍຸວັນນະ ສຸຂະພະລະຕະຫລອດໄປ.

ສັນຕິພາບໂລກ ໝັ້ນຍືນ!

ຂໍຂອບໃຈ.

ບົດປະກອບຄຳເຫັນຂອງສະຫາຍ ຜູ້ຕາງໜ້າສູນກາງສະຫະພັນກຳມະບານລາວ ຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາ ສຳພັນແຫ່ງປະເທດລາວ (22 – 23 ກຸມພາ 1989)

ຂໍນະມັດສະການ ພະເຖລານຸເຖລະ ຄະນະປະທານທີ່ເຄົາລົບ,

ຂໍສະແດງຄວາມຄາລະວະຜູ້ແທນພະສົງ ແລະບັນດາຜູ້ຈົງຄຸນອຸດທິທີ່ນັບຖື.

ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າໃຫ້ອົງການຈັດຕັ້ງມະຫາຊົນ ເປັນຕົ້ນແມ່ນ: ກຳມະບານ ຊາວໜຸ່ມ ແລະ ແມ່ຍິງ ເພື່ອປະກອບຄວາມເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ຊຶ່ງໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ໃນທ່າມກາງທີ່ສະພາບຢູ່ປະເທດເຮົາ ພອມມີການຫັນປ່ຽນຈາກຈິນຕະນາການເກົ່າ ໄປສູ່ຈິນຕະນາການໃໝ່ຢ່າງແຂງແຮງ, ຮອບດ້ານແລະຄົບຊຸດຕາມທ່າອ່ຽງຂອງໂລກ, ຊຶ່ງກຳລັງຕໍ່ສູ້ທວງໃຫ້ລົດຜ່ອນກຳລັງອາວຸດ, ຕ້ານສົງຄາມນິວເຄລຍ, ເພື່ອສັນຕິພາບ, ການຢູ່ຮ່ວມກັນໂດຍສັນຕິ ແລະການຮ່ວມມືລະຫວ່າງປະຊາຊາດ.

ຜ່ານການຕິດຕາມບົດສະຫລຸບລາຍງານວຽກງານໃນໄລຍະຜ່ານມາ ແລະທິດທາງໜ້າທີ່ວຽກງານໃນຊຸມປີຕໍ່ໜ້າ ຂອງອົງການພຸດທະສາສະໜາສຳພັນແຫ່ງ

ປະເທດລາວ, ຂ້າພະເຈົ້າເຫັນວ່າມັນແມ່ນຜົນງານທີ່ບໍລິສຸດຜຸດຜ່ອງ ຊຶ່ງເກີດຈາກການອຸທິດ ແລະການເສຍສະຫລະອັນສູງສົ່ງຂອງພະສົງສາມະເນນລາວໃນທົ່ວປະເທດເອົາລວມ ແລະ ອົງການພຸດທະສາສະໜາສຳພັນແຫ່ງປະເທດລາວ ເວົ້າສະເພາະຊຶ່ງຜົນງານດັ່ງກ່າວນັ້ນ ມັນໄດ້ສ່ອງແສງເຖິງການປະກອບສ່ວນຢ່າງໃຫຍ່ຫລວງ ເຂົ້າໃນພາລະກິດປະຕິວັດຊາດ ໃນເມື່ອກ່ອນກໍຄືໄລຍະແຫ່ງການບໍ່ບປຸງ, ຂະຫຍາຍແລະບູລະນະລະບອບປະຊາທິປະໄຕປະຊາຊົນໃນປະຈຸບັນ. ອົງການຈັດຕັ້ງມະຫາຊົນ ພວກຂ້າພະເຈົ້າຍາມໃດກໍຖືວ່າ ອພສ. ໄດ້ດຳລົງບົດບາດທີ່ສຳຄັນໃນການເຕົ້າໂຮມຈິດໃຈຂອງຊາວພຸດລາວບັນດາເຜົ່າ ໃຫ້ມີສິນທຳອັນດີງາມມີຄວາມຮັກຊາດອັນດູດດື່ມ ແລະມີອາລິຍະທຳອັນສູງສົ່ງ ທີ່ເປັນຂະນົບທຳນຽມ ແລະປະເພນີອັນດີງາມປະຈຳຊາດໄວ້ຕະຫລອດມາ. ຈາກນັ້ນກໍເຫັນໄດ້ວ່າ ອພສ. ໄດ້ສືບຕໍ່ເຄື່ອນໄຫວຕາມພາລະບົດບາດຂອງຕົນ ບໍ່ສະເພາະແຕ່ເທດສະໜາສັ່ງສອນປະຊາຊົນໃຫ້ປະຕິບັດຕາມຄຳສອນຂອງພະພຸດທະເຈົ້າເທົ່ານັ້ນ ຫາກຍັງໄດ້ເອົາແນວທາງນະໂຍບາຍຂອງພັກ–ລັດ ຫັນເປັນໂຄງການເຄື່ອນໄຫວຂອງຕົນໃນການສັ່ງສອນປະຊາຊົນອີກດ້ວຍ, ຊຶ່ງມັນໄດ້ສອດຄ່ອງກັບສະພາບການທີ່ພວມມີການບ່ຽນແປງໃໝ່ຢ່າງຮອບດ້ານຢູ່ໃນປະເທດເຮົາ. ດັ່ງນັ້ນອົງການຈັດຕັ້ງມະຫາຊົນອັນມີກຳມະບານ, ຊາວໜຸ່ມ ແລະ ແມ່ຍິງ ຂໍສະແດງຄວາມຊົມເຊີຍສະໜັບສະໜູນບັນດາຜົນງານການເຄື່ອນໄຫວທີ່ສອດຄ່ອງຂອງ ອພສ. ຢ່າງສຸດອົກສຸດໃຈ.

ພະອາຈານ ທີ່ເຄົາລົບ ທັງຫລາຍ !

ບັນດາອົງການຈັດຕັ້ງມະຫາຊົນ ເຊັ່ນ: ກຳມະບານ, ຊາວໜຸ່ມ, ແມ່ຍິງ ແມ່ນພາກສ່ວນປະກອບຢູ່ໃນລະບົບປະຊາທິປະໄຕປະຊາຊົນ ຊຶ່ງດຳເນີນການເຄື່ອນໄຫວຕາມພາລະບົດບາດຂອງໃຜມັນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ແຕ່ການເຄື່ອນໄຫວທັງໝົດນັ້ນແມ່ນແນໃສ່ວັດຖຸປະສົງ ເພື່ອປົກປັກຮັກສາ ແລະກໍ່ສ້າງປະເທດຊາດຕາມທິດສັງຄົມນິຍົມ. ອົງການຈັດຕັ້ງມະຫາຊົນໃນໄລຍະຜ່ານມາ ກໍ່ມີການປະສານສົມທົບຢ່າງແໜ້ນແຟ້ນ ກັບຄະນະກຳມະການແນວລາວສ້າງຊາດ ຊຶ່ງເປັນໃຈກາງເຕົ້າໂຮມກ້ອນກຳລັງມະຫາສາມັກຄີປວງຊົນເຜົ່າຕ່າງໆ ແລະ ຊັ້ນຄົນຕ່າງໆຢູ່ໃນສັງຄົມ ເພື່ອຂະຫຍາຍກຳລັງແຮງສັງລວມອັນຍິ່ງໃຫຍ່ຂອງຊາດ. ຜ່ານການປະສານສົມທົບຊຶ່ງກັນແລະກັນ ເຮັດໃຫ້ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໄດ້ມີທ່າແຮງຕື່ມໃນການປັບປຸງ,ຂະຫຍາຍແລະບູລະນະອົງການຈັດຕັ້ງຂອງຕົນໃນແຕ່ລະໄລຍະຂອງການປະຕິວັດ ຊຶ່ງເຮັດໃຫ້ຊົນຊັ້ນກຳມະກອນ ແລະຊັ້ນຄົນຕ່າງໆມີຄວາມເປັນເອກະພາບກັນທາງດ້ານແນວຄິດ, ຍົກສູງຈິດໃຈຮັກຊາດ ຮັກສັງຄົມນິຍົມ ແລະປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບຢູ່ໃນພາກພື້ນກໍ່ຄືຢູ່ໃນໂລກ.

ຕາງໜ້າໃຫ້ອົງການຈັດຕັ້ງກຳມະບານ, ຊາວໜຸ່ມ, ແລະ ແມ່ຍິງ ຂ້າພະເຈົ້າຂໍອວຍພອນໃຫ້ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງການພຸດທະສາສະໜາ

ສຳພັນແຫ່ງປະເທດລາວ ຈົ່ງໄດ້ຮັບຜົນສຳເລັດຢ່າງສະຫງ່າງາມ ແລະ ຂໍອວຍພອນໃຫ້ພະອາຈານທັງຫລາຍ ຈົ່ງມີສຸຂະພາບເຂັ້ມແຂງເພື່ອນຳພາວຽກງານ ອພສ. ໃຫ້ກ້າວໜ້າຕ່ໄປ.

ຂໍຂອບໃຈ.

ນອກຈາກເອກະສານທີ່ໄດ້ລົງພິມນີ້ແລ້ວ ຍັງມີບົດປະກອບຄວາມເຫັນຂອງປະທານຄະນະ ອພສ. ແຂວງຕ່າງໆເປັນຕົ້ນແມ່ນ: ແຂວງຫລວງພະບາງ, ແຂວງກຳແພງນະຄອນ, ແຂວງຈຳປາສັກ, ແຂວງສະຫວັນນະເຂດ ແລະ ແຂວງອື່ນໆທີ່ບໍ່ໄດ້ຈັດພິມລົງໃນທີ່ນີ້.